ບົດລາຍງານໂລກ
ການຕິດຕາມການສຶກສາເພື່ອທຸກຄົນ

2012

ການສຶກສາເພື່ອທຸກຄົນ



# ຊາວໜຸ່ມ ແລະ ທັກສະ
## ນຳໃຊ້ການສຶກສາເພື່ອປະກອບອາຊີບ





ບົດສັງລວມ

UNESCO
United Nations
Educational, Scientific and
Cultural Organization

# ຊາວໜຸ່ມ ແລະ ທັກສະ
## ນຳໃຊ້ການສຶກສາເພື່ອປະກອບອາຊີບ

# ບົດສັງລວມ

UNESCO Publishing

United Nations
Educational, Scientific and
Cultural Organization

ບົດລາຍງານສະບັບນີ້ ແມ່ນບົດພິມທີ່ເປັນເອກະລາດພາຍໃຕ້ການອຸປະຖຳຂອງອົງການອຸຍແນດສະໂກໃນນາມຄະນາຍາດສາກົນ.ນີ້ແມ່ນຜົນງານທີ່ໄດ້ມາຈາກການຮ່ວມແຮງຮ່ວມໃຈຂອງບັນດາສະມາຊິກທີມງານຂຽນບົດລາຍງານ ແລະ ບັນດາບຸກຄົນ, ອົງການ, ສະຖາບັນ ແລະລັດຖະບານຂອງປະເທດຕ່າງໆ.

ຜູ້ຖືກແຕ່ງຕັ້ງ ແລະ ການສະເໜີບັນດາຂໍ້ມູນໃນບົດພິມນີ້ ບໍ່ໄດ້ອອກມາຈາກຄວາມຄິດຄວາມເຫັນອັນໃດໃນສ່ວນຂອງອົງການອຸຍແນດສະໂກ ທີ່ກ່ຽວພັນເຖິງສະຖານະພາບດ້ານກົດໝາຍຂອງປະເທດ, ເຂດນ້ຳແດນດິນ, ເມືອງ ຫຼື ພື້ນທີ່ໃດໜຶ່ງ, ຫຼື ອຳນາດການປົກຄອງ ຫຼື ຈາກຄວາມຄິດຄວາມເຫັນທີ່ ກ່ຽວພັນເຖິງກາບໍ່ໃຫ້ຂໍ້ຈຳກັດທາງດ້ານພົມແດນ ຫຼື ເຂດແດນ.

ທີມງານບົດລາຍງານການຕິດຕາມການສຶກສາເພື່ອທຸກຄົນ ເປັນຜູ້ຮັບຜິດຊອບໃນການຄັດເລືອກ ແລະ ສະເໜີຄວາມເປັນຈິງທີ່ບັນຈຸໄວ້ໃນປຶ້ມຫົວນີ້ ແລະ ລວມເຖິງບົດຄວາມຄິດເຫັນພ້ອມ, ຊຶ່ງບໍ່ຈຳເປັນຈະເປັນຄວາມຄິດຄວາມເຫັນມາຈາກອົງການອຸຍແນດສະໂກ ແລະ ອົງກອນບໍ່ໄດ້ຮ່ວມກະທຳນຳ.ຄວາມຮັບຜິດຊອບທັງໝົດຕໍ່ທັດສະນະ ແລະ ແນວຄວາມຄິດທີ່ສະແດງອອກໃນບົດລາຍງານສະບັບນີ້ເປັນຂອງຜູ້ອຳນວຍການ.

## ທີມງານບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ

ຜູ້ອຳນວຍການ: ພອລລີນ ໂຣສ

ກວາເມເອັດຢີມໂປງ, ມານອສ ແອນໂຕນີນິສ, ມາເດີລີນ ແບລີ, ນິໂຄລ ເບລລ່າ, ສະຈວດ ຄາເມຣອນ, ເອຣີນ ເຊີເນີຣີ, ດີເດີຣິກ ເດີ ຊອງ, ມາກອສ ເດວປຣາໂຕ, ຮານ ບອດເນັນ ໄອ, ໂຈແອນນາ ຮາມາ, ແອນດູ ຈອນສະຕັນ, ເລນາ ກິຊູສະກີ, ຟຣັງຊົວ ເລີຄຣິກ, ເອຣິດ ເລໂກ, ໄລລາ ລູພິສ, ອະລາສແຕ ແມັກວິນລຽມ, ແພກທຣິກ ມອນຊູໄຣ, ຄາເລນ ມິວ, ໂຄຣດິນ ມູກິຊວາ, ຈູດິດ ແຮນເດຣຍນາໂຕອະວີນາ, ເຄດ ເຣດແມນ, ມາເຣຍ ຣອດນອບເປີຕີ, ມາຣີໂຊ ແຊນໄຈ, ມາຕີນາ ຊິເມຕີ, ແອສມາ ຊູໄບຣີ

ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ ແມ່ນບົດລາຍງານປະຈຳປີທີ່ເປັນເອກະລາດ.ໄດ້ຮັບການອຳນວຍຄວາມສະດວກ ແລະ ສະໜັບສະໜູນໂດຍອົງການອຸຍແນດສະໂກ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບບົດລາຍງານ,
ເຊີນຕິດຕໍ່::
EFA Global Monitoring Report team
c/o UNESCO, 7, place de Fontenoy
75352 Paris 07 SP, France
Email: efareport@unesco.org
Tel.: +33 1 45 68 07 41
www.efareport.unesco.org
ED -2012 / WS / 13

ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນທີ່ຜ່ານມາ

- 2011. ວິກິດການເຊື່ອງຊ້ອນ ຄວາມຂັດແຍ້ງດ້ວຍອາວຸດ ແລະ ການສຶກສາ
- 2010. ການເຂົ້າເຖິງຜູ້ດ້ອຍໂອກາດ
- 2009. ເອົາຊະນະກັບຄວາມບໍ່ມີຄຸນນະພາບ: ເປັນຫຍັງການບໍລິຫານຄຸ້ມຄອງຈຶ່ງເປັນບັນຫາສຳຄັນ
- 2008. ການສຶກສາເພື່ອທຸກຄົນໃນປີ 2015 ພວກເຮົາຈະສາມາດບັນລຸໄດ້ບໍ່?
- 2007. ການວາງພື້ນຖານທີ່ເຂັ້ມແຂງ-ເດັກກ່ອນໄວຮຽນ ແລະ ການສຶກສາ
- 2006. ການຮູ້ໜັງສືຕະຫຼອດຊີວິດ
- 2005. ການສຶກສາເພື່ອທຸກຄົນ-ຄວນຈຳເປັນດ້ານຄຸນນະພາບ
- 2003/4. ຄວາມສະເໝີພາບຍິງ-ຊາຍ ແລະ ການສຶກສາເພື່ອທຸກຄົນ
- 2002. ການສຶກສາເພື່ອທຸກຄົນ ໂລກຂອງເຮົາໄດ້ຖືກທິດທາງແລ້ວບໍ່?

ຄວາມຜິດພາດ ຫຼື ຕົວໜັງສືຂາດຫາຍໄປຈາກການພິມ ຈະໄດ້ຮັບການແກ້ໄຂໃນເວີຊັນ ອອນລາຍ ທີ່ www.efareport.org.

© UNESCO, 2012
All rights reserved
First edition
Published in 2012 by the United Nations
Educational,
Scientific and Cultural Organization
7,Place de Fontenoy, 75352 Paris 07 SP, France

Graphic design by FHI 360
Layout by FHI 360

Library of Congress Cataloging in Publication Data
Data available
Typeset by UNESCO
ISBN 978-92-3-104240-9

ຮູບໜ້າປົກ
© UNESCO/Sarah Wilkins

# ຄຳນຳ

ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ ສະບັບທີ 10 ອອກມາຖືກກັບກາລະໂອກາດເປົ້າໝາຍທີ ສາມ ຂອງການສຶກສາເພື່ອທຸກຄົນ ແມ່ນເພື່ອຮັບປະກັນໃຫ້ຊາວໜຸ່ມມີໂອກາດທີ່ຈະໄດ້ຮຽນຮູ້ ທັກສະທີ່ຈຳເປັນ. ຄວາມຮີບດ່ວນໃນການໄປເຖິງເປົ້າໝາຍດັ່ງກ່າວໄດ້ສະແດງອອກໃຫ້ເຫັນຢ່າງຈະແຈ້ງ ຕັ້ງແຕ່ປີ 2000.

ສະພາບເສດຖະກິດທີ່ຕົກຕໍ່າໃນທົ່ວໂລກໄດ້ສົ່ງຜົນກະທົບໃຫ້ແກ່ການຫວ່າງງານ. ຊາວໜຸ່ມ 1 ໃນ 8 ຄົນ ທົ່ວໂລກ ກຳລັງຊອກຫາວຽກເຮັດງານທຳ, ປະຊາກອນໄວໜຸ່ມມີຈຳນວນຫຼວງຫຼາຍ ແລະ ກຳລັງເພີ່ມຂຶ້ນ. ຄວາມຢູ່ດີກິນດີ ແລະ ຄວາມຈະເລີນຮຸ່ງເຮືອງຂອງຄົນໜຸ່ມແມ່ນຂຶ້ນກັບທັກສະທີ່ໄດ້ຮັບຈາກການສຶກສາ ແລະ ການຝຶກອົບຮົມວິຊາຊີບ. ຄວາມລົ້ມເຫຼວໃນການຕອບສະໜອງຄວາມຈຳເປັນນີ້ແມ່ນການສູນເສຍອຳນາດທາງດ້ານເສດຖະກິດ ແລະ ສັກກະຍະພາບຂອງມະນຸດ. ທັກສະທີ່ຈຳເປັນຂອງຊາວໜຸ່ມບໍ່ເຄີຍມີບົດບາດສຳຄັນແບບນີ້ມາກ່ອນ.

*ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນສະບັບນີ້* ເຕືອນໃຫ້ພວກເຮົາຮູ້ວ່າ: ການສຶກສາບໍ່ພຽງແຕ່ກ່ຽວຂ້ອງກັບການຮັບປະກັນໃຫ້ເດັກທຸກຄົນໄດ້ເຂົ້າຮຽນ, ແຕ່ມັນຍັງໝາຍເຖິງການກະກຽມໃຫ້ຊາວໜຸ່ມມີຄວາມພ້ອມກັບການດຳລົງຊີວິດ, ດ້ວຍການໃຫ້ໂອກາດແກ່ພວກ ເຂົາເຈົ້າໃນການຊອກຫາວຽກເຮັດງານທຳທີ່ເໝາະສົມ, ຫາລາຍໄດ້ເພື່ອປະກອບລ້ຽງຊີບ, ປະກອບສ່ວນເຂົ້າໃນຊຸມຊົນ ແລະ ສັງຄົມ, ແລະ ພໍໃຈໃນສັກກະຍະພາບ ຂອງຕົນໃນລະດັບທີ່ກວ້າງຂຶ້ນ, ມັນເປັນການຊ່ວຍປະເທດຕ່າງໆໃນການຊຸບລ້ຽງແຮງງານທີ່ຈຳເປັນໃຫ້ແກ່ການຂະຫຍາຍຕົວຂອງເສດຖະກິດໂລກ.

ຄວາມຄືບໜ້າທີ່ບໍ່ສາມາດປະຕິເສດໄດ້ຕໍ່ ທີກ ເປົ້າໝາຍຂອງການສຶກສາເພື່ອທຸກຄົນ ລວມທັງການຂະຫຍາຍຕົວຂອງການສຶກສາເດັກກ່ອນໄວຮຽນ ແລະ ການປັບປຸງກ່ຽວກັບຄວາມແຕກໂຕນ ລະຫວ່າງ ຍິງ - ຊາຍ ໃນລະດັບປະຖົມສຶກສາ. ເຖິງຢ່າງໃດກໍຕາມ, ເວລາຍັງເຫຼືອອີກ 3 ປີ ທີ່ຈະຮອດເສັ້ນຕາຍ 2015, ໂລກກໍ່ຍັງບໍ່ທັນໄປຕາມເສັ້ນທາງທີ່ກຳນົດໄວ້ໄດ້ເທື່ອ. ຄວາມຄືບໜ້າເພື່ອບັນລຸບາງເປົ້າໝາຍກໍ່ຍັງຕິດຂັດຢູ່, ຕົວເລກຂອງນັກຮຽນປະລະຍັງຢຸດຈົ້ງຢູ່ຕັ້ງແຕ່ສຳຫຼວດຄັ້ງທຳອິດໃນປີ 2000. ການຮູ້ໜັງສືຂອງຜູ້ໃຫຍ່ ແລະ ຄຸນນະພາບການສຶກສາ ຍັງຄົງເປັນບັນຫາທີ່ຮຽກຮ້ອງໃຫ້ມີການປັບປຸງໃຫ້ມີຄວາມຄືບໜ້າໄວຂຶ້ນ.

ຈາກຜົນຂອງຄວາມຄືບໜ້າຄັ້ງສຸດທ້າຍເຫັນວ່າມັນເປັນເລື່ອງທີ່ຮີບດ່ວນທີ່ຈະຕ້ອງປະກັນຄວາມສະເໝີພາບເພື່ອເຂົ້າເຖິງໂຄງການພັດທະນາທັກສະທີ່ເໝາະສົມ.ໃນເມື່ອປະຊາກອນໃນຕົວເມືອງເພີ່ມຂຶ້ນຢ່າງໄວວາ, ໂດຍສະເພາະໃນບັນດາປະເທດທີ່ມີລາຍຮັບຕໍ່າ, ຊາວໜຸ່ມຕ້ອງການທັກສະໃນການເຮັດວຽກເພື່ອຫຼຸດພົ້ນອອກຈາກຄວາມທຸກຍາກໃນເຂດຊົນນະບົດ, ຊາວໜຸ່ມຕ້ອງຮຽນຮູ້ກົນໄກໃໝ່ໆເພື່ອຮັບມືກັບສະພາບການປ່ຽນແປງຂອງດິນຟ້າອາກາດ ແລະ ການຫຼຸດລົງຂອງຂະໜາດໄຮ່ນາ ແລະ ຊອກຫາໂອກາດໄປເຮັດວຽກອື່ນ. ລາຍງານ ສະບັບນີ້ແຈ້ງໃຫ້ຮູ້ວ່າຊາວໜຸ່ມປະມານ 200 ລ້ານຄົນຕ້ອງການໂອກາດຄັ້ງທີ ສອງ ເພື່ອຮຽນຮູ້ທັກສະການຮູ້ໜັງສືຂັ້ນພື້ນຖານ ແລະ ການຄຳນວນ ຊຶ່ງເປັນສິ່ງຈຳເປັນໃນຂັ້ນຕໍ່ໄປໃນການປະກອບວຽກງານ. ທີ່ກ່າວມາທັງໝົດນີ້, ຜູ້ຍິງ ແລະ ຜູ້ທຸກຍາກພົບພໍ້ກັບຄວາມຍາກລຳບາກທີ່ສຸດ.

ພວກເຮົາຕ້ອງເອົາໃຈໃສ່ຕໍ່ຈຳນວນເພີ່ມຂຶ້ນຂອງຊາວໜຸ່ມທີ່ຫວ່າງງານ ຫຼື ຕົກຢູ່ໃນຄວາມທຸກຈົນເພື່ອຮຽກຮ້ອງໃຫ້ມີການດຳເນີນການ-ເພື່ອບັນລຸເປົ້າໝາຍ ໃນປີ 2015 ແລະ ໃຫ້ມີຄວາມກ້າວໜ້າຢ່າງຕໍ່ເນື່ອງ. ເພື່ອໃຫ້ພວກເຮົາສາມາດບັນລຸເປົ້າໝາຍການສຶກສາມັດທະຍົມຕົ້ນຖ້ວນໜ້າໃນປີ 2030, ແລະ ພວກເຮົາຕ້ອງເຮັດໃຫ້ໄດ້.

ພັນທະກິດຂອງຜູ້ໃຫ້ທຶນແກ່ການສຶກສາອາດຈະຫຼຸດໜ້ອຍລົງ ແລະ ນີ້ຄືຄວາມເປັນຫ່ວງຢ່າງໜັກໜ່ວງ. ທຸກມື້ນີ້ ງົບປະມານຂອງລັດຖະບານແມ່ນຢູ່ພາຍໃຕ້ຄວາມກົດດັນ, ແຕ່ວ່າພວກເຮົາບໍ່ຕ້ອງສ່ຽງໃນການສູນເສຍຜົນງານທີ່ຍາດມາໄດ້ຕັ້ງແຕ່ປີ 2000 ດ້ວຍການຫຼຸດຜ່ອນພັນທະລົງໃນເວລານີ້.

ຫຼັກຖານໃນບົດລາຍງານນີ້ສະແດງໃຫ້ເຫັນວ່າທຶນທີ່ໃຊ້ຈ່າຍເຂົ້າໃນການສຶກສາປະກອບສ່ວນເຮັດໃຫ້ເສດຖະກິດມີການຂະຫຍາຍຕົວເຖິງ 10-15 ເທື່ອໃນຊ່ວງຊີວິດຂອງ 1 ຄົນ. ມາຮອດປະຈຸບັນນີ້ ເຖິງເວລາ ແລ້ວທີ່ຈະຕ້ອງລົງທຶນສຳລັບອານາຄົດ.

ພວກເຮົາຕ້ອງຄິດຢ່າງສ້າງສັນ ແລະ ນຳໃຊ້ຊັບພະຍາກອນທັງໝົດໃຫ້ບັນລຸຕາມຈຸດປະສົງ. ລັດຖະບານ ແລະ ຜູ້ໃຫ້ທຶນຕ້ອງສືບຕໍ່ໃຫ້ບຸລິມະສິດແກ່ການສຶກສາ. ບັນດາປະເທດຕ່າງໆຄວນຂຸດຂວາຍຫາແຫຼ່ງທຶນພາຍໃນປະເທດຂອງຕົນ, ເຊິ່ງອາດເປັນການເສີມສ້າງທັກສະເພື່ອຊີວິດໃຫ້ແກ່ເດັກນ້ອຍ ແລະ ຊາວໜຸ່ມຈຳນວນລ້ານໆຄົນ. ບໍ່ວ່າແຫຼ່ງທຶນຈະມາຈາກພາກສ່ວນໃດກໍຕາມ, ຕ້ອງໄດ້ເອົາໃຈໃສ່ໃຫ້ບຸລິມະສິດແກ່ຜູ້ດ້ອຍໂອກາດໃນການກຳນົດທຸກໆຍຸດທະສາດ.

ຊາວໜຸ່ມ ທົ່ວທຸກແຫ່ງທົ່ວມີສັກກະຍະພາບສູງ - ເຊິ່ງຕ້ອງໄດ້ຮັບການພັດທະນາ. ຂ້າພະເຈົ້າຫວັງວ່າ ບົດລາຍງານນີ້ຈະເປັນສິ່ງກະຕຸກຊຸກຍູ້ຄວາມພະຍາຍາມໃນທົ່ວໂລກເພື່ອສຶກສາເດັກນ້ອຍ ແລະ ຊາວໜຸ່ມເພື່ອໃຫ້ເຂົາເຈົ້າສາມາດດຳເນີນຊີວິດຢູ່ໃນໂລກດ້ວຍຄວາມໝັ້ນໃຈ, ພ້ອມທັງສາມາດຕາມຫາຄວາມຝັນ ແລະ ດຳລົງຊີວິດຕາມແນວທາງທີ່ເຂົາເຈົ້າໄດ້ເລືອກໄວ້.



ອີຣີນາ ໂບໂກວາ
ຜູ້ອຳນວຍການໃຫຍ່ອົງການອຸຍແນດສະໂກ

# ບົດເປີດຫົວເລື່ອງ

ເຫຼືອເວລາພຽງແຕ່ ສາມ ປີ ທີ່ຈະຮອດເສັ້ນຕາຍຂອງເປົ້າໝາຍການສຶກສາເພື່ອທຸກຄົນຊຶ່ງຖືກກຳນົດຂຶ້ນທີ່ກຸງດາກາ, ປະເທດ ເຊເນການ. ມັນເປັນເລື່ອງຮີບດ່ວນທີ່ສຸດ ທີ່ຈະຕ້ອງບັນລຸພັນທະກິດຮ່ວມກັນຂອງ 164 ປະເທດ ຊຶ່ງໄດ້ລົງນາມໄວ້ໃນປີ 2000. ພວກເຮົາຈຳເປັນຕ້ອງໄດ້ຮຽນຮູ້ຈາກບົດຮຽນທີ່ຜ່ານມາ ເພື່ອກຳນົດນິຍາມເປົ້າໝາຍການສຶກສາແບບສາກົນໃນອານາຄົດ ແລະ ອອກແບບກົນໄກເພື່ອຮັບປະກັນວ່າທຸກປະເທດຈະດຳເນີນໄປຕາມຄຳໝັ້ນສັນຍາຂອງຕົນ.

ເປັນໜ້າເສຍດາຍ, *ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ*ປີນີ້ໄດ້ສະແດງໃຫ້ເຫັນເຖິງຄວາມກ້າວໜ້າຂອງຫຼາຍໆເປົ້າໝາຍໄດ້ຊັກຊ້າລົງ, ແລະ ມີແນວໂນ້ມວ່າເປົ້າໝາຍການສຶກສາເພື່ອທຸກຄົນຈະບໍ່ບັນລຸເປັນສ່ວນໃຫຍ່ ເຖິງແມ່ນວ່າພາບລວມຈະມີລັກສະນະມືດມົວ, ແຕ່ຄວາມກ້າວໜ້າໃນບາງປະເທດທຸກຍາກທີ່ສຸດໃນໂລກຍັງສະແດງໃຫ້ເຫັນເຖິງຄວາມສາມາດໃນການບັນລຸພັນທະກິດຂອງລັດຖະບານ ແລະ ຜູ້ໃຫ້ທຶນຊ່ວຍເຫຼືອ ແກ່ບັນດາປະເທດເຫຼົ່ານັ້ນ ເຊັ່ນ: ຈຳນວນເພີ່ມຂຶ້ນຂອງອັດຕາເຂົ້າຮຽນຂອງເດັກກ່ອນໄວຮຽນ, ຈຳນວນນັກຮຽນຈົບຂັ້ນປະຖົມສຶກສາເພີ່ມທະວີຂຶ້ນລວມທັງການສືບຕໍ່ຮຽນໃນລະດັບມັດທະຍົມສຶກສາ.

*ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ*ໃນປີ 2012 ແບ່ງອອກເປັນ 2 ພາກ, ພາກທີ I ສະເໜີພາບລວມ ຄວາມຄືບໜ້າຕໍ່ ທີກ ເປົ້າໝາຍການສຶກສາເພື່ອທຸກຄົນ, ແລະ ການໃຊ້ຈ່າຍເຂົ້າໃນການສຶກສາເພື່ອບໍລິຫານການເງິນໃຫ້ບັນລຸເປົ້າໝາຍ. ພາກ II ຈະລົງເລິກກ່ຽວກັບເປົ້າໝາຍທີ 3 ຂອງການສຶກສາເພື່ອທຸກຄົນ, ໂດຍເອົາໃຈໃສ່ເປັນພິເສດຕໍ່ການເສີມສ້າງທັກສະທີ່ຈຳເປັນສຳລັບຊາວໜຸ່ມ.

## ຂໍ້ຄວາມສຳຄັນ

- ເປົ້າໝາຍ 1: *ການປັບປຸງວຽກງານດູແລ ແລະ ໃຫ້ການສຶກສາເດັກກ່ອນໄວຮຽນມີຄວາມຊັກຊ້າ*. ໃນປີ 2010, ປະມານ 28% ຂອງເດັກອາຍຸຕໍ່າກວ່າ 5 ປີ ຍັງຄົງທົນທຸກຈາກສະພາວະຂາດສານອາຫານ ແລະ ຈຳນວນເດັກທົ່ວໂລກໜ້ອຍກວ່າເຄິ່ງໜຶ່ງໄດ້ຮັບການສຶກສາໃນລະດັບກ່ອນໄວຮຽນ.

- ເປົ້າໝາຍ 2: *ຄວາມຄືບໜ້າຕໍ່ການສຶກສາລະດັບປະຖົມຖ້ວນໜ້າກຳລັງຊັກຊ້າລົງ*. ຈຳນວນເດັກໃນທົ່ວໂລກທີ່ບໍ່ໄດ້ຮຽນໜັງສືຍັງຄົງມີຢູ່ເຖິງ 61 ລ້ານຄົນ ໃນປີ 2010. ຊຶ່ງໃນຈຳນວນດັ່ງກ່າວຜູ້ທີ່ບໍ່ມີຫວັງທີ່ຈະມີໂອກາດໄດ້ເຂົ້າຮຽນມີ 47%.

- ເປົ້າໝາຍ 3: *ຊາວໜຸ່ມຈຳນວນຫຼວງຫຼາຍຂາດທັກສະພື້ນຖານ*. ໃນ 123 ປະເທດທີ່ມີລາຍໄດ້ຕໍ່າ ແລະ ຕໍ່າປານກາງ, ປະຊາກອນທີ່ມີອາຍຸແຕ່ 15 ປີ ຫາ 24 ປີ ປະມານ 200 ລ້ານຄົນຮຽນບໍ່ຈົບຊັ້ນປະຖົມສຶກສາ, ຄິດເປັນຈຳນວນ 1 ໃນ 5 ຂອງປະຊາກອນຊາວໜຸ່ມ.

- ເປົ້າໝາຍ 4 : *ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ຍັງຄົງຍາກທີ່ຈະບັນລຸເປົ້າໝາຍ*, ຈຳນວນຜູ້ໃຫຍ່ທີ່ບໍ່ຮູ້ໜັງສືໄດ້ຫຼຸດລົງ 12% ໃນລະຫວ່າງປີ 1990 ແລະ 2010. ໃນປີ 2010, ປະລິມານຜູ້ໃຫຍ່ບໍ່ຮູ້ໜັງສືມີເຖິງ 775 ລ້ານຄົນ, ຊຶ່ງ 2 ສ່ວນໃນ 3 ແມ່ນ ຜູ້ຍິງ.

- ເປົ້າໝາຍ 5: *ຄວາມແຕກໂຕນລະຫວ່າງຍິງ-ຊາຍ ສະແດງອອກໃນຫຼາຍຮູບແບບ*. ໃນປີ 2010, ຍັງຄົງມີ 17 ປະເທດ ທີ່ມີຈຳນວນເດັກຍິງໜ້ອຍກວ່າ 9 ຄົນໃນຈຳນວນຂອງເດັກຊາຍ 10 ຄົນ ທີ່ໄດ້ເຂົ້າຮຽນໃນລະດັບປະຖົມສຶກສາ. ຫຼາຍກວ່າເຄິ່ງຂອງ 96 ປະເທດ ທີ່ຍັງບໍ່ບັນລຸຄວາມແຕກໂຕນລະຫວ່າງຍິງຊາຍ ໃນລະດັບມັດທະຍົມສຶກສາ, ເດັກຊາຍແມ່ນດ້ອຍໂອກາດກວ່າ.

- ເປົ້າໝາຍ 6: *ຄວາມບໍ່ສະເໝີພາບໃນທົ່ວໂລກໃນດ້ານຜົນສຳເລັດທາງດ້ານການສຶກສາຍັງໜ້າເປັນຫ່ວງຢູ່*. ເດັກຊຶ່ງມີຈຳນວນຫຼາຍເຖິງ 250 ລ້ານຄົນ ອາດປະສົບກັບຄວາມລົ້ມເຫຼວໃນການ ອ່ານ ຫຼື ຂຽນ ໃນເວລາທີ່ພວກເຂົາຮຽນຢູ່ໃນຊັ້ນປະຖົມສຶກສາປີທີ 4.



# ພາກ 1 ການຕິດຕາມເປົ້າໝາຍການສຶກສາເພື່ອທຸກຄົນ



ເດັກນ້ອຍອາຍຸຕ່ຳກວ່າ 5 ປີ ຈຳນວນ 171 ລ້ານຄົນ ໄດ້ຮັບຜົນກະທົບທາງດ້ານການຂາດສານອາຫານຕັ້ງແຕ່ລະດັບປານກາງຈົນເຖິງຂັ້ນຮ້າຍແຮງໃນປີ 2010

## 6 ເປົ້າໝາຍການສຶກສາເພື່ອທຸກຄົນ

*ຂະຫຍາຍການດູແລ ແລະ ການສຶກສາຂອງເດັກກ່ອນໄວຮຽນ*

ເດັກກ່ອນໄວຮຽນແມ່ນໄລຍະເວລາທີ່ສຳຄັນໃນການວາງພື້ນຖານເພື່ອໃຫ້ເດັກປະສົບຜົນສຳເລັດໃນດ້ານການສຶກສາ ແລະ ອື່ນໆ. ດັ່ງນັ້ນ, ການດູແລ ແລະ ການສຶກສາເດັກກ່ອນໄວຮຽນຄວນເປັນຈຸດໃຈກາງຂອງການສຶກສາເພື່ອທຸກຄົນ ແລະ ໂຄງການພັດທະນາດ້ານ ອື່ນໆທີ່ກວ້າງຂວາງອອກໄປ.

ເດັກຜູ້ທີ່ຫິວໂຫຍ, ຂາດອາຫານ ຫຼື ເຈັບປ່ວຍ ແມ່ນບໍ່ຢູ່ໃນ ສະພາບທີ່ຈະຮັບຮູ້ເອົາທັກສະທີ່ຈຳເປັນຂອງການຮຽນຮູ້ເພື່ອອະນາຄົດ ແລະ ການຈ້າງງານ. ມີສັນຍານຊີ້ໃຫ້ເຫັນວ່າສຸຂະພາບຂອງ ເດັກກ່ອນໄວຮຽນໄດ້ຮັບການປັບປຸງ, ແຕ່ວ່າໃນບາງປະເທດ ກໍຍັງຢູ່ໃນລະດັບພື້ນຖານຕ່ຳ ແລະ ບໍ່ໄວພໍທີ່ຈະບັນລຸເປົ້າໝາຍການພັດທະນາໃນລະດັບສາກົນ, ອັດຕາຫຼຸດລົງຂອງການຕາຍຂອງເດັກຕໍ່ປີໄດ້ເພີ່ມຂຶ້ນຈາກ 1.9% ໃນໄລຍະປີ 1990 - 2000 ເຖິງ 25% ໃນໄລຍະປີ 2000 - 2010. ຜົນຂອງການປະເມີນຄັ້ງລ່າສຸດໄດ້ຊີ້ໃຫ້ເຫັນວ່າການຫຼຸດລົງກວ່າເຄິ່ງໜຶ່ງຂອງການຕາຍຂອງເດັກແມ່ນເກີດຈາກການໃຫ້ການສຶກສາເພີ່ມເຕີມແກ່ຜູ້ຍິງທີ່ຢູ່ໃນໄວຈະເລີນພັນ.

ເຖິງແມ່ນວ່າໃນປັດຈຸບັນມີເດັກເກີດໃໝ່ລອດຕາຍໃນທຸກໆ 100 ຄົນ ເພີ່ມຂຶ້ນເຖິງ 3 ຄົນ ເມື່ອທຽບໃສ່ປີ 1990. ແຕ່ກໍຍັງມີ 28 ປະເທດ ທີ່ມີເດັກອາຍຸບໍ່ເຖິງ 5 ປີ ເສຍຊີວິດຫຼາຍກວ່າ 10 ຄົນໃນທຸກໆ 100 ຄົນ. ໃນນັ້ນ, ມີ 25 ປະເທດແມ່ນນອນຢູ່ໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ.

ປັດໃຈສຳຄັນທີ່ເປັນສາເຫດໃນການຕາຍຂອງເດັກແມ່ນການຂາດສານອາຫານ ຊຶ່ງເປັນອຸປະສັກໃຫ້ແກ່ການພັດທະນາທາງດ້ານຄວາມຮັບຮູ້ ແລະ ສະມັດຕະພາບຂອງການຮຽນຮູ້ຂອງເດັກ. ສະພາບຮ່າງກາຍທີ່ບໍ່ສົມບູນ ແລະ ມີຄວາມເຕ້ຍຕ່ຳກວ່າເກນອາຍຸຂອງເດັກເປັນສັນຍາລັກຈະແຈ້ງທີ່ສຸດຂອງການຂາດສານອາຫານ. ໃນທົ່ວໂລກ, ມີເດັກເຖິງ 171 ລ້ານ ຄົນ ທີ່ມີອາຍຸຕ່ຳກວ່າ 5 ປີໄດ້ຮັບຜົນກະທົບທາງດ້ານການຂາດສານອາຫານຕັ້ງແຕ່ລະດັບປານກາງຈົນເຖິງຂັ້ນຮ້າຍແຮງໃນປີ 2010. ໂດຍອີງໃສ່ແນວໂນ້ມໃນປັດຈຸບັນຄາດວ່າໃນປີ 2015, ຈຳນວນເດັກທີ່ປະສົບກັບພາວະຂາດສານອາຫານຈະຍັງສູງຂຶ້ນເຖິງ 157 ລ້ານຄົນ, ຫຼື ປະມານ 1 ໃນ 4 ຂອງເດັກທີ່ມີອາຍຸຕ່ຳກວ່າ 5 ປີ.

ເດັກໃນເຂດຊົນນະບົດ ແລະ ຈາກຄອບຄົວທີ່ທຸກຍາກຈະປະສົບກັບບັນຫາສຸຂະພາບບໍ່ສົມບູນຫຼາຍຂຶ້ນເພາະວ່າການໄດ້ຮັບສານອາຫານທີ່ສົມບູນບໍ່ພຽງແຕ່ແມ່ນການມີອາຫານບໍລິໂພກພຽງພໍເທົ່ານັ້ນ. ແຕ່ມັນຍັງໝາຍເຖິງເງື່ອນໄຂຂອງການເຂົ້າເຖິງການສະໜອງທາງດ້ານອາຫານ, ການດູແລສຸຂະພາບ, ນ້ຳສະອາດ ແລະ ສຸຂະອານາໄມ, ຊຶ່ງກຸ່ມຄົນທຸກຍາກທີ່ສຸດບໍ່ຄ່ອຍໄດ້ຮັບການບໍລິການດັ່ງກ່າວຢ່າງ ທົ່ວເຖິງເຊັ່ນຕົວຢ່າງ:ໃນປະເທດເນປານ, ອັດຕາການມີເດັກເຕ້ຍໃນກຸ່ມ ຈາກເດັກຮັ່ງມີ26% ແລະ 56% ຈາກ ເດັກທຸກຍາກ. ຊຶ່ງໃນນັ້ນ 27% ແມ່ນເດັກຢູ່ໃນຕົວເມືອງ ແລະ 42% ແມ່ນເດັກໃນເຂດຊົນນະບົດ. ການສືບຕໍ່ເໜັງຕີງຂອງ ລາຄາອາຫານ, ການປ່ຽນແປງດິນຟ້າອາກາດ ແລະ ສະພາບຄວາມຂັດແຍ້ງເຮັດໃຫ້ການປັບປຸງທາງໂພສະນາການ ເປັນສິ່ງທ້າທາຍໃນຫຼາຍພູມິພາກຂອງໂລກ.

ແຕ່ວ່າຈາກປະສົບການທີ່ແຕກຕ່າງກັນຂອງຫຼາຍປະເທດສະແດງໃຫ້ເຫັນວ່າແນວທາງການເມືອງມີຄວາມສຳຄັນຕໍ່ການປັບປຸງໂພສະນາການ. ໃນໄລຍະເວລາບໍ່ຮອດ 2 ທົດສະວັດ, ປະເທດ ບຼາຊິນ ສາມາດກຳຈັດຊ່ອງຫວ່າງການຂາດສານອາຫານລະຫວ່າງຕົວເມືອງ - ຊົນນະບົດລົງໄດ້ຊຶ່ງໃນນີ້ຕ້ອງຂໍສະແດງຄວາມຂອບໃຈກັບການປະສານຂອງວຽກງານປັບປຸງການສຶກສາໃຫ້ແມ່, ການເຂົ້າເຖິງການບໍລິການສຸຂະພາບຂອງແມ່ ແລະ ເດັກ, ການສະໜອງນ້ຳ ແລະ ສຸຂະອະນາໄມ ແລະ ການຍົກຍ້າຍທີ່ຢູ່ອາໄສຂອງກຸ່ມເປົ້າໝາຍ. ໃນຕະຫຼອດໄລຍະເວລາດຽວກັນນີ້, ອັດຕາພາວະການຂາດສານອາຫານ ໂດຍສະເພາະໃນເຂດຊົນນະບົດ, ໃນບັນດາກຸ່ມ ປະເທດໂບລິເວຍ, ກົວເຕມາລາ, ແລະ ເປຣູ ເຫັນວ່າຍັງສູງກວ່າທີ່ຄາດການໄວ້ເມື່ອທຽບໃສ່ລະດັບລາຍຮັບຂອງເຂົາເຈົ້າ.

ໂຄງການເດັກກ່ອນໄວຮຽນທີ່ມີຄຸນນະພາບ ມີຄວາມສຳຄັນທີ່ສຸດຕໍ່ການກະກຽມຄວາມພ້ອມຂອງເດັກກ້າວເຂົ້າສູ່ໂຮງຮຽນ. ຫຼັກຖານຈາກຫຼາຍປະເທດເຊັ່ນ: ອິດສະຕາລີ, ອິນເດຍ, ໂມຊຳບິກ, ຕຸລະກີ ແລະ ອູຣູກວາຍ ສະແດງໃຫ້ເຫັນເຖິງຜົນປະໂຫຍດທັງໃນໄລຍະສັ້ນ ແລະ ໄລຍະຍາວ ຂອງການສຶກສາ ກ່ອນໄວຮຽນ. ຊຶ່ງເລີ່ມຕັ້ງແຕ່ທັກສະການຮູ້ຂຽນອ່ານ ແລະ ການຄິດໄລ່ ຕະຫຼອດເຖິງການມີສະມາທິ, ຄວາມພາກພຽນພະຍາຍາມ ແລະ ຫົວຄິດປະດິດສ້າງ - ທັງໝົດນີ້ ລ້ວນແຕ່ນຳພາໄປເຖິງຜົນໄດ້ຮັບທີ່ດີຂຶ້ນຈາກການສຶກສາ ແລະ ການຈ້າງງານ.

ຫຼັກຖານລ່າສຸດໂດຍອີງໃສ່ຜົນການສຳຫຼວດໃນປີ 2009 ຂອງໂຄງການປະເມີນຜົນການຮຽນຂອງນັກຮຽນນາໆຊາດ (PISA) ໂດຍອົງການເພື່ອຄວາມຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ (OECD) ສະແດງໃຫ້ເຫັນວ່າໃນ 58 ຈາກ 65 ປະເທດ ນັກຮຽນອາຍຸ 15 ປີ ທີ່ໄດ້ຜ່ານຫ້ອງກຽມປະຖົມຢ່າງນ້ອຍ 1 ປີ ຈະມີຜົນການຮຽນດີກວ່າຜູ້ທີ່ບໍ່ໄດ້ເຂົ້າຮຽນຫ້ອງກຽມ ຫຼັງຈາກໄດ້ມີການຈຳແນກປະຫວັດຄວາມເປັນມາທາງດ້ານເສດຖະກິດສັງຄົມແລ້ວກໍຕາມ. ໃນປະເທດອິດສະຕາລີ, ບຼາຊິນ ແລະ ເຢຍລະມັນ, ຄວາມໄດ້ປຽບໂດຍສະເລ່ຍພາຍຫຼັງທີ່ໄດ້ກວດກາສະພາບປະຫວັດຄວາມ

ເປັນມາທາງດ້ານເສດຖະກິດສັງຄົມແລ້ວເຫັນວ່າເທົ່າກັບການຮຽນໃນໂຮງຮຽນ 1 ປີ.

ຕັ້ງແຕ່ປີ 1999 , ເດັກນ້ອຍເຂົ້າຮັບການສຶກສາກ່ອນໄວຮຽນ ມີຈຳນວນເພີ່ມຂຶ້ນເກືອບເຄິ່ງໜຶ່ງເຖິງຢ່າງໃດກໍ່ຕາມ, ຍັງມີ 1 ສ່ວນ 2 ຂອງເດັກທີ່ຍັງບໍ່ມີໂອກາດເຂົ້າຮຽນ ແລະຍັງເພີ່ມຂຶ້ນອີກ 5 ສ່ວນ 6 ຢູ່ໃນບັນດາປະເທດທຸກຍາກທີ່ສຸດ. ບັນດາກຸ່ມທີ່ຄວນໄດ້ຮັບຜົນປະໂຫຍດທີ່ສຸດຈາກການສຶກສາກ່ອນໄວຮຽນຊ້ຳພັດບໍ່ໄດ້ຮັບເປັນສ່ວນໃຫຍ່. ໃນປະເທດໄນຈີເຣຍ ປະມານ 2 ສ່ວນ 3 ຂອງເດັກແມ່ນມາຈາກຄອບຄົວຮັ່ງມີ 20% ທີ່ເຂົ້າຮັບການສຶກສາກ່ອນໄວຮຽນ, ໃນຂະນະທີ່ມີໜ້ອຍກວ່າ 1 ສ່ວນ 10 ຂອງເດັກທີ່ມາຈາກຄອບຄົວທຸກຍາກທີ່ສຸດ 20% ໄດ້ຮັບການສຶກສາກ່ອນໄວຮຽນ (ຮູບທີ 1).

ການລົງທຶນຕ່ຳແມ່ນບັນຫາສຳຄັນສຳລັບການບໍລິຫານການສຶກສາກ່ອນໄວຮຽນ. ການຈັດສັນງົບປະມານໃຫ້ແກ່ວຽກງານນີ້ໃນປະເທດສ່ວນໃຫຍ່ແມ່ນໜ້ອຍກວ່າ 10% ຂອງງົບປະມານ ການສຶກສາທັງໝົດ, ແລະ ການແບ່ງປັນ ຍັງຕ່ຳກວ່ານີ້ໃນບັນດາ ປະເທດທຸກຍາກ. ໃນປະເທດເນປານ ແລະ ໄນເຈີ ມີງົບປະມານ ໃຫ້ໃຊ້ຈ່າຍເຂົ້າໃນວຽກງານການສຶກສາກ່ອນໄວຮຽນຕ່ຳກວ່າ 0.1% ຂອງຍອດຜະລິດຕະພັນລວມຂອງຊາດ (GNP), ສຳລັບ ປະເທດມາດາກາສກາ ແລະ ປະເທດ ເຊເນການຕ່ຳກວ່າ 0.02%.

ຍ້ອນການລົງທຶນຕ່ຳຂອງລັດຖະບານ ເຂົ້າໃນວຽກງານການສຶກສາກ່ອນໄວຮຽນ ຈຶ່ງເຮັດໃຫ້ອັດຕາສະເລ່ຍການເຂົ້າຮຽນຂອງເດັກກ່ອນໄວຮຽນໃນການສຶກສາພາກເອກະຊົນມີເຖິງ 33%.ໃນສາທາລະນະລັດອາຣັບຊີເຣຍ, ອັດຕາເຂົ້າຮຽນຂອງເດັກປະຖົມກ່ອນໄວຮຽນມີ 10%, ຊຶ່ງໃນນັ້ນການສຶກສາພາກເອກະຊົນກວມເອົາ 72%. ສິ່ງນີ້ຊີ້ໃຫ້ເຫັນວ່າພາກລັດບໍ່ ສາມາດສະໜອງຄວາມຕ້ອງການທາງດ້ານການສຶກສາກ່ອນໄວຮຽນໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ.

ການເພີ່ມອັດຕາຄ່າຮຽນໃນລະດັບປະຖົມກ່ອນໄວຮຽນຂອງພາກເອກະຊົນ ເປັນການຍາກທີ່ສຸດທີ່ຈະເຮັດໃຫ້ເດັກຈາກຄອບຄົວທຸກຍາກໄດ້ມີໂອກາດເຂົ້າຮຽນ. ໃນລັດອານທຣາ ປຣາເດດ, ປະເທດອິນເດຍ ອັດຕາເຂົ້າຮຽນກ່ອນໄວຮຽນໃນເຂດຊົນນະບົດສູງທີ່ສຸດໃນນັ້ນ 20% ມາຈາກຄອບຄົວຮັ່ງມີ, ຊຶ່ງເກືອບ 1 ສ່ວນ 3 ຂອງເດັກແມ່ນເຂົ້າຮຽນໃນໂຮງຮຽນເອກະຊົນ. ເດັກນ້ອຍເກືອບທັງໝົດທີ່ມາຈາກຄອບຄົວທຸກຍາກທີ່ສຸດແມ່ນໄດ້ຮັບການບໍລິການພາຍໃຕ້ການສະໜັບສະໜູນຈາກ ລັດຖະບານ.

ສະຖານທີ່ພັກພາອາໄສຂອງເດັກສາມາດຊີ້ບອກໃຫ້ເຫັນເຖິງຄຸນນະພາບຂອງການບໍລິການໄດ້ເໝືອນກັນ.ໃນເຂດຊົນນະບົດຂອງປະເທດຈີນ, ເປຣູ ແລະ ສາທາລະນະລັດທານຊາເນຍ ສະພາບຫ້ອງຮຽນຂອງເດັກກ່ອນໄວຮຽນມີຄວາມແອອັດ, ຂາດສື່ການຮຽນ ແລະ ຂາດຄູສອນທີ່ມີຄຸນວຸທິກວ່າເດັກທີ່ຢູ່ໃນເມືອງ.

ເພື່ອຮັບປະກັນວ່າເດັກຈະຕ້ອງໄດ້ຮັບຜົນປະໂຫຍດສູງສຸດຈາກການສຶກສາກ່ອນໄວຮຽນຈຶ່ງຮຽກຮ້ອງໃຫ້ມີການປະຕິຮູບການສຶກສາຊຶ່ງລວມທັງການຂະຫຍາຍສິ່ງອຳນວຍຄວາມສະດວກຕ່າງໆ ແລະໃຫ້ມີການຮັບປະກັນວ່າຜູ້ປົກຄອງເດັກສາມາດ ຈ່າຍໄດ້ ພ້ອມທັງຊອກຫາວິທີການທີ່ເໝາະສົມເພື່ອເຮັດໃຫ້ການສຶກສາປະຖົມກ່ອນໄວຮຽນຕິດແປະກັບໂຮງຮຽນປະຖົມສຶກສາ, ແລະ ປະສານກິດຈະກຳຂອງການສຶກສາກ່ອນໄວຮຽນໃຫ້ສາມາດເຊື່ອມສານກັນໄດ້ກັບເດັກກ່ອນໄວຮຽນດ້ານອື່ນໆຢ່າງກວ້າງຂວາງ.

ຄວາມສຳຄັນໃນການເຮັດໃຫ້ຄວາມພະຍາຍາມຫຼາຍໆດ້ານມີຄວາມດຸ່ນດ່ຽງເພື່ອຍົກລະດັບຊີວິດການເປັນຢູ່ຂອງເດັກນ້ອຍຍັງ

ເຊເນການ ໃຊ້ຈ່າຍງົບປະມານເຂົ້າໃນການສຶກສາກ່ອນໄວຮຽນໜ້ອຍກວ່າ 0.02% ຂອງ GNP

ຮູບທີ 1: ການມີສ່ວນຮ່ວມໃນການສຶກສາກ່ອນໄວຮຽນມີການຜັນແປຢ່າງເດັ່ນຊັດພາຍໃນບັນດາປະເທດຕ່າງໆ.
ອັດຕາການເຂົ້າຮຽນຂອງເດັກກ່ອນໄວຮຽນແຕ່ອາຍຸ 36 ເຖິງ 59 ເດືອນ, ຈຳແນກຕາມຖານະ, ທີ່ຢູ່ອາໄສ ແລະ ເພດ.




*ໝາຍເຫດ*: ອາຍຸໃນເກນເຂົ້າຮຽນການສຶກສາກ່ອນໄວຮຽນແຕ່ 3 ຫາ 5 ປີ ໃນ 3 ປະເທດ. ໃນປະເທດໄນຈີເຣຍ, ຜູ້ທຸກຍາກທີ່ ສຸດ 40% ໄດ້ສະແດງອອກໃຫ້ເຫັນໃນເຂດຕົວເມືອງ.
*ແຫຼ່ງຂໍ້ມູນ*: ການຄິດໄລ່ຂອງທີມຊຽນບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ (2012) ໂດຍອີງຕາມຂໍ້ມູນການ ສຳຫຼວດກຸ່ມຕົວຊີ້ບອກຫຼາຍຮູບແບບ.

ໃນລະຫວ່າງປີ 2008-2010 ມີເດັກບໍ່ໄດ້ເຂົ້າໂຮງຮຽນເພີ່ມຂຶ້ນໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ ຈຳນວນ 1.6 ລ້ານຄົນ

ສືບຕໍ່ໄດ້ຮັບການເນັ້ນໜັກເພີ່ມຂຶ້ນດ້ວຍຕົວຊີ້ວັດໃໝ່ທີ່ພິມອອກໃນບົດລາຍງານປີນີ້, ຊຶ່ງມັນໄດ້ປະເມີນຄວາມຄືບໜ້າ ຕາມເປົ້າໝາຍ ແລະ ອີງປະກອບຫຼັກ 3 ດ້ານ: ສຸຂະອະນາໄມ, ໂພຊະນາການ ແລະ ການສຶກສາ.

ບາງປະເທດໄດ້ຄະແນນດີເກືອບເທົ່າກັນໝົດທັງ 3 ຕົວຊີ້ບອກ (ເຊັ່ນ: ປະເທດ ຊີລີ) ຫຼື ຄະແນນບໍ່ດີເທົ່າກັນໝົດ (ເຊັ່ນ: ປະເທດໄນເຈີ). ບັນດາປະເທດອື່ນໆມີຄະແນນສູງຫຼາຍ ຫຼື ຕ່ຳຫຼາຍພຽງແຕ່ດ້ານໃດດ້ານໜຶ່ງເມື່ອທຽບໃສ່ຈຸດຢືນລວມ ຂອງເຂົາເຈົ້າຕາມຕາຕະລາງສະແດງດັດສະນີຊີ້ວັດ, ຊຶ່ງເປີດເຜີຍໃຫ້ເຫັນເຖິງບັນຫາສະເພາະ. ຕົວຢ່າງ: ໃນປະເທດ ຈາໄມກາ ແລະ ຟີລິບປິນທັງສອງປະເທດມີອັດຕາການຕາຍຂອງເດັກປະມານ 30 ຕໍ່ ເດັກ 1000 ຄົນ ທີ່ເກີດແລ້ວລອດຊີວິດແຕ່ມີສະຖິຕິທາງ ດ້ານການສຶກສາ ທີ່ແຕກຕ່າງກັນຫຼາຍ ໃນປະເທດຟີລິບປິນມີພຽງແຕ່ 38% ຂອງເດັກອາຍຸ 3 ຫາ 7 ປີ ທີ່ເຂົ້າຮຽນໃນຊັ້ນອະນຸບານ ຫຼື ປະຖົມສຶກສາ ສ່ວນຢູ່ປະເທດ ຈາໄມກາມີເຖິງ 90%. ສະພາບດັ່ງກ່າວເນັ້ນໃຫ້ເຫັນເຖິງຄວາມຈຳເປັນທີ່ຈະຕ້ອງລົງທຶນແບບບູລະນາການຊຶ່ງໃຫ້ຄວາມສຳຄັນແກ່ການພັດທະນາວຽກງານການສຶກສາເດັກກ່ອນໄວຮຽນໃຫ້ເທົ່າທຽມກັນໃນທຸກດ້ານ.

*ການບັນລຸເປົ້າໝາຍການສຶກສາຊັ້ນປະຖົມຖ້ວນໜ້າ*

ຕາມແນວໂນ້ມປັດຈຸບັນ, ເຫັນວ່າເປົ້າໝາຍຂອງການສຶກສາຊັ້ນປະຖົມຖ້ວນໜ້າ ຍັງຫ່າງໄກຈາກຂອບເສັ້ນທີ່ວາງໄວ້ຫຼາຍ.ແຮງຊຸກຍູ້ທີ່ສຳຄັນເພື່ອເຮັດໃຫ້ເດັກໄດ້ເຂົ້າໂຮງຮຽນຫຼາຍຂຶ້ນເຊິ່ງເລີ່ມຂຶ້ນໃນກອງປະຊຸມການສຶກສາໂລກທີ່ ດາກາ ປີ 2000 ກຳລັງຈະຢຸດຈົ່ງ. ຈຳນວນເດັກໃນເກນອາຍຸບໍ່ໄດ້ເຂົ້າຮຽນໃນຊັ້ນປະຖົມສຶກສາ 108 ລ້ານ ຄົນ ຫຼຸດລົງເຫຼືອ 61 ລ້ານຄົນຕັ້ງແຕ່ປີ 1999, ແຕ່ວ່າຈຳນວນ 3 ສ່ວນ 4 ຂອງສັດສ່ວນດັ່ງກ່າວໄດ້ບັນລຸໃນລະຫວ່າງປີ 1999 ແລະ 2004.ໃນລະຫວ່າງປີ 2008 ແລະ 2010 ບໍ່ຄ່ອຍມີຄວາມຄືບໜ້າຫຍັງເລີຍ (ຮູບທີ 2).

ອາຊີໃຕ້ ແລະ ຕາເວັນຕົກ ແລະ ເຂດອະນຸພາກພື້ນຊາຮາຣາອາຟຣິກາ ໄດ້ເລີ່ມຕົ້ນໃນສະພາບທີ່ຄ້າຍຄືກັນກັບປີ 1999 ມີເດັກໃນເກນອາຍຸບໍ່ໄດ້ເຂົ້າຮຽນໃນຊັ້ນປະຖົມສຶກສາປະມານ 40 ລ້ານຄົນ, ແຕ່ຊ້ຳພັດມີຄວາມຄືບໜ້າໃນລະດັບທີ່ແຕກຕ່າງກັນຫຼາຍ. ໃນລະຫວ່າງປີ 1999 ແລະ 2008 ຈຳນວນເດັກບໍ່ໄດ້ເຂົ້າໂຮງຮຽນໃນອາຊີໃຕ້ ແລະ ຕາເວັນຕົກຫຼຸດລົງ 29 ລ້ານຄົນ, ໃນຂະນະທີ່ຢູ່ເຂດອະນຸພາກພື້ນຊາຮາຣາອາຟຣິກາ ຈຳນວນເດັກບໍ່ໄດ້ເຂົ້າຮຽນເພີ່ມຂຶ້ນເຖິງ 11 ລ້ານຄົນ.

ຮູບທີ 2: ຈຳນວນເດັກທີ່ບໍ່ໄດ້ເຂົ້າໂຮງຮຽນຫຼຸດລົງພາຍຫຼັງກອງປະຊຸມທີ່ ດາກາ, ແຕ່ຫຼັງຈາກນັ້ນມາ ຕົວເລກມີການຢຸດຈົ່ງ.

ຈຳນວນເດັກນ້ອຍທີ່ບໍ່ໄດ້ເຂົ້າໂຮງຮຽນໃນຊັ້ນປະຖົມສຶກສາຕາມເກນອາຍຸ, 1999 2000




ແຫຼ່ງຂໍ້ມູນ: ເອກະສານຊ້ອນທ້າຍຕາຕະລາງສະຖິຕິ 5; ຖານຂໍ້ມູນ UIS

ໃນບັນດາປະເທດທີ່ມີຂໍ້ມູນ, ເຫັນວ່າໃນ 12 ປະເທດມີຈຳນວນເກືອບເຄິ່ງໜຶ່ງຂອງປະຊາກອນເດັກທີ່ບໍ່ໄດ້ເຂົ້າໂຮງຮຽນໃນທົ່ວໂລກ. ປະເທດໄນຈີເຣຍຖືກຈັດຢູ່ອັນດັບຕົ້ນໆທີ່ 1 ສ່ວນ 6 ຂອງປະຊາກອນເດັກໂລກບໍ່ໄດ້ເຂົ້າຮຽນ, ມີຈຳນວນທັງໝົດ 10.5 ລ້ານຄົນ (ຮູບທີ 3). ເດັກກຸ່ມນີ້ມີ 3.6 ລ້ານຄົນຊຶ່ງໃນປີ 2010 ມີເດັກບໍ່ໄດ້ເຂົ້າຮຽນຫຼາຍກວ່າໃນປີ 2000. ໃນທາງກົງກັນຂ້າມ, ປະເທດເອທີໂອເປຍ ແລະ ອິນເດຍ ສາມາດຫຼຸດຈຳນວນເດັກບໍ່ເຂົ້າໂຮງຮຽນລົງໄດ້ຢ່າງຫຼວງຫຼາຍ. ໃນປະເທດອິນເດຍ, ເດັກກຸ່ມດັ່ງກ່າວມີ 18 ລ້ານຄົນ ຊຶ່ງໃນປີ 2008 ມີເດັກບໍ່ເຂົ້າໂຮງຮຽນໜ້ອຍກວ່າໃນປີ 2001.

ໃນຈຳນວນປະຊາກອນເດັກທີ່ບໍ່ເຂົ້າຮຽນ, ຈຳນວນໜຶ່ງແມ່ນເຂົ້າຊ້າກວ່າເກນອາຍຸການເຂົ້າຮຽນ, ໃນຂະນະທີ່ບາງຄົນກໍອາດປະລະການຮຽນ ແລະ ຈຳນວນຫຼວງຫຼາຍກໍບໍ່ໄດ້ເຂົ້າຮຽນເລີຍ. ໃນປີ 2010, 47% ຂອງເດັກບໍ່ໄດ້ເຂົ້າຮຽນແມ່ນບໍ່ເຄີຍໄດ້ເຂົ້າຮຽນ. ສັດສ່ວນນີ້ມີສູງສຸດໃນບັນດາປະເທດທີ່ມີລາຍຮັບຕ່ຳ, ຊຶ່ງ 57% ຂອງ ເດັກບໍ່ເຂົ້າໂຮງຮຽນຄາດວ່າບໍ່ເຄີຍໄດ້ເຂົ້າຮຽນເລີຍ ຈຳນວນເດັກຍິງມີຫຼາຍກວ່າເດັກຊາຍທີ່ນອນຢູ່ໃນກຸ່ມນີ້.

ເຫຼືອເວລາພຽງ 5 ປີ ກ່ອນຈະຮອດ 2015, 29 ປະເທດທີ່ມີຕົວເລກສຸດທິຂອງຈຳນວນເດັກເຂົ້າຮຽນໜ້ອຍກວ່າ 85%. ບັນດາປະເທດເຫຼົ່ານີ້ມີແນວໂນ້ມວ່າຈະບໍ່ສາມາດບັນລຸເປົ້າໝາຍຂອງການສຶກສາປະຖົມຖ້ວນໜ້າຕາມເວລາທີ່ກຳນົດໄວ້.

ເດັກໃນເກນອາຍຸເຂົ້າຮຽນທີ່ບໍ່ໄດ້ເຂົ້າຮຽນໃນປີ 2010 ຈະບໍ່ສາມາດຮຽນຈົບຊັ້ນປະຖົມສຶກສາໃນປີ 2015. ໃນປີ 2010, ມີ 70 ປະເທດທີ່ ຈຳນວນເດັກເຂົ້າຮຽນຕ່ຳກວ່າ 80%.

ສິ່ງທ້າທາຍຂອງການສຶກສາປະຖົມຖ້ວນໜ້າແມ່ນຕ້ອງຊອກວິທີທາງຊຸກຍູ້ໃຫ້ເດັກໄດ້ເຂົ້າໂຮງຮຽນຕາມເກນອາຍຸ ແລະ ຮັບປະກັນວ່າເຂົາເຈົ້າມີພັດທະນາການໄປຕາມລະບົບທີ່ວາງໄວ້ ແລະ ສາມາດຮຽນຈົນຈົບຊັ້ນປະຖົມສຶກສາ. ການວິເຄາະໃນບົດລາຍງານນີ້ຊີ້ໃຫ້ເຫັນເຖິງ ຜົນການສຳຫຼວດໃນ 22 ປະເທດ ລະຫວ່າງປີ 2005 - 2010, ພົບວ່າ 38% ຂອງນັກຮຽນມີອາຍຸເກີນອາຍຸການເຂົ້າຮຽນ 2 ປີຂຶ້ນໄປ. ສ່ວນບັນດາປະເທດໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ ມີເດັກເຂົ້າໂຮງຮຽນຊ້າກວ່າເກນອາຍຸທີ່ທາງການກຳນົດ 2 ປີ ຂຶ້ນໄປມີເຖິງ 41%.

ເດັກຈາກຄອບຄົວທີ່ທຸກຍາກເຂົ້າຮຽນຊ້າກວ່າເກນອາຍຸການເຂົ້າຮຽນມີຫຼາຍ, ຍ້ອນວ່າເຂົາເຈົ້າອາໄສຢູ່ໄກຈາກໂຮງຮຽນ, ສະພາວະທາງດ້ານໂພສະນາການ ແລະ ສຸຂະອະນາໄມກໍບໍ່ສົມບູນ ແລະ/ຫຼື ຜູ້ປົກຄອງອາດຈະບໍ່ເຫັນຄວາມສຳຄັນຂອງການສົ່ງລູກເຂົ້າໂຮງຮຽນໃຫ້ທັນຕາມເກນອາຍຸທີ່ກຳນົດໄວ້. ໃນປະເທດໂຄລຳເບຍ, ຄອບຄົວທຸກຍາກທີ່ສຸດສົ່ງລູກເຂົ້າໂຮງຮຽນຊ້າກວ່າເກນ 2 ປີ ຂຶ້ນໄປມີ 42%, ເມື່ອທຽບໃສ່ຄອບຄົວຮັ່ງມີທີ່ສຸດ ແມ່ນ 11%.

ການເຂົ້າໂຮງຮຽນຊ້າມີອິດທິພົນຕໍ່ການຮຽນຈົບຕາມລະບົບການສຶກສາຂອງເດັກ.ໃນເວລາທີ່ຮຽນຮອດຫ້ອງ ປ.3, ເດັກຜູ້ໃດເຂົ້າໂຮງຮຽນຊ້າກວ່າເກນອາຍຸ ມີແນວໂນ້ມທີ່ຈະປະລະການຮຽນກວ່າເດັກທີ່ເຂົ້າໂຮງຮຽນຕາມເກນອາຍຸເຖິງ 4 ເທື່ອ.

ຮູບທີ 3: ໃນປະເທດໄນຈີເລຍ, ຈຳນວນເດັກບໍ່ເຂົ້າໂຮງຮຽນມີຫຼາຍ ແລະ ນັບມື້ນັບເພີ່ມສູງຂຶ້ນອັດຕາ.

ຈຳນວນເດັກໃນໄລຍະ ປະຖົມສຶກສາບໍ່ໄດ້ເຂົ້າໂຮງຮຽນ, ໃນລະຫວ່າງປີ 2001 ເຖິງ 2010.




*ໝາຍເຫດ*: ຂະໜາດຂອງວົງມົນແມ່ນສັດສ່ວນຂອງຈຳນວນເດັກບໍ່ໄດ້ເຂົ້າໂຮງຮຽນ. ຕົວເລກຢູ່ໃນວົງມົນສະແດງເຖິງຈຳນວນເດັກບໍ່ໄດ້ເຂົ້າໂຮງຮຽນ.ຕົວເລກໃນປີ 2001 ໃນປະເທດໄນຈີເຣຍແມ່ນໄດ້ມາຈາກປີ 2000.ສ່ວນປະເທດອິນເດຍ ຕົວເລກໃນປີ 2010 ແມ່ນໄດ້ມາຈາກປີ 2008.
*ແຫຼ່ງຂໍ້ມູນ*: ຖານຂໍ້ມູນ UIS

ຄວາມທຸກຍາກມີຜົນກະທົບທາງລົບໃຫ້ແກ່ເດັກຕ້ອງອອກຈາກໂຮງຮຽນຕັ້ງແຕ່ຍັງນ້ອຍໃນອະນາຄົດ, ເດັກ 97 ໃນ 100 ຄົນ ຈາກຄອບຄົວໃນກຸ່ມ 20% ທີ່ຮັ່ງມີທີ່ສຸດໄດ້ເຂົ້າຮຽນຊັ້ນປະຖົມຊຶ່ງໃນຈຳນວນນີ້ມີເດັກ 80 ຄົນໄດ້ຮຽນຮອດປະຖົມປີສຸດທ້າຍໃນປີ 2006. ສ່ວນເດັກ 90 ໃນ 100 ຄົນ ຈາກຄອບຄົວໃນກຸ່ມ 20% ທີ່ທຸກຍາກທີ່ສຸດໄດ້ເຂົ້າຮຽນແຕ່ມີ 49 ຄົນ ໄດ້ຮຽນຮອດປີສຸດທ້າຍ.

ເພື່ອຈຳກັດອຸປະສັກທີ່ເປັນສິ່ງກີດຂວາງໃຫ້ແກ່ການເຂົ້າຮຽນຂອງເດັກເຂົ້າຮຽນຕາມເກນອາຍຸ ແລະ ຖ່ວງດຶງຄວາມກ້າວໜ້າໃນການຮຽນຂອງເດັກ, ມັນຮຽກຮ້ອງໃຫ້ມີການປະຕິຮູບການສຶກສາໝົດທັງລະບົບ.ໃນຫຼາຍປະເທດ, ຄ່າຮຽນແມ່ນເຫດຜົນຕົ້ນໆທີ່ຜູ້ປົກຄອງບໍ່ສົ່ງລູກໄປເຂົ້າໂຮງຮຽນ ຫຼື ເອົາລູກຂອງຕົນອອກຈາກໂຮງຮຽນ. ເຖິງແມ່ນວ່າການລົບລ້າງຄ່າຮຽນໄດ້ຖືກຍົກເລີກຢ່າງເປັນທາງການ, ແຕ່ຜູ້ປົກຄອງຍັງຕ້ອງຈ່າຍຄ່າຮຽນທັງທີ່ເປັນທາງການ ແລະ ບໍ່ເປັນທາງການເກືອບ 15% ໃນ 8 ປະເທດ ທີ່ວິເຄາະໄວ້ໃນບົດລາຍງານສະບັບນີ້.

ຄອບຄົວຮັ່ງມີສາມາດໃຊ້ຈ່າຍເງິນເຂົ້າໃນການສຶກສາຂອງລູກ, ມີໂອກາດໃນການຊອກຫາໂຮງຮຽນດີມີຄຸນນະພາບລວມທັງມີຄວາມສາມາດໃນການໃຊ້ຈ່າຍເຂົ້າໃນໂຮງຮຽນເອກະຊົນ ຫຼື ຄູສອນພິເສດ. ໃນປະເທດໄນຈີເຣຍ, 20% ຂອງຄອບຄົວຮັ່ງມີທີ່ສຸດໃຊ້ຈ່າຍເງິນເຂົ້າໃສ່ການສຶກສາຂອງລູກຫຼາຍກວ່າ 10 ເທື່ອເມື່ອທຽບໃສ່ຈຳນວນ 20% ຂອງຄອບຄົວທຸກຍາກທີ່ສຸດໃນການເຂົ້າຮຽນຢູ່ຊັ້ນປະຖົມ. ເຖິງວ່າຄ່າຮຽນໃນໂຮງຮຽນເອກະຊົນຈະຕ່ຳກໍ່ຍັງເກີນຄວາມສາມາດຂອງຄອບຄົວທີ່ທຸກຍາກ. ການສົ່ງລູກ 3 ຄົນເຂົ້າໂຮງຮຽນໃນເຂດຊຸມຊົນແອອັດຢູ່ ປະເທດ ລາໂກສ ມີຄ່າໃຊ້ຈ່າຍເຖິງ 46% ທຽບໃສ່ຄ່າແຮງງານຂັ້ນຕ່ຳສຸດ.ໃນປະເທດບັງກະລາເທດ ແລະ ອີຢິບ, ຄອບຄົວຮັ່ງມີທີ່ສຸດໃຊ້ຈ່າຍໃຫ້ລູກຮຽນພິເສດຫຼາຍກວ່າຄອບຄົວທຸກຍາກທີ່ສຸດ 4 ເທື່ອ, ແລະ ນິຍົມທີ່ຈະລົງທຶນໃຫ້ລູກຮຽນພິເສດກ່ອນສະເໝີ.

ການຍົກເລີກຄ່າຮຽນໃນລະບົບແມ່ນມາດຕະການພື້ນຖານທີ່ຈະຂັບລົງການສຶກສາປະຖົມຖ້ວນໜ້າ. ແຕ່ຄຽງຄູ່ກັນນີ້ລັດຖະບານກໍ່ຕ້ອງມີມາດຕະການເສີມດຳເນີນໄປພ້ອມກັນ, ເຊັ່ນ: ການໃຫ້ເງິນອຸດໜູນແກ່ໂຮງຮຽນເພື່ອຊ່ວຍເຂົ້າໃນການໃຊ້ຈ່າຍຕ່າງໆຂອງໂຮງຮຽນໂດຍບໍ່ໃຫ້ໄປເກັບຢ່າງບໍ່ເປັນລະບົບຈາກຜູ້ປົກຄອງຂອງເດັກອີກ. ມາດຕະການປ້ອງກັນທາງສັງຄົມເຊັ່ນ: ການໂອນເງິນ, ແມ່ນມີຄວາມສຳຄັນທີ່ສຸດເພື່ອຮັບປະກັນໃຫ້ຄອບຄົວທຸກຍາກມີເງິນພຽງພໍສຳລັບເສຍຄ່າໃຊ້ຈ່າຍໃຫ້ໂຮງຮຽນໂດຍບໍ່ແຕະຕ້ອງຄ່າໃຊ້ຈ່າຍອັນຈຳເປັນພື້ນຖານຕ່າງໆໃນຄອບຄົວ. ພ້ອມດຽວກັນນີ້, ກໍ່ຄວນມີມາດຕະການອັນໃດໜຶ່ງມາຮັບປະກັນບໍ່ໃຫ້ຄອບຄົວຮັ່ງມີສົ່ງລູກເຂົ້າຮຽນໂຮງຮຽນເອກະຊົນ ຫຼື ຮຽນພິເສດ ເພີ່ມຫຼາຍຂຶ້ນ ເພື່ອບໍ່ໃຫ້ນຳໄປສູ່ບັນຫາຄວາມບໍ່ເທົ່າທຽມກັນກວ້າງຂຶ້ນໃນສັງຄົມ.

### *ສົ່ງເສີມການຮຽນຮູ້ ແລະ ທັກສະຊີວິດ ສຳລັບຊາວໜຸ່ມ ແລະ ຜູ້ໃຫຍ່*

ບັນຫາທ້າທາຍທາງດ້ານເສດຖະກິດ ແລະ ສັງຄົມໃນຫຼາຍປີຜ່ານມາໄດ້ສຸມໃສ່ບັນດາໂອກາດຂອງການຮຽນຮູ້ ແລະ ທັກສະທີ່ມີຢູ່ຂອງຊາວໜຸ່ມ. ດັ່ງບົດລາຍງານນີ້ໄດ້ຂຽນໄວ້ລະອຽດແຕ່ລະພາກ, ຄວາມທ້າທາຍເຫຼົ່ານີ້ໄດ້ຊີ້ໃຫ້ເຫັນວ່າບັນຫາຈຳເປັນອັນຮີບດ່ວນເພື່ອບັນລຸເປົ້າໝາຍສຳຄັນບໍ່ໄດ້ຮັບຄວາມເອົາໃຈໃສ່ເທົ່າທີ່ຄວນເນື່ອງຈາກຄວາມບໍ່ຈະແຈ້ງຂອງພັນທະກິດໃນເວລາທີ່ກຳນົດເປົ້າໝາຍການສຶກສາເພື່ອທຸກຄົນໃນປີ 2000.

ໂຮງຮຽນມັດທະຍົມສຶກສາໃນລະບົບ ແມ່ນວິທີການທີ່ມີປະສິດທິພາບທີ່ສຸດໃນການພັດທະນາທັກສະຕ່າງໆ ທີ່ຈຳເປັນໃຫ້ແກ່ການດຳລົງຊີວິດ ແລະ ປະກອບອາຊີບ ເຖິງແມ່ນວ່າຈຳນວນເດັກທີ່ເຂົ້າຮຽນໃນຊັ້ນມັດທະຍົມຈະເພີ່ມຂຶ້ນໃນທົ່ວໂລກ, ແຕ່ອັດຕາການເຂົ້າຮຽນໃນລະດັບມັດທະຍົມສຶກສາຕອນຕົ້ນມີພຽງ 52% ໃນບັນດາປະເທດທີ່ມີລາຍຮັບຕ່ຳ ໃນປີ 2010, ເຊິ່ງໃນນັ້ນ ຍັງມີຊາວໜຸ່ມຈຳນວນຫຼາຍລ້ານຄົນ ຍັງປະສົບກັບບັນຫາບໍ່ມີທັກສະພື້ນຖານທີ່ຈຳເປັນໃຫ້ແກ່ການປະກອບອາຊີບ. ໃນທົ່ວໂລກ, ເດັກທີ່ຢູ່ໃນເກນອາຍຸເຂົ້າຮຽນໃນຊັ້ນມັດທະຍົມສຶກສາຕອນຕົ້ນມີຈຳນວນ 71 ລ້ານຄົນ ບໍ່ໄດ້ເຂົ້າໂຮງຮຽນໃນປີ 2010 ເຊິ່ງຕົວເລກຈຳນວນດັ່ງກ່າວໄດ້ຢຸດຈົ້ງມາຕັ້ງແຕ່ປີ 2007. 3 ສ່ວນ 4 ຂອງຈຳນວນເດັກທີ່ບໍ່ໄດ້ເຂົ້າໂຮງຮຽນແມ່ນອາໄສຢູ່ໃນເຂດອາຊີໃຕ້ ແລະ ອາຊີຕາເວັນຕົກ ແລະ ໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ.

ໃນປັດຈຸບັນມີຈຳນວນເດັກເຂົ້າຮຽນໃນລະດັບມັດທະຍົມສຶກສາເພີ່ມຂຶ້ນ 25% ເມື່ອທຽບໃສ່ປີ 1999. ເຂດອະນຸພາກພື້ນຊາຮາຣາອາຟຣິກາ ມີຈຳນວນເດັກເຂົ້າຮຽນໃນລະດັບມັດທະຍົມເພີ່ມຂຶ້ນເຖິງ 2 ເທື່ອໃນໄລຍະນີ້, ແຕ່ກໍ່ຍັງຖືກຈັດເປັນເຂດທີ່ມີອັດຕາການເຂົ້າຮຽນໃນຊັ້ນມັດທະຍົມສຶກສາຕ່ຳທີ່ສຸດໃນໂລກ, ເຊິ່ງມີ 40%ໃນປີ 2010.

ຊາວໜຸ່ມຈຳນວນໜຶ່ງໄດ້ຮັບການພັດທະນາທັກສະຕ່າງໆໂດຍຜ່ານການສຶກສາທາງດ້ານການຊ່າງ ແລະ ອາຊີວະ. ສັດສ່ວນຂອງນັກຮຽນທີ່ເຂົ້າຮຽນໃນລະດັບມັດທະຍົມສຶກສາໄດ້ເຂົ້າຮຽນໃນຫຼັກສູດ

ໃນບັງກະລາເທດ ແລະ ອີຢິບ, ຄອບຄົວຮັ່ງມີທີ່ສຸດໃຊ້ຈ່າຍເຂົ້າໃນການຮຽນພິເສດຫຼາຍກວ່າຄອບຄົວທຸກຍາກທີ່ສຸດ 4 ເທື່ອ



© Giacomo Pirozzi/PANOS

ນີ້ມີ 11% ຕັ້ງແຕ່ປີ 1999.

ທັກສະຕ່າງໆບໍ່ພຽງແຕ່ໄດ້ຮັບການພັດທະນາຢູ່ໃນໂຮງຮຽນເທົ່ານັ້ນ. ບັນດາອົງການຈັດຕັ້ງສາກົນກໍມີໂຄງປະກອບວຽກຕ່າງໆເພື່ອໃຊ້ເຂົ້າໃນການໄຈ້ແຍກທັກສະ ແລະ ໂຄງການພັດທະນາທັກສະຫຼາຍດ້ານ. ແຕ່ວ່າ ພາຍຫຼັງ12 ປີ ທີ່ເປົ້າໝາຍການສຶກສາເພື່ອທຸກຄົນໄດ້ກຳນົດອອກໃນ ກຸງດາກາ, ປະຊາຄົມສາກົນຍັງຢູ່ຫ່າງໄກຈາກຂໍ້ຕົກລົງກ່ຽວກັບວິທີການຈັດຕັ້ງເພື່ອໃຊ້ປະກອບເຂົ້າໃນການວັດແທກຄວາມກ້າວໜ້າຂອງ "ການເຂົ້າເຖິງໂຄງການທັກສະຊີວິດ ແລະ ການຮຽນຮູ້ທີ່ເໝາະສົມຢ່າງສະເໝີພາບ" (ຫົວໃຈຂອງເປົ້າໝາຍ 3), ຄວາມເປັນເອກະພາບກ່ຽວກັບຊຸດຕົວຊີ້ວັດປຽບທຽບໃນລະດັບສາກົນ ແລະ ດຳເນີນການວັດຜົນ ເຖິງຄວາມກ້າວໜ້າທີ່ໄດ້ປະຕິບັດຜ່ານມາ. ປັດຈຸບັນເຫັນວ່າມີສັນຍານເຊິ່ງຊີ້ໃຫ້ເຫັນວ່າອາດມີການປ່ຽນແປງໄປໃນທາງທີ່ດີຂຶ້ນ, ແຕ່ວ່າການພັດທະນາຕ່າງໆທີ່ຜ່ານມາກໍບໍ່ສາມາດສະໜອງຂໍ້ມູນພຽງພໍເພື່ອວິເຄາະເປົ້າໝາຍ 3 ໃຫ້ທັນກັບກຳນົດເວລາເສັ້ນຕາຍ.

ການພັດທະນາທັກສະຕ່າງໆຂອງເປົ້າໝາຍລະດັບສາກົນທີ່ຈະຈັດຕັ້ງປະຕິບັດພາຍຫຼັງປີ 2015 ຈຳເປັນທີ່ສຸດທີ່ຈະຕ້ອງນິຍາມໃຫ້ລະອຽດຂຶ້ນຕື່ມ ພ້ອມທັງມີວິທີການວັດຜົນຄວາມກ້າວໜ້າໃຫ້ຈະແຈ້ງເພື່ອເປັນບ່ອນອີງໃຫ້ແກ່ຜົນການປະເມີນຕົວຈິງທີ່ສາມາດເກັບກຳໄດ້. ທັງໝົດນີ້ກໍ່ເພື່ອຫຼີກລ້ຽງບັນຫາຕ່າງໆ ເຊິ່ງເຄີຍໄດ້ພົບພໍ້ມາໃນການຕິດຕາມເປົ້າໝາຍ 3.

ໂຄງປະກອບການເຮັດວຽກຂອງ ດາກາ ໄດ້ກຳນົດຄວາມສ່ຽງໄວ້ຈຳນວນໜຶ່ງທີ່ຊາວໜຸ່ມຈະຕ້ອງໄດ້ຮັບການປົກປ້ອງໂດຍການພັດທະນາ ບັນດາທັກສະຊີວິດທີ່ເໝາະສົມ. ໜຶ່ງໃນຄວາມສ່ຽງເຫຼົ່ານີ້ແມ່ນການຕິດເຊື້ອ ເອດໄອວີ ແລະ ໂລກເອດ. ຄວາມຮູ້ທີ່ກ່ຽວພັນເຖິງເຊື້ອເອດໄອວີຍັງມີຕໍ່າ. ຜົນຄາດການຂອງໂລກຜ່ານມາໂດຍອີງໃສ່ 119 ປະເທດ ສະແດງໃຫ້ເຫັນວ່າມີພຽງ 24% ຂອງຍິງໜຸ່ມ ແລະ 36% ຂອງຊາຍໜຸ່ມ ທີ່ມີອາຍຸຕັ້ງແຕ່ 15 ເຖິງ 24ປີ ທີ່ມີຄວາມຮູ້ກ່ຽວກັບວິທີການປ້ອງກັນການຕິດເຊື້ອ ເອດໄອວີ ທາງເພດສຳພັນ ແລະ ປະຕິເສດຄວາມເຊື່ອແບບຜິດໆທີ່ເຄີຍມີມາກ່ຽວກັບການແຜ່ເຊື້ອ.

ໃນ 119 ປະເທດ, ມີພຽງ 24% ຂອງຍິງໜຸ່ມທີ່ຮູ້ຈັກວິທີປ້ອງກັນການຕິດເຊື້ອເອດໄອວີ

ຄວາມຮູ້ກ່ຽວກັບເຊື້ອເອດໄອວີ ແລະ ໂລກເອດ ຍັງຕໍ່າຢູ່ແມ້ແຕ່ໃນບັນດາປະເທດທີ່ມີອັດຕາການແຜ່ເຊື້ອສູງ. ໃນປີ 2007, ນັກຮຽນປີ 6 ປະມານ 60,000 ຄົນ (ອາຍຸປະມານ 13 ປີ ໂດຍສະເລ່ຍ) ໃນອາຟຣິກາໃຕ້ ແລະ ອາຟຣິກາຕາເວັນອອກ 15 ປະເທດ ໄດ້ຮັບການວັດຜົນຄວາມຮູ້ກ່ຽວກັບເຊື້ອເອດໄອວີ ແລະ ໂລກເອດ. ການກວດສອບໄດ້ເລັ່ງໃສ່ບັນດາໂຄງສ້າງຫຼັກສູດຢ່າງເປັນທາງການກ່ຽວກັບເອດໄອວີສຶກສາ ທີ່ຖືກຮັບຮອງຈາກກະຊວງສຶກສາທິການຂອງບັນດາປະເທດທີ່ເຂົ້າຮ່ວມ. ຜົນໄດ້ຮັບຊີ້ໃຫ້ເຫັນເຖິງການຈັດຕັ້ງປະຕິບັດທີ່ ບໍ່ມີປະສິດທິພາບ ແລະ ອາດຈະເປັນການສ້າງຫຼັກສູດທີ່ຍັງບໍ່ທັນແທດເໝາະ. ໂດຍສະເລ່ຍແລ້ວ, ນັກຮຽນທີ່ສາມາດຈັດເຂົ້າໃນລະດັບຄວາມຮັບຮູ້ຂັ້ນຕໍ່າສຸດມີພຽງ 36% ແລະ ກໍມີແຕ່ 7% ໄດ້ລະດັບທີ່ໜ້າພໍໃຈ.

ການທີ່ຈະສຶກສາໃຫ້ຊາວໜຸ່ມຮູ້ຈັກສະເພາະແຕ່ວິທີປ້ອງກັນ ແລະ ຮັກສາສຸຂະພາບຂອງຕົນ ແລະ ຜູ້ອື່ນແມ່ນບໍ່ພຽງພໍຖ້າຫາກວ່າພວກເຂົາບໍ່ມີຄວາມຮູ້ສຶກເປັນເຈົ້າການໃນການຕັດສິນໃຈທີ່ຈະເຮັດສິ່ງຖືກຕ້ອງໃນເວລາທີ່ເໝາະສົມ.

ການສຶກສາທັກສະຊີວິດທີ່ເນັ້ນໜັກກ່ຽວກັບການຕິດເຊື້ອເອດໄອວີ ແລະ ໂລກເອດ ຊຸກຍູ້ໃຫ້ຊາວໜຸ່ມຍອມຮັບເອົາທັດສະນະຄະຕິ ແລະ ພຶດຕິກຳເພື່ອປົກປ້ອງສຸຂະພາບຂອງຕົນເອງ ຕົວຢ່າງ: ການໃຫ້ອຳນາດພວກເຂົາໃນການຕໍ່ລອງດ້ານເພດສຳພັນດ້ວຍການເສີມສ້າງທັກສະທາງດ້ານການພົວພັນກັບຄົນ ແລະ ສັງຄົມຈິດຕະວິທະຍາເຊັ່ນ: ການສື່ສານເພື່ອສະແດງອຸດົມການ, ການສື່ສານເພື່ອສະແດງຫຼັກໝັ້ນ, ການນັບຖືຕົນເອງ, ການຕັດສິນໃຈ ແລະ ການຕໍ່ລອງ. ບັນດາໂຄງການກ່ຽວກັບທັກສະຊີວິດທີ່ກ່ຽວຂ້ອງກັບບັນຫາລະອຽດອ່ອນຫຼາຍດ້ານທີ່ພົວພັນເຖິງການມີສ່ວນຮ່ວມຂອງນັກຮຽນຄວນນຳມາປະກອບກັບເປັນຫົວຂໍ້ເພີ່ມເຕີມເຂົ້າໃນຫຼັກສູດເຊັ່ນ: ສຸຂະສຶກສາ ແລະ ການສຶກສາກ່ຽວກັບເຊື້ອເອດໄອວີ ແລະ ໂລກເອດ.

*ຫຼຸດອັດຕາການບໍ່ຮູ້ໜັງສືຂອງຜູ້ໃຫຍ່ໃຫ້ໄດ້ 50%*

ການຮູ້ໜັງສືມີຄວາມສຳຄັນຫຼາຍທີ່ສຸດຕໍ່ການເປັນຢູ່ທາງດ້ານເສດຖະກິດ ແລະ ສັງຄົມຂອງຜູ້ໃຫຍ່ ແລະ ເດັກນ້ອຍ, ແຕ່ຄວາມກ້າວໜ້າຕໍ່ ເປົ້າໝາຍນີ້ ຍັງມີຄວາມຈຳກັດຢູ່ຫຼາຍ, ສາເຫດສ່ວນໃຫຍ່ກໍແມ່ນມາຈາກຄວາມບໍ່ເອົາໃຈໃສ່ຂອງລັດຖະບານ ແລະ ຜູ້ໃຫ້ທຶນ. ໃນປີ 2010 ຍັງມີຜູ້ໃຫຍ່ ປະມານ 775 ລ້ານຄົນທີ່ຍັງບໍ່ສາມາດອ່ານອອກຂຽນໄດ້. ຈຳນວນເຄິ່ງໜຶ່ງຂອງກຸ່ມນີ້ແມ່ນຢູ່ໃນອາຊີໃຕ້ ແລະ ອາຊີຕາເວັນຕົກ ແລະ ຫຼາຍກວ່າ 1 ໃນ 5 ແມ່ນຢູ່ໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ.

ຂໍ້ມູນທີ່ໄດ້ຮັບໃນລະຫວ່າງປີ 2005 - 2010 ລາຍງານວ່າມີ 81 ປະເທດ ໃນ 146 ປະເທດ ທີ່ມີຈຳນວນຜູ້ຍິງບໍ່ຮູ້ໜັງສືຫຼາຍກວ່າຜູ້ຊາຍ.ໃນບັນດາປະເທດເຫຼົ່ານີ້, 21 ປະເທດມີການຈຳແນກບົດບາດຍິງ - ຊາຍ ຢ່າງຮຸນແຮງທີ່ສຸດ, ຈະເຫັນວ່າໃນຈຳນວນຜູ້ຊາຍທຸກໆ 10 ຄົນ ທີ່ຮູ້ໜັງສືຈະມີຜູ້ຍິງທີ່ຮູ້ໜັງສືໜ້ອຍກວ່າ 7 ຄົນ.

ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ໃນທົ່ວໂລກໄດ້ເພີ່ມຂຶ້ນລະຫວ່າງ 2 ທົດສະວັດທີ່ຜ່ານມາ ຈາກ 76% ໃນປີ 1985 - 1994 ເພີ່ມຂຶ້ນເຖິງ 84% ໃນປີ 2005 - 2010.ແຕ່ໃນຈຳນວນ 43 ປະເທດ ທີ່ມີອັດຕາການຮູ້ໜັງສືຂອງຜູ້ໃຫຍ່ຕໍ່າກວ່າ 90% ໃນປີ 1998 - 2001 ມີພຽງແຕ່ 3 ປະເທດເທົ່ານັ້ນທີ່ຈະບັນລຸເປົ້າໝາຍຂອງການຫຼຸດອັດຕາການບໍ່ຮູ້ໜັງສືລົງໄດ້ 50% ພາຍໃນປີ 2015. ບາງປະເທດຍັງມີແນວໂນ້ມວ່າຈະບໍ່ສາມາດບັນລຸເປົ້າໝາຍດ້ວຍຕົວເລກທີ່ຫ່າງໄກຈາກກອບທີ່ວາງໄວ້ (ຮູບທີ 4).

ໃນຂະນະດຽວກັນ ບາງປະເທດໃນກຸ່ມນຳຫຼັງມີການຈັດຕັ້ງປະຕິບັດທີ່ໄດ້ຮັບຜົນດີຢ່າງເດັ່ນຊັດ ເຊັ່ນ: ປະເທດມາລີ ຊຶ່ງອັດຕາການຮູ້ໜັງສືເພີ່ມຂຶ້ນເຖິງ 2 ເທື່ອ ແຕ່ພາກສ່ວນອື່ນເຊັ່ນ: ມາດາກັດສະກາ ປະສົບກັບບັນຫາອັດຕາການຮູ້ໜັງສືຫຼຸດລົງໃນທົດສະວັດທີ່ຜ່ານມາ.

ເກືອບ 3 ສ່ວນ 4 ຂອງຜູ້ໃຫຍ່ທີ່ບໍ່ຮູ້ໜັງສືອາໄສຢູ່ໃນ 10 ປະເທດ. ໃນທົ່ວໂລກ, 37% ແມ່ນອາໄສຢູ່ປະເທດ ອິນເດຍ.ໃນໄນຈີເຣຍ, ຈຳນວນຜູ້ໃຫຍ່ບໍ່ຮູ້ໜັງສື ເພີ່ມຂຶ້ນ 10 ລ້ານຄົນໃນໄລຍະ 2 ທົດສະວັດທີ່ຜ່ານມາ, ຊຶ່ງລວມທັງໝົດມີ 35 ລ້ານຄົນ.

ຄຳຖາມສຳຄັນຄືຂໍ້ມູນເຫຼົ່ານີ້ໄດ້ສະແດງໃຫ້ເຫັນເຖິງບັນຫາຮອບດ້ານແລ້ວບໍ່. ຜູ້ໃຫຍ່ຖືກຖາມວ່າພວກເຂົາສາມາດອ່ານ ແລະ ຂຽນໄດ້ ຫຼື ບໍ່ ແທນທີ່ຈະໄດ້ຮັບການກວດສອບເຖິງຄວາມສາມາດ. ວິທີການປະເມີນທັກສະຕ່າງໆຂອງຜູ້ໃຫຍ່ແບບກົງໄປກົງມາຈະໄດ້ຂໍ້ມູນກ່ຽວກັບທັກສະການຮູ້ໜັງສືໄດ້ອຸດົມສົມບູນຂຶ້ນກວ່າເກົ່າ.

3 ສ່ວນ 4 ຂອງຜູ້ໃຫຍ່ທີ່ບໍ່ຮູ້ໜັງສືອາໄສຢູ່ໃນ 10 ປະເທດ

ຮູບທີ 4: ປະເທດສ່ວນໃຫຍ່ຈະບໍ່ສາມາດບັນລຸເປົ້າໝາຍການຮູ້ໜັງສືຂອງຜູ້ໃຫຍ່, ບາງປະເທດຈະຍັງຢູ່ຫ່າງໄກຈາກເປົ້າໝາຍທີ່ວາງໄວ້.

ອັດຕາການບໍ່ຮູ້ໜັງສືຂອງຜູ້ໃຫຍ່, ປີ 1998 - 2001 ເຖິງປີ 2015 (ການຄາດຄະເນ)




*ໝາຍເຫດ*: ບັນດາປະເທດທີ່ສະແດງໃຫ້ເຫັນໃນຕາຕະລາງ ແມ່ນປະເທດທີ່ສາມາດຄາດຄະເນສະຖິຕິໃນປີ 2015 ໄດ້ ແລະ ມີອັດຕາການບໍ່ຮູ້ໜັງສືຂອງຜູ້ໃຫຍ່ໃນລະຫວ່າງປີ 1998 - 2001 ສູງກວ່າ 10%

*ແຫຼ່ງຂໍ້ມູນ*: ເອກະສານຊ້ອນທ້າຍ, ຕາຕະລາງສະຖິຕິທີ 2; ຖານຂໍ້ມູນ UIS.

ຕາມການສັນນິຖານທົ່ວໄປເຫັນວ່າເດັກຈະສາມາດອ່ານ, ຂຽນ ແລະ ຄິດໄລ່ເລກໄດ້ດີແມ່ນຕ້ອງໃຊ້ເວລາຮຽນໃນໂຮງຮຽນ 4 ຫຼື 5 ປີ. ແຕ່ຈາກຜົນການວິເຄາະການສຳຫຼວດຕາມຄົວເຮືອນຄັ້ງໃໝ່ໃນບົດລາຍງານນີ້ ສະແດງໃຫ້ເຫັນວ່າມີ ເດັກຈຳນວນຫຼາຍກວ່າທີ່ຄາດຄິດໄວ້ໃນບັນດາປະເທດທີ່ມີລາຍຮັບຕ່ຳ ແລະ ປານກາງຮຽນຈົບຊັ້ນປະຖົມສຶກສາຍັງບໍ່ສາມາດອ່ານອອກ ຂຽນໄດ້ເລີຍ. ຕົວຢ່າງ: ໃນປະ ເທດການາ, ຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນຜູ້ຍິງ ແລະ ຫຼາຍກວ່າ 1 ໃນ 3 ຂອງຜູ້ຊາຍອາຍຸແຕ່ 15 ຫາ 29 ປີ ທີ່ຮຽນຈົບຊັ້ນປະຖົມປີທີ 6 ແຕ່ບໍ່ສາມາດອ່ານໜັງສືໄດ້ແມ້ແຕ່ປະໂຫຍກດຽວ. ໃນຂະນະທີ່ 28% ຂອງຍິງໜຸ່ມ ແລະ 33% ຂອງຊາຍໜຸ່ມສາມາດອ່ານໄດ້ແຕ່ບາງສ່ວນຂອງປະໂຫຍກເທົ່ານັ້ນ (ຮູບທີ 5).

ສະພາບແວດລ້ອມທີ່ຜູ້ຄົນອາໄສຢູ່ມີອິດທິພົນຕໍ່ຄວາມສາມາດຂອງທັກສະການຮຽນຮູ້ ແລະ ການຮັກສາທັກສະການຮູ້ໜັງສືໃຫ້ຍັງຄົງຢູ່ນຳພວກເຂົາຕະຫຼອດໄປ. ຜົນການປະເມີນເບື້ອງຕົ້ນຂອງໂຄງການຕິດຕາມ ແລະ ປະເມີນຜົນການຮູ້ໜັງສືໃນຈໍແດນ, ມົງໂກລີ, ປາແລດສະຕາຍ ແລະ ປາຣາກວາຍ ສະແດງໃຫ້ເຫັນວ່າອັດຕາການຮູ້ໜັງສືສາມາດເຊື່ອງຊ້ອນຄວາມແຕກຕ່າງຢ່າງຫຼວງຫຼາຍຂອງການດຳເນີນງານໃນລະດັບຕ່າງໆ ແລະ ໃນສະພາບແວດລ້ອມທີ່ສົ່ງຜົນໃຫ້ແກ່ທັກສະການຮຽນຮູ້ຂອງຜູ້ໃຫຍ່.

ໃນບັນດາປະເທດທີ່ມີລາຍຮັບສູງ, ການສຶກສາຂັ້ນພື້ນຖານຂະຫຍາຍຢ່າງທົ່ວເຖິງ ສົ່ງຜົນໃຫ້ອັດຕາການບໍ່ຮູ້ໜັງສືທີ່ມີລະດັບສູງໄດ້ກາຍເປັນອະດີດແລ້ວ. ແຕ່ຈາກຜົນການປະເມີນໂດຍກົງຍັງຊີ້ໃຫ້ເຫັນວ່າຍັງມີຫຼາຍກວ່າ1 ສ່ວນ 5 ຂອງຜູ້ໃຫຍ່ໃນປະເທດເຫຼົ່ານີ້, ທຽບເທົ່າກັບ160 ລ້ານຄົນມີທັກສະການຮູ້ໜັງສືທີ່ຍັງຕ່ຳຢູ່ - ບໍ່ສາມາດອ່ານ, ຂຽນ ແລະ ຄິດໄລ່ເລກໃຊ້ ໃນຊີວິດປະຈຳວັນຢ່າງມີປະສິດທິຜົນ, ເຊັ່ນຕົວຢ່າງ ການຂຽນໃບສະໝັກວຽກ ຫຼື ການຕີຄວາມໝາຍຂໍ້ຄວາມຈາກປ້າຍຕິດແກ້ວຢາປົວພະຍາດ. ບັນດາກຸ່ມຄົນທີ່ໄດ້ຮັບຜົນກະທົບສະເພາະແມ່ນກຸ່ມຄົນທີ່ດ້ອຍໂອກາດທາງສັງຄົມລວມມີຜູ້ທຸກຈົນ, ອົບພະຍົບ ແລະ ຊົນເຜົ່າສ່ວນໜ້ອຍ.

ໃນ 60 ປະເທດ
ເດັກຍິງໄດ້ປະ
ເຊີນກັບຄວາມ
ດ້ອຍໂອກາດ
ໃນການສຶກສາ
ຂັ້ນປະຖົມ

ຄົນທີ່ມີທັກສະໃນການອ່ານ ແລະ ຂຽນອ່ອນ ມັກໄດ້ຮັບການໝິ່ນປະມາດ ແລະ ບໍ່ມີຄວາມໝັ້ນໃຈໃນຕົນເອງເລີຍ. ນີ້ແມ່ນສິ່ງທ້າທາຍອັນຕົ້ນຕໍຂອງການລິເລີ່ມການຮູ້ໜັງສືຂອງຜູ້ໃຫຍ່. ບັນດາໂຄງການທີ່ຊ່ວຍຜູ້ຮຽນໃຫ້ໄດ້ຮັບຜົນປະໂຫຍດຈາກການນຳໃຊ້ທັກສະການຮູ້ໜັງສືເຂົ້າໄປຮັບໃຊ້ຊີວິດປະຈຳວັນ ແມ່ນສິ່ງທີ່ກະຕຸກຊຸກຍູ້ໃຫ້ຜູ້ໃຫຍ່ຢາກເຂົ້າຮ່ວມໂຄງການ ໃນຂະນະດຽວກັນກໍຕ້ອງ ພະຍາຍາມຫຼີກລ່ຽງບໍ່ເຮັດໃຫ້ເຂົາເຈົ້າຮູ້ສຶກຕ່ຳຕ້ອຍນ້ອຍໃຈໃນເວລາເຂົ້າໄປຮ່ວມໃນຂະບວນການ. ເພື່ອລົບລ້າງການບໍ່ຮູ້ໜັງສືຂອງຜູ້ໃຫຍ່ມັນຮຽກຮ້ອງໃຫ້ນັກການເມືອງລະດັບສູງມີຄວາມຕັດສິນໃຈເດັດດ່ຽວ ປະຕິບັດພັນທະກິດ ແລະ ມີວິໄສທັດທາງດ້ານນະໂຍບາຍໃນໄລຍະຍາວຢ່າງຕໍ່ເນື່ອງພ້ອມທັງມີຊັບພະຍາກອນທີ່ພຽງພໍໃນການຈັດຕັ້ງປະຕິບັດ.

### *ບັນລຸຄວາມສະເໝີພາບ ແລະ ຄວາມເທົ່າທຽມດ້ານບົດບາດຍິງ-ຊາຍ*

ຄວາມສະເໝີພາບ ແລະ ຄວາມເທົ່າທຽມດ້ານບົດບາດ ຍິງ-ຊາຍ ໃນການສຶກສາແມ່ນສິດທິມະນຸດຂັ້ນພື້ນຖານຊຶ່ງເປັນເຄື່ອງມືອັນສຳຄັນທີ່ໃຊ້ເຂົ້າໃນການປັບປຸງໝາກຜົນທາງດ້ານເສດຖະກິດ ແລະ ສັງຄົມ. ການຫຼຸດຊ່ອງຫວ່າງຂອງບົດບາດ ຍິງ-ຊາຍ ທີ່ເຂົ້າຮຽນລະດັບປະຖົມສຶກສາແມ່ນໜຶ່ງໃນຜົນສຳເລັດອັນຍິ່ງໃຫຍ່ຂອງການສຶກສາເພື່ອທຸກຄົນຕັ້ງແຕ່ປີ 2000 ເປັນຕົ້ນມາ. ເຖິງແມ່ນວ່າຫຼາຍປະເທດຍັງຄົງຢູ່ສະພາວະທີ່ໜ້າເປັນຫ່ວງທີ່ຈະບັນລຸເປົ້າປາຍຄວາມສະເໝີພາບລະຫວ່າງຍິງ-ຊາຍ ທີ່ຈະເຂົ້າຮຽນຊັ້ນປະຖົມ ແລະ ມັດທະຍົມສຶກສາພາຍໃນປີ 2015 ແລະ ຍັງມີພາລະກິດອີກຫຼາຍຢ່າງທີ່ຈຳເປັນຈະຕ້ອງໄດ້ຈັດຕັ້ງປະຕິບັດເພື່ອຮັບປະກັນໃຫ້ເກີດຄວາມສະເໝີພາບທາງດ້ານໂອກາດ ແລະ ຜົນສຳເລັດທາງດ້ານການສຶກສາ.

ມີ 68 ປະເທດ ທີ່ຍັງບໍ່ທັນສາມາດບັນລຸເປົ້າໝາຍຄວາມສະເໝີພາບທາງດ້ານບົດບາດ ຍິງ-ຊາຍ ໃນຂັ້ນປະຖົມສຶກສາ ແລະ ໃນນັ້ນມີ 60 ປະເທດຍັງມີເດັກຍິງທີ່ດ້ອຍໂອກາດ. ໃນຂະນະທີ່ບັນດາປະເທດຕ່າງໆເຊັ່ນ: ເອທິໂອເປຍ ແລະ ເຊເນການ ມີຄວາມກ້າວໜ້າແບບກ້າວກະໂດດແຕ່ປະເທດອື່ນໆເຊັ່ນ: ແອງໂກລາ ແລະ ເອຣິເທຼຍ ຍັງບໍ່ມີຄວາມຄືບໜ້າຫຍັງເລີຍ.

ໃນຫຼາຍປະເທດເດັກຍິງຍັງຕົກຢູ່ໃນຖານະດ້ອຍໂອກາດຫຼາຍທີ່ສຸດ, ຫຼື ເວົ້າອີກແນວໜຶ່ງແມ່ນດັດສະນີຊີ້ວັດຄວາມສະເໝີພາບ ຍິງ-ຊາຍ ຍັງຕ່ຳກວ່າ 0.70, ຫຼຸດລົງຈາກ 16 ໃນ ປີ 1990 ເຫຼືອຢູ່ 11 ໃນປີ 2000, ແລະ ຍັງເຫຼືອ 1 ໃນປີ 2010 - ອັບການິດສະຖານ ກໍ່ມີຄວາມກ້າວໜ້າຫຼາຍໃນຊຸມປີທີ່ຜ່ານມາ.

ຄວາມດ້ອຍໂອກາດທີ່ໜັກໜ່ວງໃນເມື່ອກ່ອນທີ່ວັດໄດ້ດ້ວຍດັດ

ຮູບທີ 5: ສຳລັບຊາວໜຸ່ມຈຳນວນຫຼວງຫຼາຍ, ໃຊ້ເວລາຮຽນ 6 ປີ ແມ່ນບໍ່ພຽງພໍຕໍ່ການເສີມສ້າງທັກສະການຮູ້ໜັງສືສະພາບ ການຮູ້ໜັງສື,
ຍິງ ແລະ ຊາຍ ອາຍຸແຕ່ 15 ເຖິງ 29 ປີ ທີ່ຮຽນຈົບໃຊ້ເວລາ 6 ປີ, ຈາກບັນດາປະເທດທີ່ຖືກຄັດເລືອກແຕ່ປີ 2005 ເຖິງ 2011 (%).




*ແຫຼ່ງຂໍ້ມູນ*: ການວິໄຈຂອງທີມງານ ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ (2012) ໂດຍອີງໃສ່ຂໍ້ມູນການສຳຫຼວດດ້ານປະຊາກອນ ແລະ ສຸຂະອານາໄມ.

ສະນີຄວາມສະເໝີພາບ ຍິງ-ຊາຍ ຕໍ່າກວ່າ 0.90. ໄດ້ຫຼຸດລົງໃນ 1 ທົດສະວັດຜ່ານມາ. ໃນຈຳນວນ 167 ປະເທດທີ່ມີຂໍ້ມູນຂອງໃນປີ 1999 ແລະ 2010, ມີ 33 ປະເທດ ມີດັດສະນີຊີ້ວັດຄວາມສະເໝີພາບ ຍິງ-ຊາຍ ຕໍ່າກວ່າ 0.90 ໃນປີ 1999, ຊຶ່ງກວມເອົາ 21 ປະເທດໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ.

ໃນປີ 2010, ມີພຽງ 17 ປະເທດໃນກຸ່ມນີ້, ໃນນັ້ນມີ 12 ປະເທດ ຈາກເຂດອະນຸພາກພື້ນຊາຮາຣາອາຟຣິກາ. ບັນດາປະເທດທີ່ມີຄວາມກ້າວໜ້າພໍທີ່ຈະສາມາດບັນລຸເປົ້າໝາຍຄວາມສະເໝີພາບ ຍິງ-ຊາຍ ໄດ້ ນັ້ນມີ: ບູຣຸນດີ, ອິນເດຍ ແລະ ອູກັນດາ. ຜົນງານຂອງປະເທດເຫຼົ່ານີ້ສະແດງໃຫ້ເຫັນເຖິງການນຳເອົາຍຸດທະສາດຕ່າງໆເຂົ້າມາໃຊ້ ເພື່ອປັບປຸງການມີສ່ວນຮ່ວມໃນໂຮງຮຽນຂອງເດັກຍິງ ເຊັ່ນ: ປຸກລະດົມ ຄວາມ ຕື່ນຕົວຂອງຊຸມຊົນ, ລະດົມທຶນຮອນເພື່ອສະໜັບສະໜູນເດັກຍິງ, ຮັບປະກັນໃຫ້ມີການນຳໃຊ້ອຸປະກອນການຮຽນ-ການສອນ ແລະ ວິທີການສິດສອນທີ່ອ່ອນໄຫວຕໍ່ບົດບາດເດັກຍິງ-ຊາຍ, ແລະ ສ້າງສະພາບແວດລ້ອມຂອງໂຮງຮຽນໃຫ້ມີຄວາມປອດໄພ ແລະ ມີສຸຂະອານາໄມດີ.

ການເຂົ້າໃຈເຖິງບັນດາສາເຫດທີ່ພາໃຫ້ອັດຕາການເຂົ້າຮຽນຂອງເດັກຍິງຕໍ່ານັ້ນເປັນສິ່ງທີ່ຈຳເປັນຫຼາຍຕໍ່ການບັນລຸເປົ້າໝາຍຄວາມສະເໝີພາບ ຍິງ-ຊາຍ. ຜົນການວິໄຈໃນບົດລາຍງານນີ້ກ່ຽວກັບຂໍ້ມູນການສຳຫຼວດຄົວເຮືອນໃນ 9 ປະເທດ ສະບັບນີ້ສະແດງໃຫ້ເຫັນວ່າເດັກຍິງ ຈຳນວນຫຼາຍຍັງປະເຊີນກັບອຸປະສັກໃນການເຂົ້າໂຮງຮຽນໃນຊັ້ນປະຖົມສຶກສາຫຼາຍກວ່າເດັກຊາຍ, ແຕ່ເມື່ອມີໂອກາດໄດ້ເຂົ້າໄປຮຽນແລ້ວກໍມີສິດທີ່ຈະຮຽນຈົບຊັ້ນປະຖົມຢ່າງເທົ່າທຽມກັນ. ຕົວຢ່າງ ໃນປະເທດກີນີ, ມີເດັກຍິງຈາກຄອບຄົວທຸກຍາກ

ຮູບທີ 6: ເຖິງຈະມີຄວາມກ້າວໜ້າໃນການຫຼຸດຄວາມແຕກໂຕນທາງດ້ານບົດບາດ ຍິງ-ຊາຍ ລົງໄດ້ແຕ່ເດັກຍິງກໍຍັງມີອຸປະສັກອັນໃຫຍ່ຫຼວງໃນການເຂົ້າໂຮງຮຽນ.

ດັດສະນີຄວາມສະເໝີພາບ ຍິງ-ຊາຍ (GPI)ຈາກອັດຕາສ່ວນການເຂົ້າຮຽນທັງໝົດ, ປະເທດທີ່ມີຄ່າGPI ໃນປີ 1990 ຕໍ່າກວ່າ 0.90 ໃນລະຫວ່າງປີ 1990-2000 ແລະ ປີ 2000-2010.




*ໝາຍເຫດ*: ຂໍ້ມູນຂອງບັນດາປະເທດທີ່ກ່ຽວຂ້ອງເຊິ່ງເກັບກຳໃນປີ 1990, 2000 ແລະ 2010. ໃນກໍລະນີບໍ່ມີຂໍ້ມູນໃນປີສະເພາະໃດໜຶ່ງ, ສາມາດໃຊ້ຂໍ້ມູນ 2 ປີ ກ່ອນ ຫຼື ຫຼັງຈາກນັ້ນ.
ຮູບສະແດງນີ້ບໍ່ໄດ້ກວມເອົາ ອັຟການິສຖານ ແລະ ໂອມານ ເນື່ອງຈາກວ່າຂໍ້ມູນມີແນວໂນ້ມໄປໃນທາງລົບ.
*ແຫຼ່ງຂໍ້ມູນ*: ຖານຂໍ້ມູນ UIS

ທີ່ສຸດພຽງແຕ່ 40 ໃນ 100 ຄົນ ເທົ່ານັ້ນສາມາດຮຽນຈົບຊັ້ນປະຖົມສຶກສາ, ຖ້າທຽບໃສ່ເດັກຊາຍແມ່ນ 52 ຄົນ. ສາເຫດສ່ວນໃຫຍ່ກໍ່ແມ່ນຍ້ອນການເຂົ້າ ໂຮງຮຽນປະຖົມສຶກສາ ປີທີ 1 ຂອງເດັກຍິງມີຈຳນວນໜ້ອຍກວ່າເດັກຊາຍ: ໃນຈຳນວນເດັກຍິງ 100 ຄົນ ຈາກຄອບຄົວທຸກຍາກທີ່ສຸດມີ 44 ຄົນ ໄດ້ເຂົ້າໂຮງຮຽນ, ເມື່ອທຽບໃສ່ເດັກຊາຍແມ່ນ 57 ຄົນ.

ຫຼາຍກວ່າເຄິ່ງໜຶ່ງຂອງປະເທດມີບັນຫາກ່ຽວກັບຄວາມບໍ່ສະເໝີພາບ ຍິງ-ຊາຍ ໃນລະດັບມັດທະຍົມ ມີເດັກຊາຍເຂົ້າຮຽນໜ້ອຍກວ່າເດັກຍິງ

ໃນຈຳນວນ 97 ປະເທດ ມີຫຼາຍກວ່າເຄິ່ງໜຶ່ງມີບັນຫາກ່ຽວກັບຄວາມບໍ່ສະເໝີພາບ ຍິງ-ຊາຍ ໃນການເຂົ້າຮຽນລະດັບມັດທະຍົມສຶກສາ, ມີຈຳນວນເດັກຊາຍເຂົ້າໃນລະດັບນີ້ໜ້ອຍກວ່າເດັກຍິງ, ປະເທດເຫຼົ່ານີ້ມີແນວໂນ້ມວ່າເປັນປະເທດທີ່ຮັ່ງມີ ແລະ ໃນພາບລວມກໍ່ມີອັດຕາການເຂົ້າຮຽນທີ່ສູງກວ່າປະເທດອື່ນໆ. ໂດຍສ່ວນ ໃຫຍ່ແລ້ວແມ່ນນອນຢູ່ໃນເຂດອາເມລິກາລາຕິນ, ຄາຣິບຽນ, ປາຊີຟິກ ແລະ ອາຊີຕາເວັນອອກ. ແຕ່ໃນນັ້ນມີ 3 ປະເທດທີ່ມີລາຍຮັບຕໍ່າກໍ່ມີເດັກຊາຍດ້ອຍໂອກາດເຊັ່ນ: ບັງກະລາເທດ, ມຽນມາ ແລະ ຣູວັນດາ.

ປັດໃຈຕົ້ນຕໍທີ່ພາໃຫ້ບັນດາເດັກຊາຍອອກຈາກໂຮງຮຽນໃນຊັ້ນມັດທະຍົມສຶກສາ ແມ່ນຍ້ອນຄວາມທຸກຍາກ ແລະ ຄວາມຕ້ອງການຂອງ ຕະຫຼາດແຮງງານ, ດັ່ງທີ່ປາກົດໃຫ້ເຫັນຢູ່ໃນອາເມລິກາລາຕິນ ແລະ ຄາຣິບຽນ ຕົວຢ່າງ: ໃນຮອນດູຣັດເດັກຊາຍ 6 ໃນ 10 ຄົນ ທີ່ມີເກນອາຍຸ 15 ຫາ 17 ປີ ມີວຽກເຮັດ, ຊຶ່ງໃນນັ້ນ ມີ 2 ຄົນໄດ້ຮຽນໜັງສື. ໃນຂະນະທີ່ເດັກຍິງມີພຽງ 2 ໃນ 10 ຄົນມີວຽກເຮັດງານທຳ.

ເດັກຊາຍຈຳນວນຫຼວງຫຼາຍອາດອອກໂຮງຮຽນຍ້ອນສະພາບແວດລ້ອມຂອງໂຮງຮຽນ, ລວມທັງທັດສະນະຂອງຄູ. ເຖິງແມ່ນວ່າຄວາມແຕກຕ່າງທາງດ້ານຮູບແບບການຮຽນຮູ້ລະຫວ່າງເດັກຍິງ ແລະ ເດັກຊາຍຈະມີໜ້ອຍ, ແຕ່ຄູກໍ່ຈຳເປັນທີ່ຕ້ອງໄດ້ຄຳນຶງເຖິງຄວາມແຕກຕ່າງທີ່ມີຢູ່ ແລະ ກຽມພ້ອມທີ່ຈະດັດປັບວິທີການສອນ ແລະ ການປະເມີນຜົນໄປຕາມ ສະພາບດັ່ງກ່າວ. ວິທີການສອນ 2 ແບບທີ່ໄດ້ເຄີຍທົດລອງນຳໃຊ້ມາແລ້ວ ແລະ ເຫັນວ່າບໍ່ເໝາະສົມໃນບາງປະເດັນ ເຊັ່ນ: ການແຍກໂຮງຮຽນ ຍິງ-ຊາຍ ແລະ ການຈັດຫ້ອງຮຽນໄປຕາມລະດັບຄວາມສາມາດຂອງນັກຮຽນ.

ເດັກຊາຍຈຳນວນຫຼວງຫຼາຍມັກຈະເສຍປຽບໃນດ້ານການຮຽນໂດຍສະເພາະແມ່ນການອ່ານ. ຕະຫຼອດເວລາທີ່ຜ່ານມາ, ຊ່ອງຫວ່າງທາງຜົນການຮຽນລະຫວ່າງເດັກ ຍິງ-ຊາຍ ນັບມື້ນັບຫ່າງອອກເຊິ່ງເດັກຍິງເຮັດໄດ້ດີກວ່າ. ບັນຫາເດັກຊາຍຍັງສືບຕໍ່ໄດ້ປຽບໃນວິຊາຄະນິດສາດ, ແຕ່ກໍ່ມີບາງຫຼັກຖານຢັ້ງຢືນວ່າ ຊ່ອງຫວ່າງດັ່ງກ່າວອາດຈະແຄບເຂົ້າ.

ຄວາມສາມາດຂອງເດັກຍິງ ຫຼື ເດັກຊາຍບໍ່ໄດ້ແຕກຕ່າງກັນໂດຍກຳເນີດ ເຊິ່ງຈະນຳໄປສູ່ຜົນການຮຽນທີ່ດີໃນໂຮງຮຽນ. ເພື່ອຫຼຸດຊ່ອງຫວ່າງສຳລັບການອ່ານ, ຜູ້ປົກຄອງ, ຄູ ແລະ ຜູ້ກຳນົດນະໂຍບາຍຄວນຊອກຫາວິທີການທີ່ປະດິດສ້າງເພື່ອກະຕຸກຊຸກຍູ້ໃຫ້ເດັກຊາຍອ່ານຫຼາຍໆຂຶ້ນໂດຍການຈັດຫາປຶ້ມເລື່ອງໃນຮູບແບບດີຈີຕອນທີ່ສາມາດດຶງດູດຄວາມສົນໃຈຂອງເຂົາເຈົ້າ. ເພື່ອປິດຊ່ອງຫວ່າງໃນວິຊາຄະນິດສາດ, ຄວາມກ້າວໜ້າໃນດ້ານຄວາມສະເໝີພາບ ຍິງ-ຊາຍນອກຫ້ອງຮຽນ (ໂດຍສະເພາະບັນດາໂອກາດໃນການຈ້າງງານ) ຈະມີບົດບາດສຳຄັນໃນການຫຼຸດຜ່ອນຄວາມແຕກໂຕນລະຫວ່າງ ຍິງ-ຊາຍ.

*ປັບປຸງຄຸນນະພາບການສຶກສາ*

ເດັກທີ່ຢູ່ໃນເກນອາຍຸເຂົ້າຮຽນຊັ້ນປະຖົມສຶກສາຈຳນວນ 650 ລ້ານຄົນໃນທົ່ວໂລກ, ມັນເຖິງເວລາແລ້ວທີ່ຈະຕ້ອງແນໃສ່ຫຼຸດຜ່ອນບໍ່ພຽງແຕ່ 120 ລ້ານຄົນ ທີ່ຮຽນບໍ່ຈົບ ປ 4 ເທົ່ານັ້ນ ແຕ່ຈະຕ້ອງເອົາໃຈໃສ່ອີກ 130 ລ້ານຄົນທີ່ກຳລັງຮຽນຢູ່ແຕ່ບໍ່ປະສົບຜົນສຳເລັດໃນການຮຽນຄວາມຮູ້ພື້ນຖານໃຫ້ຄວາມເອົາໃຈໃສ່ອີກຄື 130 ລ້ານຄົນທີ່ກຳລັງຮຽນຢູ່ແຕ່ພົບກັບຄວາມລົ້ມເຫຼວໃນການຮຽນຂັ້ນພື້ນຖານ.

ການວິເຄາະຮູບແບບຂອງຄວາມບໍ່ສະເໝີພາບກ່ຽວກັບຜົນການຮຽນ, ແລະ ການຊອກຫາສາເຫດທີ່ພາໃຫ້ເກີດມີບັນຫາເຫຼົ່ານັ້ນ, ຈະຊ່ວຍໃຫ້ສາມາດກຳນົດຮ່າງນະໂຍບາຍທີ່ຊຸກຍູ້ສົ່ງເສີມໃຫ້ນັກຮຽນມາຈາກຄອບຄົວທຸກຍາກ ສາມາດຜ່ານຜ່າອຸປະສັກໃນການ

ຮູບທີ 7: ຜົນສຳເລັດໃນການຮຽນຮູ້ປ່ຽນແປງຕາມຖານະທາງດ້ານເສດຖະກິດ-ສັງຄົມ

ອັດຕາສ່ວນຮ້ອຍຂອງນັກຮຽນທີ່ມີຜົນສຳເລັດ ວິຊາຄະນິດສາດ ໃນລະດັບ 2 ຫຼື ສູງກວ່າໂດຍຈຳແນກຕາມຖານະທາງດ້ານວັດທະນະທຳ, ສັງຄົມ ແລະ ເສດຖະກິດ ແລະ ເພດ, 2009 PISA.




*ໝາຍເຫດ*: ຈາກປະເທດ ແລະ ຮິງເຂດເສດຖະກິດທີ່ມີສ່ວນຮ່ວມໃນການສຳຫຼວດ PISA ໃນປີ 2009 ເຊິ່ງບໍ່ມີ ອາເຊີໄບຈັນ, ຫິມາຈັນປາເດດ(ອິນເດຍ) ແລະ ລິກເຕັນສະເຕນເຂົ້າຮ່ວມ. ທຸກຍາກ/ຮັ່ງມີ ອ້າງອີງເຖິງ ລຸ່ມ/ເທິງ 1 ສ່ວນ 4 ຂອງດັດສະນີສະຖານະພາບທາງດ້ານວັດທະນະທຳ, ສັງຄົມ ແລະ ເສດຖະກິດຕາມຜົນສຳຫຼວດຂອງ PISA.

*ແຫຼ່ງຂໍ້ມູນ*: Altinok (2012 b), ອີງໃສ່ຂໍ້ມູນຂອງ PISA 2009, Walker (2011).

ຮຽນຮູ້ ໄປໄດ້. ຈາກຜົນການສຳຫຼວດໃນ 74 ປະເທດ ແລະ ຫຼາຍຂົງເຂດເສດຖະກິດທີ່ມີສ່ວນຮ່ວມໃນການສຳຫຼວດ PISA ໃນປີ 2009, ເຫັນວ່ານັກຮຽນທີ່ມາຈາກຄອບຄົວຮັ່ງມີ ຈຳນວນ 25% ຂອງດັດສະນີທາງເສດຖະກິດ-ສັງຄົມ ທີ່ສູງກວ່າຜົນການຮຽນຂອງ ນັກຮຽນກໍດີ ກວ່າ ໂດຍມີຮູບແບບອອກມາຄ້າຍຄືກັນລະຫວ່າງຜົນການຮຽນຂອງເດັກຍິງ ແລະ ເດັກຊາຍ (ຮູບທີ 7).

ໃນບັນດາປະເທດມີລາຍຮັບປານກາງທີ່ມີສ່ວນຮ່ວມໃນການປະເມີນຜົນ, ຜົນການຮຽນຂອງນັກຮຽນແມ່ນຕໍ່າຫຼາຍ, ໂດຍສະເລ່ຍແລ້ວ, ຢ່າງໜ້ອຍຈຳນວນເຄິ່ງໜຶ່ງຂອງໂຮງຮຽນໄດ້ຄະແນນວິຊາຄະນິດສາດໃນລະດັບ 2. ເຖິງຢ່າງໃດກໍ່ຕາມ, ເມື່ອເບິ່ງຄືນໃນໄລຍະເວລາທີ່ ຜ່ານມາ, ບາງປະເທດທີ່ລາຍຮັບປານກາງສາມາດເພີ່ມຄະແນນສະເລ່ຍ ແລະ ຫຼຸດຄວາມບໍ່ສະເໝີພາບຂອງຜົນການຮຽນລົງໄດ້. ອັດຕາສ່ວນຮ້ອຍຂອງນັກຮຽນທີ່ມີຜົນການຮຽນຕໍ່າໃນແຕ່ລະກຸ່ມມີ 1 ສ່ວນ 4 (25%) ໂດຍແຍກຕາມຖານະທາງດ້ານເສດຖະກິດ-ສັງຄົມ ໃນບຣາຊິນ ແລະ ແມັກຊິ ໂກ ຫຼຸດລົງ ໃນລະຫວ່າງປີ 2003 ແລະ 2009. ນີ້ແມ່ນຜົນງານທີ່ໜ້າປະທັບໃຈເປັນພິເສດ ເນື່ອງຈາກວ່າຈຳນວນ ນັກຮຽນໃນລະດັບມັດທະຍົມສຶກສາໄດ້ເພີ່ມຂຶ້ນຢ່າງກ້າວກະໂດດໃນຊ່ວງໄລຍະເວລາທີ່ຜ່ານມາ. ທັງໝົດນີ້ອາດແມ່ນ ຍ້ອນມີນະໂຍບາຍ ໃນການປົກປ້ອງສັງຄົມທີ່ເນັ້ນໃສ່ກຸ່ມເປົ້າໝາຍນັກຮຽນ ດ້ອຍໂອກາດເຊິ່ງໄດ້ຈັດຕັ້ງປະຕິບັດຕັ້ງແຕ່ຊຸມປີ 1990 ເປັນຕົ້ນມາ.

ຄູ ແມ່ນຊັບພະຍາກອນທີ່ສຳຄັນທີ່ສຸດໃນການປັບປຸງການຮຽນ.ໃນຫຼາຍພາກພື້ນ, ຍັງປະສົບກັບບັນຫາການຂາດແຄນ ຄູ, ໂດຍສະເພາະຄູທີ່ຮຽນຈົບຈາກສາຍສ້າງຄູ, ນີ້ແມ່ນອຸປະສັກອັນໃຫຍ່ຫຼວງ ໃນການບັນລຸເປົ້າໝາຍການສຶກສາເພື່ອທຸກຄົນ. ຜົນການປະເມີນ ຄັ້ງທ້າຍສຸດໄດ້ຊີ້ໃຫ້ເຫັນເຖິງຄວາມຈຳເປັນທີ່ຈະຕ້ອງໄດ້ເພີ່ມຄູຊັ້ນປະຖົມສຶກສາ ຈຳນວນ 5.4 ລ້ານຄົນ ໃນ 112 ປະເທດ ພາຍ ໃນປີ 2015 ໃນນັ້ນຕ້ອງການຄູບັນຈຸໃໝ່ຈຳນວນ 2 ລ້ານຄົນ ເພື່ອຕອບສະໜອງໃຫ້ແກ່ການບັນລຸການສຶກສາປະຖົມຖ້ວນໜ້າ. ສ່ວນຈຳນວນ 3.4 ລ້ານຄົນ ແມ່ນຕົວເລກທົດແທນຕໍ່າແໜ່ງຄູທີ່ຫວ່າງລົງ. ສະເພາະແຕ່ບັນດາປະເທດ ໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ ກໍ່ມີຄວາມຕ້ອງການຄູຫຼາຍກວ່າ 2 ລ້ານຄົນ ເພື່ອບັນລຸການສຶກສາປະຖົມຖ້ວນໜ້າ.

ຈຳນວນຄູຊັ້ນປະຖົມຕໍ່ນັກຮຽນ ແມ່ນມາດຕະການໜຶ່ງໃນການປັບປຸງຄຸນນະພາບການສຶກສາ.ອັດຕາສ່ວນນັກຮຽນ/ຄູ ຂອງໂລກມີທ່າອ່ຽງວ່າໄດ້ຫຼຸດລົງເລັກນ້ອຍ ຈາກ 26:1 ໃນປີ 1999 ເຫຼືອ 24:1 ໃນປີ 2010. ໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ, ເຖິງແມ່ນວ່າຈະມີການສັບຊ້ອນຄູຫຼາຍກວ່າ 1.1 ລ້ານຄົນ, ອັດຕານັກຮຽນ/ຄູ ໄດ້ເພີ່ມຂຶ້ນເລັກນ້ອຍ ຈາກ 42:1 ເປັນ 43:1, ຍ້ອນມີການເພີ່ມຂຶ້ນໄວຂອງນັກຮຽນ.

ຈາກ 100 ປະເທດທີ່ມີຂໍ້ມູນກ່ຽວກັບການປະຖົມສຶກສາ, ມີ 33 ປະເທດມີຄູໜ້ອຍກວ່າ 75% ທີ່ໄດ້ຜ່ານການຝຶກອົບຮົມໃນລະດັບມາດຕະຖານຂອງຊາດ. ຄູຕ້ອງໄດ້ຮັບການກໍ່ສ້າງທີ່ເໝາະສົມ ເພື່ອຮັບປະກັນໃຫ້ເຂົາເຈົ້າສາມາດປະຕິບັດໜ້າທີ່ໄດ້ຢ່າງມີປະສິດທິຜົນ, ການປະເມີນໄດ້ສະແດງໃຫ້ເຫັນວ່າມີເດັກນ້ອຍໃນຫຼາຍໆປະເທດທຸກຍາກທີ່ສຸດໃນໂລກ ໃຊ້ເວລາຫຼາຍປີໃນໂຮງຮຽນ ໂດຍບໍ່ສາມາດອ່ານໜັງສືແມ້ແຕ່ຄຳດຽວເຊັ່ນຕົວຢ່າງ: ໃນປະເທດ ມາລີ ໜ້ອຍກວ່າ 8 ໃນ 10 ຄົນ ຂອງນັກຮຽນຊັ້ນປະຖົມ 2 ບໍ່ສາມາດອ່ານພາສາຊາດ ຂອງຕົນໄດ້ແມ້ແຕ່ໜຶ່ງຄຳ. ໃນເມື່ອຜົນໄດ້ຮັບທີ່ໜ້າຕົກໃຈອອກມາ ນີ້ ຈຳເປັນຕ້ອງໄດ້ທົບທວນຄືນເຖິງວິທີການກໍ່ສ້າງ ແລະ ຝຶກອົບຮົມຄູ ລວມໄປເຖິງການສະໜັບສະໜູນຊ່ວຍເຫຼືອທາງດ້ານວິຊາການເວລາສິດສອນໃນຫ້ອງຮຽນ.

ສຳລັບຄູເອງກໍ່ອາດຈະຍັງຂາດຄວາມຮູ້ໃນລາຍວິຊາທີ່ຈຳເປັນໃນເວລາທີ່ເຂົາເຈົ້າໄປຮັບໜ້າທີ່ສິດສອນໃນວິທະຍາໄລເຊິ່ງການຝຶກ ອົບຮົມສ່ວນໃຫຍ່ຈຶ່ງສຸມໃສ່ການຊ່ວຍຄູໃຫ້ໄດ້ພັດທະນາຄວາມຮູ້ກ່ຽວກັບລາຍວິຊາທີ່ເປັນພື້ນຖານຫຼາຍກວ່າວິທີການສອນຢ່າງມີປະສິດທິຜົນ.

ນອກຈາກນີ້ການພັດທະນາວິຊາຊີບມີທ່າອ່ຽງວ່າຢຸດສະຫງັກລົງເມື່ອຄູກ້າວຂາເຂົ້າໄປໃນຫ້ອງຮຽນ.

ລັດຖະບານຄວນມີມາດຕະການທີ່ເຂັ້ມງວດເພື່ອຊຸກຍູ້ການສອນໃນລະດັບປະຖົມຕອນຕົ້ນຫຼັກສູດການສ້າງຄູຈຳເປັນຈະຕ້ອງມີຈຸດສຸມແນໃສ່ເຕັກນິກການສອນໃນຫ້ອງຮຽນຢ່າງມີປະສິດທິພາບ. ຫຼັກສູດການບຳລຸງຄູປະຈຳການສາມາດຊ່ວຍຄູໃຫ້ມີຄວາມສຳພັນກັນເພື່ອຮັບປະກັນວ່າຄວາມຮູ້ທີ່ໄດ້ຮັບຈາກການຝຶກອົບຮົມໄດ້ຖືກນຳໄປພູນໃຊ້ເຂົ້າໃນການຮຽນ-ການສອນໃຫ້ດີຂຶ້ນ. ຜົນສຳເລັດຈະປະກົດອອກຢ່າງຊັດເຈນທີ່ສຸດ, ຖ້າວ່າມີການປະສົມປະສານການຝຶກອົບຮົມເຂົ້າກັນກັບກິດຈະກຳ ອື່ນໆເຊັ່ນ: ການປັບປຸງສື່ການຮຽນ-ການສອນຕ່າງໆ.

*ດັດສະນີການພັດທະນາການສຶກສາເພື່ອທຸກຄົນ (EDI)*

ດັດສະນີການພັດທະນາການສຶກສາເພື່ອທຸກຄົນສະແດງໃຫ້ເຫັນພາບຂອງຄວາມກ້າວໜ້າໂດຍລວມຂອງລະບົບການສຶກສາແຫ່ງຊາດກ່ຽວກັບການສຶກສາເພື່ອທຸກຄົນ.ໃນອະນຸກຸ່ມຂອງ 52 ປະເທດ, ພວກເຮົາສາມາດສັງເກດເຫັນວິວັດທະນາການຂອງ EDI ເວທີກອງປະຊຸມດ້ານການສຶກສາໂລກທີ່ ດາກາ. ໃນລະຫວ່າງປີ 1991 ແລະ 2010, EDI ໄດ້ຮັບການປັບປຸງໃນ 41 ຈາກ ຈຳນວນທັງໝົດ 52 ປະເທດ. ໃນບັນດາເຂດທີ່ມີຄວາມກ້າວໜ້າພິເສດແມ່ນ 12 ປະເທດໃນອະນຸພາກພື້ນຊາຮາຣາອາຟຣິກາ, ໂດຍໄດ້ບັນທຶກວ່າ ເອທິໂອເປຍ ແລະ ໂມຊຳບິກ ມີຄວາມກ້າວໜ້າຫຼາຍທີ່ສຸດ.

ຄະແນນທີ່ໃກ້ຄຽງກັນອາດຈະຍັງປິດບັງຄວາມແຕກຕ່າງກັນໃນຄວາມພະຍາຍາມຂອງແຕ່ລະປະເທດ ທີ່ໄດ້ສຸມທຸກເຫື່ອແຮງເຂົ້າໃສ່ການສຶກສາເພື່ອທຸກຄົນ. ຕົວຢ່າງ: ໃນໂຄລຳເບຍ ແລະ ຕູນີເຊຍມີຕົວເລກຄ່າ EDI ເທົ່າກັນ. ຕູນີເຊຍ ມີຈຳນວນນັກຮຽນເຂົ້າຮຽນຊັ້ນປະຖົມສຶກສາ ແລະ ອັດຕາລອດເຫຼືອສູງແຕ່ມີອັດຕາການຮູ້ໜັງສືຂອງຜູ້ໃຫຍ່ຕໍ່າ. ກົງກັນຂ້າມໃນໂຄລຳເບຍ ມີອັດຕາການຮູ້ໜັງສືຂອງຜູ້ໃຫຍ່ສູງກວ່າ ແຕ່ຊໍ້າພັດມີອັດຕາເຂົ້າຮຽນຊັ້ນປະຖົມສຶກສາຕໍ່າ ໂດຍສະເພາະອັດຕາລອດເຫຼືອຍັງຕໍ່າຫຼາຍ. ອັດຕາການບໍ່ຮູ້ໜັງສືຂອງຜູ້ໃຫຍ່ຕໍ່າໃນຕູນີເຊຍ ອາດສະທ້ອນໃຫ້ເຫັນສ່ວນໃດສ່ວນໜຶ່ງຂອງມູນເຊື້ອທາງປະຫວັດສາດ ແລະ ບໍ່ແມ່ນຍ້ອນຄວາມພະຍາຍາມໃນປັດຈຸບັນສະເໝີໄປ. ໃນຂະນະດຽວກັນ ຕົວເລກຄ່າດັດສະນີໃນໂຄລຳເບຍ ຊໍ້າພັດຕໍ່າກວ່າ ຊຶ່ງອາດຈະມີສ່ວນພົວພັນກັບເກນອາຍຸການເຂົ້າຮຽນຊັ້ນປະຖົມສຶກສາຂອງເດັກເຊິ່ງອາດຈະສົ່ງຜົນສະທ້ອນໃຫ້ແກ່ອັດຕາຮູ້ໜັງສືຂອງຜູ້ໃຫຍ່ຕໍ່າລົງໃນອະນາຄົດ.

ການຂະຫຍາຍດັດສະນີການພັດທະນາການສຶກສາເພື່ອທຸກຄົນ (EDI) ເພື່ອໃຫ້ກວມເອົາດັດສະນີການດູແລ ແລະ ໃຫ້ການສຶກສາແກ່ ເດັກກ່ອນໄວຮຽນ (ECCE) ທີ່ໄດ້ພັດທະນາຂຶ້ນມາໃນບົດລາຍງານສະບັບນີ້ໄດ້ສະແດງໃຫ້ເຫັນວ່າບັນດາປະເທດຕ່າງໆໄດ້ໃຫ້ຄວາມເອົາໃຈໃສ່ເດັກກ່ອນໄວຮຽນຫຼາຍຂຶ້ນ. ບາງປະເທດໃນອາຊີກາງເຊັ່ນ: ເກີກິດສະຖານ ແລະ ອຸສເບກິດສະຖານ ແລະ ໃນອາຊີຕາເວັນອອກເຊັ່ນ: ອິນໂດເນເຊຍ ແລະ ຟີລິບປິນ - ບັນດາປະເທດເຫຼົ່ານີ້ຕ່າງກໍ່ຫຼຸດອັນດັບລົງຈາກເມື່ອກ່ອນ, ໃນຂະນະທີ່ມີຫຼາຍປະເທດມີລະດັບ ທີ່ສູງຂຶ້ນເຊັ່ນ: ຈາໄມກາ ແລະ ແມັກຊິໂກ.

ການສຶກສາເພື່ອທຸກຄົນຈະບໍ່ສາມາດບັນລຸເປົ້າໝາຍຖ້າຫາກວ່າພວກເຮົາບໍ່ເອົາໃຈໃສ່ປະຕິບັດທຸກເປົ້າໝາຍເທົ່າກັນ. ພ້ອມກັນນີ້ກໍ່ຕ້ອງ ເອົາໃຈໃສ່ເປັນພິເສດຕໍ່ເປົ້າໝາຍທີ່ຖືກປ່ອຍປະໃນໄລຍະຜ່ານມາ, ເຊັ່ນ: ການດູແລ ແລະ ໃຫ້ການສຶກສາແກ່ເດັກກ່ອນ ໄວຮຽນ (ECCE) ແລະ ການຮູ້ໜັງສືຂອງຜູ້ໃຫຍ່. ສຳຄັນທີ່ສຸດແມ່ນຕ້ອງລົບລ້າງຄວາມບໍ່ຮູ້ໜັງສືທີ່ສືບທອດມາຫຼາຍເຊັ່ນຄົນໂດຍ ການໃຫ້ການສຶກສາທີ່ມີຄຸນນະພາບແກ່ເດັກທຸກຄົນ, ຈຶ່ງກວມເອົາເດັກກ່ອນໄວຮຽນພ້ອມດຽວກັນກໍ່ຈັດໃຫ້ກັບຜູ້ປົກຄອງເດັກໄປພ້ອມກັນ.

112 ປະເທດ ຈຳເປັນຕ້ອງ ໄດ້ຈ້າງຄູ ຈຳນວນ 5.4 ລ້ານຄົນ ໃນປີ 2015

# ຄວາມບໍ່ສະເໝີພາບໃນໂລກ

ເພື່ອໃຫ້ສອດຄ່ອງກັບບົດລາຍງານນີ້, ທີມງານທີ່ຂຽນບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ ໄດ້ສ້າງເວບໄຊຮູບແບບ ໃໝ່ເພື່ອສະແດງໃຫ້ເຫັນລະດັບຂອງຄວາມບໍ່ເທົ່າທຽມກັນດ້ານການສຶກສາຂອງແຕ່ລະປະເທດ.ຖານຂໍ້ມູນຄວາມບໍ່ເທົ່າທຽມກັນທາງ ດ້ານການສຶກສາຂອງໂລກ (WIDE) ນີ້ໄດ້ນໍາເອົາຂໍ້ມູນຫຼ້າສຸດຈາກການສໍາຫຼວດດ້ານປະຊາກອນແລະ ສຸຂະພາບ ພ້ອມກັບ ການສໍາຫຼວດກຸ່ມຕົວຊີ້ບອກທີ່ຫຼາກຫຼາຍ.

ຄວາມແຕກໂຕນທາງດ້ານຄວາມຮັ່ງມີໄດ້ຂະຫຍາຍກວ້າງຂຶ້ນສໍາລັບປະເທດທີ່ກໍາລັງສູ້ຊົນກັບການເຂົ້າໂຮງຮຽນຂອງເດັກ.

ປະຊາກອນອາຍຸແຕ່ 17 ຫາ 22 ປີ ທີ່ໄດ້ຮັບການສຶກສາ ໜ້ອຍກວ່າ 2 ປີ, ຈໍາແນກຈາກຄວາມຮັ່ງມີ (%)




ເມື່ອຄັດເລືອກ 3 ພາກພື້ນທີ່ຍັງຫ່າງໄກຈາກການບັນລຸເປົ້າໝາຍການສຶກສາເພື່ອທຸກຄົນເຊັ່ນ: ກຸ່ມປະເທດອາຣັບ. ເຂດອະນຸພາກພື້ນຊາຮາຣາອາຟຣິກາ ແລະ ອາຊີຕາເວັນຕົກ ແລະ ອາຊີໃຕ້-ເສັ້ນສະແດງໄດ້ຊີ້ໃຫ້ເຫັນເຖິງຂໍ້ມູນຄວາມແຕກໂຕນທາງດ້ານຄວາມຮັ່ງມີສູງທີ່ສຸດ, 88% ຂອງຊາວໜຸ່ມທຸກຍາກທີ່ສຸດ ໄດ້ຮັບການສຶກສາຢູ່ໃນໂຮງຮຽນໜ້ອຍກວ່າ 2 ປີ. ສິ່ງຜົນໃຫ້ປະສົບກັບຄວາມທຸກຍາກດ້ານການສຶກສາທີ່ສຸດເມື່ອປຽບທຽບໃສ່ 29% ຂອງຜູ້ຮັ່ງມີທີ່ສຸດ.ໃນທາງກົງກັນຂ້າມຢູ່ປະເທດຈໍແດນ ມີຄວາມແຕກໂຕນທາງດ້ານຄວາມຮັ່ງມີໜ້ອຍທີ່ສຸດ. ບໍ່ວ່າຈະຮັ່ງມີຫຼືທຸກຈົນ, ມີພຽງແຕ່ 1% ຂອງຊາວໜຸ່ມອາຍຸແຕ່ 17 ຫາ 22 ປີ ໄດ້ຮັບຜົນກະທົບຈາກຄວາມທຸກຍາກທາງດ້ານການສຶກສາ.

# ຖານຂໍ້ມູນດ້ານການສຶກສາ (WIDE)

ຜູ້ເຂົ້າເບິ່ງເວບໄຊ ສາມາດປຽບທຽບບັນດາກຸ່ມໃນແຕ່ລະປະເທດຕາມຕົວຊີ້ບອກຕ່າງໆທາງດ້ານການສຶກສາ, ແລະ ຕາມປັດໃຈທີ່ກ່ຽວ ຂ້ອງກັບຄວາມບໍ່ສະເໝີພາບ, ຊຶ່ງລວມມີ ຄວາມຮັ່ງມີ, ເພດ, ເຊື້ອຊາດ, ສາດສະໜາ ແລະ ທີ່ຢູ່ອາໄສ.ຜູ້ນຳໃຊ້ເວບໄຊ ສາມາດສ້າງ ແຜນທີ່, ແຜນພູມ ແລະ ຕາຕະລາງຈາກຂໍ້ມູນ ແລະ ດາວໂຫຼດ, ພິມອອກ ຫຼື ແບ່ງປັນຂໍ້ມູນທາງອິນເຕີເນັດເຊິ່ງຖືກອອກແບບໂດຍ Interactive Things.

ຄວາມແຕກໂຕນທາງດ້ານຄວາມຮັ່ງມີຍິ່ງໂຫດຮ້າຍກວ່າເມື່ອທຽບໃສ່ຄວາມແຕກໂຕນທາງເພດ

ປະຊາກອນອາຍຸ ແຕ່ 17 ຫາ 22 ປີ ທີ່ໄດ້ຮັບການສຶກສາໜ້ອຍກວ່າ 2 ປີ, ຈຳແນກຈາກຄວາມຮັ່ງມີ ແລະ ເພດ. ໃນ ໄນເຈີ, ປາກິດສະຖານ ແລະ ອີຢິບ (%)




ຢູ່ໃນເວບໄຊຂອງ WIDE, ຜູ້ນຳໃຊ້ສາມາດເບິ່ງເຫັນລາຍລະອຽດໄດ້ຕາມຈຸດຕັດໃນແຜນພູມສະແດງເຖິງຄວາມດ້ອຍໂອກາດລະຫວ່າງ ບັນດາປະເທດທີ່ຖືກເລືອກ.ໃນໄນເຈີ, ບໍ່ພຽງແຕ່ມີຄວາມແຕກໂຕນທາງດ້ານຄວາມຮັ່ງມີຫຼາຍເທົ່ານັ້ນ, ແຕ່ຄວາມແຕກໂຕນທາງ ດ້ານເພດຍິ່ງໂຫດຮ້າຍກວ່າ. ຍິງໜຸ່ມທຸກຍາກທີ່ສຸດ ໄດ້ຮັບຜົນກະທົບຫຼາຍທີ່ສຸດ : 92% ຂອງກຸ່ມນີ້ໄດ້ເຂົ້າຮັບການສຶກສາໃນ ໂຮງຮຽນໜ້ອຍກວ່າ 2 ປີ, ເມື່ອປຽບທຽບໃສ່ 22% ຂອງຊາຍໜຸ່ມທີ່ຮັ່ງມີທີ່ສຸດ. ໃນປາກິດສະຖານ, ຊ່ອງຫວ່າງ ລະຫວ່າງຍິງ-ຊາຍ ໃນບັນດາຜູ້ທຸກຍາກທີ່ສຸດມີຈຳນວນຍິງໜຸ່ມ 8 ໃນ 10 ໄດ້ຮັບຜົນກະທົບ, ເມື່ອປຽບທຽບໃສ່ຊາຍໜຸ່ມແມ່ນມີໜ້ອຍກວ່າ 5 ໃນ 10 ທີ່ໄດ້ຮັບຜົນກະທົບ. ໃນຂະນະທີ່ບັນຫາຄວາມແຕກໂຕນທາງດ້ານຄວາມຮັ່ງມີບໍ່ແມ່ນບັນຫາໃຫຍ່ໃນອີຢິບໂດຍພາບລວມ, ຊ່ອງວ່າງ ລະຫວ່າງຍິງ-ຊາຍ ແມ່ນກວ້າງ: 36% ຂອງຍິງໜຸ່ມທຸກຍາກປະສົບກັບບັນຫາຄວາມທຸກຍາກທີ່ສຸດທາງດ້ານການສຶກສາ, ເມື່ອປຽບທຽບ ກັບຊາຍໜຸ່ມຜູ້ຮັ່ງມີທີ່ສຸດ ມີພຽງ 2% ທີ່ພົບກັບບັນຫານີ້.

www.education-inequalities.org

# ງົບປະມານສໍາລັບ ການສຶກສາ ເພື່ອທຸກຄົນຈຸດບອກພ່ອງ ແລະ ໂອກາດ





63% ໃນບັນດາປະເທດທີ່ທຸກຍາກໄດ້ເພີ່ມສັດສ່ວນຂອງລາຍຮັບແຫ່ງຊາດ ເຂົ້າໃສ່ການສຶກສາ

ປະສົບການຈາກທົດສະວັດທີ່ຜ່ານມາສະແດງໃຫ້ເຫັນວ່າການເພີ່ມງົບປະມານການສຶກສາສາມາດສົ່ງຜົນຕໍ່ການບັນລຸເປົ້າໝາຍຂອງການສຶກສາເພື່ອທຸກຄົນ. ແຕ່ເມື່ອຈໍານວນເດັກບໍ່ຮຽນໜັງສືຢຸດຈຶ້ງ ຜູ້ໃຫ້ທຶນກໍ່ຈະມີແນວໂນ້ມຫຼຸດລົງເຊັ່ນກັນ ເຖິງວ່າການມີເງິນຈໍານວນຫຼາຍຂຶ້ນພຽງຢ່າງດຽວກໍ່ບໍ່ໄດ້ໝາຍຄວາມວ່າຈະບໍ່ສາມາດຮັບປະກັນໄດ້ວ່າບັນດາເປົ້າໝາຍຂອງ EFA ຈະບັນລຸໄດ້, ແຕ່ແນ່ນອນວ່າການມີເງິນໜ້ອຍລົງກໍ່ຍິ່ງບໍ່ສົ່ງຜົນດີ. ດັ່ງນັ້ນ, ຄວາມພະຍາຍາມຄືນໃໝ່ໃຫ້ຜູ້ໃຫ້ທຶນ ກັບມາຊ່ວຍເຫຼືອເປັນສິ່ງທີ່ຕ້ອງການອັນຮີບດ່ວນ. ໃນຂະນະດຽວກັນກໍ່ຕ້ອງຊອກຫາທາງໃໝ່ເພື່ອຫາແຫຼ່ງທຶນມາສົມທົບເຂົ້າໃສ່ຊ່ອງຫວ່າງທີ່ຂາດຫາຍໄປ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ວິທີການ ເພື່ອເຮັດແນວໃດຈຶ່ງຈະນໍາໃຊ້ງົບປະມານຊ່ວຍເຫຼືອໄດ້.

### *ໃຊ້ງົບປະມານຫຼາຍຂຶ້ນ ຜົນງານກໍ່ດີຂຶ້ນ*

ລັດຖະບານຈັດສັນງົບປະມານທັງໝົດເຂົ້າໃສ່ການສຶກສາຫຼາຍຂຶ້ນຫຼັງຈາກຈາກກອງປະຊຸມທີ່ ດາກາ ເປັນຕົ້ນມາ.ໃນຈໍານວນນີ້ງົບປະມານຖືກນໍາໃຊ້ຫຼາຍທີ່ສຸດເຂົ້າໃນປະເທດທີ່ມີລາຍໄດ້ຕໍ່າ. ໂດຍສະເລ່ຍເພີ່ມຂຶ້ນຈາກ 7.2% ຕໍ່ປີ ຕັ້ງແຕ່ປີ 1999 ເປັນຕົ້ນມາ. ໃນເຂດອະນຸພາກພື້ນຊາຮາຣາອາຟຣິກາເພີ່ມຂຶ້ນປີລະ 5%. ເມື່ອປຽບທຽບກັບບັນດາປະເທດທີ່ມີລາຍໄດ້ຕໍ່າ ແລະ ປານກາງ ເພີ່ມຂຶ້ນ 63% ຈາກສັດສ່ວນຂອງລາຍໄດ້ແຫ່ງຊາດທີ່ໃຊ້ຈ່າຍເຂົ້າໃນການສຶກສາໃນທົດສະວັດທີ່ຜ່ານມາ.

ບັນດາປະເທດສ່ວນໃຫຍ່ເລັ່ງລັດໃກ້ເຂົ້າເຖິງເປົ້າໝາຍ EFA ໃນທົດສະວັດທີ່ຜ່ານມາ ແມ່ນໄດ້ເພີ່ມງົບປະມານຈໍານວນຫຼາຍເຂົ້າໃສ່ການສຶກສາ ຫຼື ບໍ່ກໍ່ເພື່ອຮັກສາລະດັບທີ່ສູງຢູ່ແລ້ວ. ຕົວຢ່າງ: ປະເທດທານຊາເນຍ, ເພີ່ມງົບປະມານເກືອບ 3 ເທົ່າເຂົ້າໃນການສຶກສາເຮັດໃຫ້ອັດຕາການເຂົ້າຮຽນຊັ້ນປະຖົມຂອງປະເທດເພີ່ມຂຶ້ນ 2 ເທົ່າ ແລະ ໃນເຊເນການໄດ້ເພີ່ມງົບປະມານຂຶ້ນ ຈາກ 3.2% ຂອງຍອດຜະລິດຕະພັນລວມແຫ່ງຊາດເປັນ 5.7%. ເຮັດໃຫ້ອັດຕາການເຂົ້າຮຽນຊັ້ນປະຖົມສຶກສາມີການຂະຫຍາຍຕົວຢ່າງ ໜ້າປະທັບໃຈ ແລະ ລົບລ້າງຊ່ອງຫວ່າງຂອງຄວາມບໍ່ສະເໝີພາບລະຫວ່າງ ຍິງ-ຊາຍ.

ເຖິງວ່າມີແນວໂນ້ມຂອງໂລກຢູ່ໃນລະດັບດີ, ແຕ່ກໍ່ຍັງມີບາງປະເທດຍັງຫ່າງໄກຈາກການບັນລຸເປົ້າໝາຍ EFA ເຊັ່ນ: ສາທາລະນະລັດອາຟຣິກາກາງ, ກີນີ ແລະ ປາກິດສະຖານ ເຊິ່ງເປັນປະເທດທີ່ຍັງຄົງຈັດສັນງົບປະມານເຂົ້າໃນການສຶກສາໃນລະດັບຕໍ່າກວ່າ 3% ຂອງຍອດຜະລິດຕະພັນລວມແຫ່ງຊາດ. ປາກິດສະຖານເປັນປະເທດທີ 2 ທີ່ມີຈໍານວນເດັກທີ່ບໍ່ເຂົ້າໂຮງຮຽນຫຼາຍທີ່ສຸດຄື 5.1 ລ້ານຄົນ ແຕ່ກໍ່ຍັງ ຫຼຸດງົບປະມານໃນການສຶກສາລົງຈາກ 2.6% ເປັນ 2.3% ຂອງຍອດຜະລິດຕະພັນແຫ່ງຊາດໃນທົດສະວັດທີ່ຜ່ານມາ.

ຄວາມຄິດວິຕົກກັງວົນວ່າວິກິດການທາງດ້ານ ອາຫານ ແລະ ການເງິນ ຈະສົ່ງຜົນກະທົບຕໍ່ແນວໂນ້ມທີ່ດີຂຶ້ນຂອງການຈັດສັນງົບປະມານ ເຂົ້າໃນການສຶກສາ. ແຕ່ເບິ່ງຄືວ່າຈະບໍ່ສາມາດເຮັດໄດ້ສໍາເລັດ, ເຖິງວ່າຈະຕ້ອງໄດ້ຕິດຕາມຜົນກະທົບໃນໄລຍະຍາວກໍ່ຕາມ. 2 ສ່ວນ 3 ຂອງປະເທດທີ່ມີລາຍຮັບຕໍ່າ ແລະ ປະເທດທີ່ມີລາຍຮັບຕໍ່າກວ່າປານກາງ, ອີງຕາມຂໍ້ມູນແລ້ວຍັງສືບຕໍ່ເພີ່ມງົບປະມານເຂົ້າໃສ່ການສຶກສາໃນຊ່ວງວິກິດການນີ້ຢູ່. ແຕ່ບາງປະເທດກໍ່ຍັງມີໄລຍະຫ່າງໄກທີ່ສຸດຈາກເປົ້າໝາຍ EFA, ເຊັ່ນ: ຊາດ ແລະ ໄນເຈີ ໄດ້ຕັດງົບປະມານການສຶກສາລົງໃນປີ 2010 ຫຼັງຈາກການຂະຫຍາຍຕົວທາງດ້ານເສດຖະກິດຕິດລົບໃນປີ 2009.

ຜົນການວິເຄາະໃໝ່ໃນບົດລາຍງານສະບັບນີ້ ພິສູດໃຫ້ເຫັນເຖິງຂອບເຂດທີ່ບາງປະເທດທຸກຍາກທີ່ສຸດໄດ້ຮັບຜົນປະໂຫຍດຈາກທຶນຊ່ວຍ ເຫຼືອ.ໃນ 9 ປະເທດເຊິ່ງລວມທັງໝົດຢູ່ໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ ພົບວ່າມີທຶນຊ່ວຍເຫຼືອຫຼາຍກວ່າ 1 ສ່ວນ 4 ຂອງ ງົບປະມານທີ່ລັດຖະບານຈັດສັນໃຫ້ແກ່ການສຶກສາ (ຮູບທີ 8) ຕົວຢ່າງ: ໃນປະເທດໂມຊໍາບິກ ຕົວເລກຂອງເດັກທີ່ບໍ່ໄດ້ເຂົ້າໂຮງຮຽນ ຫຼຸດລົງຈາກ 1.6 ລ້ານຄົນ ໃນປີ 1999 ຫຼຸດລົງໜ້ອຍກວ່າ 0.5 ລ້ານຄົນ ໃນປີ 2010. ເຊິ່ງໃນໄລຍະນີ້ທຶນຊ່ວຍເຫຼືອແມ່ນກວມເອົາ 42% ຂອງງົບປະມານການສຶກສາທັງໝົດ.

### *ທຶນຊ່ວຍເຫຼືອໃຫ້ແກ່ການສຶກສາມາເຖິງຈຸດອີ່ມຕົວແລ້ວ ຫຼື ບໍ່?*

ຕັ້ງແຕ່ປີ 2002 ເປັນຕົ້ນມາ ການເພີ່ມຂຶ້ນຂອງງົບປະມານການສຶກສາຫຼາຍທີ່ສຸດແມ່ນໃນປີ 2009. ຈໍານວນເພີ່ມຂຶ້ນຢ່າງມະຫາສານດັ່ງກ່າວເປັນຍ້ອນວ່າທະນາຄານໂລກ ແລະ ກອງທຶນການເງິນລະຫວ່າງປະເທດ (IMF) ຕັດສິນໃຈອະນຸມັດເງິນຊ່ວຍເຫຼືອລ່ວງໜ້າຈາກກອງທຶນຄໍ້າປະກັນ (pledge funds) ໃຫ້ແກ່ບັນດາປະເທດທີ່ບໍ່ເຂັ້ມແຂງເພື່ອຊ່ວຍເຫຼືອໃນການປະເຊີນໜ້າກັບຜົນກະທົບທີ່ອາດຈະເກີດຂຶ້ນຈາກວິກິດການທາງດ້ານການເງິນ. ແຕ່ຢ່າງໃດກໍ່ຕາມ ການຊ່ວຍເຫຼືອທາງການສຶກສາສະຫງັກ ຢູ່ທີ່ 13.5 ຕື້ ໃນປີ 2010.ຈາກວົງເງິນຈໍານວນນັ້ນ 5.8 ຕື້ແມ່ນຮັບໃຊ້ເຂົ້າໃນການສຶກສາຊັ້ນພື້ນຖານ (ຮູບທີ 9). ໃນຂະນະທີ່ເງິນຈໍານວນນີ້ເກືອບເທົ່າ 2 ເທື່ອຂອງທຶນໃນປີ 2002-2003, ມີພຽງແຕ່ 1.9 ຕື້ ຖືກນໍາໃຊ້ເຂົ້າໃນການສຶກສາຊັ້ນພື້ນຖານໃນປະເທດທີ່ມີລາຍໄດ້ຕໍ່າ, ຊຶ່ງບໍ່ພຽງພໍທີ່ຈະຊົດເຊີຍໃຫ້ແກ່ຊ່ອງຫວ່າງທາງດ້ານການເງິນຈໍານວນ 16 ຕື້ ທີ່ບັນດາປະເທດເຫຼົ່ານີ້ກໍາລັງປະສົບຢູ່. ທຶນຊ່ວຍເຫຼືອເພື່ອການສຶກສາຊັ້ນພື້ນຖານໃນປະເທດລາຍຮັບຕໍ່າເພີ່ມຂຶ້ນພຽງແຕ່ 14 ລ້ານໂດລາ ໃນປີ 2010. ແລະ ບໍ່ແມ່ນທຸກປະເທດໄດ້ຮັບຜົນປະໂຫຍດເທົ່າກັນ. ການເພີ່ມຂຶ້ນໃນລະຫວ່າງປີ 2009-2010 ທຶນສ່ວນໃຫຍ່ແມ່ນສຸມໃສ່ປະເທດອັບການິດສະຖານ ແລະ ບັງຄະລາເທດ ເປັນຈໍານວນ 55% ຂອງງົບປະມານເພີ່ມເຕີມທັງໝົດທີ່ມອບໃຫ້ແກ່ 16 ປະເທດທີ່ມີລາຍຮັບຕໍ່າ ຈຶ່ງເຮັດໃຫ້ທຶນຊ່ວຍເຫຼືອໃຫ້ແກ່ອີກ 19 ປະເທດຫຼຸດລົງ.

ເຖິງວ່າຈະມີການເພີ່ມທຶນຊ່ວຍເຫຼືອ ໃນທົດສະວັດທີ່ຜ່ານມາ ຜູ້ໃຫ້ທຶນກໍ່ບໍ່ສາມາດເຮັດຕາມສັນຍາທີ່ໃຫ້ໄວ້ໃນກອງປະຊຸມສຸດຍອດຂອງກຸ່ມປະເທດອຸດສາຫະກໍາຊັ້ນນໍາຂອງໂລກ (ກຸ່ມ G8) ທີ່ເກັນນີໂກ ໃນປີ 2005 ວ່າຈະເພີ່ມທຶນການຊ່ວຍເຫຼືອເປັນ 50 ຕື້ໂດລາພາຍໃນ ປີ 2010. ໃນເຂດອະນຸພາກພື້ນຊາຮາຣາອາຟຣິກາເອງໄດ້ຮັບທຶນຊ່ວຍເຫຼືອເພີ່ມຂຶ້ນພຽງເຄິ່ງໜຶ່ງຂອງຈໍານວນທີ່ໃຫ້ສັນຍາໄວ້. ຄາດວ່າຫາກທຶນຊ່ວຍເຫຼືອດ້ານການສຶກສາດໍາເນີນໄປຄືກັບປີກ່ອນໆ ຈະສົ່ງຜົນໃຫ້ທຶນການສຶກສາໃນປີນັ້ນ ຫຼຸດລົງ 1.9 ຕື້ໂດລາ ຫຼື ປະມານ 1 ສ່ວນ 3 ຂອງຈໍານວນທຶນຊ່ວຍເຫຼືອແກ່ການສຶກສາຊັ້ນພື້ນຖານໃນປະຈຸບັນ.

ສິ່ງທີ່ໜ້າເປັນຫ່ວງກວ່າ ແມ່ນແນວໂນ້ມຂອງທຶນຊ່ວຍເຫຼືອຈາກນີ້

ຮູບທີ 8: ທຶນຊ່ວຍເຫຼືອການສຶກສາແມ່ນແຫຼ່ງຊັບພະຍາກອນທີ່ສຳຄັນສຳລັບປະເທດທີ່ທຸກຍາກ.

ເງິນທຶນພາຍໃນ ແລະ ແຫຼ່ງທຶນຊ່ວຍເຫຼືອໃຫ້ແກ່ການສຶກສາ, ເກນສະເລ່ຍຂອງປະເທດທີ່ມີລາຍຮັບຕ່ຳ ແລະ ປະເທດທີ່ມີລາຍຮັບຕ່ຳກວ່າປານກາງໃນບາງພາກພື້ນ. ປີ 2004-2010.




*ໝາຍເຫດ*: *ສະແດງວ່າສັດສ່ວນການຊ່ວຍເຫຼືອດ້ານງົບປະມານແມ່ນຄິດໄລ່ຈາກເອກະສານຂອງປະເທດນັ້ນໆ, ສຳລັບປະເທດອື່ນໆ ໂດຍສະເລ່ຍຄາດການວ່າມີປະມານ 60% ຂອງທຶນຊ່ວຍເຫຼືອ
*ແຫຼ່ງຂໍ້ມູນ*: ອຸຍແນດສະໂກ (2012b)

ຈົນເຖິງປີ 2015 ຊຶ່ງບໍ່ເປັນໄປໃນທາງບວກ. ໃນປີ 2011 ທຶນຊ່ວຍເຫຼືອທັງໝົດຫຼຸດລົງກວ່າ 3% ຊຶ່ງເປັນຄັ້ງທຳອິດທີ່ຫຼຸດລົງຕັ້ງແຕ່ປີ 1997 ງົບປະມານຊ່ວຍເຫຼືອຕ່າງປະເທດເປັນເປົ້າໝາຍໃນການຕັດງົບປະມານ ຍ້ອນຜົນເນື່ອງມາຈາກບັນຫາເສດຖະກິດຝືດເຄືອງແບບຕໍ່ເນື່ອງຂອງປະເທດຮັ່ງມີທັງຫຼາຍ. ຈາກປີ 2010 ເຖິງ 2011 ເງິນຊ່ວຍເຫຼືອຄິດເປັນສັດສ່ວນຈາກລາຍໄດ້ຂອງປະເທດຫຼຸດລົງໃນ 14 ຈາກ 23 ປະເທດທີ່ຮ່ວມເປັນຄະນະກຳມະການໃຫ້ຄວາມຊ່ວຍເຫຼືອເພື່ອການພັດທະນາ (DAC) ຂອງອົງການ OECD.

ຜູ້ໃຫ້ທຶນບາງພາກສ່ວນ ບໍ່ພຽງແຕ່ຫຼຸດຜ່ອນການໃຫ້ທຶນຊ່ວຍເຫຼືອ ແຕ່ຍັງອາດຈະໃຫ້ຄວາມສຳຄັນແກ່ການສຶກສາໜ້ອຍລົງຊຶ່ງຈະສົ່ງຜົນໃຫ້ທຶນຊ່ວຍເຫຼືອທາງດ້ານການສຶກສາ ຫຼຸດລົງໄວກວ່າທຶນຊ່ວຍເຫຼືອປະເພດອື່ນໆ. ປະເທດ ເນເທີແລນທີ່ເຄີຍເປັນ 1 ໃນ 34 ຜູ້ໃຫ້ທຶນຊ່ວຍເຫຼືອຫຼັກໃນດ້ານການສຶກສາຂັ້ນພື້ນຖານໃນທົດສະວັດທີ່ຜ່ານ. ໃນປັດຈຸບັນບໍ່ໄດ້ຖືວ່າການສຶກສາເປັນສິ່ງສຳຄັນຫຼັກອີກຕໍ່ໄປ ແລະ ຄາດວ່າຈະຫຼຸດຜ່ອນທຶນການຊ່ວຍເຫຼືອດ້ານການສຶກສາລົງ 60% ໃນລະຫວ່າງປີ 2010-2015. ຊຶ່ງຈະສົ່ງຜົນກະທົບຢ່າງຮຸນແຮງໃຫ້ແກ່ບາງປະເທດໃນກຸ່ມທຸກຍາກທີ່ສຸດ. ປະເທດເນເທີແລນຄາດວ່າຈະຖອນໂຕອອກຈາກ ເບີກີນາ ຟາໂຊ, ໃນເວລາດຽວກັນຜູ້ໃຫ້ທຶນຊ່ວຍເຫຼືອອີກ 4 ປະເທດ ຈະຖອນການຊ່ວຍເຫຼືອດ້ານການສຶກສາອອກຈາກປະເທດເຫຼົ່ານີ້ເຊັ່ນກັນ.

ໃນຂະນະດຽວກັນກໍ່ໄດ້ຮັບຄວາມສົນໃຈຈາກຜູ້ໃຫ້ທຶນໃໝ່ຫຼາຍຂຶ້ນເຊັ່ນ: ບູາຊິນ, ຈີນ ແລະ ອິນເດຍ. ແຕ່ພວກເຂົາກໍຍັງບໍ່ໄດ້ຊ່ວຍເປັນຈຳນວນຫຼາຍເທື່ອ ແລະ ໃນການໃຫ້ທຶນກໍ່ບໍ່ໄດ້ຖືເອົາພື້ນຖານເປັນບູລິມະສິດໃນບັນດາປະເທດທີ່ມີລາຍຮັບຕ່ຳ.

9 ປະເທດໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ ໄດ້ຮັບທຶນຊ່ວຍເຫຼືອເທົ່າກັບ 1 ໃນ 4 ຂອງງົບປະມານການສຶກສາ

ຮູບທີ 9: ການຢຸດສະຫງັກຂອງທຶນຊ່ວຍເຫຼືອໃນປີ 2010.

ການໃຊ້ຈ່າຍທຶນຊ່ວຍເຫຼືອດ້ານການສຶກສາທັງໝົດແຕ່ປີ 2002-2010.




ແຫຼ່ງຂໍ້ມູນ: OECD-DAC (2012b).

### *ການນຳໃຊ້ເງິນຊ່ວຍເຫຼືອຢ່າງມີປະສິດທິຜົນ*

ຕົວເລກຂອງທຶນຊ່ວຍເຫຼືອທາງການສຶກສາ ບອກໃຫ້ຮູ້ວ່າມັນເປັນເລື່ອງລາວສ່ວນໃດໜຶ່ງເທົ່ານັ້ນ. ການຮັບປະກັນໃຫ້ມີການໃຊ້ຈ່າຍທຶນຊ່ວຍເຫຼືອຢ່າງມີປະສິດທິຜົນເປັນສິ່ງທີ່ສຳຄັນທີ່ສຸດ. ໃນບັນດາເປົ້າໝາຍໃນການນຳໃຊ້ທຶນຢ່າງມີປະສິດທິຜົນທັງ 13 ຂໍ້ທີ່ກຳນົດອອກໂດຍ OECD-DAC ທີ່ ປາຣີ ໃນປີ 2005, ມີພຽງ 1 ຂໍ້ເທົ່ານັ້ນທີ່ສາມາດບັນລຸມັນຕາມກຳນົດເວລາໃນປີ 2010.

ຂະແໜງການສຶກສາໄດ້ກາຍເປັນຜູ້ນຳໃນການປະຕິບັດວາລະການນຳໃຊ້ທຶນຢ່າງມີປະສິດທິຜົນ. ຕົວຢ່າງ: ປະເທດເຄັນຢາ, ໂມຊຳບິກ, ລູວັນດາ ແລະ ອູກັນດາ ໄດ້ຮັບເງິນທຶນຊ່ວຍເຫຼືອຈຳນວນຫຼວງຫຼາຍຄຽງຄູ່ກັບແຜນດຳເນີນງານຂອງລັດຖະບານເຮັດໃຫ້ຈຳນວນເດັກທີ່ເຂົ້າໂຮງຮຽນໃນລະດັບປະຖົມເພີ່ມຂຶ້ນຢ່າງທີ່ບໍ່ເຄີຍມີມາກ່ອນ.

ເຖິງວ່າຈະມີປະສົບການທາງບວກໃນໄລຍະຜ່ານມາ ແຕ່ກໍ່ຍັງຈະຕ້ອງໃຊ້ຈ່າຍຫຼາຍຂຶ້ນ ແລະ ໃຊ້ຈ່າຍເປັນຢ່າງດີເພື່ອຊ່ວຍເຫຼືອບັນດາປະເທດທຸກຍາກທີ່ສຸດ. ໜຶ່ງໃນເຄື່ອງມືໃຊ້ເຂົ້າໃນຫຼັກການ ການນຳໃຊ້ທຶນຊ່ວຍເຫຼືອຢ່າງມີປະສິດທິພາບເຊັ່ນ: ການເປັນຫຸ້ນສ່ວນໂລກເພື່ອການສຶກສາ (The Global Partnership for Education ທີ່ເຄີຍຖືກເອີ້ນວ່າ: The EFA Fast Track Initiative), ກໍຍັງຄົງບໍ່ມີປະສິດທິພາບເທົ່າທີ່ຄວນ. ອົງກອນນີ້ເປັນກົນໄກດຽວຂອງໂລກທີ່ເປັນແຫຼ່ງດຶງດູດທຶນລວມເພື່ອການສຶກສາ. ແຕ່ກໍ່ຍັງສາມາດຈ່າຍໄດ້ແຕ່ພຽງ 1.5 ຕື້ ໂດລາ ໃນລະຫວ່າງປີ 2003 - 2011 ຄິດໄລ່ປະມານ 6% ຂອງສັດສ່ວນທັງໝົດທີ່ໃຊ້ຊ່ວຍເຫຼືອການສຶກສາຂັ້ນພື້ນຖານໃນປະເທດລາຍຮັບຕ່ຳ ແລະ ປະເທດ ທີ່ລາຍຮັບຕ່ຳກວ່າປານກາງ. ເມື່ອປຽບທຽບໃສ່ກັບການຊ່ວຍເຫຼືອດ້ານສາທາລະນະສຸກ ແມ່ນຕ່ຳກວ່າກັນຫຼາຍ. ອົງກອນນີ້ຖືກສ້າງຕັ້ງຂຶ້ນບໍ່ພຽງແຕ່ເພື່ອເພີ່ມຈຳນວນທຶນຊ່ວຍເຫຼືອເທົ່ານັ້ນ ແຕ່ຍັງເພື່ອປິດຊ່ອງຫວ່າງທີ່ລັດຖະບານ ແລະ ຜູ້ໃຫ້ທຶນຊ່ວຍເຫຼືອທັງຫຼາຍໄດ້ປະໄວ້. ຄວາມອາດສາມາດຂອງອົງກອນນີ້ແມ່ນ ເພື່ອຮັບປະກັນໃຫ້ການຊ່ວຍເຫຼືອມີປະສິດທິພາບ ແລະ ມີການປະສານງານທີ່ດີ ເຊິ່ງຈຳເປັນຕ້ອງໄດ້ມີການກວດກາ ຕິດຕາມຢ່າງໃກ້ຊິດໃນຊຸມປີຕໍ່ມາ ເພື່ອເປັນຂໍ້ມູນໃຫ້ແກ່ການວາງກອບແຜນງົບປະມານຫຼັງປີ 2015.

ໃນປີ 2008, ສາທາລະນະລັດປະຊາທິປະໄຕຄອງໂກ ສູນເສຍລາຍໄດ້ ຈາກຊັບພະຍາກອນເຖິງ 450 ລ້ານໂດລາສະຫະລັດ ຊຶ່ງພຽງພໍສຳລັບ ສົ່ງເດັກນ້ອຍຈຳນວນ 7,2 ລ້ານຄົນ ເຂົ້າໂຮງຮຽນໄດ້

ຜູ້ໃຫ້ທຶນຮຽກຮ້ອງໃຫ້ມີຜົນງານທີ່ເປັນຮູບປະທຳຢ່າງກວ້າງຂວາງຈາກເງິນທີ່ພວກເຂົາເຈົ້າລົງທຶນ ຕາມງົບປະມານທີ່ມີຈຳກັດ ແລະ ມີການກົດດັນໃຫ້ເພີ່ມຄວາມຮັບຜິດຊອບສູງຂຶ້ນ. ແນວທາງໃໝ່ໃນການໃຫ້ທຶນແມ່ນອີງໃສ່ຜົນງານຜັກດັນໃຫ້ລັດຖະບານຈາກປະເທດທີ່ໄດ້ຮັບທຶນນັ້ນ ຕ້ອງໄດ້ເພີ່ມຄວາມເອົາໃຈໃສ່ໃນການບັນລຸເປົ້າໝາຍການສຶກສາຂອງປະເທດຕົນຫຼາຍຂຶ້ນເຊັ່ນ: ປະເທດອັງກິດໄດ້ເລີ່ມທົດລອງກົນໄກໃຫ້ເງິນຊ່ວຍເຫຼືອເພີ່ມເຕີມເພື່ອເປັນລາງວັນໃຫ້ແກ່ລັດຖະບານເອທິໂອເປຍ ເມື່ອມີນັກຮຽນເສັງຜ່ານຂັ້ນມັດທະຍົມ (ຄິດໄລ່ເປັນລາຍບຸກຄົນ). ເຖິງຢ່າງໃດກໍຕາມວິທີການນີ້ຍັງມີຄວາມສ່ຽງຫຼາຍຢ່າງ ໂດຍສະເພາະສຳລັບປະເທດທຸກຍາກທີ່ບໍ່ສາມາດແບກຮັບຄ່າໃຊ້ຈ່າຍເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວ ຖ້າຫາກວ່າມີປັດໃຈພາຍນອກເຂົ້າມາສອດແຊກເຮັດໃຫ້ບໍ່ສາມາດປະຕິບັດແຜນທີ່ວາງໄວ້ໄດ້ຢ່າງສະດວກ.

### *ຫັນປ່ຽນ "ຄຳສາບກ່ຽວກັບຊັບພະຍາກອນ" ໃຫ້ເປັນຄຳອວຍພອນແກ່ການສຶກສາ*

ໜຶ່ງໃນສຳນວນຄຳເວົ້າທີ່ກ່າວຂານເຖິງການພັດທະນາທີ່ມີເຄົ້າຄວາມຈິງຢູ່ນັ້ນແມ່ນ "ຄຳສາບກ່ຽວກັບຊັບພະຍາກອນ" ໝາຍຄວາມວ່າ ຫຼາຍປະເທດທີ່ອຸດົມໄປດ້ວຍແຫຼ່ງຊັບພະຍາກອນທຳມະຊາດທີ່ບໍ່ສາມາດນຳມາໝູນໃຊ້ຄືນເຊັ່ນ: ນ້ຳມັນ ແລະ ແຮ່ທາດ ປະສົບກັບບັນຫາການຂະຫຍາຍຕົວຊ້າດ້ານເສດຖະກິດ ຫຼາຍກວ່າປະເທດທີ່ຂາດແຄນຊັບພະຍາກອນເຫຼົ່ານັ້ນ ແລະ ບັນດາປະເທດທີ່ອຸດົມໄປດ້ວຍຊັບພະຍາກອນເຫຼົ່ານີ້ກໍ່ຍັງຢູ່ຫ່າງໄກຈາກການບັນລຸເປົ້າໝາຍຂອງ EFA ແລະ ອີກຫຼາຍເປົ້າໝາຍການພັດທະນາດ້ານອື່ນໆ. ແຕ່ຄຳສາບເຫຼົ່ານີ້ສາມາດລົບລ້າງໄດ້ເມື່ອຊັບພະຍາກອນເຫຼົ່ານີ້ຖືກນຳມາໃຊ້ເປັນທຶນສຳລັບຄົນຮຸ່ນຕໍ່ໄປໃນອະນາຄົດ.

ປະເທດໄນເຈີເອງ ເປັນປະເທດທີ່ສົ່ງອອກນ້ຳມັນ ແລະ ແກ໊ສຫຼາຍທີ່ສຸດປະເທດໜຶ່ງ, ແຕ່ກໍຍັງມີຈຳນວນນັກຮຽນທີ່ບໍ່ໄດ້ຮັບການສຶກສາຫຼາຍທີ່ສຸດເຊັ່ນກັນ, ສ່ວນຊາດ ເປັນປະເທດຮັ່ງມີໃໝ່ກໍ່ໄດ້ຫັນປ່ຽນຈາກການໃຫ້ຄວາມສຳຄັນທາງດ້ານການສຶກສາມາເປັນການທະຫານແທນ. ໃນປະເທດ ລີເບຍ ແລະ ເຊຍລາເລໂອນ ການຍາດແຍ່ງຊັບພະຍາກອນທຳມະຊາດ ແມ່ນເປັນເຫດຜົນຫຼັກໃນການສ້າງຄວາມຂັດແຍ່ງທາງທະຫານ ການບໍລິຫານຊັບພະຍາກອນທຳມະຊາດແບບຜິດໆ ສາມາດສົ່ງຜົນຢ່າງຮ້າຍແຮງເຊັ່ນ: ໃນສາທາລະນະລັດປະຊາທິປະໄຕຄອງໂກ ຍ້ອນບັນຫາຜິດພາດສົ່ງຜົນໃຫ້ມີການສູນເສຍລາຍໄດ້ ຄິດໄລ່ເປັນຈຳນວນ 450 ລ້ານໂດລາ ໃນປີ 2008 ເຊິ່ງເງິນຈຳນວນນີ້ພຽງພໍທີ່ຈະມອບໃຫ້ແກ່ເດັກນ້ອຍກວ່າ 7.2 ລ້ານຄົນ ເຂົ້າຮຽນໃນລະດັບປະຖົມສຶກສາ.

ຖ້າຫາກວ່າຊັບພະຍາກອນທຳມະຊາດຖືກປ່ຽນມາເປັນລາຍຮັບຂອງລັດຖະບານ ແລະ ຖືກບໍລິຫານຢ່າງມີປະສິດທິພາບ: ສາມາດຊ່ວຍໃຫ້ຫຼາຍໆປະເທດບັນລຸເປົ້າໝາຍການສຶກສາເພື່ອທຸກຄົນໄດ້ (ຮູບທີ 10).

ຮູບທີ 10: ລາຍໄດ້ຈາກຊັບພະຍາກອນທຳມະຊາດສາມາດເພີ່ມງົບປະມານການສຶກສາຈຳນວນຫຼວງຫຼາຍ.

ແຫຼ່ງທຶນເສີມທີ່ໄດ້ຈາກລາຍຮັບຈາກຊັບພະຍາກອນທຳມະຊາດນຳໃຊ້ໃຫ້ເປັນປະໂຫຍດທີ່ສຸດ ໃນການສຶກສາໃນປີ 2010, ຄັດເລືອກເອົາບາງປະເທດເທົ່ານັ້ນ, ຄິດໄລ່ເປັນຕື້ໂດລາ.




*ໝາຍເຫດ*: ການນຳໃຊ້ລາຍໄດ້ຈາກຊັບພະຍາກອນທຳມະຊາດໃຫ້ເກີດປະໂຫຍດສູງສຸດສາມາດເຮັດໄດ້ ໃນ 2 ຂັ້ນຕອນຄື: (i) ເພີ່ມສັດສ່ວນລາຍໄດ້ຈາກການສົ່ງອອກຊັບພະຍາກອນທຳມະຊາດເປັນ 30% ສຳລັບແຮ່ທາດ ແລະ 75% ສຳລັບນ້ຳມັນ; (ii) ຈັດສັນ 20% ຂອງລາຍໄດ້ເພີ່ມໃຫ້ແກ່ງົບປະມານການສຶກສາ.

*ແຫຼ່ງຂໍ້ມູນ*: ການຄິດໄລ່ຂອງທີມບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ (2012) ໂດຍອີງໃສ່ຖານຂໍ້ມູນຂອງ UIS ແລະ ບົດທົບທວນທີ IV ຂອງ IMF.

ປະເທດ ບອດສະວານາ ໄດ້ຈັດສັນງົບປະມານໃຫ້ແກ່ການສຶກສາ ໃນຕະຫຼອດ 2-3 ທົດສະວັດທີ່ຜ່ານມາ ເຊິ່ງຕ້ອງຂອບໃຈບໍ່ເພັດ ທີ່ເຮັດໃຫ້ບອດສະວານາເປັນໜຶ່ງໃນປະເທດທີ່ຮັ່ງມີທີ່ສຸດໃນເຂດ ອະນຸພາກພື້ນຊາຮາຣາອາຟຣິກາ ເພາະນອກຈາກຈະເຮັດໃຫ້ ປະເທດບັນລຸການສຶກສາຂັ້ນປະຖົມຖ້ວນໜ້າແລ້ວຍັງຊ່ວຍໃຫ້ ອັນຕາສ່ວນເດັກເຂົ້າຮຽນມັດທະຍົມສູງເຖິງ 82% ເທົ່າກັບ 2 ເທື່ອຂອງຈຳນວນສະເລ່ຍໃນທະວີບ. ປະເທດການາກໍ່ມີແນວທາງ ການເມືອງເພື່ອຮັບປະກັນໃຫ້ມີການນຳໃຊ້ຄວາມຮັ່ງມີຢ່າງມີ ປະສິດທິພາບໃນນັ້ນແມ່ນລວມເຖິງການລົງທຶນໃສ່ການສຶກສາ.

ຜົນການວິເຄາະສຳລັບບົດລາຍງານສະບັບນີ້ສະແດງໃຫ້ເຫັນວ່າ ແນວໂນ້ມການເພີ່ມຂຶ້ນຂອງງົບປະມານການສຶກສາຢູ່ໃນ 17 ປະເທດ ແມ່ນເກີດຂຶ້ນໃນປະເທດທີ່ຮັ່ງມີຈາກຊັບພະຍາກອນທຳ ມະຊາດແລ້ວ ຫຼື ປະເທດທີ່ກຳລັງຈະເລີ່ມສົ່ງອອກນ້ຳມັນ, ອາຍ ແກັສ ແລະ ແຮ່ທາດ. ຖ້າລາຍໄດ້ທີ່ເກີດຈາກຊັບພະຍາກອນທຳ ມະຊາດທີ່ໃຊ້ແລ້ວໝົດໄປພ້ອມຖືກເຮັດໃຫ້ເກີດປະໂຫຍດສູງສຸດ ແລະ 20% ຂອງເງິນລາຍໄດ້ເພີ່ມຖືກມອບໃຫ້ແກ່ການສຶກສາກໍ່ ຈະເຮັດໃຫ້ມີງົບປະມານເພີ່ມສູງກວ່າ 5 ຕື້ໂດລາຕໍ່ປີ ໃນຂະແໜງ ນີ້ເຊິ່ງເງິນຈຳນວນນີ້ສາມາດໃຊ້ເປັນງົບປະມານແກ້ໄຂໃຫ້ເດັກໄດ້ ເຂົ້າໂຮງຮຽນເຖິງ 86% ຂອງເດັກຈຳນວນ 12 ລ້ານຄົນທີ່ບໍ່ໄດ້ ເຂົ້າຮຽນຢູ່ໃນບັນດາປະເທດເຫຼົ່ານີ້ ແລະ ແກ້ໄຂ 42% ຂອງ ຈຳນວນຊາວໜຸ່ມ 9 ລ້ານຄົນທີ່ບໍ່ໄດ້ຮັບການສຶກສາ. ບັນດາປະ ເທດເຊັ່ນ: ການາ, ກິນີ, ລາວ, ມາລາວີ, ອູກັນດາ ແລະ ຊາເບຍ ຈະສາມາດບັນລຸການສຶກສາປະຖົມຖ້ວນໜ້າໄດ້ໂດຍບໍ່ຕ້ອງ ເພິ່ງທຶນຊ່ວຍເຫຼືອຈາກຕ່າງປະເທດ.

ເພື່ອສົ່ງເສີມໃຫ້ມີການນຳໃຊ້ລາຍຮັບຈາກຊັບພະຍາກອນທຳ ມະຊາດຢ່າງເປັນທຳ ແລະ ມີປະສິດທິພາບ ຜູ້ສະໜັບສະໜູນ ການສຶກສາຄວນຈະສະໜັບສະໜູນມາດຕະການເພື່ອຮັບປະກັນ ວ່າລັດຖະບານໄດ້ເຮັດຕາມມາດຕະຖານຄວາມໂປ່ງໃສສູງ ແລະ ເປັນທຳໃນການເກັບພາສີ ເຊິ່ງເຂົາເຈົ້າຄວນຈະເຂົ້າຮ່ວມໃນການ ປຶກສາຫາລື ແລະ ຮັບຟັງການຊີ້ແຈງໃນລະດັບປະເທດກ່ຽວກັບ ການນຳໃຊ້ລາຍໄດ້ຈາກຊັບ ພະຍາກອນທຳມະຊາດ. ພ້ອມທັງ ວາງເປົ້າໝາຍການລົງທຶນໃສ່ການສຶກສາ ໃນໄລຍະຍາວຊຶ່ງເປັນ ສິ່ງສຳຄັນໃນການຂະຫຍາຍເສດຖະກິດໃຫ້ມີຄວາມຫຼາກຫຼາຍທັງ ນີ້ກໍເພື່ອຫຼີກລ່ຽງຄຳສາບກ່ຽວກັບຊັບພະຍາກອນ.

*ຄວບຄຸມສັກກະຍະພາບຂອງພາກເອກະຊົນ*

ພ້ອມກັບຄວາມຈຳເປັນອັນຮີບດ່ວນຕໍ່ຄວາມຕ້ອງການແຫຼ່ງທຶນ ເພື່ອສະໜັບສະໜູນ EFA ສົມທົບໃສ່ກັບເສັ້ນທາງອັນມືດມົວກ່ຽວ ກັບການຊ່ວຍເຫຼືອຈາກສາກົນ ເພື່ອເຕີມເຕັມຊ່ອງຫວ່າງນີ້ ບັນດາ ອົງກອນເອກະຊົນ ຈຶ່ງຖືກຈັດໃຫ້ເປັນຜູ້ມີສັກກະຍະພາບທາງດ້ານ ແຫຼ່ງທຶນທາງເລືອກ. ໂດຍສະເລ່ຍໃນຊ່ວງປີ 2008 ຫາ 2010, ຈຳນວນລວມຍອດຂອງທຶນຊ່ວຍເຫຼືອຈາກພາກເອກະຊົນມອບ ໃຫ້ແກ່ປະເທດກຳລັງພັດທະນາແມ່ນຫຼາຍກວ່າ 50 ຕື້ໂດລາ. ເມື່ອທຽບໃສ່ກັບຈຳນວນທຶນຊ່ວຍເຫຼືອທາງການ 120 ຕື້ໂດລາ ສະຫະລັດ. ຕົວຢ່າງ: ຈາກຈຳນວນເງິນຊ່ວຍເຫຼືອທັງໝົດຈາກ ມູນນິທິຂອງອາເມລິກາໃນຊ່ວງໄລຍະນີ້ 53% ແມ່ນຖືກມອບໃຫ້ ແກ່ວຽກງານສາທາລະນະສຸກ ແລະ ມີພຽງແຕ່ 8% ຖືກມອບໃຫ້ ແກ່ການສຶກສາ.

ຜົນການວິເຄາະອັນລ່າສຸດຂອງບົດລາຍງານສະບັບນີ້ເຊິ່ງອີງ ໃສ່ຂໍ້ມູນທີ່ເປີດເຜີຍທົ່ວໄປສະແດງໃຫ້ເຫັນວ່າອົງກອນ ແລະ ບໍລິສັດເອກະຊົນໄດ້ມອບການຊ່ວຍເຫຼືອກວ່າ 683 ລ້ານໂດ ລາສະຫະລັດຕໍ່ປີ ໃຫ້ແກ່ການສຶກສາ ເປັນຈຳນວນພຽງແຕ່ 5% ຂອງການຊ່ວຍເຫຼືອທາງດ້ານການສຶກສາຂອງຜູ້ໃຫ້ທຶນຈາກ DAC ເທົ່ານັ້ນ.

ປະມານ 20% ຂອງແຫຼ່ງທຶນທີ່ໄດ້ມາຈາກມູນນິທິທີ່ມີເປົ້າໝາຍທີ່ ສອດຄ່ອງກັບຜູ້ໃຫ້ທຶນເດີມທີ່ໃຫ້ທຶນມາເປັນເວລາຍາວນານ ແລະ ມີພຽງແຕ່ ມູນນິທິ 5 ແຫ່ງ ທີ່ໃຫ້ 5 ລ້ານໂດລາຕໍ່ປີ ຊຶ່ງເທົ່າກັບທຶນ ຊ່ວຍເຫຼືອການສຶກສາຈາກບາງປະເທດໃນທະວີພາຄີນ້ອຍທີ່ສຸດ ເຊັ່ນ: ລຸກຊຳບວກ ຫຼື ນິວແຊນ (ຮູບທີ 11).

ໃນລັກສະນະດຽວກັນ, ອີກ 71% ຂອງເງິນທຶນປະກອບສ່ວນ ແມ່ນໄດ້ມາຈາກ 5 ບໍລິສັດເທົ່ານັ້ນຊຶ່ງແຕ່ລະບໍລິສັດມອບເງິນ ໃຫ້ຫຼາຍກວ່າ 20 ລ້ານໂດລາໃນແຕ່ລະປີ. ບໍລິສັດສ່ວນໃຫຍ່ທີ່ ປະກອບສ່ວນໃຫ້ແກ່ການສຶກສາຫຼາຍທີ່ສຸດແມ່ນບໍລິສັດທີ່ມີທຸລະ ກິດກ່ຽວກັບຂໍ້ມູນຂ່າວ ສານ ແລະ ເຕັກໂນໂລຊີສື່ສານ (ICT) ຫຼື ພະລັງງານ.

ເຖິງຢ່າງໃດກໍ່ຕາມ, ມີແຕ່ພຽງບາງສ່ວນເລັກນ້ອຍຂອງທຶນຊ່ວຍ ເຫຼືອເຫຼົ່ານີ້ຖືກແບ່ງປັນໃຫ້ກັບ EFA ຫຼື ໃຫ້ກັບບັນດາປະເທດທີ່ຍັງ ຫ່າງໄກທີ່ສຸດຈາກການບັນລຸເປົ້າໝາຍຂອງ EFA. ໃນການຊ່ວຍ ເຫຼືອທາງດ້ານການເງິນການສຶກສາຊັ້ນສູງແມ່ນໄດ້ຮັບຄວາມເອົາ ໃຈໃສ່ທີ່ສຸດເມື່ອເບິ່ງຕາມແຜນພູມສາດ, ບັນດາບໍລິສັດໂດຍສະ ເພາະຈາກອຸດສາຫະກຳ ICT ຈະມຸ້ງເປົ້າໃສ່ປະເທດທີ່ມີລາຍຮັບ ປານກາງເຊັ່ນ: ບຣາຊິນ, ອິນເດຍ ແລະ ຈີນ ເຊິ່ງເປັນປະເທດທີ່ມີ ຍຸດທະສາດທີ່ໜ້າສົນໃຈສຳລັບເຂົາເຈົ້າ. ຍິ່ງໄປກວ່ານີ້, ການຊ່ວຍ ເຫຼືອດັ່ງກ່າວສ່ວນໃຫຍ່ແມ່ນໄລຍະສັ້ນ ແລະ ບໍ່ຕໍ່ເນື່ອງ. ມູນນິທິ ແລະ ບໍລິສັດຫຼາຍແຫ່ງໄດ້ປະສົບຜົນສຳເລັດເປັນຢ່າງດີ

ເງິນຊ່ວຍເຫຼືອຈາກອົງການເອກະຊົນຄິດເປັນ 5% ຂອງງົບປະມານຊ່ວຍເຫຼືອທາງດ້ານການສຶກສາ

ຮູບທີ 11: ການໃຫ້ທຶນການສຶກສາຈາກມູນນິທິທີ່ໃຫຍ່ທີ່ສຸດເບິ່ງນ້ອຍລົງທັນທີເມື່ອປຽບໃສ່ເງິນທຶນຊ່ວຍເຫຼືອຈາກຜູ້ໃຫ້ທຶນສາກົນ

ເງິນຊ່ວຍເຫຼືອການສຶກສາຈາກ 5 ມູນນິທິໃຫຍ່ທີ່ສຸດ ແລະ ທຶນຊ່ວຍເຫຼືອທັງໝົດໃນດ້ານການສຶກສາຄັດເລືອກຈາກບາງລັດຖະບານຜູ້ໃຫ້ທຶນ, ໃນປີ 2009-2010 ຫຼື ປີທີ່ໃກ້ຄຽງທີ່ສຸດທີ່ມີຂໍ້ມູນ.




*ໝາຍເຫດ*: ປະມານ 2 ໃນ3 ຂອງຈຳນວນເງິນ 15 ລ້ານໂດລາ ສະເລ່ຍຕໍ່ປີ ທີ່ໄດ້ຮັບຈາກມູນນິທິວິນລ່ຽມ ແລະ ຟູ້ຣາຮິວເລັດ ຊຶ່ງດັ້ງເດີມແມ່ນມາຈາກມູນນິທິ ບິວ ແລະ ເມລິນດາ ໃນກໍລະນີສ່ວນໃຫຍ່ ຈຳນວນທຶນຊ່ວຍເຫຼືອທາງການສຶກສາແກ່ປະເທດກຳລັງພັດທະນາແມ່ນຕ້ອງໄດ້ຖືກຄິດໄລ່ໂດຍນຳໃຊ້ຂໍ້ມູນທີ່ມາຈາກມູນນິທິ.
*ແຫຼ່ງຂໍ້ມູນ*: ເອກະສານຊ້ອນທ້າຍ, ຕາຕະລາງເງິນຊ່ວຍເຫຼືອທີ 2; ບໍລິສັດຄາເນດີໃນນິວຢອກ (2011); ມູນນິທິ ຟອດ (2011); ມູນນິທິ ມັດສະເຕີຄາດ (2010); ມູນນິທິວິນລ່ຽມ ແລະ ຟູ້ຣາ ຮິວເລັດ (2010); ແວນ ຟລີດ (2012).

ແລະ ມີການຄົ້ນຄວ້ານະວັດຕະກຳໃໝ່ທາງດ້ານການສຶກສາ ເຂົ້າໃນທຸກຂົງເຂດຕ່າງໆ ລວມທັງການເບິ່ງແຍງ ແລະ ໃຫ້ການສຶກສາແກ່ເດັກກ່ອນໄວຮຽນ, ການສຶກສາຂັ້ນປະຖົມ, ການພັດທະນາຂອງຊາວໜຸ່ມ ແລະ ການວັດຜົນການຮຽນຮູ້. ເຖິງຢ່າງໃດກໍ່ຕາມ ໂດຍລວມແລ້ວຜົນສຳເລັດເຫຼົ່ານີ້ແມ່ນຍາກທີ່ຈະປະເມີນຍ້ອນອົງກອນເອກະຊົນມັກຈະປະກາດປະສິດທິພາບຂອງໂຄງການການຮຽນຂອງເຂົາເຈົ້າແຕ່ບໍ່ສະໜອງຂໍ້ມູນພຽງພໍ ຫຼື ບໍ່ມີການປະເມີນຜົນຮັບທີ່ເໝາະສົມເທົ່າທີ່ຄວນ.

ຂະແໜງການເອກະຊົນຄວນມີຄວາມໂປ່ງໃສກ່ຽວກັບການລົງທຶນໃສ່ EFA

ການເຂົ້າໄປມີສ່ວນຮ່ວມໃນ EFA ຂອງບາງບໍລິສັດ ເຮັດໃຫ້ເຂົາເຈົ້າມີໂອກາດໃນການເຂົ້າໄປມີອິດທິພົນໃນບັນດານະໂຍບາຍລວມຕ່າງໆທີ່ອາດຈະສາມາດສົ່ງຜົນດີໃຫ້ກັບການສຶກສາ. ຕໍ່ບັນຫານີ້ມີການພິຈາລະນາສອບສວນຢ່າງລະອຽດເຊັ່ນດຽວກັນກັບບັນດາປະເທດຜູ້ໃຫ້ທຶນຊ່ວຍເຫຼືອຕ່າງໆ.

ຂັ້ນຕອນທຳອິດທີ່ສຳຄັນ ຄືທຸກອົງກອນເອກະຊົນທີ່ຕ້ອງການໃຫ້ທຶນຊ່ວຍເຫຼືອແກ່ EFA ຄວນຈະໃຫ້ຂໍ້ມູນກ່ຽວກັບພັນທະກິດຂອງເຂົາເຈົ້າ ເຊິ່ງລວມເຖິງຈຳນວນເງິນທີ່ຈະມອບໃຫ້ແລະວິທີການນຳໃຊ້ສິ່ງເຫຼົ່ານີ້ອາດຈະເອື້ອຍອຳນວຍໃຫ້ແກ່ການກວດສອບເພື່ອໃຫ້ໝັ້ນໃຈວ່າທຸລະກິດບໍ່ໄດ້ສຳຄັນກວ່າເປົ້າໝາຍລວມພ້ອມທັງໃຫ້ຂໍ້ມູນກ່ຽວກັບຈຳນວນແຫຼ່ງທຶນທີ່ມີເພື່ອນຳມາອຸດຊ່ອງຫວ່າງທາງການເງິນຂອງ EFA. ນອກຈາກນີ້ການຊ່ວຍເຫຼືອຈາກບໍລິສັດອາດຈະມີປະສິດທິພາບສູງຂຶ້ນຖ້າເຂົາເຈົ້າປະສານງານກັບລັດຖະບານ ແລະ ແນໃສ່ການຕອບສະໜອງຄວາມຕ້ອງການຂອງບັນດາປະເທດເຫຼົ່ານັ້ນ. ອົງກອນຮ່ວມມືທາງທຸລະກິດໂລກ ເພື່ອການສຶກສາ (The Global Business Coalition for Education) ຖືວ່າເປັນອົງກອນໜຶ່ງທີ່ໜ້າຈັບຕາເບິ່ງເພາະວ່າເຂົາເຈົ້າມີການປະຕິບັດງານທີ່ຢູ່ໃນກອບເປົ້າໝາຍຂອງ EFA.

ອີກທາງ ໜຶ່ງທີ່ບັນດາອົງກອນເອກະຊົນສາມາດຊ່ວຍເຫຼືອລັດຖະບານໃນດ້ານການສຶກສາແມ່ນການມອບທຶນການຊ່ວຍເຫຼືອຜ່ານກົນໄກລວມ. ກອງທຶນສາທາລະນະສຸກໂລກ ເຊັ່ນ: ກອງທຶນໂລກເພື່ອຕ້ານເອດ, ວັນນະໂລກ ແລະ ມາເລເລຍ ຖືວ່າປະສົບຜົນສຳເລັດກ່ຽວກັບວິທີການນີ້. ແຕ່ວ່າກົນໄກຫຼັກສຳລັບຂະແໜງການສຶກ ສາ ກໍ່ຄືອົງກອນຫຸ້ນສ່ວນໂລກເພື່ອການສຶກສາບໍ່ທັນສາມາດປະຕິບັດ ໜ້າທີ່ໄດ້ຢ່າງມີປະສິດທິພາບ. ໃນປັດຈຸບັນ, ຂະແໜງການເອກະຊົນໄດ້ມີການອອກສຽງໃນການກຳນົດທິດທາງນະໂຍບາຍຂອງການຮ່ວມມືຜ່ານຕົວແທນໃນຄະນະກຳມະການບໍລິຫານແຕ່ຄຳໝັ້ນສັນຍາທີ່ໄດ້ຮັບຈາກມູນນິທິ ແລະ ບໍລິສັດໃນກອງປະຊຸມຟື້ນຟູການຮ່ວມມືຈະບໍ່ຖືກຈ່າຍໂດຍຜ່ານກົນໄກກອງທຶນລວມ.

### *ການເຊື່ອມຕໍ່ຊ່ອງຫວ່າງ*

ຫຼັງຈາກໄລຍະການເພີ່ມບັນດາງົບປະມານໃສ່ການສຶກສາທີ່ມີຜົນເປັນທີ່ໜ້າເພິ່ງພໍໃຈໄດ້ຜ່ານໄປ, ໄລຍະແຫ່ງຄວາມບໍ່ແນ່ນອນກໍ່ປາກົດຂຶ້ນ. ພາວະເສດຖະກິດຕົກຕໍ່າໄດ້ຈູ່ໂຈມບັນດາປະເທດທີ່ຮັ່ງມີກວ່າ ຊຶ່ງສົ່ງຜົນໃຫ້ແກ່ການຊ່ວຍເຫຼືອດ້ານງົບປະມານແກ່ບັນດາປະເທດທຸກຍາກທີ່ສຸດ ແລະ ບັນດາປະເທດທີ່ຍັງຫ່າງໄກທີ່ສຸດຈາກການບັນລຸເປົ້າໝາຍEFA.

ການຫຼຸດລົງຂອງທຶນຊ່ວຍເຫຼືອ ອາດຈະເພີ່ມຊ່ອງຫວ່າງທາງດ້ານການເງິນຂອງການສຶກສາ, ສະນັ້ນ ຕ້ອງໄດ້ຊອກຫາຊ່ອງທາງໃໝ່ເພື່ອມາທົດແທນສ່ວນທີ່ຫຼຸດລົງ. ທຶນຊ່ວຍເຫຼືອຈາກບັນດາປະເທດໃຫ້ທຶນໃໝ່ໆເຊັ່ນ: ບຼາຊິນ, ຈີນ ແລະ ອິນເດຍ ແມ່ນແຫຼ່ງທຶນໜຶ່ງທີ່ສາມາດເປັນໄປໄດ້. ແຕ່ໃນປັດຈຸບັນ ຍັງບໍ່ພຽງພໍສຳລັບກຸ່ມປະເທດເປົ້າໝາຍທີ່ມີຄວາມຕ້ອງການສູງ. ເພາະສະນັ້ນຕ້ອງໄດ້ຊອກຫາແຫຼ່ງທຶນເພີ່ມເຕີມອື່ນໆອີກ. ລາຍໄດ້ຈາກຊັບພະຍາກອນທຳມະຊາດ ແລະ ອົງກອນເອກະຊົນມີ 2 ແຫຼ່ງທຶນທີ່ມີຄວາມເປັນໄປໄດ້. ແຕ່ຖ້າຕ້ອງການໃຫ້ທຶນດັ່ງກ່າວຖືກນຳໃຊ້ຢ່າງມີປະສິດທິຜົນກໍ່ຄວນເພີ່ມການເອົາໃຈໃສ່ໃນດ້ານຄວາມໂປ່ງໃສ ແລະ ຄວາມສອດຄ່ອງກັບເປົ້າໝາຍຂອງ EFA.





# ພາກທີ 2. ຊາວໜຸ່ມ ແລະ ທັກສະ: ນຳໃຊ້ການສຶກສາເພື່ອປະກອບອາຊີບ



*ຖ້າມີຄົນຍື່ນທັກສະ ແລະ ໂອກາດໃນການເຮັດວຽກໃຫ້ ຂ້ອຍຮູ້ວ່າຂ້ອຍຈະສາມາດບັນລຸເປົ້າໝາຍຂອງຕົນເອງໄດ້.*

--ຍິງໜຸ່ມ ຈາກປະເທດ ເອທິໂອເປຍ

ຄວາມຈຳເປັນໃນການພັດທະນາທັກສະຂອງຊາວໜຸ່ມໃນການປະກອບອາຊີບໄດ້ກາຍເປັນບັນຫາອັນຮີບດ່ວນ. ລັດຖະບານໃນທົ່ວໂລກກຳລັງປະເຊີນໜ້າກັບຜົນກະທົບໄລຍະຍາວ ຂອງວິກິດການທາງດ້ານການເງິນ ແລະ ສິ່ງທ້າທາຍຕ່າງໆຈາກຍຸກເສດຖະກິດທີ່ອີງໃສ່ຄວາມຮູ້ເປັນພື້ນຖານທີ່ນັບມື້ນັບສູງຂຶ້ນ. ຖ້າວ່າປະເທດຕ່າງໆຕ້ອງການຂະຫຍາຍຕົວ ແລະ ອຸດົມຮັ່ງມີ ໃນສະພາບການຂອງໂລກທີ່ມີການປ່ຽນແປງຢ່າງໄວວານີ້, ເຂົາເຈົ້າຈຳເປັນຕ້ອງເອົາໃຈໃສ່ໃນການພັດທະນາກຳລັງແຮງງານທີ່ມີທັກສະໃຫ້ຫຼາຍຂຶ້ນ ແລະ ຊາວໜຸ່ມທຸກຄົນບໍ່ວ່າດຳລົງຊີວິດຢູ່ແຫ່ງຫົນໃດ ແລະ ບໍ່ວ່າຈະມີຄວາມເປັນມາຄືແນວໃດກໍ່ຕາມ ເຂົາເຈົ້າຕ້ອງການທັກສະທີ່ກະກຽມໃຫ້ເຂົາໄດ້ມີອາຊີບທີ່ດີ ເພື່ອໃຫ້ເຂົາເຈົ້າສາມາດປະສົບຜົນສຳເລັດ ແລະ ເຂົ້າຮ່ວມໃນສັງຄົມໄດ້ຢ່າງເຕັມສ່ວນ.

ຄວາມສຳຄັນແມ່ນຄວາມຮຽກຮ້ອງຕ້ອງການພັດທະນາໃຫ້ແກ່ຊາວໜຸ່ມໄດ້ລະບຸໄວ້ໃນເປົ້າໝາຍທີ 3 ຂອງການບັນລຸການສຶກສາເພື່ອທຸກຄົນເຊິ່ງຈະສຸມໃສ່ ຄວາມຕ້ອງການທາງດ້ານການຮຽນຂອງຊາວໜຸ່ມ ແລະ ຜູ້ໃຫຍ່ໝົດທຸກຄົນ ແຕ່ເນື່ອງຈາກວ່າເປົ້າໝາຍດັ່ງກ່າວຍັງບໍ່ທັນຈະແຈ້ງ ແລະ ບໍ່ມີຄວາມແນ່ນອນໃນການວັດປະເມີນຜົນ ຈຶ່ງເຮັດໃຫ້ເປົ້າໝາຍນີ້ບໍ່ໄດ້ຮັບການເອົາໃຈໃສ່ເທົ່າທີ່ຄວນຈາກລັດຖະບານ, ຜູ້ໃຫ້ທຶນການຊ່ວຍເຫຼືອ, ໃນແວດວົງການສຶກສາ ຫຼື ພາກສ່ວນເອກະຊົນ ແລະ ປັດຈຸບັນນີ້ ບັນຫາດັ່ງກ່າວແມ່ນມີຄວາມສຳຄັນທີ່ສຸດ.

ປັດຈຸບັນນີ້ ຈຳນວນຊາວໜຸ່ມໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ ແລະ ນັບມື້ນັບຫຼາຍຂຶ້ນໃນບາງພາກຂອງໂລກ. ຖ້າຈະເບິ່ງແຕ່ປະເທດກຳລັງພັດທະນາແລ້ວ, ພົນລະເມືອງທີ່ມີອາຍຸແຕ່ 15 ຫາ 24 ປີ ມີຫຼາຍກວ່າ 1 ຕື້ ຄົນ ໃນປີ 2010. ແຕ່ການສ້າງວຽກເຮັດງານທຳຍັງບໍ່ທັນຂະຫຍາຍຕົວໄດ້ພໍພຽງກັບຄວາມຕ້ອງການຂອງຈຳນວນປະຊາກອນໄວໜຸ່ມທີ່ມີຈຳນວນຫຼວງຫຼາຍ. ຄິດສະເລ່ຍແລ້ວມີປະມານ 1 ສ່ວນ 8 ຄົນຂອງຊາວໜຸ່ມທີ່ມີອາຍຸ 15 ຫາ 24 ປີ ຫວ່າງງານ. ການຫວ່າງງານຂອງຊາວໜຸ່ມເພີ່ມຂຶ້ນເຖິງ 3 ທົບ ເຊິ່ງເກືອບເທົ່າກັບການຫວ່າງງານຂອງຜູ້ໃຫຍ່. ການນາບຂູ່ໄພຫວ່າງງານຂອງຊາວໜຸ່ມຍັງຈະສືບຕໍ່ສູງຂຶ້ນ ເຊິ່ງເຮັດໃຫ້ຊາວໜຸ່ມຫຼາຍຄົນຕ້ອງປະເຊີນກັບວຽກງານທີ່ບໍ່ໝັ້ນຄົງໃນຊຸມປີຕໍ່ໜ້າ.

ບັນຫາໃນການຫວ່າງງານຂອງຊາວໜຸ່ມ ເປັນບັນຫາອັນຖືກຕ້ອງທີ່ຍົກຂຶ້ນມາເປັນປະເດັນເພື່ອໃຫ້ຜູ້ກຳນົດນະໂຍບາຍໃຫ້ບູລິມະສິດໃນການສ້າງວຽກເຮັດງານທຳໃນພາກສ່ວນບໍລິສັດເອກະຊົນ. ໃນຂະນະທີ່ບັນຫາດັ່ງກ່າວໄດ້ຮັບການຮັບຮອງແຕ່ຄວາມຈຳເປັນຂອງຊາວໜຸ່ມຜູ້ທີ່ຂາດທັກສະພື້ນຖານທາງດ້ານການຮຽນຮູ້ໜັງສື ແລະ ການຄິດໄລ່ ຈຳນວນເປັນລ້ານໆຄົນ ສຳພັດຍັງສືບຕໍ່ເບິ່ງຂ້າມ. ຊາວໜຸ່ມຈຳນວນດັ່ງກ່າວມີວຽກເຮັດ ແຕ່ມີຄ່າແຮງງານຕໍ່າກວ່າລະດັບມາດຕະຖານຄວາມທຸກຍາກໃນເຂດຕົວເມືອງທີ່ຈ້າງແຮງງານຊາວໜຸ່ມນອກລະບົບ, ຫຼື ຊາວໄຮ່ນາຂະໜາດນ້ອຍທີ່ຢູ່ໃນສະພາບກຳລັງຈະສູນເສຍການຄອບຄອງນຳໃຊ້ທີ່ດິນ ເຊິ່ງຄຳຄິດຄຳເຫັນຂອງເຂົາເຈົ້າທີ່ສະແດງອອກໃນຂະບວນການປະທ້ວງຈະບໍ່ຄ່ອຍໄດ້ຍິນ. ດັ່ງນັ້ນ, ການໃຫ້ໂອກາດແກ່ຊາວໜຸ່ມທີ່ກ່າວມາຂ້າງເທິງນີ້ໄດ້ຫຼຸດພົ້ນອອກຈາກການມີທັກສະທີ່ຕໍ່າ ແລະ ຄ່າແຮງງານຖືກ ຄວນຈະເປັນຂອດສຳຄັນຂອງຍຸດທະສາດໃນການພັດທະນາທັກສະຕ່າງໆ.

ຜ່ານມາຈະສັງເກດເຫັນວ່າ ການເຂົ້າເຖິງການພັດທະນາທັກສະຍັງບໍ່ທັນເທົ່າທຽມກັນ. ຄວາມບໍ່ເທົ່າທຽມກັນຍັງມີຢູ່ ແລະ ຍັງເພີ່ມທະວີຄວາມດ້ອຍໂອກາດເຮັດໃຫ້ ເພດຍິງ ຫຼື ສະມາຊິກກຸ່ມດ້ອຍໂອກາດໃນສັງຄົມທຸກຍາກ. ຊາວໜຸ່ມຜູ້ທີ່ເຕີບໃຫຍ່ໃນຄວາມທຸກຍາກ ແລະ ຖືກເບິ່ງຂ້າມສ່ວນໃຫຍ່ຈະມີການສຶກສາທີ່ຈຳກັດ ຫຼື ອອກຈາກໂຮງຮຽນ.ຜົນທີ່ຕາມມາກໍ່ເຮັດໃຫ້ເຂົາເຈົ້າມີໂອກາດຈຳກັດໃນການພັດທະນາທັກສະຂອງຕົນເພື່ອໃຫ້ມີວຽກເຮັດງານທຳທີ່ດີ ແລະ ມີຄວາມສ່ຽງຕໍ່ຄວາມດ້ອຍໂອກາດໃນຕະຫຼາດແຮງງານຕໍ່ໄປ. ດັ່ງນັ້ນບົດລາຍງານສະບັບນີ້ ໄດ້ໃຫ້ຄວາມສົນໃຈພິເສດໃນການໄຈ້ແຍກ ແລະ ສ້າງຄວາມເຂົ້າໃຈໃນການເຂົ້າເຖິງຊາວໜຸ່ມຜູ້ດ້ອຍໂອກາດເພື່ອໃຫ້ເຂົາເຈົ້າໄດ້ພັດທະນາທັກສະທີ່ນຳໄປສູ່ການມີອາຊີບທີ່ດີກວ່າເກົ່າ ແລະ ຮັບປະກັນໃຫ້ມີລາຍໄດ້ທີ່ພຽງພໍໃນການຊື້ອາຫານ ແລະ ມີເງິນສະສົມ; ມີອາຊີບທີ່ສາມາດເຮັດໃຫ້ຊີວິດເຂົາເຈົ້າຫຼຸດພົ້ນອອກຈາກຄວາມທຸກຍາກ.

ປະມານ 1 ໃນ 8 ຂອງປະຊາກອນທີ່ມີອາຍຸແຕ່ 15 ຫາ 24 ປີ ບໍ່ມີວຽກເຮັດງານທຳ

ບົດລາຍງານສະບັບນີ້ຈະກຳນົດທັກສະຕົ້ນຕໍ 3 ປະເພດ ທີ່ຊາວໜຸ່ມທຸກຄົນຕ້ອງການຄື: ທັກສະຂັ້ນພື້ນຖານ, ເຊື່ອມຕໍ່ ແລະ ການອົບຮົມເຕັກນິກວິຊາຊີບ ແລະ ສະພາບເງື່ອນໄຂຕ່າງໆທີ່ເຂົາເຈົ້າມີຄວາມຕ້ອງການ:

*ທັກສະຂັ້ນພື້ນຖານ:* ໃນຂັ້ນເລີ່ມຕົ້ນທີ່ສຸດຂອງຊາວໜຸ່ມ ເຂົາເຈົ້າຕ້ອງການທັກສະຂັ້ນພື້ນຖານທີ່ປະກອບດ້ວຍທັກສະການອ່ານອອກຂຽນເປັນ ແລະ ການຄຳນວນເລກທີ່ຈຳເປັນ ເພື່ອໃຫ້ໄດ້ວຽກເຮັດງານທຳທີ່ຊ່ວຍໃຫ້ເຂົາເຈົ້າສາມາດໃຊ້ຈ່າຍສຳລັບຄວາມຕ້ອງການປະຈຳວັນ. ທັກສະດັ່ງກ່າວຍັງເປັນທັກສະພື້ນຖານອັນຈຳເປັນກ່ອນໝູ່ເພື່ອໃຫ້ເຂົາເຈົ້າສືບຕໍ່ໃນການສຶກສາ ແລະ ຝຶກອົບຮົມ ແລະ ໃນການຮຽນຮູ້ທັກສະເຊື່ອມຕໍ່ ແລະ ການຝຶກອົບຮົມເຕັກນິກວິຊາຊີບ.

*ທັກສະການເຊື່ອມຕໍ່:* ທັກສະດັ່ງກ່າວປະກອບມີຄວາມສາມາດໃນການແກ້ໄຂບັນຫາ, ສື່ສານທາງດ້ານແນວຄວາມຄິດ ແລະ ຂໍ້ມູນຢ່າງມີປະສິດທິຜົນ, ມີຫົວຄິດປະດິດສ້າງ, ສະແດງໃຫ້ເຫັນພາວະການເປັນຜູ້ນຳ ແລະ ມີສະຕິແລະສະແດງໃຫ້ເຫັນຄວາມອາດສາມາດໃນການປະກອບການ.

ທຸກໆຄົນຕ້ອງການທັກສະດັ່ງກ່າວ ເພື່ອໃຫ້ສາມາດປັບຕົວເຂົ້າກັບການເຮັດວຽກງານໃນສະພາບແວດລ້ອມ ທີ່ແຕກຕ່າງກັນ ແລະ ຍັງຊ່ວຍເພີ່ມໂອກາດໃນການທີ່ຈະໄດ້ມີວຽກເຮັດງານທຳ.

*ທັກສະດ້ານເຕັກນິກວິຊາຊີບ:* ມີຫຼາຍອາຊີບຕ້ອງການເຕັກນິກສະເພາະເພື່ອໃຫ້ຮູ້ວິທີການ ເຊິ່ງເລີ່ມຈາກການປູກຜັກໄປຈົນເຖິງການນຳໃຊ້ຈັກຫຍິບເຄື່ອງ, ກໍ່ດິນຈີ່ ຫຼື ນຳໃຊ້ຄອມພິວເຕີເປັນ.

"ເສັ້ນທາງສູ່ການພັດທະນາທັກສະ/ສີມືແຮງງານ" ທີ່ສະເໜີໃນບົດລາຍງານສະບັບນີ້ ສາມາດເປັນເຄື່ອງມືເພື່ອໃຫ້ເຂົ້າໃຈເຖິງຄວາມຕ້ອງການໃນການພັດທະນາທັກສະຕ່າງໆ ແລະ ຂົງເຂດເປົ້າໝາຍທີ່ມີໂຍບາຍຈັດຕັ້ງປະຕິບັດ.ຊາວໜຸ່ມສາມາດຮຽນຮູ້ ທັກສະ 3 ປະເພດຕົ້ນຕໍໂດຍຜ່ານການຮຽນໃນລະບົບສາມັນສຶກສາ ແລະ ການສຶກສາຕໍ່ເນື່ອງ, ການຝຶກອົບຮົມເຕັກນິກວິຊາຊີບ.ອີກທາງໜຶ່ງສຳລັບຜູ້ທີ່ບໍ່ສຳເລັດການສຶກສາສາຍສາມັນສາມາດຮັບຜົນປະໂຫຍດຈາກການຝຶກອົບຮົມທັກສະຕ່າງໆເຊິ່ງເປັນໂອກາດເທື່ອທີ 2 ເພື່ອຮຽນທັກສະພື້ນຖານຮອດການຝຶກອົບຮົມພື້ນຖານການເຮັດວຽກລວມເຖິງການຝຶກຫັດງານ ແລະ ພື້ນຖານອົບຮົມການປູກຝັງ.

## ຊາວໜຸ່ມ ທັກສະ ແລະ ການເຮັດວຽກ – ການສ້າງພື້ນຖານອັນເຂັ້ມແຂງ

ໃນຫຼາຍປະເທດຄົນຮຸ່ນໜຸ່ມແມ່ນກວມຈຳນວນຫຼາຍທີ່ສຸດ ເຊິ່ງຄົນຈຳນວນດັ່ງກ່າວຈະກາຍເປັນ ເຄື່ອງຈັກຂອງການເຕີບໃຫຍ່ຂະຫຍາຍຕົວຖ້າຫາກວ່າບັນດາປະເທດເຫຼົ່ານັ້ນ ຫາກສາມາດສະໜອງໂອກາດໃຫ້ເຂົາເຈົ້າ. ແຕ່ກໍ່ມີຫຼາຍປະເທດທີ່ບໍ່ໄດ້ມີການກະກຽມຢ່າງພຽງພໍທີ່ຈະໃຫ້ໂອກາດແກ່ເຂົາເຈົ້າ. ການເຂົ້າເຖິງການສຶກສາທີ່ບໍ່ເທົ່າທຽມກັນ ເປັນການກີດຂວາງໃຫ້ແກ່ຊາວໜຸ່ມຫຼາຍຄົນ, ໂດຍສະເພາະແມ່ນຜູ້ຍິງທີ່ມາຈາກຄອບຄົວທຸກຍາກ ໃຫ້ຕົກຢູ່ໃນຊີວິດທີ່ດ້ອຍໂອກາດ.

ການສະໜອງໂອກາດທີ່ເທົ່າທຽມກັນໃນການເຂົ້າຮຽນເປັນບາດກ້າວທຳອິດທີ່ສຳຄັນ ເພື່ອຮັບປະກັນໃຫ້ຊາວໜຸ່ມໄດ້ມີທັກສະອັນຫຼາກຫຼາຍທີ່ຈຳເປັນເພື່ອນຳໄປປັບປຸງ ການປະກອບອາຊີບໃນອະນາຄົດ ເຊິ່ງຂະນະດຽວກັນກໍ່ເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ຄຸນນະພາບຂອງການສຶກສາ.ແຕ່ຍັງມີຊາວໜຸ່ມອີກຫຼາຍຄົນທີ່ບໍ່ໄດ້ເຂົ້າເຖິງໂອກາດດັ່ງກ່າວ. ຊາວໜຸ່ມຈຳນວນເຫຼົ່ານີ້ມີແນວໂນ້ມສູງທີ່ຈະປະສົບກັບການຫວ່າງງານ ຫຼື ເຮັດວຽກທີ່ມີຄ່າຈ້າງຕ່ຳ.



### *ປະຊາກອນໜຸ່ມຈຳນວນຫຼວງຫຼາຍສະແດງໃຫ້ເຫັນສິ່ງທ້າທາຍຫຼາຍຢ່າງ*

> *ທຸກໆປີ, ຈຳນວນຄົນຫວ່າງງານໜຸ່ມຈະເພີ່ມຂຶ້ນ, ບໍ່ໄດ້ຫຼຸດລົງ. ນັກສຶກສາຫຼາຍຄົນຮຽນຈົບຈາກໂຮງຮຽນທຸກປີ ເຊິ່ງເປັນການເພີ່ມຂຶ້ນຂອງການຫວ່າງງານຂອງຊາວໜຸ່ມ ໃນຂະນະດຽວກັນໂອກາດໃນການສ້າງວຽກເຮັດງານທຳຍັງຄືເກົ່າ.*
>
> --ຊາວໜຸ່ມ ຈາກປະເທດ ເອທິໂອເປຍ

ປະມານ 1 ສ່ວນ 6 ຂອງປະຊາກອນໂລກ ມີອາຍຸ 15 ຫາ 24 ປີ. ເຂົາເຈົ້າສຸມກັນຢູ່ຢ່າງບໍ່ສົມສ່ວນ ໃນບາງປະເທດທີ່ທຸກຍາກທີ່ສຸດ. ພົນລະເມືອງໜຸ່ມກວມຈຳນວນຫຼວງຫຼາຍ ແລະ ມີການຂະຫຍາຍຕົວຢ່າງໄວວາໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ ປະມານ 2 ສ່ວນ3 ຂອງຄົນອາຟຣິກາມີອາຍຸຕ່ຳກວ່າ 25 ປີ ຖ້າທຽບໃສ່ບັນດາປະເທດຮັ່ງມີເຊັ່ນ: ປະເທດຝຣັ່ງ, ຍີ່ປຸ່ນ, ອັງກິດ ແລະ ອາເມລິກາ ເຊິ່ງມີໜ້ອຍກວ່າ 1 ສ່ວນ 3 ເທົ່ານັ້ນ. ພາຍໃນປີ 2030 ຄາດຄະເນວ່າ ປະຊາກອນໜຸ່ມຈະເພີ່ມຂຶ້ນ 3.5 ທົບ ເທົ່າກັນກັບຈຳນວນຊາວໜຸ່ມໃນເຂດອະນຸພາກ ພື້ນຊາຮາຣາອາຟຣິກາໃນປີ 1980. ນອກຈາກນີ້ ຍັງມີຈຳນວນຊາວໜຸ່ມຈຳນວນຫຼວງຫຼາຍອາໄສຢູ່ໃນບັນດາປະເທດ ອາຣັບ ແລະ ພາກໃຕ້ ແລະ ພາກຕາເວັນຕົກຂອງອາຊີ ເຊິ່ງມີອາຍຸຕ່ຳກວ່າ 25 ປີ.

ເພື່ອຮອງຮັບການຂະຫຍາຍຕົວຂອງປະຊາກອນໜຸ່ມໃນບັນດາປະເທດອາຣັບ, ພາກໃຕ້ ແລະ ຕາເວັນຕົກຂອງ ອາຊີ, ແລະ ເຂດອະນຸພາກພື້ນຊາຮາຣາອາຟຣິກາ ຈຳເປັນຕ້ອງມີການສ້າງອາຊີບເພີ່ມ 57 ລ້ານອາຊີບ ພາຍໃນປີ 2020 ເພື່ອຫຼີກລ່ຽງ ອັດຕາໄພຫວ່າງງານທີ່ເພີ່ມຂຶ້ນຈາກລະດັບທີ່ມີຢູ່ໃນປະຈຸບັນ.

ກ່ອນອື່ນໝົດ,ເຖິງຢ່າງໃດກໍ່ດີລັດຖະບານຕ້ອງໄດ້ແກ້ໄຂບັນຫາການຂາດເຂີນ ທັກສະອັນຫຼວງຫຼາຍທີ່ເຮັດໃຫ້ຊາວໜຸ່ມຫວ່າງງານ ຫຼື ຕົກຢູ່ໃນການເຮັດວຽກຫາລ້ຽງຊີບແບບພໍຢູ່ລອດ. ການສ້າງອາຊີບໃໝ່ຫຼາຍຢ່າງຂຶ້ນຈະບໍ່ສາມາດແກ້ໄຂບັນຫາໄດ້ຖ້າຫາກວ່າຂະໜາດສັດສ່ວນຂອງປະຊາກອນໜຸ່ມ ບໍ່ມີທັກສະອັນຈຳເປັນສະໜອງຊ່ວຍເຂົາເຈົ້າ.

### *ຄວາມບໍ່ສະເໝີພາບກັນຢ່າງກວ້າງຂວາງ ເຮັດໃຫ້ຊາວໜຸ່ມຫຼາຍຄົນຂາດທັກສະພື້ນຖານ.*

> *ຖ້າຫາກວ່າຂ້ອຍຕ້ອງການເປັນໃຜຜູ້ໜຶ່ງທີ່ສູງສົ່ງ ຂ້ອຍຈະຕ້ອງສືບຕໍ່ຮຽນໜັງສື ແຕ່ຍ້ອນເຫດຜົນທາງດ້ານເສດຖະກິດ ຂ້ອຍບໍ່ສາມາດຮຽນຕໍ່ໄດ້, ຂ້ອຍຄິດວ່າຄວນຈະອອກຈາກ ໂຮງຮຽນເພື່ອຢຸດການເປັນພາລະ ແລະ ໃຊ້ຈ່າຍຊື້ເຄື່ອງ ຂອງໃຫ້ຂ້ອຍແຕ່ຂ້ອຍບໍ່ສາມາດຊອກວຽກ ໄດ້ຂ້ອຍຄວນ ຈະສືບຕໍ່ຮຽນໜັງສືບໍ່?*
>
> --ຊາວໜຸ່ມຈາກປະເທດ ແມັກຊິໂກ

ເພື່ອກຽມພ້ອມໃຫ້ແກ່ການຈ້າງງານ ຊາວໜຸ່ມທຸກຄົນຈຳເປັນຕ້ອງມີທັກສະພື້ນຖານຕ່າງໆ ທີ່ຮຽນຮູ້ຜ່ານການສຶກສາເພື່ອສືບຕໍ່ຮຽນຢ່າງໜ້ອຍສຸດຮອດຊັ້ນມັດທະຍົມຕົ້ນ. ແຕ່ມີ 30 ປະເທດໃນຈຳນວນ 59 ປະເທດ ທີ່ເຂົ້າຮ່ວມໃນຂະບວນການວິເຄາະ ໃນບົດລາຍງານນີ້ ຢ່າງໜ້ອຍສຸດມີເຄິ່ງໜຶ່ງຂອງປະຊາກອນ ອາຍຸ 15 ຫາ 19 ປີ ຂາດທັກສະພື້ນຖານ. ກໍລະນີດັ່ງກ່າວນີ້ມີ 23 ປະເທດ ໃນຈຳນວນ 30 ປະເທດ ໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ ນອນຢູ່ໃນຊຸດຂໍ້ມູນ (ຮູບທີ 12).

ສາເຫດທີ່ບໍ່ສາມາດບັນລຸທັກສະພື້ນຖານແມ່ນແຕກຕ່າງກັນເຊິ່ງຮຽກຮ້ອງໃຫ້ມີການຕອບສະໜອງ ທາງດ້ານນະໂຍບາຍທີ່ແຕກຕ່າງກັນ, ໃນປະເທດ ເບີກິນາ ຟາໂຊ, ມາລີ ແລະ ໄນເຈີ ມີປະມານ 3 ສ່ວນ 5 ຄົນຂອງຊາວໜຸ່ມບໍ່ເຄີຍເຂົ້າຮຽນຈົນອາຍຸ ຮອດ 15 ຫາ 19 ປີ ແລະ ມີຄວາມເປັນໄປໄດ້ສູງວ່າຈະບໍ່ມີໂອກາດ. ໃນຫຼາຍປະເທດໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ ຜູ້ທີ່ສາມາດເຂົ້າຮຽນໄດ້ກໍ່ອອກໂຮງຮຽນກ່ອນຈະຈົບຊັ້ນປະຖົມສຶກສາ. ໃນປະເທດ ໂຮວັນດາ, ເກືອບວ່າ ຊາວໜຸ່ມສ່ວນຫຼາຍມີປະສົບການຮຽນຊັ້ນປະຖົມ, ແຕ່ເຄິ່ງໜຶ່ງຕ້ອງອອກໂຮງຮຽນກ່ອນຈົບຊັ້ນປະຖົມສຶກສາ.

ໃນຫຼາຍປະເທດທີ່ມີລາຍຮັບຕ່ຳ ປະຊາກອນທີ່ມີອາຍຸ 15 ຫາ 19 ປີ ຈຳນວນຫຼວງຫຼາຍຍັງຮຽນຢູ່ຊັ້ນປະຖົມ ເຊິ່ງສຳອາຍຸດັ່ງກ່າວຄວນຮຽນຈົບຊັ້ນມັດທະຍົມຕົ້ນ. ຕົວຢ່າງ ໃນປະເທດອູການດາມີເຖິງ 35% ຂອງປະຊາກອນ ອາຍຸ 15 ຫາ 19 ປີ ຍັງຮຽນຢູ່ຊັ້ນປະຖົມເຊິ່ງໂອກາດທີ່ຮຽນສູງກວ່າລະດັບນີ້ຖືວ່າຈຳກັດ.

ເຖິງແມ່ນວ່າ ໃນບັນດາປະເທດທີ່ເຄິ່ງໜຶ່ງຂອງປະຊາກອນ ມີອາຍຸ 15 ຫາ 19 ປີ ຈົບຊັ້ນມັດທະຍົມສຶກສາຕອນຕົ້ນເຊັ່ນ: ປະເທດອິນເດຍ, ອິນໂດເນເຊຍ ແລະ ປະເທດ ຊີເຣຍ ກໍຍັງມີຊາວໜຸ່ມຫຼາຍຄົນບໍ່ເຄີຍເຂົ້າຮຽນ ເຊິ່ງເຂົາເຈົ້າອອກໂຮງຮຽນກ່ອນຈົບມັດທະຍົມ ຫຼື ຍັງຮຽນຢູ່ໂຮງຮຽນປະຖົມ.

ຄວາມທຸກຍາກຍັງເປັນສິ່ງກີດຂວາງຕໍ່ການສຶກສາ ແລະ ການພັດທະນາທັກສະຕ່າງໆ.ໃນປະເທດອີຢິບ ມີ 1 ສ່ວນ 5 ຄົນທຸກທີ່ ສຸດບໍ່ໄດ້ເຂົ້າໂຮງຮຽນຊັ້ນປະຖົມສຶກສາເລີຍ ແຕ່ໃນຂະນະດຽວກັນເກືອບທັງໝົດຂອງເດັກທີ່ຮັ່ງມີຮຽນຈົບຊັ້ນມັດທະຍົມສຶກສາຕອນປາຍ.

ເດັກນ້ອຍ ແລະ ໄວໜຸ່ມ ຫຼາຍຄົນບໍ່ໄດ້ເຂົ້າຮຽນເນື່ອງຈາກຄວາມທຸກຍາກ ສະນັ້ນເຂົາເຈົ້າຈຶ່ງຕ້ອງອອກຫາວຽກເຮັດງານທຳແທນ, ໃນປີ 2008 ທົ່ວໂລກມີປະຊາກອນ 115 ລ້ານຄົນ ມີອາຍຸ 5 -17 ປີ ເຮັດວຽກຢູ່ໃນສະພາບຄວາມສ່ຽງຕໍ່ໄພອັນຕະລາຍ. ເຂົາເຈົ້າມີອາຊີບທີ່ມີລາຍຮັບຕ່ຳ ແລະ ອາຊີບທີ່ບໍ່ໝັ້ນຄົງຕໍ່ກັບຊີວິດຂອງຕົນ ເນື່ອງຈາກວ່າບໍ່ມີຄວາມສາມາດຮຽນຮູ້ທັກສະຕ່າງໆ.

ຊ່ອງວ່າງລະຫວ່າງຄົນຮັ່ງມີ ແລະ ຄົນທຸກ ຈະສືບຕໍ່ກວ້າງອອກເມື່ອເດັກມີອາຍຸສູງຂຶ້ນ ເຊັ່ນ: ກຸ່ມທີ່ມາຈາກພື້ນຖານກຸ່ມດ້ອຍໂອກາດຍິ່ງຈຳເປັນຕ້ອງປະກອບສ່ວນໃນການສ້າງລາຍຮັບໃຫ້ແກ່ຄອບຄົວຫຼາຍຂຶ້ນ. ປະເທດ ໂຄລຳເບຍ ແລະ ຫວຽດນາມ ເຫັນວ່າເດັກເກືອບໝົດທຸກຄົນໄດ້ເຂົ້າໂຮງຮຽນປະຖົມ ແຕ່ໃນຂະນະດຽວກັນ ຄົນໜຸ່ມຈາກຄອບຄົວຮັ່ງມີສາມາດຮຽນຈົບຮອດຊັ້ນມັນທະຍົມຕົ້ນເຊິ່ງໃນນັ້ນມີພຽງແຕ່ປະມານ 2 ສ່ວນ 3 ຂອງເດັກທີ່ມາຈາກຄອບຄົວທຸກຍາກໃນຫວຽດນາມ ຈົບຊັ້ນມັດທະຍົມຕົ້ນ ແລະ ໃນປະເທດ ໂຄລຳເບຍມີປະມານເຄິ່ງໜຶ່ງ.

ໃນປະເທດທຸກຍາກສ່ວນໃຫຍ່ ເດັກຍິງມີທັກສະພື້ນຖານໜ້ອຍກວ່າເດັກຊາຍ. ໃນປະເທດທີ່ມີລາຍຮັບຕ່ຳຈະເກີດມີຊ່ອງຫວ່າງລະຫວ່າງເພດຫຼາຍໃນບັນດາຄອບຄົວຮັ່ງມີ ແຕ່ໃນຂະນະດຽວກັນໂອກາດຍັງຈຳກັດສຳລັບເດັກຊາຍ ແລະ ເດັກຍິງທີ່ມາຈາກຄອບຄົວທຸກຍາກໃນປະເທດ ເບີກິນາ ຟາໂຊ ເກືອບ 60% ຂອງເດັກຊາຍທີ່ມາຈາກຄອບຄົວຮັ່ງມີສາມາດຮຽນຈົບຊັ້ນມັດທະຍົມຕົ້ນຖ້າທຽບໃສ່ເດັກຍິງມີແຕ່ 40% ເທົ່ານັ້ນ. ໃນບັນດາຄອບຄົວທຸກທີ່ສຸດ ມີພຽງແຕ່ 5% ເທົ່ານັ້ນທີ່ຮຽນຈົບ ມັດທະຍົມຕົ້ນ ແຕ່ສັດສ່ວນຂອງເດັກຍິງ ແລະ ເດັກຊາຍທີ່ລົງທະບຽນເຂົ້າຮຽນແມ່ນເທົ່າກັນ.

ໃນທາງປີ້ນກັນຖືວ່າເປັນຄວາມຈິງໃນບັນດາປະເທດທີ່ມີລາຍຮັບປານກາງບ່ອນທີ່ມີການແບ່ງແຍກລະຫວ່າງເພດເກີດ ຂຶ້ນໃນບັນດາຄອບຄົວທຸກຍາກທີ່ສຸດ ແຕ່ຊາວໜຸ່ມສ່ວນໃຫຍ່ຈາກຄອບຄົວຮັ່ງມີ

ໃນປະເທດ ໄນເຈີ ປະມານ 3 ສ່ວນ 5 ຂອງປະຊາກອນທີ່ມີອາຍຸ 15-19 ປີ ບໍ່ເຄີຍໄປໂຮງຮຽນ

## ຮູບທີ12: ຊາວໜຸ່ມຫຼາຍຄົນບໍ່ສາມາດຮຽນຮູ້ທັກສະພື້ນຖານ.

ສະຖານະພາບການສຶກສາຂອງປະຊາກອນອາຍຸ 15 ຫາ 19 ປີ ຂອງແຕ່ລະປະເທດທີ່ເປັນຂໍ້ມູນຫຼ້າສຸດຂອງປີ.




*ແຫຼ່ງຂໍ້ມູນ*: UIS (2012a).

ບໍ່ວ່າຈະເປັນເດັກຊາຍ ຫຼື ເດັກຍິງ ສາມາດຮຽນຮູ້ທັກສະພື້ນຖານ. ໃນປະເທດ ຕຸລະກີ ມີຄວາມສະເໝີພາບກັນລະຫວ່າງຄອບຄົວຮັ່ງມີ, ແຕ່ໃນຄອບຄົວທຸກຍາກ ມີເດັກຊາຍເຖິງ 64% ບັນລຸທັກສະຂັ້ນພື້ນຖານຖ້າທຽບໃສ່ເດັກຍິງມີແຕ່ 30% ເທົ່ານັ້ນ.

ຖິ່ນທີ່ຢູ່ອາໄສຂອງຊາວໜຸ່ມ ສາມາດຕັດສິນເຖິງໂອກາດດ້ານການສຶກສາ, ການແບ່ງແຍກລະຫວ່າງຕົວເມືອງ ແລະ ຊົນນະບົດ ຫຼື ພາກພື້ນຍິ່ງສະແດງໃຫ້ເຫັນຄວາມແຕກໂຕນລະຫວ່າງເພດ. ຜູ້ຍິງໜຸ່ມທີ່ຢູ່ໃນເຂດຊົນນະບົດໄດ້ຮັບການຮຽນຮູ້ທັກສະພື້ນຖານຈຳກັດ.ໃນປະເທດປາກິດສະຖານ ອັດຕາສ່ວນຂອງປະຊາກອນອາຍຸ 15 - 19 ປີ ທີ່ສາມາດຮຽນຈົບຮອດຊັ້ນມັດທະຍົມປາຍ ມີສູງກວ່າ 2 ທົບ ໃນເຂດຕົວເມືອງຖ້າທຽບໃສ່ເຂດຊົນນະບົດ. ເກືອບເຄິ່ງໜຶ່ງຂອງເພດຍິງໃນເຂດຊົນນະບົດບໍ່ເຄີຍເຂົ້າໂຮງຮຽນເລີຍແຕ່ໃນຂະນະດຽວກັນສິ່ງດັ່ງກ່າວກໍ່ເປັນຄວາມຈິງສຳລັບເພດຊາຍ ໃນເຂດຕົວເມືອງ ເຊິ່ງມີພຽງແຕ່ 14% ເທົ່ານັ້ນທີ່ບໍ່ໄດ້ເຂົ້າຮຽນ. ໃນປະເທດເກຣາລາ, ອິນເດຍ ທັນວ່າລະດັບການຮຽນຮູ້ທັກສະພື້ນຖານເກືອບສາມາດບັນລຸໄດ້ໝົດ ແຕ່ໃນ ບີຮາ ມີພຽງແຕ່ 45% ເທົ່ານັ້ນທີ່ມີໂອກາດຮຽນຮູ້ທັກສະພື້ນຖານ ເຊິ່ງໃນນັ້ນເດັກຊາຍແມ່ນ 57% ແລະ 37% ສຳລັບເດັກຍິງ.

ຄວາມແຕກຕ່າງກັນທາງດ້ານກາລະໂອກາດທີ່ກ່າວມາຂ້າງເທິງສ່ວນໜຶ່ງ ແມ່ນເກີດມາຈາກຄວາມທຸກຍາກແຕ່ມັນກໍ່ສະແດງໃຫ້ເຫັນເຖິງການແຈກຢາຍແຫຼ່ງທຶນຂອງລັດຖະບານທີ່ບໍ່ເທົ່າທຽມກັນ. ຕົວຢ່າງໃນເຂດສະລຳຂອງປະເທດ ເຄນຢາ ມີເດັກນ້ອຍຫຼາຍຄົນທີ່ບໍ່ມີຄວາມຫວັງທີ່ຮຽນຮູ້ທັກສະພື້ນຖານຍ້ອນເຫດຜົນອັນງ່າຍໆຄືບໍ່ມີໂຮງຮຽນໃນເຂດທີ່ເຂົາເຈົ້າດຳລົງຊີວິດຢູ່. ສິ່ງດັ່ງກ່າວເນັ້ນໃຫ້ເຫັນເຖິງຄວາມ ຈຳເປັນທີ່ຈະຕ້ອງມີການແຈກຢາຍແຫຼ່ງທຶນຄືນໃໝ່ ເພື່ອບໍ່ໃຫ້ຊາວໜຸ່ມຖືກປະຕິເສດໃນການເຂົ້າສູ່ຕະຫຼາດແຮງງານເນື່ອງມາຈາກສະຖານະພາບທາງດ້ານຄວາມຮັ່ງມີ, ເພດ ແລະ ບ່ອນທີ່ເຂົາເຈົ້າອາໄສຢູ່.

### *ຊາວໜຸ່ມຕ້ອງການໂອກາດເທື່ອທີສອງ ເພື່ອຮຽນຮູ້ການອ່ານອອກຂຽນເປັນ ແລະ ການຄຳນວນຂັ້ນພື້ນຖານ*

> *ປັດຈຸບັນ ລະດັບການສຶກສາ ແລະ ທັກສະຂອງຂ້ອຍຍັງບໍ່ທັນພຽງພໍ, ແຕ່ຖ້າຂ້ອຍສາມາດໄປຮັບການຝຶກອົບຮົມໃນອານະຄົດ, ຂ້ອຍເຊື່ອວ່າຂ້ອຍຈະສາມາດຮຽນຮູ້ (ທັກສະຂັ້ນພື້ນຖານ) ໄດ້.*
> *--ຍິງໜຸ່ມຈາກປະເທດ ເອທິໂອເປຍ*

ລະດັບຄວາມທ້າທາຍໃນການສະໜອງໂອກາດເທື່ອທີສອງ ໃຫ້ແກ່ຊາວໜຸ່ມທຸກຄົນ ທີ່ຂາດທັກສະພື້ນຖານຖືວ່າສູງກວ່າທີ່ ລັດຖະບານ ປະເທດຕ່າງໆຈະສາມາດເບິ່ງເຫັນໄດ້. ບົດລາຍງານການຕິດຕາມການບັນລຸການສຶກສາເພື່ອທຸກຄົນຂອງໂລກປີນີ້ໄດ້ຄາດຄະເນວ່າໃນ 123 ປະເທດ ທີ່ມີລາຍຮັບຕ່ຳ ແລະ ປານກາງ ມີປະມານ 200 ລ້ານຄົນ ອາຍຸ 15 ຫາ 24 ປີ ບໍ່ສຳເລັດການສຶກສາຂັ້ນປະຖົມເຊິ່ງທຽບເທົ່າ ກັບ 1 ສ່ວນ 5 ຂອງຄົນໜຸ່ມບໍ່ຈົບປະຖົມ ໃນນັ້ນ 58% ເປັນເພດຍິງ.

ຖ້າເບິ່ງຕາມຂົງເຂດແລ້ວເກືອບວ່າ 1 ໃນ 3 ຂອງຊາວໜຸ່ມໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ ແລະ 1 ສ່ວນ 5 ສຳລັບ ປະເທດອາຣັບ ຂາດທັກສະພື້ນຖານ. ຫຼາຍກວ່າເຄິ່ງໜຶ່ງຂອງ 200 ລ້ານຄົນອາໄສຢູ່ໃນ 5 ປະເທດຄື: ບັງຄະລາເທດ, ເອທິໂອເປຍ, ອິນເດຍ, ໄນເຈີ ແລະ ປາກິດສະຖານ. ສ່ວນໃຫຍ່ຂອງປະຊາກອນຈຳນວນດັ່ງກ່າວທີ່ຂາດທັກສະພື້ນຖານອາໄສຢູ່ພາກໃຕ້ ແລະ ພາກຕາເວັນຕົກຂອງ ອາຊີ (91 ລ້ານ) ແລະ ເຂດອະນຸພາກພື້ນຊາຮາຣາອາຟຣິກາ (57 ລ້ານ).

ເຖິງແມ່ນວ່າມີຫຼາຍແຜນງານໂອກາດເທື່ອທີສອງໃນການຝຶກອົບຮົມທີ່ເປັນນະວັດຕະກຳໃໝ່ໃນທົ່ວໂລກ ແຕ່ແຜນງານຫຼາຍອັນແມ່ນອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານເປັນຜູ້ດຳເນີນການ, ຈຳນວນຊາວໜຸ່ມທີ່ເຂົ້າເຖິງກໍ່ພຽງແຕ່ລະດັບຜິວເຜີນເທົ່ານັ້ນ. ອີງຕາມການປະເມີນຜົນຂອງແຜນງານໃຫຍ່ທີ່ສຸດໃນ 7 ປະເທດສະແດງໃຫ້ຮູ້ອີກວ່າມີເດັກ ແລະ ຊາວໜຸ່ມປະມານ 2.1 ລ້ານຄົນເທົ່ານັ້ນ ທີ່ໄດ້ຮັບການຝຶກອົບຮົມ. ແຕ່ໃນບົດລາຍງານສະບັບນີ້ໄດ້ຄາດຄະເນວ່າ ຍັງມີຊາຍໜຸ່ມອີກ 15 ລ້ານຄົນ ໃນ 7 ປະເທດທີ່ກ່າວມານີ້ ຕ້ອງການໂອກາດເທື່ອທີສອງ ໃນການຝຶກອົບຮົມໃຫ້ເຂົາເຈົ້າໄດ້ມີທັກສະພື້ນຖານທີ່ສຸດ.

ຈາກບັນຫາກ່າວຂ້າງເທິງສາມາດສະຫຼຸບໄດ້ວ່າວິທີການສອນທັກສະພື້ນຖານທີ່ຄຸ້ມແມ່ນການຮັບປະກັນໃຫ້ເດັກທຸກຄົນບັນລຸການສຶກສາຂັ້ນປະຖົມທີ່ມີຄຸນນະພາບ ແລະ ຮຽນຕໍ່ຮອດຊັ້ນມັດທະຍົມຕົ້ນ. ຫາກເມື່ອໃດບັນຫານີ້ຍັງບໍ່ປະກົດຂຶ້ນເປັນຈິງຕໍ່ຫຼາຍຄົນ, ເຖິງຢ່າງໃດກໍ່ຕາມ, ຄວາມຕ້ອງການອັນຮີບດ່ວນຕໍ່ຊາວໜຸ່ມທັງຫຼາຍຜູ້ທີ່ພາດໂອກາດເຂົ້າຮຽນຄວນໃຫ້ໄດ້ຮັບໂອກາດເທື່ອທີສອງເພື່ອບັນລຸເປົ້າໝາຍນີ້.

### *ທັກສະການເຊື່ອມຕໍ່: ການກະກຽມສຳລັບການປະກອບອາຊີບ*

> *(ໂຮງຮຽນ) ໄດ້ສອນເຈົ້າໃຫ້ຮູ້ຈັກສື່ສານກັບຄົນ ແລະ ຮູ້ຈັກສະພາບແວດລ້ອມໃນການເຮັດວຽກ.*
> *--ຍິງໜຸ່ມ ຈາກປະເທດອັງກິດ*

ນາຍຈ້າງຕ້ອງການຄວາມໝັ້ນໃຈວ່າຊາວໜຸ່ມຜູ້ທີ່ສະໝັກເຮັດວຽກຢ່າງໜ້ອຍສຸດຕ້ອງມີທັກສະພື້ນຖານທີ່ເຂັ້ມແຂງ ແລະ ສາມາດນຳໃຊ້ຄວາມຮູ້ຂອງຕົນເຂົ້າໃນການແກ້ໄຂບັນຫາ, ມີຄວາມຄິດລິເລີ່ມ ແລະ ການສື່ສານກັບສະມາຊິກຂອງທີມງານຫຼາຍກວ່າທີ່ຈະພຽງແຕ່ເຮັດຕາມຄຳສັ່ງປະຈຳວັນ. ທັກສະການເຊື່ອມຕໍ່ດັ່ງກ່າວບໍ່ໄດ້ຮຽນຈາກປຶ້ມແບບຮຽນ ແຕ່ສາມາດຮຽນຮູ້ໄດ້ໂດຍຜ່ານການສຶກສາທີ່ມີຄຸນນະພາບ.ແຕ່ນາຍຈ້າງຍັງໃຫ້ຂໍ້ສັງເກດວ່າພະນັກງານໃໝ່ ຍັງຂາດທັກສະການເຊື່ອມຕໍ່ໃນຕະຫຼາດແຮງງານ.

ຫຼັກຖານຈາກປະເທດຮັ່ງມີ ສະແດງໃຫ້ຮູ້ວ່າ ໃຊ້ເວລາຮຽນຢູ່ໂຮງຮຽນດົນກວ່າ ກໍ່ຈະຊ່ວຍຮັບປະກັນໃນການຮຽນຮູ້ທັກສະການແກ້ໄຂບັນຫາ. ໃນປະເທດ ການາດາ ມີນັກຮຽນປະມານ 45% ທີ່ອອກຈາກໂຮງຮຽນກ່ອນການຮຽນຈົບມັດທະຍົມປາຍແມ່ນຂາດທັກສະການເຊື່ອມຕໍ່, ທຽບໃສ່ຜູ້ທີ່ຮຽນຈົບຊັ້ນມັດທະຍົມປາຍມີພຽງ 20% ເທົ່ານັ້ນ.

ການສຶກສາທີ່ມີຄຸນນະພາບດີ ຈະຊ່ວຍເພີ່ມຄວາມໝັ້ນໃຈ ແລະ ແຮງຈູງໃຈ. ທັກສະການເຊື່ອມຕໍ່ ເປັນທັກສະທີ່ອາດຈະຊ່ວຍໃຫ້ຊາວໜຸ່ມຫຼາຍຄົນທີ່ເຮັດວຽກນອກລະບົບ. ຢູ່ໃນປະເທດທຸກຍາກສາມາດປະສົບຜົນສຳເລັດໄດ້ໃນອາຊີບຂອງເຂົາເຈົ້າ, ທັກສະດັ່ງກ່າວສາມາດພັດທະນາຜ່ານການສຶກສາໃນໂຮງຮຽນ. ສະນັ້ນຈຳເປັນຕ້ອງໄດ້ເຮັດອີກຫຼາຍຢ່າງເພື່ອຈະຊ່ວຍຊາວໜຸ່ມທີ່ດ້ອຍໂອກາດໃຫ້ເຂົາເຈົ້າໄດ້ພັດທະນາທັກສະດັ່ງກ່າວ. ຕາມບົດຮຽນທີ່ກ່າວມານີ້ ອົງການ ອາກັນກະຊາເປັນອົງການທີ່ບໍ່ຂຶ້ນກັບລັດຖະບານ. ໃນປະເທດອິນເດຍໄດ້ແນະນຳແຜນງານຫຼາຍຢ່າງ ໃນຊຸມຊົນແອອັດທີ່ເນື່ອງມຸມບາຍໃຫ້ແກ່ເດັກທີ່ດ້ອຍໂອກາດໃຫ້ເຊື່ອໝັ້ນ ແລະ ນັບຖືຕົນເອງ. ຜົນກະທົບຂອງແຜນງານດັ່ງກ່າວແມ່ນໄດ້ຮັບຜົນສຳເລັດໃນດ້ານດີ ແລະ ເດັກທີ່ດ້ອຍໂອກາດຜູ້ທີ່ເຂົ້າຮ່ວມແຜນງານດັ່ງກ່າວກໍ່ສະແດງໃຫ້ເຫັນເຖິງການພັດທະນາດີຂຶ້ນ ໃນການຮຽນ ແລະ ການສ້າງລາຍຮັບ.

ຊາວໜຸ່ມປະມານ 200 ລ້ານຄົນ ຕ້ອງການໂອກາດທີສອງໃນ 123 ປະເທດ ທີ່ມີລາຍໄດ້ຕ່ຳ ແລະ ປານກາງ




*ໄລຍະຂ້າມຜ່ານທີ່ອັນຕະລາຍຈາກໂຮງຮຽນສູ່ວຽກເຮັດງານທຳ*

*ເຈົ້າຊອກວຽກເຮັດ ແລະ ເຂົາຖາມວ່າເຈົ້າມີໃບປະກາດຈົບຊັ້ນມັດທະຍົມບໍ່?ແຕ່ເຈົ້າບໍ່ມີ.*

--ຍິງໜຸ່ມ ຈາກປະເທດແມັກຊິໂກ

ຊາວໜຸ່ມຫຼາຍຄົນປະເຊີນກັບໄລຍະຂ້າມຜ່ານທີ່ຫຍຸ້ງຍາກຈາກໂຮງຮຽນສູ່ການຊອກຫາວຽກເຮັດງານທຳ.ຈຸດດ້ອຍທີ່ຊາວໜຸ່ມມັກຈະປະສົບເລື້ອຍໆໃນຕະຫຼາດແຮງງານສະແດງໃຫ້ເຫັນໄດ້ໃນການທີ່ບໍ່ມີວຽກເຮັດງານທຳ ແລະ ວຽກງານທີ່ມີຄຸນນະພາບ ລວມທັງເຮັດວຽກທີ່ບໍ່ໝັ້ນຄົງ ແລະ ຄ່າແຮງງານຕ່ຳ. ປັດໄຈຕ່າງໆແມ່ນກ່ຽວພັນກັບຄວາມດ້ອຍໂອກາດໃນການສຶກສາເຊັ່ນ: ຄວາມທຸກຍາກ, ບົດບາດ ຍິງ-ຊາຍ ແລະ ການຂາດຄວາມສາມາດ ເຊິ່ງປັດໄຈດັ່ງກ່າວແມ່ນພົວພັນກັບຄວາມດ້ອຍໂອກາດໃນຕະຫຼາດແຮງງານ. ສິ່ງດັ່ງກ່າວທີ່ເກີດຂຶ້ນບໍ່ແມ່ນຄວາມບັງເອີນ ແຕ່ແມ່ນຜົນຂອງການປະສົມປະສານລະຫວ່າງຄວາມບໍ່ເທົ່າທຽມໃນການພັດທະນາທັກສະ, ມາດຕະຖານສັງຄົມ ແລະ ການແບ່ງແຍກຂອງຕະຫຼາດແຮງງານພາໃຫ້ເກີດຜົນຮັບດັ່ງກ່າວ.

ຊາວໜຸ່ມບາງຄົນໂດຍສະເພາະໃນປະເທດຮັ່ງມີປະສົມກັບໄພຫວ່າງງານໄລຍະຍາວຫຼັງຈາກຮຽນຈົບ.ໃນປີ 2011 ທົ່ວໂລກມີຊາວໜຸ່ມຫວ່າງງານປະມານ 13 % - 75 ລ້ານຄົນເປັນຊາວໜຸ່ມ, ເຊິ່ງຖືວ່າເກືອບ 4 ລ້ານຄົນ ຫຼາຍກວ່າກ່ອນເກີດວິກິດການທາງດ້ານເສດຖະກິດໃນປີ 2007. ອັດຕາການຫວ່າງງານສະເລ່ຍຂອງຄົນໜຸ່ມມີສູງເຖິງ 2 ຫາ 3 ເທົ່າຫຼາຍກວ່າຜູ້ໃຫຍ່.ໃນປະເທດອີຢິບ ອັດຕາຫວ່າງງານຂອງຄົນໜຸ່ມມີເຖິງ 6 ເທົ່າ, 2.5 ເທົ່າໃນ ອາຟຣິກາໃຕ້ ແລະ 4 ເທົ່າໃນປະເທດ ອີຕາລີ.

ມີ 29 ລ້ານອາຊີບໃນ 2011 ເຊິ່ງໜ້ອຍກວ່າກ່ອນວິກິດການທາງເສດຖະກິດ

ການຄາດຄະເນຄວາມເປັນໄປໄດ້ວ່າຄົນທີ່ໜຸ່ມຈະມີໂອກາດຫວ່າງງານຫຼາຍກວ່າຄົນມີອາຍຸສູງ ຍ້ອນວ່າເຂົາເຈົ້າລໍຖ້າທີ່ຈະກ້າວຂຶ້ນຂັ້ນໄດຂັ້ນທຳອິດ, ສຳລັບຊາວໜຸ່ມສ່ວນໃຫຍ່ ໃນຫຼາຍປະເທດ ການກົດກັນໄປສູ່ການຫາອາຊີບທີ່ດີແມ່ນເກືອບວ່າບໍ່ສາມາດຜ່ານຂ້າມໄປໄດ້.ໃນກາງຊຸມປີ 2000 ເຖິງແມ່ນວ່າກ່ອນໜ້າການເກີດວິກິດການທາງດ້ານເສດຖະກິດໃນປະເທດ ອີຕາລີ 17% ຂອງປະຊາກອນອາຍຸ 15 ຫາ 29 ປີ ຫວ່າງງານເປັນເວລາ 5 ປີ ຫຼັງຈາກຈົບການສຶກສາ.

ນັບຕັ້ງແຕ່ເກີດວິກິດການທາງດ້ານເສດຖະກິດ ໂອກາດສຳລັບຄົນໜຸ່ມແມ່ນມີຫຼຸດໜ້ອຍຖອຍລົງ, ໂດຍສະເພາະ ຜູ້ທີ່ມີລະດັບການສຶກສາທີ່ຕ່ຳກວ່າ ໄດ້ຮັບຜົນກະທົບ.ໃນປີ 2011 ທົ່ວໂລກ ມີການສ້າງງານໄດ້ 29 ລ້ານອາຊີບ ໜ້ອຍກວ່າກ່ອນເກີດການວິກິດການທາງດ້ານເສດຖະກິດ. ຕົວຢ່າງ: ໃນປະເທດສະເປນ ອັດຕາການຫວ່າງງານສູງຂຶ້ນຢ່າງຫຼວງຫຼາຍໃນລະຫວ່າງປີ 2007 ຫາ 2009 ໂດຍສະເພາະເກີດຂຶ້ນກັບຜູ້ທີ່ຮຽນບໍ່ຈົບຊັ້ນມັດທະຍົມສຶກສາ.

ນັບຕັ້ງແຕ່ເກີດວິກິດການທາງດ້ານເສດຖະກິດ ໂອກາດສຳລັບຄົນໜຸ່ມແມ່ນມີຫຼຸດໜ້ອຍຖອຍລົງ, ໂດຍສະເພາະ ຜູ້ທີ່ມີລະດັບການສຶກສາທີ່ຕ່ຳກວ່າ ໄດ້ຮັບຜົນກະທົບ.ໃນປີ 2011 ທົ່ວໂລກ ມີການສ້າງງານໄດ້ 29 ລ້ານອາຊີບ ໜ້ອຍກວ່າກ່ອນເກີດການວິກິດການທາງດ້ານເສດຖະກິດ. ຕົວຢ່າງ: ໃນປະເທດສະເປນ ອັດຕາການຫວ່າງງານສູງຂຶ້ນຢ່າງຫຼວງຫຼາຍໃນລະຫວ່າງປີ 2007 ຫາ 2009 ໂດຍສະເພາະເກີດຂຶ້ນກັບຜູ້ທີ່ຮຽນບໍ່ຈົບຊັ້ນມັດທະຍົມສຶກສາ. ປະຊາກອນຜູ້ທີ່ບໍ່ໄດ້ຮຽນ ຫຼື ບໍ່ມີວຽກເຮັດງານທຳ ແລະ ຜູ້ທີ່ກຳລັງຊອກວຽກເຮັດສ່ວນຫຼາຍຖືກຈັດ"ເປັນຄົນຢູ່ລ້າໆ" ເຖິງແມ່ນວ່າການຫວ່າງງານຂອງເຂົາເຈົ້າສະທ້ອນອອກຢູ່ໃນຕະຫຼາດແຮງງານຫຼາຍກວ່າຄວາມກະຕືລືລົ້ນຂອງເຂົາເຈົ້າກໍ່ຕາມ. ຖ້າຫາກວ່າມີຄວາມຮູ້ສຶກຂາດກຳລັງໃຈໃນການຊອກວຽກເຮັດເຂົ້າມານຳແລ້ວ, ອັດຕາການຫວ່າງງານຂອງຄົນໜຸ່ມອາດຈະເພີ່ມຂຶ້ນຢ່າງຫຼວງຫຼາຍຍົກຕົວຢ່າງ 2 ເທົ່າໃນປະເທດຄາເມຣູນ.

ຜູ້ຍິງສ່ວນໃຫຍ່ຈະຖືກຈັດເປັນຜູ້ທີ່ຢູ່ລ້າໆ. ຊ່ອງຫວ່າງລະຫວ່າງເພດນັ້ນກໍຈະແຕກຕ່າງກັນໄປໃນໝູ່ຊາວໜຸ່ມຜູ້ທີ່ປະລະຈາກລະບົບການສຶກສາຫຼັງຈາກຮຽນຈົບ ໂຮງຮຽນປະຖົມເທົ່ານັ້ນ. ໃນປະເທດຈໍແດນມີຍິງໜຸ່ມຫຼາຍກວ່າ 80% ທີ່ມີລະດັບການສຶກສາພຽງແຕ່ຊັ້ນປະຖົມສຶກສາທີ່ບໍ່ໄດ້ຫ້າວຫັນຊອກວຽກເຮັດ ຖ້າທຽບໃສ່ຊາຍໜຸ່ມມີພຽງ 20% ເທົ່ານັ້ນ.

ຍິງໜຸ່ມ ສ່ວນໃຫຍ່ຈະເຮັດວຽກງານຫຼາຍຊົ່ວໂມງໃນຄອບຄົວ ແລະ ເຮັດວຽກນອກລະບົບ ເຊິ່ງຜູ້ກຳນົດນະໂຍບາຍມັກເບິ່ງບໍ່ຄ່ອຍເຫັນ. ການວິເຄາະຂອງບົດລາຍງານສະບັບນີ້ແມ່ນອີງໃສ່ການສຳຫຼວດກຳລັງແຮງງານຫຼ້າສຸດໃນ 9 ປະເທດ ເຊິ່ງໄດ້ພົບວ່າ ມີຍິງໜຸ່ມຫຼາຍກວ່າເພດຊາຍທີ່ຖືກຈັດໃນຈຳພວກທີ່ບໍ່ຫ້າວຫັນຢູ່ໃນ 9 ປະເທດນັ້ນ ແລະ ຈະມີຫຼາຍຢູ່ເລື້ອຍໆ. ນອກຈາກນີ້ກໍ່ມີຜູ້ຍິງໜ້ອຍກວ່າຜູ້ຊາຍໃນການຊອກວຽກເຮັດ ເນື່ອງຈາກວ່າ ສ່ວນໃຫຍ່ການຈັດແບ່ງວຽກພາຍໃນຄອບຄົວບໍ່ເທົ່າທຽມກັນ ແລະ ການແບ່ງແຍກໃນການບັນຈຸພະນັກງານ.

ຜູ້ຍິງຜູ້ທີ່ຊອກວຽກເຮັດສ່ວນຫຼາຍ ຈະໄດ້ຮັບຄ່າແຮງງານໜ້ອຍກວ່າເພດຊາຍໃນປະເທດອິນເດຍ ແລະ ປາກິດສະຖານ ໂດຍສະເລ່ຍແລ້ວຜູ້ຊາຍມີລາຍຮັບຫຼາຍກວ່າເພດຍິງເຖິງ 60% ຊ່ອງຫວ່າງຂອງຄ່າແຮງງານແມ່ນກວ້າງທີ່ສຸດສຳລັບຜູ້ທີ່ມີລະດັບການຮູ້ໜັງສື ແລະ ການຄຳນວນຕ່ຳ. ແຕ່ການສຶກສາສາມາດສ້າງຄວາມປ່ຽນແປງອັນໃຫຍ່ຫຼວງຕໍ່ກັບລາຍຮັບຂອງເພດຍິງ.ໃນປະເທດ ປາກິດສະຖານຜູ້ຍິງມີລະດັບການຮຽນຮູ້ໜັງສືສູງ ມີລາຍຮັບຫຼາຍກວ່າຜູ້ຍິງຜູ້ທີ່ບໍ່ມີທັກສະການຮຽນຮູ້ໜັງສືເຖິງ 95% ແຕ່ໃນຂະນະດຽວກັນກໍ່ມີຄວາມແຕກຕ່າງໃນໝູ່ເພດຊາຍພຽງແຕ່ 33% ເທົ່ານັ້ນ.

ຊາວໜຸ່ມຜູ້ທີ່ພິການຈະພົບຄວາມຫຍຸ້ງຍາກໃນການເຂົ້າເຖິງການສຶກສາ ແລະ ການປະກອບອາຊີບ. ໃນປະເທດເຄນຢາ ມີຊາວໜຸ່ມພິການຈຳນວນໜ້ອຍເທົ່ານັ້ນທີ່ຮຽນກາຍລະດັບປະຖົມສຶກສາ. ເຂົາເຈົ້າປະເຊີນໜ້າກັບອຸປະສັກໃນການຊອກວຽກເຮັດເນື່ອງຈາກວ່າລະດັບການສຶກສາຂອງເຂົາເຈົ້າຕ່ຳ, ຄວາມສາມາດມີໜ້ອຍ ຫຼື ບໍ່ສາມາດປັບຕົວເຂົ້າກັບບ່ອນເຮັດວຽກໄດ້ ແລະ ຄວາມຄາດຫວັງຈາກຄອບຄົວ ແລະ ນາຍຈ້າງກໍ່ມີໜ້ອຍ.

ຊາວໜຸ່ມຫຼາຍຄົນບໍ່ມີອາຊີບທີ່ສະດວກສະບາຍເຫຼືອໄວ້ໃຫ້ ແລະ ຈຳຕ້ອງຮັບເຮັດວຽກທີ່ມີຄຸນນະພາບຕ່ຳເຊິ່ງບໍ່ໝັ້ນຄົງ, ຄ່າແຮງງານຖືກ ແລະ ຕ້ອງໄດ້ເຮັດວຽກຫຼາຍຊົ່ວໂມງ. ສຳລັບບາງຄົນສິ່ງດັ່ງກ່າວ

ອາດຈະເປັນບັນໄດໄຕ່ເຕົ້າໄປສູ່ອາຊີບທີ່ໝັ້ນຄົງ ແລະ ປະສົບຜົນສຳເລັດ. ແຕ່ສຳລັບບາງຄົນວຽກດັ່ງກ່າວອາດເປັນກັບດັກອັນຫຍຸ້ງຍາກ ທີ່ຈະຫຼີກໜີອອກໄດ້.

ໃນທົ່ວໂລກ ມີຊາວໜຸ່ມປະມານ 152 ລ້ານຄົນ ເຊິ່ງກວມເອົາ 28% ຂອງກຳມະກອນໜຸ່ມທັງໝົດ ທີ່ມີລາຍຮັບຕ່ຳກວ່າ 1.25 ໂດລາຕໍ່ມື້. ໃນຫຼາຍປະເທດເຊັ່ນ: ເບີກີນາຟາໂຊ, ໂຄລຳເບຍ, ເອທິໂອເປຍ ແລະ ອູການດາ ການເຮັດວຽກຕ່ຳກວ່າມາດຕະຖານຄວາມທຸກຍາກ ແມ່ນເປັນປະກົດການແຜ່ລາມຫຼາຍກວ່າການບໍ່ໄດ້ເຮັດວຽກເລີຍ.

ຊາວໜຸ່ມຂ້ອນຂ້າງຈະໄດ້ຄ່າແຮງງານຕ່ຳກວ່າຜູ້ໃຫຍ່.ໃນປະເທດ ອີວກາດູກູ, ເບີກີນາຟາໂຊ ໂດຍສະເລ່ຍແລ້ວຜູ້ໃຫຍ່ທີ່ມີອາຍຸແກ່ມີລາຍຮັບຫຼາຍກວ່າຜູ້ທີ່ມີອາຍຸອ່ອນ ເຖິງ 2.5 ເທື່ອ. ໃນຂະນະທີ່ຊາວໜຸ່ມຄາດຫວັງວ່າຄ່າແຮງງານຂອງເຂົາເຈົ້າສູງຂຶ້ນເມື່ອເຂົາເຈົ້າແກ່ຕົວຂຶ້ນ. ການມີລາຍຮັບຕ່ຳກວ່າເງິນເດືອນຂັ້ນຕ່ຳສຸດເຮັດໃຫ້ເຂົາເຈົ້າບໍ່ມີເງິນພໍໃນການຈ່າຍສຳລັບຄວາມຕ້ອງການປະຈຳວັນຂອງຕົນ.

ໃນປະເທດທີ່ມີລາຍຮັບຕ່ຳ ຄົນໜຸ່ມທີ່ມີການສຶກສາໜ້ອຍບໍ່ສາມາດລໍຖ້າວຽກທີ່ຖືກກັບຕົນ, ເຊິ່ງເຂົາເຈົ້າເປັນຜູ້ທີ່ມີຄວາມສ່ຽງສູງທີ່ສຸດທີ່ຈະໄດ້ຮັບຄ່າຈ້າງແຮງງານຕ່ຳ.ໃນຂະນະດຽວກັນກັບບັນຫາດັ່ງກ່າວນີ້ສ່ວນໜຶ່ງອາດເປັນຍ້ອນລະດັບການສຶກສາຕ່ຳ ເຊິ່ງເປັນອຸປະສັກກີດຂວາງໃນການຊອກວຽກທີ່ມີຄ່າຈ້າງແຮງງານດີ, ເຊິ່ງຈະເຫັນວ່າລະດັບການສຶກສາຕ່ຳເປັນເຫດຜົນຕົ້ນຕໍທີ່ພົບເຫັນເລື້ອຍໆໃນຊາວໜຸ່ມທີ່ໄດ້ຮັບຄ່າຈ້າງແຮງງານຕ່ຳ. ຕົວຢ່າງ: ໃນປະເທດກຳປູເຈຍ 91% ຂອງຊາວໜຸ່ມຜູ້ທີ່ບໍ່ມີການສຶກສາຈະໄດ້ຄ່າຈ້າງເຮັດວຽກຕ່ຳກວ່າເສັ້ນຂີດຄວາມທຸກຍາກ ຖ້າປຽບທຽບໃສ່ຜູ້ທີ່ຈົບມັດທະຍົມສຶກສາຈະມີໜ້ອຍກວ່າ 67%.

ຊາວໜຸ່ມທີ່ອາໄສຢູ່ເຂດຊົນນະບົດໃນບັນດາປະເທດທີ່ທຸກຍາກສ່ວນໃຫຍ່ຈະອອກໂຮງຮຽນກ່ອນກຳນົດ ແລະ ເຮັດວຽກທີ່ມີຄ່າແຮງງານຕ່ຳຫຼາຍກວ່າຈະຫວ່າງງານ. ຕົວຢ່າງ: ໃນເຂດຊົນນະບົດຂອງປະເທດຄາເມຣູນ ອັດຕາການຫວ່າງງານປະມານມີພຽງ 1%. ຂະແໜງກະສິກຳໄດ້ສ້າງອາຊີບໃຫ້ແກ່ຊາວໜຸ່ມຈຳນວນຫຼວງຫຼາຍໃຫ້ຜູ້ທີ່ມີລະດັບການສຶກສາຕ່ຳ, ແຕ່ຫຼາຍຄົນໄດ້ຮັບຄ່າຈ້າງແຮງງານຕ່ຳ. 2/3 ຂອງຊາວໜຸ່ມໃນເຂດຊົນນະບົດທີ່ບໍ່ມີການສຶກສາ ເຮັດວຽກທີ່ໄດ້ຄ່າຈ້າງຕ່ຳກວ່າ 1.25 ໂດລາຕໍ່ມື້, ສຳລັບແມ່ຍິງທີ່ຢູ່ເຂດຊົນນະບົດ ທີ່ບໍ່ມີການສຶກສາຍິ່ງມີສະພາບທີ່ຮ້າຍແຮງທີ່ສຸດ.

ຜົນກະທົບຂອງການບັນລຸຂັ້ນມັດທະຍົມສຶກສາມີຜົນຕໍ່ກັບຄວາມສາມາດຂອງຊາວໜຸ່ມ ໃນການຊອກວຽກເຮັດທີ່ມີລາຍຮັບພຽງພໍແມ່ນແຕກຕ່າງໄປຕາມເພດ.ໃນປະເທດເນປານຊາຍໜຸ່ມຜູ້ທີ່ຮຽນບໍ່ຈົບຂັ້ນມັດທະຍົມສຶກສາ ມີແນວໂນ້ມວ່າຈະໄດ້ຮັບຄ່າຈ້າງດີກວ່າຍິງໜຸ່ມຜູ້ທີ່ຮຽນຈົບຂັ້ນມັດທະຍົມສຶກສາ. ສະພາບດັ່ງກ່າວສົ່ງຜົນໃຫ້ຫຼາຍກວ່າ 40% ຂອງຊາຍໜຸ່ມ ແລະ ໜ້ອຍກວ່າ 30% ຂອງຍິງໜຸ່ມ ມີລາຍຮັບສູງກວ່າເສັ້ນມາດຕະຖານຄວາມທຸກຍາກ.

## *ການລົງທຶນໃສ່ການພັດທະນາທັກສະ/ສີມືແຮງງານ ເພື່ອຄວາມສົມບູນພູນສຸກ*

> *ຍ້ອນຂາດການສຶກສາ ດັ່ງນັ້ນພວກເຮົາຈຶ່ງຫາວຽກບໍ່ໄດ້ ແລະ ບໍ່ສາມາດປັບປຸງຊີວິດຕົນເອງໃຫ້ດີຂຶ້ນເຊິ່ງຖືວ່າບໍ່ມີການພັດທະນາ ເລີຍສຳລັບພວກເຮົາ.*
>
> --ຊາຍໜຸ່ມ ຈາກປະເທດອິນເດຍ

ການພັດທະນາທັກສະ/ສີມືແຮງງານ ເປັນບັນຫາສຳຄັນໃນການຫຼຸດຜ່ອນການຫວ່າງງານ, ຄວາມບໍ່ເທົ່າທຽມກັນ ແລະ ຄວາມທຸກຍາກ, ແລະ ສົ່ງເສີມຄວາມເຕີບໂຕທາງດ້ານເສດຖະກິດ.ນອກຈາກນີ້ ການພັດທະນາທັກສະຍັງເປັນການລົງທຶນທີ່ສະຫຼຽວສະຫຼາດ - ທຸກ 1 ໂດລາ ທີ່ໃຊ້ຈ່າຍເຂົ້າໃນການສຶກສາ ຈະກໍ່ໃຫ້ເກີດການຂະຫຍາຍຕົວທາງດ້ານເສດຖະກິດເທົ່າກັບ 10-15 ໂດລາ. ຖ້າຫາກວ່າປະຊາກອນທີ່ມີອາຍຸ 15 ປີ ຫຼາຍກວ່າ 75% ໃນຈຳນວນ 46 ປະເທດທີ່ທຸກທີ່ສຸດໃນໂລກສາມາດບັນລຸລະດັບມາດຕະຖານຕ່ຳສຸດຂອງ OECD ດ້ານຄະນິດສາດ, ເສດຖະກິດ ອາດຈະຂະຫຍາຍຕົວເຖິງ 2.1% ຈາກເສັ້ນພື້ນຖານ (baseline) ແລະ ປະຊາກອນ 104 ລ້ານ ອາດສາມາດຫຼຸດພົ້ນອອກຈາກຄວາມທຸກຍາກຢ່າງຮຸນແຮງ.

ສາທາລະນະລັດເກົາຫຼີ ເປັນປະເທດທີ່ເລີ່ມຈາກການເປັນປະເທດ ທີ່ທຸກຍາກຈົນກາຍມາເປັນປະເທດທີ່ຮັ່ງມີພາຍໃນ 30 ປີ ສ່ວນໜຶ່ງເປັນຍ້ອນການສຸມໃສ່ ແລະ ການວາງແຜນການພັດທະນາດ້ານທັກສະ/ສີມືແຮງງານ. ລັດຖະບານ ໄດ້ຍົກລະດັບດ້ານທັກສະໃຫ້ພົນລະເມືອງທັງໝົດໂດຍການບັນລຸຂັ້ນປະຖົມຢ່າງທົ່ວເຖິງ, ຕໍ່ຈາກນັ້ນກໍ່ບັນລຸຂັ້ນມັດທະຍົມສຶກສາ. ຫຼັງຈາກນັ້ນກໍ່ສຸມໃສ່ການສະໜັບສະໜູນດ້ານອຸດສາຫະກຳໂດຍສະໜອງການຝຶກອົບຮົມດ້ານສີມືແຮງງານ.ສະຫຼຸບແລ້ວລັດຖະບານມີບົດບາດສຳຄັນໃນການສະໜອງທັກສະ/ສີມືແຮງງານ ໃຫ້ຖືກຕ້ອງຕາມຄວາມຕ້ອງການ.

ຫຼາຍກວ່າ 1 ສ່ວນ 4 ຂອງກຳມະກອນໜຸ່ມທັງໝົດ ມີລາຍຮັບໜ້ອຍກວ່າ 1.25 ໂດລາຕໍ່ມື້

ຫຼັງຈາກຫຼາຍທົດສະວັດທີ່ ຕົກຕ່ຳ ຫຼື ບໍ່ມີການຂະຫຍາຍຕົວໃນບັນດາເຂດອະນຸພາກພື້ນຊາຮາຣາອາຟຣິກາໄດ້ພົບກັບການຂະຫຍາຍຕົວດ້ານເສດຖະກິດຢ່າງແຂງແຮງໃນຊຸມປີ 2000. ຫຼາຍກວ່າ 1 ສ່ວນ 3 ຂອງບັນດາປະເທດໃນຂົງເຂດນີ້ໄດ້ບັນລຸອັດຕາການຂະຫຍາຍຕົວຕ່ຳສຸດ 6% ແລະ ບາງປະເທດຫວັງວ່າກາຍເປັນປະເທດທີ່ມີລາຍຮັບປານກາງໃນເຄິ່ງເວລາທຳອິດຂອງສັດຕະວັດທີ 21. ປະສົບການຈາກສາທາລະນະລັດເກົາຫຼີ ແລະ "ເສືອ"ອາຊີຕາເວັນອອກອື່ນໆ (East Asian tigers) ຊີ້ໃຫ້ເຫັນວ່າມີການຂະຫຍາຍຕົວທາງດ້ານຄວາມໝັ້ນຄົງທາງດ້ານການຂະຫຍາຍຕົວໃນເຂດອະນຸພາກພື້ນຊາຮາຣາອາຟຣິກາຈະອີງຕາມນະໂຍບາຍເສດຖະກິດທີ່ເໝາະສົມໂດຍປະສານສົມທົບກັບການລົງທຶນຂອງລັດຖະບານໃນການສຶກສາ ແລະ ການຝຶກອົບຮົມດ້ານທັກສະ/ສີມືແຮງງານ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານ.


© Mikkel Ostergaard/PANOS

*ລັດຖະບານຫຼາຍປະເທດ ບໍ່ໄດ້ເອົາໃຈໃສ່ການພັດທະນາທັກສະ/ສີມືແຮງງານ ແລະ ຜູ້ດ້ອຍໂອກາດກໍ່ເປັນຜູ້ສູນເສຍຫຼາຍກວ່າໝູ່*

ເຖິງແມ່ນວ່າຄຸນຄ່າຂອງການລົງທຶນໃສ່ການພັດທະນາທັກສະ/ສີມືແຮງງານ ຈະສະແດງໃຫ້ເຫັນຫຼັກຖານຢ່າງຈະແຈ້ງກໍ່ຕາມ ແຕ່ມັນບໍ່ໄດ້ຮັບການເອົາໃຈໃສ່ຢ່າງເປັນບຸລິມະສິດຕາມຈຸດດີທີ່ໄດ້ກ່າວມາຂ້າງເທິງ. ຕາມການວິເຄາະໃນ 46 ປະເທດ ທີ່ມີຈຳນວນປະຊາກອນໜຸ່ມຢ່າງຫຼວງຫຼາຍ ລາຍງານໃຫ້ຮູ້ວ່າ ບັນດາປະເທດເຫຼົ່ານັ້ນ ສ່ວນໃຫຍ່ເປັນປະເທດທີ່ມີລາຍຮັບຕໍ່າ ແລະ ເປັນປະເທດທີ່ມີລາຍຮັບຕໍ່າກວ່າລະດັບປານກາງເຊິ່ງມີພຽງແຕ່ກາຍເຄິ່ງໜຶ່ງຂອງບັນດາປະເທດເຫຼົ່ານັ້ນມີເອກະສານນະໂຍບາຍທີ່ສຸມໃສ່ການພັດທະນາທັກສະ/ສີມືແຮງງານ ຫຼື ຈະເປັນຍຸດທະສາດ ອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ຫຼື ມີຍຸດທະສາດການພັດທະນາທັກສະ/ສີມືແຮງງານຢ່າງກວ້າງຂວາງ.

ໃນບ່ອນທີ່ມີແຜນການພັດທະນາທັກສະ/ສີມືແຮງງານ ແຕ່ຊໍ້າພັດດຳເນີນໄປແບບກະແຈກກະຈາຍ, ຂາດການປະສານສົມທົບ ແລະ ບໍ່ພຽງພໍກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ບູລິມະສິດຂອງການພັດທະນາປະເທດ. ຄວາມຮັບຜິດຊອບໃນການພັດທະນາທັກສະຖືກແຍກກັນລະຫວ່າງອົງກອນຕ່າງໆ ແລະ ຍັງຂາດນໍ້າໃຈຄວາມຮັບຜິດຊອບ.

ຄາດວ່າ ຕ້ອງໃຊ້ງົບປະມານ 8 ຕື້ໂດລາ ສຳລັບຊາວໜຸ່ມເພື່ອເຂົ້າຮຽນໃນຊັ້ນມັດທະຍົມຕົ້ນ

ການຂາດຍຸດທະສາດໃນການວາງແຜນສຳລັບການພັດທະນາທັກສະ/ສີມືແຮງງານເຊິ່ງລວມທັງການກຳນົດຄາດໝາຍສຳລັບການເຂົ້າເຖິງຜູ້ດ້ອຍໂອກາດສະແດງໃຫ້ເຫັນການເບິ່ງເຫັນບັນຫາໃນໄລຍະສັ້ນຂອງການພັດທະນາຍຸດທະສາດຫຼາຍຢ່າງ. ໃນຈຳນວນ 46 ປະເທດ ທີ່ໄດ້ທົບທວນສຳລັບບົດລາຍງານນີ້ ສະແດງໃຫ້ເຫັນວ່າມີພຽງແຕ່ບາງປະເທດໜ້ອຍກວ່າເຄິ່ງໜຶ່ງໄດ້ຊີ້ໃຫ້ເຫັນເຖິງການພັດທະນາທັກສະ/ສີມືແຮງງານຂອງຊາວໜຸ່ມໃນຂະແໜງການແບບອັດທະຍາໄສ, ແຕ່ກໍ່ມີບາງປະເທດຈຳນວນໜ້ອຍໜຶ່ງທີ່ເຫັນໄດ້ຄວາມຈຳເປັນ ແລະ ພະຍາຍາມແກ້ໄຂບັນຫາດັ່ງກ່າວ.

ຕົວຢ່າງ ປະເທດເອທິໂອເປຍ ພວມພັດທະນາທັກສະ/ສີມືແຮງງານອັນສຳຄັນຕາມຄວາມມຸ້ງຫວັງຂອງປະເທດ ແລະ ໄດ້ເນັ້ນໜັກໃສ່ຍຸດທະສາດແຫ່ງການຈະເລີນເຕີບໂຕໂດຍຫວັງວ່າຈະສູ້ຊົນໃຫ້ປະເທດບັນລຸການກ້າວຂຶ້ນໄປເປັນປະເທດທີ່ມີລາຍຮັບປານກາງພາຍໃນປີ 2025. ປະເທດເອທິໂອເປຍຍັງຫວັງຈະບັນລຸການສຶກສາຊັ້ນມັດທະຍົມໃຫ້ໄດ້ຢ່າງທົ່ວເຖິງພາຍໃນປີ 2020 ແຕ່ໃນຂະນະດຽວກັນ ກໍຈະສຸມໃສ່ການພັດທະນາທັກສະ/ສີມືແຮງງານໃນຂະແໜງກະສິກຳ ແລະ ອຸດສາຫະກຳ. ຄຽງຄູ່ກັນນີ້ກໍຈະເລັ່ງໃສ່ການເພີ່ມປະສິດທິຜົນຂອງການຜະລິດຂັ້ນຈຸລະພາກ ແລະ ທຸລະກິດຂະໜາດນ້ອຍ ບ່ອນທີ່ຊາວໜຸ່ມດ້ອຍໂອກາດປະກອບອາຊີບ.

ຕາມການວິເຄາະ ເຫັນວ່າມີພຽງແຕ່ 1 ສ່ວນ 4 ຂອງຍຸດທະສາດການພັດທະນາປະເທດທີ່ຊອກຫາຊ່ອງທາງ ໃນການນຳເອົາຊາວໜຸ່ມຜູ້ທີ່ອອກໂຮງຮຽນປະຖົມ ເຂົ້າມາຮັບການສຶກສາ ຫຼື ຝຶກອົບຮົມ. ຕົວຢ່າງ ປະເທດຊີຣາລອນ ໄດ້ສ້າງຍຸດທະສາດທີ່ແນໃສ່ການປະກອບອາຊີບໃຫ້ແກ່ຊາວໜຸ່ມ 15 ຫາ 19 ປີ ປະມານ 57% ປະລະການຮຽນກ່ອນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ຍຸດທະສາດດັ່ງກ່າວນີ້ບໍ່ໄດ້ເອົາໃຈໃສ່ຢ່າງພຽງພໍຕໍ່ຊາວໜຸ່ມຜູ້ທີ່ຂາດທັກສະ/ສີມືແຮງງານຂັ້ນພື້ນຖານ. ສະນັ້ນ ເຂົາເຈົ້າຕ້ອງການແຜນງານການສຶກສາທີ່ໃຫ້ໂອກາດທີ່ສອງແກ່ເຂົາເຈົ້າ.

ຊາວໜຸ່ມສ່ວນຫຼາຍບໍ່ຄ່ອຍມີໂອກາດໄດ້ປະກອບສ່ວນໃນການພັດທະນານະໂຍບາຍ ແຕ່ການຮັບຟັງຄຳຄິດຄຳເຫັນຂອງເຂົາເຈົ້າແມ່ນມີຄວາມສຳຄັນ. ຊາວໜຸ່ມທີ່ມີອາຍຸ 15 ຫາ 24 ປີ ກວມເອົາເກືອບ 1 ສ່ວນ 6 ຂອງປະຊາກອນໂລກ ແລະ ຖືວ່າເປັນພາກສ່ວນໜຶ່ງຂອງສັງຄົມທີ່ມີພະລັງແຮງທີ່ສຸດ ແລະ ທັງເປັນຜູ້ທີ່ມີຄວາມສ່ຽງຫຼາຍທີ່ສຸດ ແລະ ມີອຳນາດໜ້ອຍທີ່ສຸດ. ພວກເຂົາມີຄວາມເຂົ້າໃຈເລິກເຊິ່ງກວ່າຜູ້ກຳນົດນະໂຍບາຍຍ້ອນເຂົາເຈົ້າໄດ້ປະເຊີນກັບຄວາມເປັນຈິງຂອງຊີວິດຕົນເອງ ລວມທັງປະສົບການທາງດ້ານການສຶກສາ ແລະ ການຝຶກອົບຮົມ ແລະ ສິ່ງທ້າທ້າຍໃນການຊອກວຽກເຮັດງານທຳ. ເຖິງແມ່ນວ່າບາງບ່ອນໄດ້ໃຫ້ໂອກາດແກ່ຊາວໜຸ່ມໃຫ້ມີສ່ວນຮ່ວມແຕ່ຄຳຄິດເຫັນຂອງຜູ້ດ້ອຍໂອກາດບໍ່ຄ່ອຍຖືກຍົກມາລາຍງານໃຫ້ຮູ້. ການປຶກສາຫາລືກັບຊາວໜຸ່ມສ່ວນຫຼາຍຈະຖືກຄອບງຳໂດຍຊາວໜຸ່ມຜູ້ທີ່ມີການສຶກສາ ແລະ ມາຈາກເຂດຕົວເມືອງແຕ່ໃນຂະນະດຽວກັນຄຳຄິດເຫັນຂອງຊາວໜຸ່ມຜູ້ທີ່ທຸກຍາກສ່ວນໃຫຍ່ບໍ່ໄດ້ຮັບການພິຈາລະນາ.

*ສະໜັບສະໜູນທາງດ້ານການເງິນເພື່ອນຳເອົາການພັດທະນາທັກສະ/ສີມືແຮງງານໃຫ້ແກ່ຊາວໜຸ່ມດ້ອຍໂອກາດ*

ຄວາມຈຳເປັນອັນຮີບດ່ວນສຳລັບຜູ້ໃຫ້ທຶນຄືການໃຫ້ຄຳໝັ້ນສັນຍາແກ່ການພັດທະນາທັກສະ/ສີມືແຮງງານດ້ວຍ 3 ວິທີຄື: ໂດຍການຊຸກຍູ້ສະໜັບສະໜູນແຜນງານການພັດທະນາປະເທດເພື່ອຮັບປະກັນໃຫ້ຊາວໜຸ່ມທຸກຄົນສືບຕໍ່ຮຽນໃນໂຮງຮຽນຢ່າງຕໍ່າສຸດຈົນຮອດຊັ້ນມັດທະຍົມຕອນຕົ້ນ, ໂດຍການສະໜັບສະໜູນແຜນງານການໃຫ້ໂອກາດທີ່ສອງແຕ່ຊາວໜຸ່ມຜູ້ທີ່ບໍ່ມີໂອກາດໄດ້ຮຽນທັກສະພື້ນຖານຂອງການຮຽນຮູ້ໜັງສື ແລະ ການຄຳນວນ ແລະ ໂດຍການສະໜອງການຝຶກອົບຮົມໃຫ້ຊາວໜຸ່ມຜູ້ດ້ອຍໂອກາດເພື່ອປັບປຸງໂອກາດໃຫ້ເຂົາເຈົ້າໄດ້ຮັບຄ່າແຮງງານທີ່ດີຂຶ້ນ.

ວິທີການທີ່ກ່າວມາເທິງນີ້ ມັນຮຽກຮ້ອງໃຫ້ມີການສະໜອງງົບປະມານຢ່າງມີເປົ້າໝາຍທີ່ດີ ແລະ ຫຼາຍຂຶ້ນກວ່າເກົ່າ. ພຽງແຕ່ໃຫ້ຊາວໜຸ່ມທຸກຄົນລົງທະບຽນເຂົ້າຮຽນຮອດຊັ້ນມັດທະຍົມຕອນຕົ້ນ ກໍ່ຈະໃຊ້ງົບປະມານ 8 ຕື້ ໂດລາຕໍ່ປີ ເພີ່ມຈາກ 16 ຕື້ໂດລາ ທີ່ຕ້ອງການເພື່ອໃຫ້ບັນລຸການສຶກສາຂັ້ນພື້ນຖານຢ່າງທົ່ວເຖິງພາຍໃນປີ 2015. ຜູ້ທີ່ຕ້ອງການການສຶກສາ ແລະ ການຝຶກອົບຮົມວິຊາຊີບແມ່ນມາຈາກຄອບຄົວທຸກຍາກ, ດັ່ງນັ້ນເຂົາເຈົ້າບໍ່ມີຄວາມສາມາດຈ່າຍຄ່າຮຽນດ້ວຍຕົນເອງໄດ້.ລັດຖະບານໂດຍມີການສະໜັບສະໜູນຈາກຜູ້ໃຫ້ທຶນຈຳເປັນຕ້ອງເພີ່ມການສະໜັບສະໜູນເພື່ອຮັບປະກັນວ່າຊາວໜຸ່ມທຸກຄົນໄດ້ມີໂອກາດຮຽນຮູ້ທັກສະພື້ນຖານເຊິ່ງອາດຈະຮຽນຜ່ານລະບົບໂຮງຮຽນ ຫຼື ການສຶກສາທີ່ໃຫ້ໂອກາດທີສອງແກ່ເຂົາເຈົ້າ.

ເຖິງແມ່ນວ່າຈະບໍ່ສາມາດຄາດຄະເນໄດ້ກ່ອນລ່ວງໜ້າ ແຕ່ກໍເຫັນວ່າມີຫຼາຍຢ່າງຈຳເປັນຕ້ອງໄດ້ປະຕິບັດ ເຊິ່ງຫຼາຍປະເທດທີ່ທຸກຍາກກໍໄດ້ເພີ່ມການສະໜັບສະໜູນໃຫ້ແກ່ການສຶກສາໃນໄລຍະ ທົດສະວັດທີ່ຜ່ານມາ. ແຕ່ວ່າການສະໜັບສະໜູນງົບປະມານເຂົ້າໃສ່ການສຶກສາຊັ້ນມັດທະຍົມ ຍັງມີຈຳກັດ ສ່ວນໃຫຍ່ຈະໃຫ້ຄວາມສຳຄັນແກ່ການສຶກສາຊັ້ນສູງ. ພ້ອມດຽວກັນນີ້ ຜູ້ໃຫ້ທຶນບາງພາກສ່ວນ ໃຫ້ການສະໜັບສະໜູນຢ່າງຫຼວງຫຼາຍໃນການພັດທະນາທັກສະຂັ້ນພື້ນຖານ. ຕາມການຄິດໄລ່ໃນປີທີ່ຜ່ານມາ ຜູ້ໃຫ້ທຶນທຸກພາກສ່ວນໃຫ້ທຶນໃນການພັດທະນາທັກສະເຖິງ 3 ຕື້ໂດລາ ເຊິ່ງປະມານ 40% ເຂົ້າໃນການສຶກສາສາຍສາມັນ ຊັ້ນມັດທະຍົມ ແລະ ການອົບຮົມວິຊາຊີບໃນລະບົບໂຮງຮຽນ.

ບາງຜູ້ໃຫ້ທຶນກໍ່ໄດ້ຈັດລຽງບູລິມະສິດໃນການສະໜອງງົບປະມານເຂົ້າໃນຂົງເຂດທີ່ກ່າວມາຂ້າງເທິງ ໃນນັ້ນປະເທດເຢຍລະມັນເປັນຜູ້ລົງທຶນຫຼາຍທີ່ສຸດ, ຮອງລົງມາແມ່ນທະນາຄານໂລກ, ປະເທດຝຣັ່ງ ແລະ ຍີ່ປຸ່ນ. ຜູ້ໃຫ້ທຶນຂະໜາດນ້ອຍບາງປະເທດເຊັ່ນ: ປະເທດລຸກຊຳບວກ ແລະ ສະວິດເຊີແລນ ກໍໄດ້ສຸມໃສ່ການໃຫ້ການສະໜັບສະໜູນເຂົ້າໃນການພັດທະນາທັກສະ/ສີມືແຮງງານ. ຫຼາຍປະເທດກໍໄດ້ໃຫ້ການຊ່ວຍເຫຼືອໃນດ້ານນີ້ເຊັ່ນ: ປະເທດຍີ່ປຸ່ນ ກໍໄດ້ສືບຕໍ່ຊ່ວຍເຫຼືອ

ໂດຍອີງໃສ່ປະສົບການຂອງຕົນເອງທີ່ເຄີຍປະສົບຜົນສຳເລັດໃນການຂະຫຍາຍຕົວຢ່າງໜ້າປະທັບໃຈໂດຍຜ່ານການພັດທະນາທັກສະ/ສີມືແຮງງານ. ງົບປະມານຂອງປະເທດຝຣັ່ງ ສ່ວນໃຫຍ່ບໍ່ສາມາດເຂົ້າເຖິງປະເທດທີ່ກຳລັງພັດທະນາແຕ່ ຫຼາຍກວ່າ 60% ຂອງງົບປະມານຈຳນວນ 248 ລ້ານໂດລາ ທີ່ປະເທດຝຣັ່ງໄດ້ເບີກຈ່າຍສຳລັບການສຶກສາສາຍສາມັນຊັ້ນມັດທະຍົມ ແລະ ອົບຮົມວິຊາຊີບໃນປີ 2010 ໄດ້ນຳໃຊ້ເຂົ້າຊ່ວຍເຫຼືອບັນດາປະເທດຕ່າງໆທີ່ນອນຢູ່ໃນອານານິຄົມຂອງປະເທດຝຣັ່ງ. ມີສອງທາງເລືອກທີ່ເປັນໄປໄດ້ໃນການເພີ່ມງົບປະມານຈາກຂ້າງນອກສຳລັບການສຶກສາຄື: ຈັດສັນງົບປະມານປະຈຸບັນໃນການໃຫ້ທຶນການສຶກສາທີ່ເອົາຊາວໜຸ່ມຈາກປະເທດກຳລັງພັດທະນາໄດ້ສຶກສາລະດັບມະຫາວິທະຍາໄລໃນປະເທດທີ່ພັດທະນາແລ້ວຄືນໃໝ່, ແລະ ຊຸກຍູ້ຜູ້ໃຫ້ທຶນທີ່ປະສົບຜົນສຳເລັດດ້ານນີ້ເຂົ້າຮ່ວມໃນການພັດທະນາທັກສະ/ສີມືແຮງງານໃຫ້ມີປະສິດທິຜົນຂຶ້ນກວ່າເກົ່າໂດຍຈະສຸມໃສ່ຊາວໜຸ່ມ ດ້ອຍໂອກາດໃຫ້ຫຼາຍຂຶ້ນ.

ໃນຂະນະທີ່ການຊ່ວຍເຫຼືອເຂົ້າໃນການສຶກສາຊັ້ນສູງໃນບາງກໍລະນີສາມາດມີບົດບາດສຳຄັນໃນການສະໜັບສະໜູນການພັດທະນາຂີດຄວາມສາມາດ, ແຕ່ໜ້າເສຍດາຍທີ່ການຊ່ວຍເຫຼືອດັ່ງກ່າວບໍ່ໄປຮອດປະເທດກຳລັງພັດທະນາ. ໃນປີ2012 ເປັນປີທຳອິດທີ OECD-DAC ຮຽກຮ້ອງໃຫ້ຜູ້ໃຫ້ທຶນລາຍງານສ່ວນຕ່າງໆຂອງທຶນການຊ່ວຍເຫຼືອທີ່ໄດ້ເບີກຈ່າຍເຂົ້າໃນການສຶກສາຫຼັງຊັ້ນມັດທະຍົມສຶກສາ ທີ່ຈັດສັນເຂົ້າເປັນທຶນການສຶກສາ ແລະ ຄ່າໃຊ້ຈ່າຍສຳລັບນັກສຶກສາທີ່ຮຽນໃນສະຖາບັນການສຶກສາຂອງປະເທດຜູ້ໃຫ້ທຶນ (ຄ່າໃຊ້ຈ່າຍທີ່ເກີດຂຶ້ນຈາກສະຖາບັນການສຶກສາຂອງປະເທດຜູ້ໃຫ້ທຶນເມື່ອເວລາເຂົາເຈົ້າຮັບນັກສຶກສາຈາກປະເທດກຳລັງພັດທະນາ). ຕາມການວິເຄາະ ມີປະມານ 3 ສ່ວນ 4 ຂອງທຶນການຊ່ວຍເຫຼືອໂດຍກົງຖືກນຳໃຊ້ເຂົ້າໃນການສຶກສາຫຼັງຊັ້ນມັດທະຍົມເຊິ່ງທຽບເທົ່າກັບປະມານ 3.1 ຕື້ໂດລາທີ່ເບີກຈ່າຍໃນປີ 2010 ເຊິ່ງນອນຢູ່ໃນສາລະບານການເບີກຈ່າຍໃນຂົງເຂດນີ້ (ຮູບທີ 13).

ໃນປີ 2010 ເກືອບ 40% ຂອງທຶນການຊ່ວຍເຫຼືອໂດຍກົງຂອງປະເທດຍີ່ປຸ່ນໄດ້ນຳໃຊ້ທີ່ເປັນທຶນການສຶກສາສຳລັບນັກສຶກສາທີ່ໄປຮຽນໃນປະເທດຍີ່ປຸ່ນ. ສຳລັບຄ່າໃຊ້ຈ່າຍຂອງນັກສຶກສາຈາກປະເທດເນປານ ຜູ້ໜຶ່ງທີ່ໄດ້ຮັບທຶນການສຶກສາໄປຮຽນຕໍ່ໃນປະເທດຍີ່ປຸ່ນມີມູນຄ່າເທົ່າກັນກັບຄ່າໃຊ້ຈ່າຍສຳລັບຊາວໜຸ່ມ 229 ຄົນ ເພື່ອຮຽນໃນຊັ້ນມັດທະຍົມໃນປະເທດເນປານ. ປະເທດເຢຍລະມັນໄດ້ໃຫ້ທຶນການຊ່ວຍເຫຼືອດ້ານທຶນການສຶກສາ ແລະ ຄ່າໃຊ້ຈ່າຍສຳລັບນັກສຶກສາທີ່ຮຽນໃນສະຖາບັນການສຶກສາມີມູນຄ່າເກືອບເທົ່າ 11 ທົບຂອງທຶນຊ່ວຍເຫຼືອໂດຍກົງ ເຂົ້າໃນການສຶກສາສາຍສາມັນຊັ້ນມັດທະຍົມ ແລະ ການອົບຮົມວິຊາຊີບໃນປີ 2010. ປະເທດຝຣັ່ງໄດ້ໃຫ້ທຶນຊ່ວຍເຫຼືອທີ່ເປັນທຶນການສຶກສາ ແລະ ຄ່າໃຊ້ຈ່າຍສຳລັບນັກສຶກສາທີ່ຮຽນໃນສະຖາບັນການສຶກສາມີມູນຄ່າ 4 ທົບຂອງທຶນຊ່ວຍເຫຼືອໂດຍກົງເຂົ້າໃນການສຶກສາຊັ້ນມັດທະຍົມ ແລະ ການອົບຮົມວິຊາຊີບໃນປີ 2010. ຖ້າວ່າງົບປະມານສ່ວນໜຶ່ງຂອງ 3.1 ຕື້ໂດລາ ທີ່ປັດຈຸບັນຜູ້ໃຫ້ທຶນໄດ້ໃຊ້ຈ່າຍສຳລັບນັກສຶກສາທີ່ໄປຮຽນຕໍ່ໃນປະເທດຂອງເຂົາເຈົ້າໄດ້ກັບຄືນໄປສູ່ປະເທດກຳລັງພັດທະນາມັນອາດຈະຊ່ວຍແກ້ບັນຫາຊ່ອງຫວ່າງອັນໃຫຍ່ຫຼວງໃນການພັດທະນາທັກ ສະຂັ້ນພື້ນຖານໄດ້.

ຜູ້ໃຫ້ທຶນທີ່ມີບົດຮຽນ ແລະ ປະສົບຜົນສຳເລັດໃນຂົງເຂດນີ້ເຊັ່ນ: ປະເທດບຣາຊິນ, ຈີນ ແລະ ອິນເດຍ ອາດຈະເປັນຜູ້ໃຫ້ທຶນທີ່ສຳຄັນທີ່ໃຫ້ການຊ່ວຍເຫຼືອທາງດ້ານການພັດທະນາທັກສະ/ສີມືແຮງງານ. ເພື່ອຢາກເຮັດໄດ້ຄືແນວນັ້ນເຂົາເຈົ້າຈຳເປັນຕ້ອງໄດ້ສຸມໃສ່ການສຶກສາ

ຮູບທີ 13: ສຳລັບຜູ້ໃຫ້ທຶນບາງພາກສ່ວນ, ທຶນການຊ່ວຍເຫຼືອຈຳນວນຫຼວງຫຼາຍບໍ່ເຄີຍອອກຈາກປະເທດຂອງຕົນ.

4 ອັນດັບສູງສຸດຂອງຜູ້ໃຫ້ທຶນ ທີ່ໃຫ້ການຊ່ວຍເຫຼືອໂດຍກົງເຂົ້າໃນການສຶກສາທີ່ເປັນທຶນການສຶກສາ ແລະ ຄ່າໃຊ້ຈ່າຍສຳລັບນັກສຶກສາທີ່ຮຽນໃນສະຖາບັນການສຶກສາຂອງປະເທດຜູ້ໃຫ້ທຶນ, ປີ 2010.




*ໝາຍເຫດ*: ແຜນວາດນີ້ສະແດງໃຫ້ເຫັນທຶນການຊ່ວຍເຫຼືອໂດຍກົງເຂົ້າໃນການສຶກສາເຊິ່ງບໍ່ໄດ້ກວມເອົາທຶນຊ່ວຍເຫຼືອເຂົ້າໃນການສຶກສາຈາກງົບປະມານສະໜັບສະໜູນທົ່ວໄປ.
*ແຫຼ່ງຂໍ້ມູນ*: OECD-DAC (2012).

ໃຫ້ຫຼາຍຂຶ້ນ ແລະ ກຳນົດເປົ້າໝາຍຂອງການນຳໃຊ້ງົບປະມານໃຫ້ແກ່ຊາວໜຸ່ມດ້ອຍໂອກາດ ໂດຍອີງໃສ່ບົດຮຽນຈາກປະສົບການຂອງຕົນເອງໃນການເຊື່ອມໂຍງການລົງທຶນເຂົ້າໃນການພັດທະນາທັກສະ/ສີມືແຮງງານກັບການປະຕິຮູບຕະຫຼາດແຮງງານ ແລະ ການຫຼຸດຜ່ອນຄວາມທຸກຍາກ ມີພຽງແຕ່ 2% ຂອງການປະກອບສ່ວນຂອງປະເທດອິນເດຍ ເຊິ່ງປະມານ 950 ລ້ານໂດລາສຳລັບການສຶກສາໃນແຕ່ລະປີເພື່ອຊ່ວຍບັນດາປະເທດກຳລັງພັດທະນາ ນັບແຕ່ປີ 2008 ຫາ 2010 . ແຕ່ຜູ້ໃຫ້ທຶນພາກສ່ວນອື່ນສ່ວນໃຫຍ່ຈະສຸມໃສ່ການສຶກສາໃນລະດັບສູງທີ່ຊາວໜຸ່ມດ້ອຍໂອກາດບໍ່ສາມາດເຂົ້າເຖິງໄດ້.

ໃນປີ 2010, 3 ສ່ວນ 4 ຂອງການຊ່ວຍເຫລືອສຳ ລັບຫຼັງຊັ້ນມັດທະຍົມສຶກສາ ໄດ້ຖືກໃຊ້ຈ່າຍໄປເປັນທຶນການສຶກສາ ແລະ ຄ່າໃຊ້ຈ່າຍຂອງນັກຮຽນ

ນອກຈາກນີ້ ພາກເອກະຊົນກໍຈຳເປັນຕ້ອງໄດ້ລົງທຶນເຂົ້າໃນການຝຶກອົບຮົມວິຊາຊີບຫຼາຍຂຶ້ນ ເນື່ອງຈາກວ່າພາກເອກະຊົນ ໄດ້ຮັບຜົນປະໂຫຍດຈາກກຳລັງແຮງງານທີ່ມີທັກສະ/ສີມືແຮງງານທີ່ສາມາດເພີ່ມປະສິດທິຜົນຂອງການຜະລິດ ແລະ ສາມາດແຂ່ງຂັນໄດ້, ເຊັ່ນ: ຂະແໜງອຸດສາຫະກຳໃນປະເທດເຢຍລະມັນ ແລະ ສະວິດເຊີແລນໄດ້ໃຫ້ຊາວໜຸ່ມຝຶກອົບຮົມວິຊາຊີບໃນໂຮງງານ. ມູນນິທິເອກະຊົນກໍ່ໃຫ້ການສະໜັບສະໜູນໂຄງການຕ່າງໆທີ່ເປັນນະວັດຕະກຳໃໝ່. ສິ່ງທີ່ພົ້ນເດັ່ນຄື ມູນນິທິມາດສະເຕີຄາດ ໄດ້ໃຫ້ທຶນສຳລັບສະໜັບສະໜູນແຜນງານທີ່ຊ່ວຍເຫຼືອ ຊາວໜຸ່ມໄດ້ຝຶກທັກສະອັນຈຳເປັນໃຫ້ແກ່ເຂົາເຈົ້າເພື່ອໃຫ້ສາມາດຊອກວຽກເຮັດງານທຳໄດ້ໄດ້. ແຕ່ງົບປະມານທີ່ມູນນິທິຕ່າງໆສະໜອງໃຫ້ໃນປັດຈຸບັນຍັງມີໜ້ອຍ ຖ້າທຽບໃສ່ລະດັບຄວາມທ້າທາຍ.

ຈາກງົບປະມານທີ່ໄດ້ມາຈາກຫຼາຍແຫຼ່ງທຶນລັດຖະບານຕ້ອງມີການປະສານສົມທົບກັນເພື່ອການນຳໃຊ້ທຶນທີ່ໄດ້ຮັບມາໃຫ້ເກີດຜົນປະໂຫຍດສູງສຸດ ແລະ ຮັບປະກັນໃຫ້ຊາວໜຸ່ມດ້ອຍໂອກາດໄດ້ຮັບການເອົາໃຈໃສ່. ວິທີການໜຶ່ງທີ່ຈະປັບປຸງການໃຊ້ຈ່າຍທຶນຊ່ວຍເຫຼືອໃຫ້ມີປະສິດທິພາບຍິ່ງຂຶ້ນຄື ການບໍລິຫານຄຸ້ມຄອງງົບປະມານການຝຶກອົບຮົມທີ່ດີ ທີ່ມີທຶນກອງກາງມາຈາກແຫຼ່ງທີ່ແຕກຕ່າງກັນເຊັ່ນ: ຄ່າເກັບພາສີ ແລະ ລາຍໄດ້ເພີ່ມຂອງບໍລິສັດ ແລະ ງົບປະມານ

ຈາກການຊ່ວຍເຫຼືອຂອງຜູ້ໃຫ້ທຶນ - ເພື່ອໃຫ້ລັດຖະບານຄຸ້ມຄອງ-ບໍລິຫານ ແລະ ເບີກຈ່າຍ ໃນຂະນະທີ່ພາກສ່ວນເອກະຊົນເປັນຜູ້ສະໜອງການຝຶກອົບຮົມ. ງົບປະມານການວ່າຈ້າງງານຂອງປະເທດເນປານ ຖືວ່າເປັນຕົວຢ່າງໜຶ່ງທີ່ເປັນວິທີການທີ່ຈະຂະຫຍາຍການຝຶກອົບຮົມໄປສູ່ຊາວໜຸ່ມດ້ອຍໂອກາດ.ບ່ອນໃດທີ່ມີການຄຸ້ມຄອງບໍລິຫານງົບປະມານໃນການຝຶກອົບຮົມໄດ້ດີກໍ່ຈະມີຜົນໄດ້ຮັບທີ່ດີ. ປະເທດຕູເນເຊຍ ໄດ້ສ້າງຕ້ອງກອງທຶນເພື່ອການຝຶກອົບຮົມໃນປີ 1999 ແລະ ສາມາດບັນລຸການພັດທະນາທັກສະ/ສີມືແຮງງານໄດ້ຫຼາຍກວ່າ1 ສ່ວນ 4 ຂອງຊາວໜຸ່ມທີ່ຫວ່າງງານ.

ໄວໜຸ່ມ 71 ລ້ານຄົນ ໃນເກນອາຍຸເຂົ້າຮຽນຊັ້ນມັດທະຍົມຕົ້ນບໍ່ໄດ້ ເຂົ້າຮຽນ

## ການສຶກສາຊັ້ນມັດທະຍົມ: ເປັນການປູທາງໄປສູ່ການມີວຽກເຮັດງານທຳ

ການໃຫ້ການສຶກສາຊັ້ນມັດທະຍົມ ເປັນວິທີການທີ່ສຳຄັນສຳລັບຊາວໜຸ່ມ ໃນການຮຽນຮູ້ທັກສະທີ່ເພີ່ມໂອກາດໃຫ້ເຂົາເຈົ້າໃນການຊອກວຽກເຮັດງານທຳ. ການສຶກສາຊັ້ນມັດທະຍົມທີ່ມີຄຸນນະພາບສູງຈະສາມາດສະໜອງຄວາມອາດສາມາດ ແລະ ຄວາມສົນໃຈອັນກວ້າງຂວາງທີ່ສຸດ ແລະ ສ້າງພື້ນຖານຄວາມຮູ້ອັນສຳຄັນ ເຊິ່ງບໍ່ພຽງແຕ່ສ້າງເສັ້ນທາງເດີນໃຫ້ແກ່ຊາວໜຸ່ມອອກສູ່ໂລກກວ້າງ ແຕ່ຍັງສະໜອງກຳລັງແຮງງານທີ່ມີການສຶກສາທີ່ຈຳເປັນໃຫ້ແກ່ປະເທດ ໃຫ້ສາມາດແຂ່ງຂັນກັບຍຸກເຕັກໂນໂລຊີ ໃນໂລກປັດຈຸບັນ.

ໃນທົ່ວໂລກມີໄວໜຸ່ມ 71 ລ້ານຄົນທີ່ບໍ່ໄດ້ເຂົ້າຮຽນ. ເຖິງແມ່ນວ່າໃນບັນດາປະເທດທີ່ມີອັດຕາການເຂົ້າຮຽນສູງກໍ່ຕາມ ແຕ່ກໍ່ຍັງມີຜູ້ອອກໂຮງຮຽນໄວ (ຮູບທີ 14) ໂດຍສະເລ່ຍແລ້ວ ມີຊາວໜຸ່ມ 14% ໃນບັນດາປະເທດທີ່ເປັນສະມາຊິກສະຫະພາບເອີຣົບ ຮຽນບໍ່ຈົບຊັ້ນມັດທະຍົມສຶກສາຕອນຕົ້ນ. ໃນປະເທດສະເປນມີຊາວໜຸ່ມຫຼາຍຄົນທີ່ປະລະການຮຽນຊັ້ນມັດທະຍົມເຖິງ 1 ສ່ວນ 3 ຄົນ ທີ່ຮຽນບໍ່ຈົບມັດທະຍົມເປັນສາເຫດທີ່ໜ້າເປັນຫ່ວງເຮັດໃຫ້ເກີດວິກິດການເສດຖະກິດຢ່າງຮຸນແຮງ ແລະ ລະດັບການຫວ່າງງານໃນໝູ່ຊາວໜຸ່ມມີເຖິງ 51% ໃນເດືອນ 3 ປີ 2012. ຈາກເຫດການທີ່ເກີດຂື້ນເຮັດໃຫ້ຫຼາຍປະເທດຕ້ອງໄດ້ເອົາໃຈໃສ່ຕໍ່ບັນຫາດັ່ງກ່າວເພື່ອຮັບປະກັນໃຫ້ການສຶກສາຊັ້ນມັດທະຍົມສອດຄ່ອງກັບຄວາມຕ້ອງການຂອງອາຊີບ.

## ຫຼຸດຜ່ອນອຸປະສັກການສຶກສາຊັ້ນມັດທະຍົມ

> *ຂ້ອຍບໍ່ມີເງິນຊື້ປຶ້ມ ແລະ ເຄື່ອງແບບ.ສະພາບການເງິນຂອງຄອບຄົວທຸກຍາກ. ຂ້ອຍຕ້ອງໄດ້ຊ່ວຍສ້າງລາຍຮັບໃຫ້ແກ່ຄອບຄົວ ໂດຍການເຮັດວຽກເພື່ອໃຫ້ໄດ້ຄ່າແຮງງານແຕ່ລະວັນເພື່ອໃຫ້ຄອບຄົວໄດ້ຢູ່ລອດ. ສຳລັບຂ້ອຍການຫາເງິນເປັນສິ່ງສຳຄັນກວ່າການໄປໂຮງຮຽນ.*
>
> --ຊາຍໜຸ່ມ ຈາກປະເທດ ອິນເດຍ

ໃນປະເທດທຸກຍາກຫຼາຍປະເທດທີ່ຈຳເປັນຕ້ອງເພີ່ມການເຂົ້າຮຽນໃນຊັ້ນມັດທະຍົມສຶກສາ ຈາກລະດັບທີ່ຕ່ຳແຕ່ບັນຫາອັນຮີບດ່ວນຍັງຈະຕ້ອງສືບຕໍ່ຮັບປະກັນໃຫ້ເດັກຈົບຊັ້ນປະຖົມສຶກສາ. ໃນປະເທດໄນເຈີ ມີພຽງແຕ່ເດັກ 1 ສ່ວນ 5 ເທົ່ານັ້ນໄດ້ເຂົ້າຮຽນໃນໂຮງຮຽນມັດທະຍົມຕອນຕົ້ນ ແລະ ອັດຕາເຂົ້າຮຽນຊັ້ນປະຖົມສຸດທີມີພຽງແຕ່ 62% ເທົ່ານັ້ນ.

ສຳລັບເດັກຜູ້ທີ່ຮຽນຈົບຊັ້ນປະຖົມສຶກສາ, ຄ່າໃຊ້ຈ່າຍສຳລັບການສຶກສາຊັ້ນມັດທະຍົມອາດຈະມີຈຳກັດ. ໂຮງຮຽນມັດທະຍົມສ່ວນໃຫຍ່ຕັ້ງຢູ່ໃນເຂດຕົວເມືອງເຊິ່ງໂອກາດເຂົ້າຮຽນຈຳກັດ ສຳລັບຜູ້ທີ່ມາຈາກຄອບຄົວທຸກຍາກໃນຊົນນະບົດຜູ້ທີ່ບໍ່ສາມາດຈ່າຍຄ່າເດີນທາງໄດ້. ອຸປະສັກທາງດ້ານວັດທະນະທຳ ແລະ ສັງຄົມ ເປັນສິ່ງກີດຂວາງບໍ່ໃຫ້ເດັກສືບຕໍ່ຮຽນຈົນເຂົາເຈົ້າກາຍເປັນໄວໜຸ່ມ.ລັດຖະບານຂອງຫຼາຍປະເທດຈຳເປັນຕ້ອງດຳເນີນການປະຕິຮູບເພື່ອແກ້ໄຂອຸປະສັກສະເພາະດັ່ງກ່າວ ແລະ ເພື່ອໃຫ້ຊາວໜຸ່ມສາມາດສ້າງຄວາມເຂັ້ມແຂງໃນການພັດທະນາທັກສະພື້ນຖານ.

ບາງປະເທດໃນເຂດອະນຸພາກພື້ນຊາຮາຣາອາຟຣິກາໄດ້ເພີ່ມການເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນໂດຍການເຊື່ອມຕໍ່ກັບການສຶກສາຊັ້ນປະຖົມ ແລະ ມັດທະຍົມຕອນຕົ້ນ. ຕົວຢ່າງ ໃນປະເທດຣູວັນດາໄດ້ນຳເອົາລະບົບການສຶກສາຂັ້ນພື້ນຖານ 9 ປີ ມານຳໃຊ້ ແລະ ຫຼຸດຄ່າຮຽນສຳລັບໂຮງຮຽນມັດທະຍົມຕອນຕົ້ນໃນປີ 2009 ເຊິ່ງວິທີການດັ່ງກ່າວ ໄດ້ເພີ່ມຈຳນວນນັກຮຽນຊັ້ນມັດທະຍົມຕອນຕົ້ນເຖິງ 25% ພາຍໃນໜຶ່ງປີ. ຄຽງຄູ່ກັນນີ້ ກໍ່ໄດ້ມີການອອກແບບຫຼັກສູດຄືນໃໝ່ໂດຍສຸມໃສ່ວິຊາຫຼັກ ສອງສາມວິຊາ ແລະ ນຳໃຊ້ລະບົບການວັດ ແລະ ປະເມີນຜົນແບບໃໝ່.

ຄ່າຮຽນບໍ່ວ່າຈະເປັນທາງການ ຫຼື ບໍ່ເປັນທາງການ, ມີຜົນກະທົບຕໍ່ຊາວໜຸ່ມຈາກຄອບຄົວທຸກຍາກບາງສ່ວນ ກໍ່ລ້ວນແຕ່ເປັນສິ່ງກີດຂວາງເຮັດໃຫ້ຊາວໜຸ່ມບໍ່ໄດ້ເຂົ້າຮຽນ ແລະ ບໍ່ໄດ້ສືບຕໍ່ການຮຽນຊັ້ນມັດທະຍົມ. ຖ້າຫາກວ່າມາດຕະການ ການກຳຈັດຄ່າຮຽນ ເຂົ້າບໍ່ເຖິງກຸ່ມຜູ້ດ້ອຍໂອກາດແລ້ວ ມາດຕະການດັ່ງກ່າວຈະຮັບໃຊ້ຜູ້ຮັ່ງມີ. ຕົວຢ່າງ ປະເທດເຄນຢາ ໄດ້ລົບລ້າງຄ່າຮຽນສຳລັບໂຮງຮຽນມັດທະຍົມເຊິ່ງໄດ້ເພີ່ມການເຂົ້າຮຽນຈາກ 1.2 ລ້ານຄົນໃນປີ 2007 ເຖິງ 1.4 ລ້ານຄົນ ໃນປີ 2008. ລັດຖະບານຫຼາຍປະເທດໄດ້ຊົດເຊີຍໃຫ້ໂຮງຮຽນໂດຍຄິດໄລ່ໃຫ້ 164 ໂດລາຕໍ່ນັກຮຽນໜຶ່ງຄົນຕໍ່ຄັ້ງເພື່ອເຂົ້າຮຽນຊັ້ນປະຖົມສຶກສາ. ເນື່ອງຈາກວ່າມີເດັກນ້ອຍທີ່ທຸກຍາກຈຳນວນໜ້ອຍສາມາດຮຽນຮອດຊັ້ນມັດທະຍົມ ດັ່ງນັ້ນເຂົາເຈົ້າສືບຕໍ່ຮຽນ ແລະ ໄດ້ຮັບຜົນປະໂຫຍດຈາກນະໂຍບາຍດັ່ງກ່າວ.

ອຸປະສັກໃນສ່ວນເລິກທາງດ້ານສັງຄົມ, ວັດທະນະທຳ ແລະ ເສດຖະກິດເຊັ່ນ: ການແຕ່ງງານໄວ ຍັງເປັນສິ່ງກີດຂວາງບໍ່ໃຫ້ຍິງໜຸ່ມສາມາດສືບຕໍ່ການສຶກສາຂອງເຂົາໄດ້. ການເປັນແມ່ແຕ່ອາຍຸຍັງນ້ອຍໄດ້ຕັດການສຶກສາໃຫ້ສັ້ນເຂົ້າສຳລັບຜູ້ຍິງຫຼາຍໆຄົນ ແລະ ເຂົາເຈົ້າໄດ້ປະສົບກັບອຸປະສັກຫຼາຍຢ່າງທີ່ສະກັດກັ້ນບໍ່ໃຫ້ເຂົາເຈົ້າກັບມາຮຽນໄດ້. ມີຜູ້ຍິງຫຼາຍກວ່າ 1 ສ່ວນ10 ຄົນໃນອາຍຸ 15 - 19 ປີ ຖືພາ ຫຼື ເປັນແມ່ໃນເຂດອະນຸພາກພື້ນຊາຮາຣາ ອາຟຣິກາ, ອາເມລິກາລາຕິນ ແລະ ອາຊີໃຕ້ ແລະ ສ່ວນໜຶ່ງ ໃນປະເທດບັງຄະລາເທດ, ລີເບເລຍ ແລະ ໂມຊຳບິກ ເພີ່ມຂຶ້ນເຖິງ 30% ຫຼື ຫຼາຍກວ່ານັ້ນ.

ເຖິງແມ່ນວ່າຫຼາຍປະເທດມີກົດໝາຍຮັບປະກັນໃຫ້ສິດທິແກ່ແມ່ທີ່ມີອາຍຸນ້ອຍ ໄດ້ຮັບການສຶກສາ ແຕ່ກໍ່ມີຫຼາຍຢ່າງຈຳເປັນຕ້ອງໄດ້ປະຕິບັດເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ເຂົາເຈົ້າເພື່ອໃຫ້ໄດ້ຮັບປະໂຫຍດຈາກສິດທິດັ່ງກ່າວ. ໃນປະເທດຈາໄມກາ ມີມູນນິທິໃຫ້ການສະໜັບສະໜູນເຊິ່ງລວມມີຄ່າອາຫານ ແລະ ຄ່າເດີນທາງເພື່ອຊ່ວຍໃຫ້ເດັກຍິງທີ່ຖືພາ ແລະ ແມ່ທີ່ອາຍຸຕ່ຳກວ່າ 16 ປີ ຜູ້ທີ່ທຸກຍາກໄດ້ກັບເຂົ້າໂຮງຮຽນຫຼັງຈາກເກີດລູກ. ແຜນງານຕ່າງໆໄດ້ເພີ່ມຂຶ້ນເພື່ອສ້າງຄວາມເປັນໄປໄດ້ສຳລັບແມ່ທີ່ມີອາຍຸນ້ອຍໃຫ້ສຳເລັດໂຮງຮຽນມັດທະຍົມຈາກ 20% ຫາ 32%.

### *ເຮັດໃຫ້ການສຶກສາຊັ້ນມັດທະຍົມສອດຄ່ອງກັບການປະກອບອາຊີບ*

ການສຶກສາຊັ້ນມັດທະຍົມຄວນເສີມຂະຫຍາຍຈາກທັກສະພື້ນຖານ ແລະ ສະໜອງໂອກາດ ອັນເທົ່າທຽມກັນໃຫ້ແກ່ຊາວໜຸ່ມທຸກຄົນເພື່ອໃຫ້ສາມາດພັດທະນາທັກສະເຊື່ອມຕໍ່ ແລະ ທັກສະເຕັກນິກວິຊາຊີບໃຫ້ສາມາດຊອກວຽກເຮັດງານທຳທີ່ດີ ຫຼື ໃຫ້ສາມາດຮຽນຕໍ່ໄດ້. ຫຼັກສູດທົ່ວໄປຂອງໂຮງຮຽນມັດທະຍົມຊ່ວຍໃຫ້ເດັກທຸກຄົນມີໂອກາດອັນເທົ່າທຽມກັນໃນການສ້າງຄວາມເຂັ້ມແຂງແກ່ທັກສະພື້ນຖານ. ເມື່ອ

ຮູບທີ 14: ຊາວໜຸ່ມບາງຄົນບໍ່ໄດ້ເຂົ້າຮຽນມັດທະຍົມ ແລະ ຫຼາຍຄົນກໍ່ຮຽນບໍ່ຈົບຊັ້ນມັດທະຍົມສຶກສາ

ອັດຕາເຂົ້າຮຽນສຸດທິ ຂອງຊັ້ນມັດທະຍົມຕອນຕົ້ນ ແລະ ຈຳນວນທີ່ເລື່ອນຊັ້ນຈາກຊັ້ນມັດທະຍົມຕົ້ນ ຫາ ມັດທະຍົມປາຍ ຂອງແຕ່ລະປະເທດໃນປີ 2010.




*ໝາຍເຫດ*: ອັດຕາການເລື່ອນຊັ້ນຮອດຊັ້ນມັດທະຍົມປາຍມີຕົວຊີ້ບອກທີ່ສະແດງໃຫ້ເຫັນເຖິງການເລື່ອນຊັ້ນແຕ່ມັດທະຍົມຕົ້ນຈົນຮອດມັດທະຍົມປາຍ. ອັດຕາສ່ວນດັ່ງກ່າວຖືກວັດໃນສັດສ່ວນການເຂົ້າຮຽນລວມລະຫວ່າງມັດທະຍົມປາຍຕໍ່ມັດທະຍົມຕົ້ນ ໃນລະບົບທີ່ດີທີ່ສຸດ, ກ່ອນທີ່ໄດ້ຮຽນມັດທະຍົມຕົ້ນທຸກຄົນໄດ້ຮຽນຕໍ່ມັດທະຍົມປາຍນັ້ນມີສັດສ່ວນຢູ່ທີ່ 1.ປະເທດຣີງດູຣັດ ມີອັດຕາການເຂົ້າຮຽນລວມຂອງຊັ້ນມັດທະຍົມຕົ້ນ 75% ແລະ ອັດຕາເຂົ້າຮຽນລວມຂອງຊັ້ນມັດທະຍົມປາຍ 71%. ອັດຕາການເລື່ອນຊັ້ນຄິດໄລ່ໄດ້ 95% ເຊິ່ງສະແດງໃຫ້ເຫັນວ່ານັກຮຽນທີ່ມີໂອກາດເຂົ້າຮຽນຊັ້ນມັດທະຍົມຕົ້ນສ່ວນໃຫຍ່ຈະສືບຕໍ່ຮຽນຈົນຮອດຊັ້ນມັດທະຍົມປາຍ. ໃນປະເທດອີຢີບ ອັດຕາການເຂົ້າຮຽນລວມຂອງຊັ້ນມັດທະຍົມຕົ້ນມີ 94%. ອັດຕາເຂົ້າຮຽນລວມຂອງຊັ້ນມັດທະຍົມປາຍທີ 51% ແລະ ອັດຕາການເລື່ອນຊັ້ນຂອງປະເທດອີຢີບຈາກຊັ້ນມັດທະຍົມຕົ້ນຮອດຊັ້ນມັດທະຍົມປາຍ ຄິດສະເລ່ຍໄດ້ປະມານ 0.54 (51/94). ອັດຕາສ່ວນດັ່ງກ່າວສະແດງໃຫ້ເຫັນວ່າຊາວໜຸ່ມເກືອບໝົດທຸກຄົນມີໂອກາດເຂົ້າຮຽນຊັ້ນມັດທະຍົມສຶກສາ ເຊິ່ງມີພຽງແຕ່ປະມານເຄິ່ງໜຶ່ງເທົ່ານັ້ນທີ່ສາມາດສືບຕໍ່ຮຽນຮອດຊັ້ນມັດທະຍົມປາຍ.
*ແຫຼ່ງຂໍ້ມູນ*: ເອກະສານຄັດຕິດ: ຕາຕະລາງສະຖິຕິ 7

ນັກຮຽນທີ່ມີອັດຕາສ່ຽງສູງໃນການປະລະການຮຽນໄດ້ຈັດເປັນກຸ່ມເຂົ້າກັນກັບຄວາມຄາດຫວັງຕ່ຳ ແລ້ວກໍ່ຈະເຮັດໃຫ້ຕົກຢູ່ໃນສະພາບແວດລ້ອມທີ່ບໍ່ມີແຮງຈູງໃຈໃນການຮຽນສູງ ແລະ ຜົນກະທົບຈາກໝູ່ເພື່ອນສ່ວນໃຫຍ່ກໍ່ຈະເຮັດໃຫ້ບໍ່ປະສົບຜົນສຳເລັດໃນການຮຽນ. ຍ້ອນເຫດຜົນດັ່ງກ່າວບາງປະເທດ ທີ່ມີລາຍຮັບຕ່ຳ ແລະ ປານກາງ ເຊັ່ນ: ປະເທດບອດສະລານາ, ການາ, ອາຟຣິກາໃຕ້ ແລະ ອູການດາ ໄດ້ພັດທະນາໂຄງສ້າງຫຼັກສູດທີ່ຄ້າຍຄືກັນ, ນຳໃຊ້ການວັດ ແລະ ປະເມີນຜົນ, ສື່ການຮຽນ-ການສອນ ແລະ ການຝຶກອົບຮົມຄູແບບໃໝ່.

ໃນຊັ້ນມັດທະຍົມປາຍຊາວໜຸ່ມຈຳເປັນຕ້ອງໄດ້ຮຽນທັກສະເຊື່ອມຕໍ່ທີ່ສາມາດຖ່າຍທອດຈາກໂຮງຮຽນໄປນຳໃຊ້ໃນວຽກງານຕົວຈິງໄດ້, ແລະ ທັກສະດ້ານເຕັກນິກ ແລະ ວິຊາຊີບສຳລັບສາຂາວິຊາສະເພາະລົງເລິກ ຫຼື ຂະແໜງການວຽກງານຕ່າງໆ. ໂດຍການປະສົມປະສານທັກສະທັງໝົດທີ່ກ່າວມານີ້ ຢ່າງເທົ່າທຽມກັນ ແລະ ອອກແບບທັກສະດັ່ງກ່າວໃຫ້ສອດຄ່ອງເໝາະສົມກັບຄວາມຕ້ອງການຂອງຕະຫຼາດແຮງງານທ້ອງຖິ່ນ ທັງເຮັດໃຫ້ຫຼັກສູດມີຄວາມດຸ່ນດ່ຽງທີ່ໃຫ້ປະໂຫຍດແກ່ໝົດທຸກພາກສ່ວນ.




ການຜັກດັນໃຫ້ນັກຮຽນອ່ອນເຂົ້າຮຽນໃນສາຍອາຊີວະສຶກສາ ແລະ ການຝຶກອົບຮົມວິຊາຊີບອາດເປັນການເຊື່ອມສານຄວາມບໍ່ເທົ່າທຽມກັນຂອງສັງຄົມ

ການຜັກດັນໃຫ້ນັກຮຽນອ່ອນເຂົ້າໂຮງຮຽນສາຍອາຊີວະສຶກສາ ແລະ ວິຊາຊີບ ອາດເຮັດໃຫ້ເກີດມີຄວາມບໍ່ສະເໝີພາບຂອງສັງຄົມ ແລະ ອາດສົ່ງຜົນໃຫ້ນາຍຈ້າງບໍ່ເຫັນຄວາມສຳຄັນຂອງການຮຽນໃນຂະແໜງນີ້. ໃນປີ 2009 PISA ໄດ້ດຳເນີນການສຳຫຼວດ 18 ປະເທດໃນຈຳນວນ 22 ປະເທດ ເຊິ່ງຜົນຂອງການສຳຫຼວດຊີ້ໃຫ້ເຫັນວ່າ: ກະແສນັກຮຽນທີ່ເຂົ້າຮຽນໃນໂຮງຮຽນວິຊາຊີບ ແມ່ນມີສະຖານະພາບທາງດ້ານເສດຖະກິດ - ສັງຄົມຕ່ຳ, ໃນນັ້ນມີ 4 ປະເທດທີ່ມີຊ່ອງຫວ່າງກວ້າງທີ່ສຸດ ລະຫວ່າງ ນັກຮຽນ ທີ່ຮຽນມັດທະຍົມສາຍສາມັນ ກັບ ນັກຮຽນທີ່ຮຽນອາຊີວະສຶກສາ ແລະ ວິຊາຊີບ ເຊິ່ງຂັດສ່ວນຂອງນັກຮຽນຈຳນວນດັ່ງກ່າວ ມາຈາກກຸ່ມດ້ອຍໂອກາດ ເຂົ້າມາຮຽນອາຊີວະສຶກສາ ແລະ ວິຊາຊີບຖືວ່າມີຈຳນວນຫຼາຍທີ່ສຸດ.

ປະສົບການຈາກປະເທດ OECD ຊີ້ໃຫ້ເຫັນວ່າມີການແນະແນວວິຊາຊີບຄວບຄູ່ກັບການຮຽນວິຊາທົ່ວໄປ ເຊິ່ງເຮັດໃຫ້ມີຄວາມສອດຄ່ອງກັບຕະຫຼາດແຮງງານຫຼາຍກວ່າເກົ່າແລະ ເຮັດໃຫ້ອັດຕາເຂົ້າຮຽນ ແລະ ອັດຕາຮຽນຈົບຊັ້ນສູງຂຶ້ນ.

ການສ້າງຫຼັກສູດທີ່ສາມາດປັບປ່ຽນໄດ້ໃນຊັ້ນມັດທະຍົມປາຍ ໂດຍໃຫ້ມີວິຊາເລືອກ ແລະ ສ້າງເງື່ອນໄຂໃຫ້ສາມາດຮຽນຕໍ່ໄດ້ອາດສ້າງປະໂຫຍດໃຫ້ແກ່ນັກຮຽນທຸກຄົນດັ່ງທີ່ເຫັນໄດ້ຈາກປະສົບການຂອງປະເທດສິງກະໂປ. ແຕ່ວິທີການທີ່ປະເທດສິງກະໂປນຳໃຊ້ ກໍຍັງມີອຸປະສັກຫຼາຍຢ່າງ ເນື່ອງຈາກວ່າປະເທດກຳລັງພັດທະນາ ຂາດເຂີນທາງດ້ານຊັບພະຍາກອນ, ສື່ການຮຽນ - ການສອນ ແລະ ຍັງຂາດຄູທີ່ມີວຸດທິໃນການດຳເນີນການສອນທີ່ຍືດຍຸ່ນ ແລະ ມີປະສິດທິຜົນ. ຫຼັງຈາກທີ່ປະເທດ ການາ ໄດ້ນຳສະເໜີຫຼັກສູດຊັ້ນມັດທະຍົມໃນຮູບແບບຕ່າງໆ ຈຳນວນຂອງຫຼັກສູດໄດ້ເພີ່ມຂຶ້ນເຖິງ 50% ແຕ່ຄ່າໃຊ້ຈ່າຍໃນການສອນຫຼັກສູດດັ່ງກ່າວໃນໂຮງຮຽນທີ່ຢູ່ເຂດຊົນນະບົດເພີ່ມຂຶ້ນຫຼາຍກວ່າ 20 ທົບຂອງໂຮງຮຽນທີ່ຢູ່ເຂດຕົວເມືອງ ແຕ່ຄຸນນະພາບຂອງການຮຽນ-ການສອນໃນເຂດຊົນນະບົດຍັງຕ່ຳຢູ່. ຖ້າຫາກວ່າບໍ່ສາມາດສ້າງ ແລະ ສະໜອງຄູສອນວິຊາເຕັກນິກວິຊາຊີບ ແລະ ແຈກຢາກຊັບພະຍາກອນຢ່າງພຽງພໍໄດ້, ສຸດທ້າຍ ນັກຮຽນທີ່ຢູ່ເຂດຊົນນະບົດກໍ່ຈະໄດ້ຮັບການຝຶກອົບຮົມທີ່ມີຄຸນນະພາບຕ່ຳ.

### *ສ້າງຄວາມເຂັ້ມແຂງໃນການເຊື່ອມໂຍງລະຫວ່າງປະສົບການໃນໂຮງຮຽນກັບບ່ອນເຮັດວຽກ*

*ວິທະຍາໄລ ແລະ ໂຮງຮຽນຄວນໃຫ້ນັກຮຽນໄດ້ຝຶກປະສົບການເຮັດວຽກຫຼາຍກວ່ານີ້ ເຊິ່ງບໍ່ແມ່ນຈັດໃຫ້ຮຽນແຕ່ມື້ດຽວແລ້ວໄດ້ປະສົບການເຮັດວຽກໜ້ອຍດຽວເທົ່ານັ້ນ; ຄວນໃຫ້ນັກຮຽນມີປະສົບການເຊັ່ນ: ອາດໃຊ້ເວລາຢູ່ໂຮງຮຽນ 2 ມື້ ແລະ ອີກ 3ມື້ ໄປຝຶກງານ ແລະ ຄວນໃຫ້ມີຄວາມດຸນດ່ຽງກັນ. ວິທີການດັ່ງກ່າວທີ່ເຈົ້າຮຽນໃນໂຮງຮຽນ ແມ່ນເຈົ້າຮຽນສິ່ງທີ່ເຈົ້າຕ້ອງການຮຽນຮູ້ ແລະ ເມື່ອເວລາເຈົ້າອອກໄປໃຊ້ເວລາຢູ່ບ່ອນເຮັດວຽກ ແມ່ນເຈົ້າພະຍາຍາມສະສົມປະສົບການ.*

--ຍິງໜຸ່ມຈາກ ສະຫະລາດຊະອານາຈັກ

ຜູ້ທີ່ຮຽນຈົບສ່ວນຫຼາຍມັກຈະຖືກກ່າວຫາວ່າເຂົາເຈົ້າບໍ່ມີຄວາມເໝາະສົມຕໍ່ອາຊີບ ເນື່ອງຈາກວ່າເຂົາເຈົ້າບໍ່ມີປະສົບການໃນການເຮັດວຽກ. ການເຊື່ອມໂຍງລະຫວ່າງຫຼັກສູດທີ່ຮຽນໃນໂຮງຮຽນ ກັບປະສົບການຢູ່ບ່ອນເຮັດວຽກໂດຍຜ່ານການຝຶກງານ ແລະ ການແກ້ໄຂບັນຫາຕົວຈິງ ແລະ ການຝຶກທັກສະ/ສີມືແຮງງານອັນສຳຄັນຢູ່ບ່ອນເຮັດວຽກ.ການຝຶກງານໄດ້ພິສູດໃຫ້ເຫັນວ່າເປັນວິທີການທີ່ປະສົບຜົນສຳເລັດໃນບາງກໍລະນີ. ຕົວຢ່າງ ຮູບແບບການຝຶກອົບຮົມແບບທະວິພາຄີຂອງ ເຢຍລະມັນໄດ້ນຳໃຊ້ຮູບການຝຶກອົບຮົມ ແມ່ນການປະສົມປະສານໂຄງສ້າງການຝຶກອົບຮົມໃນບໍລິສັດ ແລະ ການ

ຮຽນແບບບໍ່ເຕັມເວລາຢູ່ໂຮງຮຽນ. ວິທີການດັ່ງກ່າວໄດ້ຮັບຜົນດີໃນປະເທດເຢຍລະມັນ ຍ້ອນວ່າມີກົດລະບຽບ ແລະ ການຮ່ວມມືທີ່ເຂັ້ມງວດລະຫວ່າງ ລັດຖະບານ ກັບນາຍຈ້າງ ແລະ ລູກຈ້າງ.

ເນື່ອງຈາກວ່າການຝຶກອົບຮົມໃນໂຮງງານສ່ວນໃຫຍ່ນຳໄປສູ່ການມີວຽກເຮັດງານທຳ ດັ່ງນັ້ນການຝຶກໃນໂຮງຮຽນຍັງເປັນສິ່ງກະຕຸກຊຸກຍູ້ໃຫ້ຊາວໜຸ່ມສືບຕໍ່ຮຽນໃນໂຮງຮຽນ ແລະ ສຳເລັດການສຶກສາຂອງເຂົາເຈົ້າ. ໃນປະເທດຝຣັ່ງ ການຜ່ານການຝຶກໃນໂຮງງານໄດ້ເພີ່ມຄວາມເປັນໄປໄດ້ໃນການຖືກຈ້າງງານ 3 ປີ ຫຼັງຈາກຮຽນຈົບ.

ການຝຶກອົບຮົມໃນໂຮງງານ ອາດໃຫ້ປະໂຫຍດແກ່ຜູ້ດ້ອຍໂອກາດ ແຕ່ແຜນງານການຝຶກງານອາດເປັນການແບ່ງແຍກ. ໃນສະຫະລາດຊະອານາຈັກ ມີຊາວໜຸ່ມຄົນຜິວດຳ ແລະ ຊົນເຜົ່າສ່ວນໜ້ອຍ 32% ໄດ້ຮັບການຝຶກໃນໂຮງງານ ເມື່ອສົມທຽບໃສ່ຊາວໜຸ່ມຜິວຂາວມີເຖິງ 44% ຜູ້ຍິງມີໂອກາດໄດ້ຮັບການຝຶກງານໜ້ອຍກວ່າ ແລະ ຜູ້ຍິງມີໂອກາດໄດ້ຮັບການຝຶກໜ້ອຍກວ່າເພດຊາຍເຊິ່ງມີພຽງແຕ່ 21% ເທົ່າ. ການໃຫ້ຄຳປຶກສາໃນການປະກອບອາຊີບ ອາດສາມາດຊ່ວຍຊາວໜຸ່ມຜູ້ດ້ອຍໂອກາດໄດ້ຮັບການຝຶກງານ ແລະ ໃຊ້ເວລາໃນບ່ອນຝຶກໃນໂຮງງານຫຼາຍຂຶ້ນ ຫຼື ອາດຈະເຮັດໃຫ້ການກຽມພ້ອມຄວາມພ້ອມກ່ອນການປະກອບອາຊີບງ່າຍຂຶ້ນດັ່ງປະສົບການຂອງປະເທດຍີ່ປຸ່ນ.

ການຝຶກໃນໂຮງງານໃນລະບົບ ມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດໂດຍສະເພາະປະເທດທີ່ທຸກຍາກກວ່າ ແຕ່ກໍ່ສາມາດຈັດຕັ້ງປະຕິບັດໄດ້ພາຍໃຕ້ເງື່ອນໄຂທີ່ເໝາະສົມ. ປະເທດອີຢິບໄດ້ປັບຮູບແບບຂອງການຝຶກອົບຮົມຂອງປະເທດເຢຍລະມັນເພື່ອໃຫ້ແທດເໝາະກັບສະພາບປະເທດຂອງຕົນເອງໂດຍໃຫ້ສະມາຄົມທຸລະກິດມີບົດບາດສຳຄັນໃນການອຳນວຍຄວາມສະດວກສະຖານທີ່ຝຶກອົບຮົມ. 1 ສ່ວນ 3 ຂອງຜູ້ທີ່ຮຽນຈົບຈາກໂຄງການຫຼັກສູດດັ່ງກ່າວສາມາດຊອກວຽກໄດ້ທັນທີ ແລະ ປະມານ 40% ຮຽນຕໍ່. ແຕ່ລະບົບດັ່ງກ່າວຕ້ອງໄດ້ເອື້ອຍອີງໃສ່ຄວາມໄວ້ເນື້ອເຊື່ອໃຈອັນເລິກເຊິ່ງລະຫວ່າງລັດຖະບານ ແລະ ພາຍຫຼັງ ເຊິ່ງຖືວ່າບໍ່ເປັນເລື່ອງງ່າຍທີ່ພົບເຫັນໄດ້ໃນຫຼາຍປະເທດມີ່ມີລາຍຮັບຕ່ຳທີ່ມີຂະແໜງນອກລະບົບອັນໃຫຍ່ຫຼວງ.

### *ພັດທະນາທັກສະເຊື່ອມຕໍ່ສຳລັບໝົດທຸກຄົນ: ເປັນສິ່ງທີ່ປາດຖະໜາແຕ່ເປັນເປົ້າໝາຍທີ່ທ້າທາຍ*

ທັກສະ/ສີມືແຮງງານທີ່ຮຽນໃນໂຮງຮຽນ ຈຳເປັນຕ້ອງໄດ້ເສີມຂະຫຍາຍໃຫ້ກວ້າງຂວາງອອກກວ່າການຮຽນຮູ້ລາຍວິຊາ. ການນຳໃຊ້ຄວາມຮູ້ເຂົ້າໃນສະພາບວຽກງານຕົວຈິງ, ການວິເຄາະ ແລະ ການແກ້ໄຂບັນຫາ ແລະ ການສື່ສານຢ່າງມີປະສິດທິຜົນກັບເພື່ອນຮ່ວມງານເປັນສ່ວນປະກອບສຳຄັນຂອງການພັດທະນາທັກສະ/ສີມືແຮງງານທີ່ຊາວໜຸ່ມຕ້ອງການຖ້າວ່າເຂົາເຈົ້າຢາກມີອາຊີບທີ່ດີໃນຍຸກທີ່ເຕັກໂນໂລຊີເປັນສິ່ງຜັກດັນໃຫ້ແກ່ການເພີ່ມຂຶ້ນຂອງເສດຖະກິດໂລກ. ເມື່ອເຫັນໄດ້ຄືແນວນັ້ນ ບາງປະເທດກໍພະຍາຍາມມຸ້ງໝັ້ນໃນການນຳເອົາທັກສະ ການເຊື່ອມຕໍ່ເຂົ້າໃນຫຼັກສູດການຮຽນ-ການສອນ. ຕົວຢ່າງ ໃນປະເທດເດນມາກ, ນິວຊີແລນ ແລະ ຮົງກົງ (ຈີນ) ກໍ່ໄດ້ເອົາທັກສະການແກ້ບັນຫາເປັນສ່ວນປະກອບຕົ້ນຕໍຂອງຫຼັກສູດການຮຽນ-ການສອນ.

ການນຳໃຊ້ ໄອຊີທີ ເຂົ້າໃນການສຶກສາເປັນແຮງຜັກດັນໃນທົ່ວໂລກເຊິ່ງມັນບໍ່ພຽງແຕ່ປັບປຸງປະສົບການໃນການຮຽນໃຫ້ດີຂຶ້ນ ແລະ ຫຼຸດຜ່ອນການປະລະການຮຽນ ແຕ່ຍັງເປັນການກະກຽມຄວາມພ້ອມໃຫ້ແກ່ຊາວໜຸ່ມໃນການປະກອບອາຊີບ. ຄອມພິວເຕີ ອາດຈະເປັນສິ່ງທີ່ມີລາຄາສູງ ຫຼື ຍັງຂາດເຂີນ ສຳລັບໂຮງຮຽນບາງແຫ່ງ ໂດຍສະເພາະ ໃນບັນດາປະເທດທີ່ທຸກຍາກກວ່າ ແຕ່ວິທະຍຸ ແລະ ໂທລະສັບມືຖືໄດ້ມີການນຳໃຊ້ຢ່າງແຜ່ຫຼາຍໃນເຂດຫ່າງໄກສອກຫຼີກ. ຕົວຢ່າງ ການນຳໃຊ້ວິທະຍຸເປັນສື່ໃນການສອນ ດັ່ງທີ່ໄດ້ນຳໃຊ້ໃນປະເທດ ຮົງດູຣັດ ແລະ ພາກໃຕ້ຂອງຊູດານເປັນການໃຫ້ໂອກາດໃນການປັບປຸງການຮຽນຂອງກຸ່ມດ້ອຍໂອກາດໃຫ້ດີຂຶ້ນ ແລະ ຄ່າໃຊ້ຈ່າຍບໍ່ສູງ, ວິທີການດັ່ງກ່າວໄດ້ຊຸກຍູ້ການຮໍ່າຮຽນໃຫ້ສູງຂຶ້ນເຖິງ 20%.

### *ການໃຫ້ທາງເລືອກສຳລັບຜູ້ທີ່ອອກໂຮງຮຽນໄວ*

ຊາວໜຸ່ມຈຳນວນຫຼວງຫຼາຍ ປະລະການຮຽນກ່ອນຈະຮຽນຈົບຂັ້ນມັດທະຍົມ ໃນປະເທດທີ່ມີລາຍຮັບປານກາງ ແລະ ສູງ. ຜູ້ທີ່ອອກໂຮງຮຽນໄວສ່ວນໃຫຍ່ຈະມາຈາກຄອບຄົວທຸກຍາກດ້ອຍໂອກາດ. ສະນັ້ນ, ຈຳເປັນຕ້ອງໄດ້ມີເປົ້າໝາຍໃນການຊຸກຍູ້ຊ່ວຍເຫຼືອເຂົາເຈົ້າເພື່ອໃຫ້ສືບຕໍ່ການຮຽນ ໃຫ້ເຂົາເຈົ້າສາມາດມີວຸດທິການສຶກສາ ແລະ ທັກສະອັນຈຳເປັນເພື່ອໃຫ້ໄດ້ປະໂຫຍດຈາກໂອກາດການຈ້າງງານ.

ໃນປະເທດ ເນເທີແລນ ແລະ ຟີລິບປິນ ໂຮງຮຽນໄດ້ນຳໃຊ້ວິທີການສອນ ທີ່ສາມາດປັບປ່ຽນໄດ້ ເພື່ອຊ່ວຍເຫຼືອນັກຮຽນທີ່ມີຄວາມສ່ຽງຕໍ່ການປະລະການຮຽນເຊັ່ນ: ອະນຸຍາດໃຫ້ເຂົາເຈົ້າກັບເຂົ້າມາຮຽນເວລາໃດກໍ່ໄດ້ໃນຍາມເຂົ້າຮຽນ. ໃນນະຄອນນິວຢອກ ບ່ອນທີ່ມີອັດຕາສະເລ່ຍ 1 ສ່ວນ 5 ຄົນ ຂອງຜູ້ທີ່ມີອາຍຸ 17 ຫາ 24 ປີ ທີ່ບໍ່ໄດ້ຮຽນ ແລະ ບໍ່ມີວຽກເຮັດກໍ່ໄດ້ມີໂຄງການ 2 ຢ່າງ ທີ່ສຸມໃສ່ໄວໜຸ່ມ ຜູ້ທີ່ມີຄວາມສ່ຽງໃນບໍລິເວນໃກ້ຄຽງ ໂດຍການຈ້າງໃຫ້ໄປຝຶກງານ, ໃຫ້ຄຳປຶກສາເປັນລາຍບຸກຄົນ ແລະ ຈັດຝຶກອົບຮົມໃຫ້. ວິທີການດັ່ງກ່າວສົ່ງຜົນໃຫ້ຊາວໜຸ່ມຫຼາຍກວ່າເຄິ່ງໜຶ່ງສາມາດຊອກວຽກເຮັດໄດ້ ພາຍໃນ 9 ເດືອນ ແລະ ປະມານ 1 ສ່ວນ 5 ກັບຄືນມາຮຽນໃນຫຼັກສູດດັ່ງກ່າວ ເພື່ອຮຽນທັກສະພື້ນຖານ.

ນອກຈາກນີ້ ກໍ່ມີວິທີການອື່ນໆ ທີ່ເປັນທາງເລືອກໃນການຮຽນທັກສະໂດຍທີ່ບໍ່ຕ້ອງຮຽນໃນໂຮງຮຽນມັດທະຍົມເຊັ່ນ: ການຮຽນແບບເປີດ ແລະ ແບບທາງໄກ ແລະ ການຮຽນຢູ່ສູນຝຶກອົບຮົມຊຸມຊົນເຊິ່ງການຮຽນດັ່ງກ່າວຈຳເປັນຕ້ອງສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດ ແຮງງານທ້ອງຖິ່ນ ແລະ ຕ້ອງການການສະໜັບສະໜູນທາງດ້ານງົບປະມານໄລຍະຍາວ. ຍິ່ງໄປກວ່ານັ້ນ ທັກສະທີ່ຮຽນຈະຕ້ອງເປັນທັກສະສີ ມືແຮງງານທີ່ນາຍຈ້າງຮັບຮູ້ຢ່າງເປັນທາງການ.

ຂອບວຸດທິການສຶກສາແຫ່ງຊາດ ສາມາດໃຫ້ຂໍ້ມູນແກ່ນາຍຈ້າງກ່ຽວກັບການສຳເລັດການຮຽນທີ່ຊາວໜຸ່ມເດີນຕາມເສັ້ນທາງເລືອກຕ່າງໆ ຂອງການຮຽນ. ຖ້າວ່າມີການອອກແບບຢ່າງລະອຽດກໍ່ຈະສາມາດເຫັນໄດ້ຄວາມກະຈ່າງແຈ້ງຫຼາຍຂຶ້ນຖ້າບໍ່ດັ່ງນັ້ນກໍ່ຈະເປັນມາດຖານທີ່ບໍ່ ເປັນລະບົບ ແລະ ລະບົບວຸດທິການສຶກສາທີ່ປະຕິບັດນອກການສຶກສາມັດທະຍົມໃນໂຮງຮຽນ. ແຕ່ການປະຕິບັດຂອບວຸດທິການສຶກສາທີ່ມີປະສິດທິຜົນ ບໍ່ເປັນເລື່ອງງ່າຍເຊິ່ງມັນຈຳເປັນຕ້ອງມີການພົວພັນຢ່າງໃກ້ຊິດ ລະຫວ່າງ ພາກສ່ວນຕ່າງໆທີ່ມີຄວາມສົນໃຈລວມທັງ ລັດຖະບານ, ສະຖາບັນ, ການຝຶກອົບຮົມ, ນາຍຈ້າງ ແລະ ສະຫະພາບແຮງງານ.

ໃນສະຫະລາດ ຊະອານາຈັກ ການຝຶກງານ ຂອງເພດຍິງ ມີ 21% ໜ້ອຍ ກວ່າເພດຊາຍ

### ທັກສະສຳລັບຊາວໜຸ່ມໃນຕົວເມືອງ: ໂອກາດເພື່ອອານາຄົດທີ່ດີກວ່າ

ປັດຈຸບັນປະຊາກອນໜຸ່ມໃນຕົວເມືອງມີຫຼາຍທີ່ສຸດໃນປະຫວັດສາດ ແລະ ຍັງຈະສືບຕໍ່ຂະຫຍາຍຕົວເຊິ່ງປະຊາກອນຈຳນວນດັ່ງກ່າວ ມີການ ສຶກສາດີກວ່າຄົນຮຸ່ນກ່ອນ ແລະ ເປັນກຳລັງແຮງອັນແຮງ ກ້າໃນການປ່ຽນແປງທາງດ້ານການເມືອງ ແລະ ສັງຄົມ ແລະ ການ ຂະຫຍາຍຕົວ ທາງເສດຖະກິດ.ຈາກຜົນທີ່ທຳມະຊາດເພີ່ມຂຶ້ນ ແລະ ການຍ້າຍຖິ່ນຖານຈາກເຂດຊົນນະບົດສາມາດຄາດຄະເນໄດ້ວ່າ ການຂະຫຍາຍຕົວຕົວຈິງຂອງປະຊາກອນໂລກທັງໝົດຈະຢູ່ເຂດຕົວ ເມືອງເປັນສ່ວນໃຫຍ່, ໃນອີກ 30 ປີ ຂ້າງໜ້າເຊິ່ງຄົນຈະອາໄສຢູ່ໃນ ເຂດຕົວເມືອງຫຼາຍກວ່າເຂດຊົນນະບົດ ໃນທຸກພາກພື້ນທີ່ກຳລັງພັດ ທະນາພາຍໃນປີ 2040.

1 ສ່ວນ 5 ຂອງ ປະເທດຕ່າງໆ ຊາວໜຸ່ມທຸກ ຍາກໃນຕົວ ເມືອງມີການ ສຶກສາໜ້ອຍ ກວ່າຊາວໜຸ່ມ ຊົນນະບົດ

*ປະຊາກອນທຸກຍາກຫຼາຍຄົນໃນເຂດຕົວເມືອງບໍ່ມີທັກສະພື້ນຖານ*

ການຫັນເປັນຕົວເມືອງແບບຮີບຮ້ອນຈະນຳໄປສູ່ຄວາມທຸກຍາກ ຢ່າງຫຼວງຫຼາຍໃນຕົວເມືອງເຊິ່ງມັນສະແດງອອກໃຫ້ເຫັນໃນການ ເຕີບໃຫຍ່ຂະຫຍາຍຕົວຂອງເຂດຊຸມຊົນແອອັດ ແລະ ການຕັ້ງຮາກ ຖານແບບນອກລະບົບ. ຈຳນວນ 1 ໃນ 3 ຄົນທີ່ອາໄສຢູ່ໃນຕົວເມືອງ ໃຫຍ່ປັດຈຸບັນເປັນຊຸມຊົນແອອັດເຊິ່ງເຂດອະນຸພາກພື້ນຊາຮາຣາອາ ຟຣິກາ ຈະເພີ່ມຂຶ້ນເປັນ 2 ໃນ 3 ຄົນ: ຕາມການຄິດໄລ່ຄັ້ງລ່າສຸດ ສະແດງໃຫ້ເຫັນ ວ່າມີປະຊາກອນຫຼາຍກວ່າ 800 ລ້ານຄົນ ອາໄສ ຢູ່ຊຸມຊົນແອອັດ ເຊິ່ງຕົວເລກດັ່ງກ່າວຄາດຄະເນວ່າຈະສູງຂຶ້ນເຖິງ 889 ລ້ານຄົນພາຍໃນປີ 2020. ໃນຈຳນວນທີ່ກ່າວມານີ້ ຊາວໜຸ່ມ ຈະເປັນສ່ວນໜຶ່ງຂອງຜູ້ທີ່ຕັ້ງຮາກຖານໃນສະລຳ. ການຝຶກອົບຮົມ ດ້ານທັກສະ ແລະ ການປະກອບອາຊີບສາມາດໃຫ້ທາງເລືອກແກ່ ເຂົາເຈົ້າເພື່ອຫຼຸດພົ້ນຈາກການອາໄສຢູ່ໃນສະພາບທີ່ທຸກຍາກ ແລະ ຕໍ່ສູ້ເພື່ອຊອກຫາອາຊີບທີ່ດີ.

ການສະກັດກັ້ນ ການຂະຫຍາຍການສຶກສາໃຫ້ແກ່ຜູ້ທຸກຍາກໃນຕົວ ເມືອງໃຫຍ່ ມີຫຼາຍຄັ້ງຖືກເບິ່ງຂ້າມ. ຄວາມບໍ່ເທົ່າທຽມກັນພາຍໃນ ເຂດ ຕົວເມືອງກໍ່ມີຫຼາຍເກີນຂອບເຂດ ສະແດງໃຫ້ເຫັນວ່າຊາວສະ ລຳບໍ່ຈຳເປັນຕ້ອງມີຊີວິດທີ່ດີກວ່າຊາວຊົນນະບົດ ຜູ້ທຸກຍາກ ແລະ ລະດັບ ແລະ ຄວາມເລິກເຊິ່ງຂອງຄວາມທຸກຍາກໃນເຂດຕົວເມືອງ ແມ່ນຖືກເບິ່ງຂ້າມ.

ໃນຂະນະທີ່ໂອກາດທາງດ້ານການສຶກສາໄດ້ກະຈາຍໃນຕົວເມືອງ ເພີ່ມຂຶ້ນຫຼາຍກວ່າເຂດຊົນນະບົດ ໃນປະເທດທີ່ກຳລັງພັດທະນາ ຫຼາຍປະເທດ, ຄວາມແຕກຕ່າງໃນການຮຽນຮູ້ທັກສະພື້ນຖານລະ ຫວ່າງຜູ້ທຸກຍາກໃນເຂດຕົວເມືອງກັບຜູ້ທຸກຍາກໃນເຂດຊົນນະບົດ ແມ່ນບໍ່ມີຫຍັງແຕກຕ່າງກັນ. ໃນຈຳນວນ 45 ປະເທດ ທີ່ມີລາຍຮັບ ຕ່ຳ ແລະ ປານກາງ ຄົນຮັ່ງມີໃນເຂດຕົວເມືອງ ມີໂອກາດໄດ້ຮຽນຕໍ່ ຫຼາຍກວ່າຜູ້ ທຸກໃນຕົວເມືອງຄືຢ່າງນ້ອຍກໍ່ສືບຕໍ່ຮຽນຈົນຈົບ ໂຮງຮຽນ ມັດທະຍົມຕົ້ນ. ຈຳນວນ 1 ສ່ວນ 10 ຂອງບັນດາປະເທດດັ່ງກ່າວ ສັດສ່ວນ ຂອງຜູ້ທີ່ມີເກນອາຍຸ 15 ຫາ 24 ປີ ຍັງຂາດທັກສະພື້ນຖານ ໃນລະດັບສູງຫຼາຍ ເຊິ່ງຄົນທຸກຍາກໃນເຂດຕົວເມືອງຈະຂາດທັກສະ ດັ່ງກ່າວ ຫຼາຍກວ່າຜູ້ທຸກຍາກໃນເຂດຊົນນະບົດ (ຮູບທີ 15).

ຕົວຢ່າງໃນປະເທດກຳປູເຈຍ 90% ຂອງຊາວໜຸ່ມຜູ້ທຸກຍາກໃນຕົວ ເມືອງບໍ່ຈົບຊັ້ນມັດທະຍົມຕົ້ນ, ຖ້າທຽບໃສ່ຊາວໜຸ່ມຜູ້ທຸກຍາກໃນເຂດ ຊົນນະບົດແມ່ນ 82% ແລະ ຜູ້ຮັ່ງມີໃນຕົວເມືອງແມ່ນ 31%, ໃນ ປະເທດ ເຄນຢາ 60% ຂອງຜູ້ທີ່ອາໄສໃນ ນາໄຣບີ ຢູ່ຊຸມຊົນແອອັດ, ຊາວໜຸ່ມມີລະດັບການສຶກສາຕ່ຳຍ້ອນບໍ່ມີໂຮງຮຽນມັດທະຍົມໃນສະ ລຳ ເຊິ່ງເປັນການຈຳກັດໂອກາດເຂົາເຈົ້າໃນການຊອກອາຊີບທີ່ດີ.

### *ການຈ້າງງານສຳລັບຊາວໜຸ່ມຜູ້ທີ່ທຸກຍາກໃນຕົວເມືອງສ່ວນ ໃຫຍ່ແມ່ນຢູ່ນອກລະບົບ*

> *ມັນເປັນການຍາກທີ່ຈະຊອກວຽກໄລຍະຍາວໄດ້, ໄລຍະເ ຮັດວຽກທີ່ດົນທີ່ສຸດແມ່ນບໍ່ເກີນ 1 ອາທິດ ແລະ ສຳລັບ ອາຊີບຂ້ອຍ; ຂ້ອຍມີ ລາຍຮັບ 30 ເບີ (1.70 ໂດລາ) ຕໍ່ມື້.*
> --ຊາຍໜຸ່ມ ຈາກ ປະເທດເອທິໂອເປຍ

ການຂາດທັກສະ ແລະ ການສຶກສາສຳລັບຄົນທຸກຍາກໃນຕົວເມືອງ ເຮັດໃຫ້ຄົນສ່ວນໃຫຍ່ເຮັດວຽກໃນທຸລະກິດຂະໜາດນ້ອຍ ແລະ ລະ ດັບຈຸລະພາກ ທີ່ດຳເນີນນອກລະບົບບໍ່ມີການຂຶ້ນທະບຽນ, ບໍ່ມີກົດ

ຮູບທີ 15: ຄວາມແຕກໂຕນຫ່າງອອກຈາກກັນລະຫວ່າງຜູ້ຮັ່ງມີ ແລະ ຜູ້ທຸກຍາກໃນຕົວເມືອງ

ເປີເຊັນຂອງຜູ້ທີ່ມີອາຍຸ 15 ຫາ 24 ປີ ອອກໂຮງຮຽນກ່ອນຈົບຊັ້ນມັດທະຍົມຕົ້ນໂດຍເບິ່ງຕາມຊັບສົມບັດທີ່ມີ, ສະຖານທີ່, ປະເທດທີ່ຖືກເລືອກ, ຂໍ້ມູນຫຼ້າສຸດຂອງປີ




*ແຫຼ່ງຂໍ້ມູນ*: UIS (2012a).

ໝາຍຮັບຮອງ ແລະ ບໍ່ມີລະບຽບ. ວຽກນອກລະບົບດັ່ງກ່າວປະກອບດ້ວຍ ກິດຈະກຳຕ່າງໆທີ່ພໍຫາລ້ຽງຊີບເຊັ່ນ: ເກັບຂີ້ເຫຍື້ອ ແລະ ຂາຍເຄື່ອງຂ້າງຖະໜົນ ແລະ ການຖັກແສ່ວ ແລະ ການຕັດຫຍິບເສື້ອຜ້າ, ສ້ອມແປງລົດ, ກໍ່ສ້າງ, ເຮັດວຽກຢູ່ໄຮ່ ແລະ ຊ່າງຄັວດ. ວຽກນອກລະບົບ ແລະ ຜິດກົດໝາຍສ່ວນໃຫຍ່ແມ່ນຈ້າງຖືກ ແລະ ບໍ່ໝັ້ນຄົງ ມີສະພາບການເຮັດວຽກທຸກຍາກ.

ໃນຂະນະທີ່ຄົນຫຼວງຫຼາຍທົ່ວໂລກຕົກຢູ່ໃນສະພາບການເຮັດວຽກທີ່ມີຄວາມສ່ຽງ ແລະ ຜິດກົດໝາຍ ເຊິ່ງຍາກທີ່ຈະເກັບກຳຕົວເລກໄດ້ຢ່າງຊັດເຈນ. ອົງການແຮງງານໂລກໄດ້ຄາດຄະເນວ່າມີປະມານ 1.53 ຕື້ຄົນ. ຕາມການລາຍງານຂອງຂະແໜງນອກລະບົບມີຄົນເຮັດວຽກນອກລະບົບຫຼາຍເທົ່າກັບ 70% ຂອງການຈ້າງງານທີ່ບໍ່ແມ່ນອາຊີບກ່ຽວກັບກະສິກຳ. ໃນບາງປະເທດໃນເຂດອະນຸພາກພື້ນຊາຮາຣາອາຟຣິກາ ແລະ ມີຫຼາຍເຄິ່ງໜຶ່ງໃນປະເທດທີ່ທຸກຍາກຂອງເຂດອາເມລິກາລາຕິນ. ນອກຈາກນີ້ ຍັງເປັນນາຍຈ້າງລາຍໃໝ່ສຳລັບກຳມະກອນຫຼາຍຄົນໃນ ອາຊີໃຕ້ ແລະ ອາຊີຕາເວັນຕົກ.

ການແບ່ງແຍກໃນການສຶກສາ ແລະ ໃນຕະຫຼາດແຮງງານອອກຈາກກັນເປັນສິ່ງກີດກັ້ນໂອກາດແກ່ຄົນບາງກຸ່ມ ຍິ່ງໜຸ່ມໃນຫຼາຍທົດສະນະກຳລັງປະເຊີນກັບການເຄື່ອນຍ້າຍແຮງງານທີ່ຈຳກັດ, ການເຂົ້າເຖິງການສຶກສາ ແລະ ການຝຶກອົບຮົມວິຊາຊີບ ລວມທັງການຈ້າງງານແບບຈຳກັດ ໃນຂະນະດຽວກັນກໍ່ປະສົບກັບການເຮັດວຽກທີ່ບໍ່ມີຄ່າຕອບແທນ ແລະ ວຽກຄອບຄົວຢ່າງໜັກໜ່ວງ. ປັດຈຸບັນມີຜູ້ຍິງຫຼາຍກວ່າຜູ້ຊາຍເຮັດວຽກນອກລະບົບ ຫຼື ຖືກຈ້າງງານແບບບໍ່ຖືກກົດໝາຍໃນລະບົບ ໃນ 25 ປະເທດຂອງຈຳນວນ 39 ປະເທດ ທີ່ນອນຢູ່ໃນການສຳຫຼວດຂອງອົງການແຮງງານໂລກ. ຜູ້ຍິງໄດ້ມີສ່ວນຮ່ວມໃນຫຼາຍກິດຈະການທີ່ເປັນຂໍ້ຈຳກັດເຊັ່ນ: ຫຼາຍຄົນໄດ້ຖືກຖ່ວງດຶງໃຫ້ເຮັດວຽກຢູ່ບ້ານ ແລະ ຜູ້ຍິງຈຳນວນຫຼວງຫຼາຍເກືອບວ່າເຮັດວຽກບໍ່ຖືກກົດໝາຍ ແລະ ກິດຈະການບໍ່ມີຄວາມໝັ້ນຄົງເຊັ່ນ: ເກັບຂີ້ເຫຍື້ອ ແລະ ຂາຍເຄື່ອງຕາມຖະໜົນຫົນທາງ. ເມື່ອແມ່ຍິງມີວຽກເຮັດເຂົາເຈົ້າຊຳພັດໄດ້ຄ່າແຮງງານໜ້ອຍກວ່າຜູ້ຊາຍ.ຕົວຢ່າງຢູ່ນະຄອນບູໂນອາຣີ ຜູ້ຍິງເຮັດວຽກໃນບໍລິສັດບໍ່ຖືກກົດໝາຍ ມີລາຍຮັບໜ້ອຍກວ່າຜູ້ຊາຍ 20%.

ຂະແໜງນອກລະບົບອາດເປັນທາງເລືອກທີ່ດຶງດູດໃຈເມື່ອຊາວໜຸ່ມມີທັກສະທີ່ເໝາະສົມ.ໃນກໍລະນີນີ້ສ່ວນໃຫຍ່ ກຳມະກອນທີ່ເຮັດວຽກໃນຂະແໜງນອກລະບົບທີ່ຢູ່ໃນຄະນອນຫຼວງຂອງອາຟຣິກາພາກຕາເວັນຕົກ 7 ແຫ່ງ ເຊິ່ງຈົບຊັ້ນປະຖົມ ຫຼື ມັດທະຍົມຕົ້ນແລ້ວ ສາມາດສ້າງລາຍຮັບຫຼາຍກວ່າຜູ້ທີ່ບໍ່ມີວຸດທິການສຶກສາເຖິງ 20 % ຫາ 50%. ແຕ່ມີຫຼາຍຄົນທີ່ເຂົ້າເຮັດວຽກໃນຂະແໜງນອກລະບົບຍັງຂາດທັກສະພື້ນຖານ. ໃນປີ 2006 ຢູ່ປະເທດ ຣູວັນດາ ມີພຽງແຕ່ 12% ຂອງຊາວໜຸ່ມທີ່ເຮັດວຽກນອກລະບົບໄດ້ຮຽນກາຍຊັ້ນມັດທະຍົມຕົ້ນ ຖ້າທຽບໃສ່ວຽກໃນລະບົບແມ່ນມີ 40%.

### *ຂະຫຍາຍໂອກາດສຳລັບການຝຶກອົບຮົມທັກສະສີມືແຮງງານໃຫ້ແກ່ຊາວໜຸ່ມດ້ອຍໂອກາດ*

ໃນຂະນະທີ່ຜົນກະທົບຈາກວິກິດການເສດຖະກິດຍັງສືບຕໍ່ ຊາວໜຸ່ມທີ່ມີທັກສະຕໍ່າຈຳນວນຫຼວງຫຼາຍມີຄ່າແຮງງານຕໍ່າກວ່າລະດັບມາດຕະຖານຄວາມທຸກຍາກໃນການປະກອບອາຊີບບໍ່ຖືກກົດໝາຍ ເຊິ່ງຈຳນວນດັ່ງກ່າວມີແນວໂນ້ມນັບມື້ນັບຫຼາຍຂຶ້ນ. ບັນຫາດັ່ງກ່າວຄວນໄດ້ຮັບການເອົາໃຈໃສ່ໃນຍຸດທະສາດການພັດທະນາທັກສະ/ສີມືແຮງງານແຫ່ງຊາດ ຊຳພັດບໍ່ໄດ້ເຫັນຄວາມຈິງຂອງບັນຫາດັ່ງກ່າວ. ໃນການທົບທວນຂອງປະເທດກຳລັງພັດທະນາ 46 ປະເທດ ທີ່ກວມຢູ່ໃນບົດລາຍງານນີ້ ສະແດງໃຫ້ເຫັນວ່າເກືອບທຸກປະເທດບໍ່ມີຍຸດທະສາດການພັດທະນາທັກສະ/ສີມືແຮງງານແຫ່ງຊາດທີ່ຈະແຈ້ງໃນການແກ້ໄຂບັນຫາການເຮັດວຽກນອກລະບົບໃນເຂດຕົວເມືອງ.

ປະເທດອິນເດຍ ຖືວ່າເປັນໜຶ່ງໃນບັນດາສອງສາມປະເທດທີ່ໄດ້ສຸມໃສ່ບັນຫາດັ່ງກ່າວ ເຊິ່ງປະເທດອິນເດຍ ໄດ້ສ້າງຍຸດທະສາດໃນການແກ້ໄຂບັນຫາກຳມະກອນເຮັດວຽກບໍ່ຖືກກົດໝາຍ, ນອກຈາກນີ້ປະເທດອິນເດຍຍັງມີນະໂຍບາຍແຫ່ງຊາດກ່ຽວກັບຄົນຂາຍເຄື່ອງແຄມທາງ 10 ລ້ານຄົນ ໃນປະເທດອິນເດຍດຳເນີນທຸລະກິດຂະໜາດນ້ອຍ ດັ່ງນັ້ນ ເຂົາເຈົ້າຄວນໄດ້ຮັບການຝຶກອົບຮົມເພື່ອຍົກລະດັບທາງດ້ານເຕັກນິກວິຊາຊີບ ແລະ ທັກສະສີມືໃນການດຳເນີນທຸລະກິດເພື່ອໃຫ້ເຂົາເຈົ້າສາມາດເພີ່ມລາຍຮັບໃຫ້ແກ່ຕົນເອງ ແລະ ສາມາດປະກອບອາຊີບອື່ນໄດ້.

ແຜນງານການສ້າງໂອກາດທີ ສອງ ເປັນສິ່ງສຳຄັນໃນການກຽມຄວາມພ້ອມໃຫ້ແກ່ຄົນທຸກຍາກໃນຕົວເມືອງໃຫ້ມີທັກສະການອ່ານອອກ ຂຽນເປັນ ແລະ ການຄຳນວນເລກ. ເຖິງແມ່ນວ່າຈະມີວິທີການຫຼາຍຢ່າງທີ່ເປັນນະວັດຕະກຳໃໝ່ເຊິ່ງດຳເນີນໂດຍອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານແຕ່ການຈັດຕັ້ງປະຕິບັດແຜນງານໂອກາດທີສອງນີ້ ໃນບາງພາກຂອງໂລກກໍ່ຍັງບໍ່ທັນກວ້າງຂວາງໂດຍສະເພາະບ່ອນທີ່ມີຄວາມຕ້ອງການທີ່ສຸດ. ການຈັດຕັ້ງປະຕິບັດແຜນງານດັ່ງກ່າວຍັງຂາດການປະສານງານທີ່ດີ ແລະ ລັດຖະບານສ່ວນໃຫຍ່ມີຂໍ້ມູນຈຳກັດກ່ຽວກັບກິດຈະກຳດັ່ງກ່າວ.

ການເພີ່ມການພັດທະນາທັກສະພື້ນຖານໃຫ້ແກ່ຜູ້ທີ່ມີອາຍຸ 15 ຫາ 24 ປີ ແລະ ການປະສົມປະສານທັກສະດັ່ງກ່າວກັບການຝຶກອົບຮົມວິຊາຊີບ ສາມາດຊ່ວຍໃຫ້ຊາວໜຸ່ມມີວຽກທີ່ໝັ້ນຄົງ.ໂຄງການຝຶກອົບຮົມເພື່ອການຈ້າງງານໃນປະເທດເນປານສຳລັບຊາວໜຸ່ມຜູ້ທີ່ອອກໂຮງຮຽນເປັນແຜນງານແບບຢ່າງອັນໜຶ່ງ ທີ່ປະສົບຜົນສຳເລັດໃນການເຂົ້າຫາກຸ່ມດ້ອຍໂອກາດ ເຊິ່ງມີ 66% ຂອງນັກຮຽນທີ່ເຂົ້າຮ່ວມໂຄງການດັ່ງກ່າວມາຈາກຊັ້ນຄົນດ້ອຍໂອກາດ ຫຼື ຊົນເຜົ່າສ່ວນນ້ອຍ.ການວິໄຈຕິດຕາມຜູ້ສຳເລັດການຝຶກອົບຮົມໃນໂຄງການນີ້ມີຜູ້ສຳເລັດການຝຶກອົບຮົມ 206 ຄົນ ໄດ້ລາຍງານໃຫ້ຮູ້ວ່າ 73% ຂອງຜູ້ທີ່ສຳເລັດການຝຶກອົບຮົມໄດ້ມີວຽກເຮັດງານທຳ.

**ການໂອນເງິນບວກກັບການຝຶກອົບຮົມໃນປະເທດ ຊີລີ ໄດ້ເຮັດໃຫ້ການຈ້າງງານຂອງແມ່ຍິງເພີ່ມຂຶ້ນ**

ວິທີການທີ່ອາດມີປະສິດທິຜົນ ໃນການດຳເນີນການຝຶກອົບຮົມທັກສະ/ສີມືແຮງງານຄືການປະສົມປະສານການຝຶກອົບຮົມກັບ ແຜນງານກອງທຶນຂະໜາດນ້ອຍ ຫຼື ແຜນງານປົກປ້ອງສັງຄົມທີ່ຊ່ວຍຜູ້ໄດ້ຮັບຜົນປະໂຫຍດ ແລະ ແກ້ໄຂບັນຫາຄວາມທຸກຍາກໃນໄລຍະສັ້ນ. ໃນປະເທດຊີລີ ໂຊລິດາຣີໂອ ໄດ້ນຳໃຊ້ວິທີການໂອນເງິນສົດ ໂດຍສົມທົບກັບການຊ່ວຍເຫຼືອອີກຮູບແບບອື່ນ ເຊິ່ງໄດ້ເລີ່ມນຳໃຊ້ໃນປີ 2002 ວິທີການ ດັ່ງກ່າວນີ້ ປະກອບດ້ວຍການເຂົ້າເຖິງການຝຶກອົບຮົມຕາມຄວາມມັກຂອງຕົນເອງ ໂດຍເລັ່ງໃສ່ການເພີ່ມການຈ້າງງານແນໃສ່ຊ່ວຍເຫຼືອ ຜູ້ຍິງທຸກຍາກ, ແລະ ມີການສຶກສາຕໍ່າ ແລະ ມີປະສົບການເຮັດວຽກທີ່ຈຳກັດ ຫຼື ບໍ່ມີປະສົບການເຮັດວຽກເລີຍ. ຈາກການນຳໃຊ້ວິທີການ ດັ່ງກ່າວເຮັດໃຫ້ການຈ້າງງານເພີ່ມຂຶ້ນ ເຖິງ 4% ຫາ 6% ໃນໝູ່ຜູ້ຍິງຜູ້ທີ່ເຂົ້າຮ່ວມແຜນງານໃນປີ 2005, ອີກສ່ວນໜຶ່ງແມ່ນຜ່ານການເຂົ້າຮ່ວມໃນໂຄງການຝຶກອົບຮົມໃນຕ່າງໆ.

ບັນດາຫຼັກສູດທີ່ສະໜອງການຝຶກອົບຮົມໃນຫ້ອງຮຽນ ແລະ ປະສົບການເຮັດວຽກໃນສາຂາວິຊາຊີບຂັ້ນພື້ນຖານ ແລະ ສາຂາວິຊາສະເພາະລົງເລິກຄວບຄູ່ກັບທັກສະຊີວິດ, ການຊ່ວຍຊອກວຽກເຮັດ, ການໃຫ້ຄຳປຶກສາ ແລະ ຂໍ້ມູນໃນການເຂົ້າສູ່ການປະກອບການ ໄດ້ປະສົບຜົນສຳເລັດໃນບາງພາກຂອງໂລກເຊັ່ນ: ໃນປະເທດອາເມລິກາລາຕິນ ແລະ ໝູ່ເກາະຄາຣີເບຍ. ຫຼັກສູດດັ່ງກ່າວໄດ້ແນໃສ່ຊາວໜຸ່ມ ທີ່ດ້ອຍໂອກາດໃນຕົວເມືອງໂດຍສະເພາະ, ສຳລັບບັນດາຍິງ




© Sven Torfinn/PANOS

ໃນປະເທດການາ ມີພຽງແຕ່ 11% ຂອງຜູ້ທຸກຍາກທີ່ສຸດໄດ້ຜ່ານການຝຶກງານຖ້າທຽບໃສ່ຜູ້ຮັ່ງມີທີ່ສຸດ ມີ 47%

ໜຸ່ມທັງຫຼາຍ ເຊິ່ງປະສົບຜົນສຳເລັດໃນແຕ່ລະດ້ານ.ໃນປະເທດໂຄລຳເບຍ ຄ່າແຮງງານຂອງແມ່ຍິງທີ່ຮຽນຈົບຫຼັກສູດ ໂຈເວແນດ ອອງແອັກຊິງ (Jovenes en auion) ໄດ້ເພີ່ມຂຶ້ນໂດຍສະເລ່ຍປະມານ 20% . ໂອກາດໃນການປະກອບອາຊີບໃນລະບົບກໍ່ໄດ້ເພີ່ມຂຶ້ນ ເຊິ່ງເປັນຜົນພວງຈາກການປະສົມປະສານລະຫວ່າງການຝຶກອົບຮົມໃນຫ້ອງຮຽນ ກັບການຝຶກອົບຮົມໃນບ່ອນເຮັດວຽກເຊິ່ງປະກອບດ້ວຍຫຼາຍກິດຈະກຳທີ່ເຊື່ອມໂຍງຢ່າງໃກ້ຊິດກັບຄວາມຕ້ອງການຂອງຕະຫຼາດແຮງງານ.ໃນປະເທດເປຣູ ຫຼັກສູດຕາມຮູບແບບຂອງໂປຼໂຈເວນ (PROJoven). ໄດ້ເຮັດໃຫ້ໂອກາດໃນການຊອກຫາວຽກເຮັດງານທຳຂອງຜູ້ຊາຍ ເພີ່ມຂຶ້ນເຖິງ 13% ແລະ ຂອງຜູ້ຍິງເພີ່ມຂຶ້ນເຖິງ 21%.

ໂຄງການຫຼັກສູດ ໂຈເວັນແນດ (Jovenes) ເກືອບທຸກໆສາຂາວິຊາທີ່ໄດ້ປະຕິບັດໃນບັນດາປະເທດອາເມລິກາລາຕິນໄດ້ເອົາເຂົ້າໃນສະຖາບັນການຝຶກອົບຮົມແຫ່ງຊາດຂອງລັດ ຫຼື ເອົາແທນຍຸດທະວິທີອື່ນທີ່ຄ້າຍຄືກັນເຊັ່ນ: ອອງຕຼາ 21 (Entra 21). ໂຄງການຫຼັກສູດດັ່ງກ່າວໄດ້ກາຍເປັນຕົວແບບທີ່ເປັນປະໂຫຍດແກ່ປະເທດອື່ນລວມທັງບັນດາປະເທດອາຣັບເຊິ່ງສະແດງໃຫ້ເຫັນວ່າຫຼັກສູດນີ້ແນ່ໃສ່ກຸ່ມເປົ້າໝາຍທີ່ດີນັ້ນສາມາດປັບປຸງໂອກາດໃນການມີວຽກເຮັດງານທຳໃຫ້ບັນດາຊາວໜຸ່ມດ້ອຍໂອກາດ.ແຕ່ໂຄງການຫຼັກສູດດັ່ງກ່າວອາດໃຊ້ງົບປະມານຫຼາຍ ແລະ ຮຽກຮ້ອງໃຫ້ມີບໍລິສັດເຂົ້າຮ່ວມການຝຶກອົບຮົມຢ່າງພຽງພໍ ເຊິ່ງບໍ່ສາມາດເປັນໄປໄດ້ ໃນບາງເຂດຂອງອະນຸພາກພື້ນຮາຊາຮາອາຟຣິກາ ເປັນຕົ້ນແມ່ນບ່ອນທີ່ມີການຈ້າງງານແບບນອກລະບົບທີ່ມີຈຳນວນໜ້ອຍ.

### *ເສີມສ້າງ ທັກສະ/ສີມືແຮງງານທີ່ເໜືອກວ່າທັກສະພື້ນຖານສຳລັບຊາວໜຸ່ມດ້ອຍໂອກາດ*

ບ່ອນໃດທີ່ຊາວໜຸ່ມໃນເຂດຕົວເມືອງ ມີທັກສະພື້ນຖານແລ້ວລັດຖະບານຈຳເປັນຕ້ອງສຸມໃສ່ ແລະ ໃຫ້ການສະໜັບສະໜູນການຝຶກອົບ ຮົມທັກສະການເຊື່ອມຕໍ່ ແລະ ທັກສະເຕັກນິກວິຊາຊີບໃຫ້ແກ່ເຂົາເຈົ້າ ໂດຍສະເພາະ ໃນຂະແໜງທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງໃນຮູບແບບນອກລະບົບທີ່ມີສັກກະຍະພາບເພີ່ມຂຶ້ນ. ການຝຶກອົບຮົມວິຊາຊີບແບບດັ່ງເດີມແມ່ນວິທີການໜຶ່ງທີ່ສາມາດເຂົ້າເຖິງຊາວໜຸ່ມຈຳນວນຫຼວງຫຼາຍທີ່ເຮັດວຽກໃນຂະແໜງນອກລະບົບ. ວິທີການດັ່ງກ່າວອາດເປັນວິທີການທີ່ນຳໃຊ້ງົບປະມານຢ່າງສົມເຫດສົມຜົນເຊິ່ງມັນຈະສອດຄ່ອງກັບຕົວຈິງໂດຍທັນທີໂລດ ແລະ ຍັງນຳໄປສູ່ການການມີວຽກເຮັດງານທຳອີກດ້ວຍ.

ແຕ່ມັນກໍມີຄວາມສຳຄັນເພື່ອຮັບປະກັນການເຂົ້າເຖິງການຝຶກອົບຮົມວິຊາຊີບຢ່າງເທົ່າທຽມກັນ. ໃນປະເທດ ການາ ມີພຽງແຕ່ 11% ຂອງຊາວໜຸ່ມຜູ້ທີ່ທຸກຍາກທີ່ສຸດໄດ້ຜ່ານການຝຶກງານ ເຊິ່ງກົງກັນ

ຂ້າມກັບຊາວໜຸ່ມຜູ້ທີ່ຮັ່ງມີເຖິງ 47%. ຄຽງຄູ່ກັນນີ້ການຝຶກງານສ່ວນໃຫຍ່ແມ່ນກ່ຽວກັບການຄ້າຂາຍເຊິ່ງເຂົ້າເຖິງກຳມະກອນເພດຊາຍຫຼາຍກວ່າເພດຍິງທີ່ດ້ອຍໂອກາດ.

ການປະຕິຮູບແມ່ນມີເປົ້າໝາຍໃນການປ່ຽນແປງການຝຶກອົບຮົມແບບດັ່ງເດີມ ໃຫ້ເປັນລະບົບການຝຶກອົບຮົມແບບທະວິພາຄີທີ່ໄດ້ພັດທະນາຂຶ້ນໃນຊຸມປີ 1990 ແລະ 2000 ຢູ່ໃນຫຼາຍປະເທດເຊັ່ນ: ປະເທດເບນິນ ແລະ ໂຕໂກ. ບັນດາປະເທດເຫຼົ່ານັ້ນໄດ້ປະສົມປະສານລະຫວ່າງການຮຽນພາກທິດສະດີ ແລະ ພາກປະຕິບັດຕົວຈິງ. ວິທີດັ່ງກ່າວນີ້ຮຽກຮ້ອງໃຫ້ມີການຕົກລົງກັນລະຫວ່າງລັດຖະບານ, ກຳມະກອນທີ່ເຮັດວຽກນອກລະບົບ ແລະ ນາຍຊ່າງ ມີຄວາມປະສົງທີ່ຈະຈັດການຝຶກອົບຮົມວິຊາຊີບ.ຖ້າວ່າວິທີການດັ່ງກ່າວປະສົບຜົນສຳເລັດໃນການຈັດຕັ້ງປະຕິບັດ ການຝຶກອົບຮົມແບບທະວິພາຄີນີ້ກໍ່ຈະກາຍເປັນພາກສ່ວນໜຶ່ງຂອງສາຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ແລະ ລະບົບການຝຶກອົບຮົມແຫ່ງຊາດທີ່ມີປະສິດທິຜົນ ແລະ ຄວາມຍືນຍົງ. ຕົວຢ່າງ: ໃນປະເທດ ເບີກີນາຟາໂຊ ງົບປະມານ ໃນການປະຕິຮູບການຝຶກງານແມ່ນປະມານ 1 ສ່ວນ 3 ເຊິ່ງຫຼາຍເທົ່າກັນກັບການຝຶກອົບຮົມເປັນລາຍວິຊາ ໃນລະບົບໂຮງຮຽນ.

ສຳລັບປະເທດທີ່ມີຂີດຈຳກັດສຳລັບການຈັດຕັ້ງ, ການສືບຕໍ່ຮັບຮູ້/ຮັບຮອງ ການຝຶກອົບຮົມວິຊາຊີບໃນລະບົບໂຮງຮຽນອາດຈະເປັນທາງເລືອກດ້ານນະໂຍບາຍທີ່ງ່າຍກວ່າ ການປ່ຽນແປງທັງໝົດມາເປັນການຝຶກອົບຮົມວິຊາຊີບແບບທະວິພາຄີເຊິ່ງເຫັນໄດ້ຈາກປະສົບການຂອງ ປະເທດ ກາເມຣູນແລະ ປະເທດ ເຊເນການ ເປັນຕົ້ນ. ວິທີການລິເລີ່ມດັ່ງກ່າວອາດມີປະສິດທິພາບ ຖ້າຫາກວ່າ ມີການອອກແບບ ແລະ ຈັດຕັ້ງປະຕິບັດ ໂດຍມີການຮ່ວມມືກັບສະມາຄົມຂະແໜງນອກລະບົບ ຫຼື ໜ່ວຍງານວິຊາການອື່ນໆ.

ການໝູນໃຊ້ວິທີການຝຶກງານທີ່ກ່າວມາຂ້າງເທິງເທື່ອລະກ້າວກໍ່ຈະເຫັນໄດ້ສະຖານະພາບຂອງວິທີການດັ່ງກ່າວຢ່າງເປັນທາງການ ເຊິ່ງຈະ ກວມເອົາລະບຽບໃນການປົກປ້ອງການຝຶກງານຈາກການຫາຜົນປະໂຫຍດທີ່ຖືວ່າເປັນບັນຫາລວມໃນລະບົບການຝຶກງານແບບເກົ່າ. ລະບຽບການດັ່ງກ່າວ ປະກອບດ້ວຍການກຳນົດຊົ່ວໂມງເຮັດວຽກປະຈຳວັນ ແລະ ປະຈຳອາທິດ, ເພດານຂອງຈຳນວນປີໃນການ ຝຶກອົບຮົມຂອງແຕ່ລະອາຊີບ ແລະ ມາດຕະການຄວາມປອດໄພ. ການຢັ້ງຢືນທັກສະການຝຶກງານ ແລະ ປະສົບການໃນການເຮັດວຽກໂດຍຜ່ານຂອບວຸດທິການສຶກສາແຫ່ງຊາດ ສາມາດສືບຕໍ່ຍົກສູງຄຸນຄ່າຂອງການຝຶກອົບຮົມດັ່ງກ່າວ ແລະ ເພີ່ມໂອກາດໃນການຈ້າງງານໃຫ້ແກ່ຊາວໜຸ່ມ.

ອີກທາງໜຶ່ງຂອງອາຊີບທີ່ພໍຫາລ້ຽງຊີບໄດ້ຄືການປະກອບອາຊີບອິດສະຫຼະ. ຊາວໜຸ່ມຫຼາຍຄົນໃນເຂດໃຈກາງເມືອງຂອງບັນດາປະເທດອາຣັບ ແລະ ເຂດອະນຸພາກພື້ນຮາຊາຣາອາຟຣິກາ ເຫັນທາງເລືອກດັ່ງກ່າວເປັນຊ່ອງທາງໃນການຫາລ້ຽງຊີບ. ການສຳຫຼວດໃນປະເທດອີຢີບ ໃນປີ 2008 ສະແດງໃຫ້ເຫັນວ່າ 73% ຂອງຊາວໜຸ່ມພໍໃຈທີ່ຈະກາຍເປັນຜູ້ປະກອບການ. ແຕ່ວ່າຊາວໜຸ່ມຜູ້ທຸກຍາກ ໃນເຂດຕົວເມືອງຊໍ້າພັດຂາດທັກສະທາງດ້ານການປະກອບການ.

ຈາກປະສົບການຂອງປະເທດໂບລີເວຍ, ເຮີຊີໂກວີນາ ແລະ ການາສະແດງໃຫ້ເຫັນວ່າ ຜົນກະທົບຂອງການຝຶກອົບຮົມ ທາງດ້ານການປະກອບການ ແມ່ນຫຼຸດລົງຕາມບ່ອນທີ່ຜູ້ເຂົ້າຮ່ວມການຝຶກອົບຮົມຍັງຂາດທັກສະພື້ນຖານ ແລະ ບໍ່ສາມາດເຂົ້າເຖິງການ ສະໜັບສະໜູນໃນຮູບແບບອື່ນ ເຊິ່ງລວມທັງຊັບສິນທີ່ຕ້ອງການໃນການດຳເນີນທຸລະກິດ, ການຊ່ວຍໃຫ້ເຂົາເຈົ້ານຳໃຊ້ທັກສະໃໝ່ທີ່ ໄດ້ຮຽນມາ.

ສະນັ້ນ, ການອອກແບບຫຼັກສູດການຝຶກອົບຮົມ ຜູ້ປະກອບການທີ່ສຸມໃສ່ຊາວໜຸ່ມໃນຕົວເມືອງທີ່ດ້ອຍໂອກາດ ຈຳເປັນຕ້ອງເພີ່ມທະວີໃນການຝຶກອົບຮົມທັກສະພື້ນຖານຂອງການຮຽນຮູ້ໜັງສື ແລະ ການຄຳນວນເລກ ແລະ ປະສົມປະສານການຝຶກອົບຮົມດັ່ງກ່າວກັບຊັບພະຍາກອນທີ່ຕ້ອງການ ໃນການເລີ່ມຕົ້ນທຸລະກິດ ເພື່ອໃຫ້ຊາວໜຸ່ມມີໂອກາດປະສົບຜົນສຳເລັດ.

### *ທັກສະສຳລັບຊາວໜຸ່ມໃນເຂດຊົນນະບົດ-ເປັນເສັ້ນທາງໃນການຫຼຸດພົ້ນອອກຈາກຄວາມທຸກຍາກ*

> *ຂ້ອຍມາຈາກເຂດຊົນນະບົດ, ເປັນທີ່ຮູ້ກັນດີວ່າ ການສຶກສາບໍ່ໄດ້ຮັບການເອົາໃຈໃສ່ຫຼາຍໃນເຂດຊົນນະບົດ; ຄອບຄົວກໍ່ບໍ່ໄດ້ຊຸກຍູ້ໃຫ້ລູກ ຫຼານໄປໂຮງຮຽນ.ຂ້ອຍເລີ່ມຕົ້ນຮຽນທຸກຢ່າງດ້ວຍຕົວເອງ ຕາມທີ່ຂ້ອຍຕ້ອງການແຕ່ການເປັນນັກຮຽນເຈົ້າຈຳເປັນຕ້ອງມີສື່ການຮຽນ ແລະ ຂ້ອຍບໍ່ສາມາດຊື້ສິ່ງດັ່ງກ່າວນັ້ນໄດ້.*
>
> --ຊາຍໜຸ່ມຈາກ ປະເທດເອທິໂອເປຍ

ສ່ວນໃຫຍ່ຂອງຄົນທຸກຍາກ 70% ຫຼື ປະມານ 1 ຕື້ຄົນ ດຳລົງຊີວິດຢູ່ໃນເຂດຊົນນະບົດ ເຊິ່ງຈະມີຫຼາຍໃນບັນດາປະເທດທີ່ມີລາຍຮັບຕໍ່າ ແລະ ບາງປະເທດທີລາຍຮັບປານກາງ. ສ່ວນຫຼາຍຈະມີຢູ່ເຂດອະນຸພາກພື້ນຮາຊາຣາອາຟຣິກາ ແລະ ອາຊີໃຕ້ ບ່ອນທີ່ຄົນສ່ວນໃຫຍ່ອີງໃສ່ການປະກອບອາຊີບລວມກັນ ລະຫວ່າງ ກິດຈະກຳການເຮັດໄຮ່ເຮັດນາຂະໜາດນ້ອຍ, ເປັນແຮງງານຮັບຈ້າງຕາມລະດູການ ແລະ ການປະກອບການລະດັບຈຸລະພາກທີ່ມີລາຍຮັບຕໍ່າ. ໃນຂະນະທີ່ປະຊາກອນຂອງໂລກນັບມື້ນັບສືບຕໍ່ຂະຫຍາຍຕົວ ແລະ ຄວາມຕ້ອງການ ທາງດ້ານສະບຽງອາຫານກໍ່ເພີ່ມຂຶ້ນແຕ່ເນື້ອທີ່ດິນພັດຫາຍາກຂຶ້ນ. ດັ່ງນັ້ນ, ການພັດທະນາທັກສະຈຶ່ງມີຄວາມສຳຄັນເພື່ອໃຫ້ຊາວໜຸ່ມໃນ ເຂດຊົນນະບົດ ສາມາດຮຽນຮູ້ໃນການນຳໃຊ້ເຕັກໂນໂລຊີ ເຂົ້າໃນການກະສິກຳ ແລະ ມີໂອກາດໃນການປະກອບອາຊີບອື່ນໆຫຼາຍຂຶ້ນ.

ໃນປະເທດ ຕຸລະກີ 65% ຂອງຍິງໜຸ່ມ ໃນ ເຂດຊົນນະບົດ ຮຽນບໍ່ຈົບຊັ້ນ ມັດທະຍົມຕົ້ນ

### *ໃນເຂດຊົນນະບົດຍິງໜຸ່ມເປັນຜູ້ທີ່ດ້ອຍໂອກາດຫຼາຍກວ່າຊາຍໜຸ່ມ*

ໃນເຂດຊົນນະບົດ ຊາວໜຸ່ມຫຼາຍຄົນໂດຍສະເພາະແມ່ນຍິງໜຸ່ມຂາດທັກສະພື້ນຖານເຊິ່ງເປັນການສະກັດກັ້ນຄົນຮຸ່ນໜຸ່ມໃຫ້ຕິກຢູ່ໃນ ການເຮັດວຽກທີ່ພໍແຕ່ລ້ຽງຊີບເທົ່ານັ້ນ. ຊ່ອງຫວ່າງທາງດ້ານເພດຖືວ່າເປັນບັນຫາພົ້ນເດັ່ນໃນບັນດາປະເທດທີ່ຄົນຊົນນະບົດສ່ວນໃຫຍ່ບໍ່ສາມາດຮຽນຈົບຮອດຊັ້ນມັດທະຍົມຕົ້ນ- ໃນປະເທດເບີນິນ, ຄາເມຣູນ, ລິເບີເລຍ ແລະ ຊີຣາລີອອນ ປະມານ 85% ຂອງຍິງໜຸ່ມໃນເຂດຊົນນະບົດຂາດທັກສະພື້ນຖານເມື່ອສົມທຽບໃສ່ຊາຍໜຸ່ມແມ່ນມີໜ້ອຍກວ່າ 70%. ເຖິງແມ່ນວ່າປະເທດຕຸລະກີ ຈະເປັນປະເທດທີ່ມີລາຍຮັບປານກາງ ແຕ່ຊອງຫວ່າງລະຫວ່າງເພດໃນເຂດຊົນນະບົດແມ່ນຍັງກວ້າງເຊິ່ງ 65% ຂອງຍິງໜຸ່ມຮຽນບໍ່ຈົບຊັ້ນມັດທະຍົມຕົ້ນ ເມື່ອປຽບທຽບໃສ່ຊາຍໜຸ່ມແມ່ນມີ 36% (ຮູບທີ 16).

ຜູ້ຍິງບໍ່ພຽງແຕ່ມີລະດັບການສຶກສາທີ່ຕໍ່າກວ່າ ແຕ່ຍັງມີຊັບສິນໜ້ອຍກວ່າ ແລະ ມີຄວາມສາມາດໜ້ອຍກວ່າໃນການເຄື່ອນຍ້າຍ. ຜູ້ຍິງສ່ວນໃຫຍ່ຍັງຫຼ້າຫຼັງ ແລະ ເຮັດວຽກຊັ້ນຕໍ່າ ທີ່ຜູ້ອື່ນບໍ່ມັກເຮັດ.

ການພັດທະນາການສຶກສາ ແລະ ທັກສະໃຫ້ແກ່ຊາວໜຸ່ມໃນເຂດຊົນນະບົດໂດຍເພາະແມ່ນຍິງໜຸ່ມໃຫ້ສູງຂຶ້ນບໍ່ພຽງແຕ່ເປັນການຂະຫຍາຍໂອກາດໃຫ້ແກ່ເຂົາເຈົ້າແຕ່ມັນຍັງເປັນການເພີ່ມຜົນຜະລິດໃຫ້ມີປະສິດທິຜົນໃຫ້ແກ່ຄອບຄົວຂອງເຂົາເຈົ້າ ແລະ ຍັງເປັນການຂະຫຍາຍເສດຖະກິດໃຫ້ກວ້າງຂຶ້ນຕື່ມ. ໃນເຂດຊົນນະບົດຂອງປະເທດຈີນ ຄ່າແຮງງານຂອງຊາວໜຸ່ມຈະສູງໃນຂົງເຂດທີ່ບໍ່ແມ່ນ

ຮູບທີ 16: ຍິງໜຸ່ມໃນເຂດຊົນນະບົດເປັນຜູ້ທີ່ຂາດທັກສະພື້ນຖານຫຼາຍທີ່ສຸດ.

ເປີເຊັນຂອງຊາວໜຸ່ມ (ທີ່ມີອາຍຸ 15 - 24 ປີ) ຜູ້ທີ່ມີການສຶກສາຕໍ່າກວ່າຊັ້ນມັດທະຍົມຕົ້ນໂດຍເບິ່ງຕາມເພດ ໃນເຂດຊົນນະບົດຂອງປະເທດທີ່ໄດ້ຖືກຄັດເລືອກເຊິ່ງເປັນຂໍ້ມູນຫຼ້າສຸດຂອງປີ.




ກະສິກຳເຊິ່ງເຂົາເຈົ້າຮຽນຈົບຊັ້ນມັດທະຍົມສຶກສາເປັນຢ່າງຕໍ່າ.

ຊາວໜຸ່ມໃນເຂດຊົນນະບົດ ຜູ້ມີທັກສະຂັ້ນພື້ນຖານ ມີໂອກາດດີກວ່າໃນການປະກອບອາຊີບອື່ນທີ່ບໍ່ແມ່ນກະສິກຳ. ໃນບັນດາ 8 ປະເທດທີ່ໄດ້ວິເຄາະຂໍ້ມູນເຂົ້າໃນບົດລາຍງານນີ້ສະແດງໃຫ້ເຫັນວ່າຊາວໜຸ່ມທີ່ມີການສຶກສາສູງເທົ່າໃດຍິ່ງເຮັດໃຫ້ເຂົາເຈົ້າສັງກັດເຂົ້າເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳຫຼາຍຂຶ້ນ, ໃນນັ້ນຜູ້ຍິງ ແລະ ຜູ້ຊາຍມີທ່າອ່ຽງຄ້າຍຄືກັນ. ໃນປະເທດຕຸລະກີ ຜູ້ທີ່ບໍ່ມີການສຶກສາ 23% ມີອາຊີບທີ່ບໍ່ແມ່ນກະສິກຳ ຖ້າທຽບໃສ່ຜູ້ທີ່ຮຽນຈົບປະຖົມສຶກສາມີ 40% ແລະ 64% ສຳລັບຜູ້ທີ່ຮຽນຈົບຢ່າງໜ້ອຍຊັ້ນມັດທະຍົມ.

ຊາວໜຸ່ມໃນແຜນງານໂອກາດທີ 2 ຂອງມາລາວີ ມັກຈະປະຕິບັດໄດ້ດີກວ່າຊາວໜຸ່ມໃນໂຮງຮຽນປະຖົມ

## ການຕອບສະໜອງຄວາມຕ້ອງການ ການຝຶກອົບຮົມໃນເຂດຊົນນະບົດ

ແຜນງານລະດັບຊາດຂອງ 46 ປະເທດ ທີ່ໄດ້ວິເຄາະເຂົ້າໃນບົດລາຍງານນີ້ ຊີ້ໃຫ້ເຫັນວ່າມີພຽງປະມານເຄິ່ງໜຶ່ງທີ່ຮັບຮູ້ການຝຶກອົບຮົມວິຊາສະເພາະ ແລະ ຄວາມຕ້ອງການທັກສະ. ສຳລັບຜູ້ທຸກຍາກໃນເຂດຊົນນະບົດ ທີ່ລະບຸໄວ້ໃນແຜນງານແຫ່ງຊາດ. ຢ່າງໃດກໍ່ຕາມບັນດາປະເທດໃຫ້ບູລິມະສິດສຳລັບຄວາມຕ້ອງການຂອງຜູ້ທຸກຍາກປະເທດນັ້ນຈະໄດ້ຮັບຜົນຕອບແທນ. ໃນປະເທດຈີນ ນັບແຕ່ຊຸມປີ 1970 ເປັນຕົ້ນມາ ໄດ້ສຸມໃສ່ຜົນຜະລິດຂອງຊາວນາຂະໜາດນ້ອຍ ແລະ ຜູ້ປະກອບອາຊີບດ້ວຍຕົນເອງ ທີ່ບໍ່ໄດ້ເຮັດໄຮ່ເຮັດນາ ເຊິ່ງວິທີການດັ່ງກ່າວສາມາດຫຼຸດຜ່ອນຈຳນວນປະຊາກອນທີ່ດຳລົງຊີວິດຕໍ່າກວ່າລະດັບມາດຕະຖານຄວາມທຸກຍາກ.

ການຮັບປະກັນໃຫ້ຊາວໜຸ່ມທຸກຄົນມີໂອກາດຝຶກອົບຮົມທັກພື້ນຖານເປັນສິ່ງທ້າທາຍອັນໃຫຍ່ຫຼວງໃນເຂດຊົນນະບົດ ເນື່ອງຈາກວ່າປະຊາກອນຢູ່ຢ່າງກະແຈກກະຈາຍ ແລະ ຈຳນວນເຂົ້າຮ່ວມການຝຶກອົບຮົມກໍ່ກະແຈກກະຈາຍ. ແຕ່ຊາວໜຸ່ມໃນເຂດຊົນນະບົດອາດຈະບໍ່ໄດ້ຮັບຜົນປະໂຫຍດຈາກແຜນງານການຝຶກອົບຮົມຖ້າຫາກວ່າເຂົາເຈົ້າຂາດທັກສະພື້ນຖານທີ່ຊ່ວຍໃຫ້ເຂົາເຈົ້າເຂົ້າໃຈ ແລະ ສາມາດນຳໃຊ້ເຕັກໂນໂລຊີອັນໃໝ່ເຂົ້າໃນການດຳເນີນທຸລະກິດ ແລະ ການເຮັດໄຮ່ນາ.

ການຂະຫຍາຍໂອກາດເຂົ້າເຖິງການສຶກສາຊັ້ນປະຖົມ ແລະ ມັດທະຍົມສຶກສາ ແລະ ປັບປຸງຄວາມສອດຄ່ອງຂອງການສຶກສາດັ່ງກ່າວໃຫ້ແທດເໝາະກັບສະພາບແວດລ້ອມຂອງເຂດຊົນນະບົດເປັນບູລິມະສິດຕົ້ນຕໍ. ໃນການຝຶກອົບຮົມດັ່ງກ່າວຄວນສຸມໃສ່ ແຜນງານການສ້າງໂອກາດທີ່ສອງ ໃຫ້ແກ່ຊາວໜຸ່ມໃນເຂດຊົນນະບົດທີ່ໃຫ້ການຝຶກອົບຮົມ ທັກສະພື້ນຖານບວກກັບການຝຶກອົບຮົມທັກສະກ່ຽວກັບວຽກງານກະສິກຳ ແລະ ດຳເນີນກິດຈະການອື່ນໆ.

ໃນປະເທດມາລາວີ 85% ຂອງປະຊາກອນອາໄສຢູ່ໃນເຂດຊົນນະບົດ ແລະ ປະມານເຄິ່ງໜຶ່ງຂອງປະຊາກອນເດັກເລີ່ມອອກຈາກໂຮງຮຽນປະຖົມ, ສະນັ້ນ ແຜນງານການຝຶກອົບຮົມທັກສະເພື່ອສ້າງໂອກາດໃຫ້ແກ່ຊາວໜຸ່ມໄດ້ປະສົບຜົນສຳເລັດຢ່າງໜ້າພໍໃຈ. ການສຸມໃສ່ຜູ້ທີ່ຢູ່ເຂດຊົນນະບົດທີ່ບໍ່ເຄີຍໄປໂຮງຮຽນຈັກເທື່ອ ແລະ ຜູ້ປະລະການຮຽນ ສິ່ງຜົນໃຫ້ຜູ້ຮຽນຫຼາຍກວ່າເຄິ່ງໜຶ່ງຮຽນຈົບຫຼັກສູດລາຍວິຊາຂອງການຝຶກອົບຮົມ ຫຼື ກັບຄືນໄປຮຽນຊັ້ນປະຖົມສຶກສາອີກ. ຜູ້ເຂົ້າຮ່ວມການຝຶກອົບຮົມຍັງມີຜົນການຮຽນທາງດ້ານທັກສະການອ່ານອອກຂຽນເປັນ ແລະ ການຄຳນວນເລກ ດີກວ່າຜູ້ທີ່ຮຽນໃນລະບົບໂຮງຮຽນ. ການລິເລີ່ມທີ່ຄ້າຍຄືກັນດັ່ງທີ່ໄດ້ກ່າວມານີ້ເປັນສິ່ງຈຳເປັນສຳລັບຫຼາຍປະເທດ ທີ່ທຸກຍາກທີ່ມີປະຊາກອນຈຳນວນຫຼວງຫຼາຍອາໄສຢູ່ໃນເຂດຊົນນະບົດເຊິ່ງມີການສຶກສາຈຳກັດ ຫຼື ບໍ່ມີການສຶກສາຫຍັງເລີຍ.

ແຜນງານທີ່ກ່າວມາຂ້າງເທິງຍັງຈຳເປັນຕ້ອງໄດ້ແກ້ໄຂຄວາມຫຍຸ້ງຍາກສະເພາະທີ່ຍິງໜຸ່ມຫຼາຍຄົນໄດ້ປະເຊີນໜ້າ. ໃນປີ 2008 ປະເທດອີຢິບ 20% ຂອງຍິງໜຸ່ມ ອາຍຸແຕ່ 17-22 ປີ ໄດ້ເຂົ້າຮັບການສຶກສາໜ້ອຍກວ່າ 2 ປີ. ຜູ້ຍິງສ່ວນໃຫຍ່ແຕ່ງງານແຕ່ອາຍຸຍັງນ້ອຍ. ອິຊາຣັກ ເປັນແຜນງານໜຶ່ງໃນປະເທດ ອີຢິບ ທີ່ແກ້ໄຂບັນຫາທັດສະນະຄະຕິທົ່ວໄປຂອງສັງຄົມໂດຍກົງ ເຊິ່ງແຜນງານດັ່ງກ່າວໄດ້ລົງເລິກໃສ່ຄອບຄົວທີ່ຢູ່ເຂດຊົນນະບົດ, ຜູ້ນຳພາຂັ້ນທ້ອງຖິ່ນ ແລະ ຊຸມຊົນທ້ອງຖິ່ນໂດຍໃຫ້ໂອກາດເຂົາເຈົ້າເຂົ້າຮ່ວມໃນການກຳນົດເຫດຜົນຂອງ ແຜນງານການຮຽນທັກສະການຮຽນຮູ້ໜັງສື ແລະ ການຄຳນວນເລກຂອງເດັກຍິງ. ຈາກການຝຶກອົບຮົມດັ່ງກ່າວ 9 ໃນ 10 ຄົນ




ຂອງຜູ້ສຳເລັດການຝຶກອົບຮົມໃນແຜນງານອິຊາຣັກ ຄັ້ງທຳອິດ ສາມາດຜ່ານການສອບເສັງຈົບຫຼັກສູດຝຶກອົບຮົມດັ່ງກ່າວ.

ການນຳເອົາທັກສະການຮູ້ໜັງສື, ການຄຳນວນເລກ ແລະ ການຝຶກອົບຮົມທັກສະອື່ນໆ ເຂົ້າໃນແຜນງານກອງທຶນຂະໜາດນ້ອຍ ແລະ ການປົກປ້ອງທາງດ້ານສັງຄົມສຳລັບແມ່ຍິງທີ່ທຸກຍາກໃນເຂດຊົນນະບົດໄດ້ເພີ່ມໂອກາດໃຫ້ເຂົາເຈົ້າຫຼຸດພົ້ນອອກຈາກຄວາມທຸກຍາກ. ມີແຜນງານລິເລີ່ມ 2 ແຜນງານຄື ບີຣັກ (BRAC) ໃນປະເທດບັງຄະລາເທດ ແລະ ແຄມເຟດ (Camfed) ໃນທະວີບອາຟຣິກາ. BRAC ໄດ້ສະໜອງຊັບສິນໃຫ້ແກ່ຄອບຄົວທຸກຍາກເຊັ່ນ: ໃຫ້ງົວ 1 ໂຕ ເພື່ອໃຫ້ເຂົາເຈົ້າໃຊ້ເປັນສິ່ງທຳມາຫາກິນ. ນອກຈາກນີ້, ແຜນງານດັ່ງກ່າວຍັງໃຫ້ການຝຶກອົບຮົມໃນການນຳໃຊ້ກອງທຶນ. ຜົນທີ່ໄດ້ຮັບເຫັນວ່າ ລາຍຮັບຂອງສະມາຊິກໃນແຕ່ລະຄອບຄົວເພີ່ມຂຶ້ນເກືອບ 3 ເທົ່າ Camfed ໄດ້ສຸມໃສ່ໄວໜຸ່ມຍິງຜູ້ທີ່ທຸກຍາກໃນເຂດໃນເຂດຊົນນະບົດ ໂດຍການສະໜອງການຝຶກອົບຮົມທັກສະດ້ານການບໍລິຫານທຸລະກິດ, ກອງທຶນ, ການກູ້ຢືມເງິນຂະໜາດນ້ອຍ ແລະ ການໃຫ້ຄຳປຶກສາລະຫວ່າງເພື່ອນຕໍ່ເພື່ອນ ເຊິ່ງວິທີການດັ່ງກ່າວໄດ້ສົ່ງຜົນໃຫ້ເກີດມີທຸລະກິດຫຼາຍກວ່າ 90% ທີ່ຍິງໜຸ່ມເປັນເຈົ້າຂອງ ແລະ ສາມາດສ້າງຜົນກຳໄລໃຫ້ແກ່ເຂົາເຈົ້າ.

### *ເພີ່ມທັກສະໃຫ້ແກ່ຊາວໜຸ່ມໃນເຂດຊົນນະບົດ*

ເພື່ອເຮັດໃຫ້ວຽກງານໃນເຂດຊົນນະບົດເປັນທີ່ດຶງດູດໃຈໃຫ້ແກ່ຊາວໜຸ່ມມັນຈຳເປັນຕ້ອງສະໜອງການຝຶກອົບຮົມທັກສະເໜືອກວ່າຂັ້ນພື້ນຖານ ໃຫ້ຫຼາຍຂຶ້ນເພື່ອໃຫ້ເຈົ້າຂອງທີ່ດິນຂະໜາດນ້ອຍສາມາດສ້າງຄວາມເຂັ້ມແຂງໃນການຜະລິດກະສິກຳແລະ ກຳມະກອນທີ່ບໍ່ໄດ້ເຮັດວຽກໃນຂົງເຂດກະສິກຳ ສາມາດຍົກລະດັບທັກສະທາງດ້ານທຸລະກິດ ແລະ ການເງິນຂອງເຂົາເຈົ້າໃຫ້ສູງຂຶ້ນ.

ການສ້າງຕັ້ງສະມາຄົມຕ່າງໆ ສາມາດຊ່ວຍເຈົ້າຂອງທີ່ດິນຂະໜາດນ້ອຍໃຫ້ມີທັກສະສີມື ເຊິ່ງໃນຂະນະດຽວກັນກໍເປັນການສ້າງຄວາມເຂັ້ມແຂງໃຫ້ເຂົາເຈົ້າມີກະບອກສຽງອັນດຽວກັນ. ການສ້າງໂຮງຮຽນກະສິກຳ ແລະ ສະຫະກອນລວມໝູ່ ຖືວ່າເປັນວິທີການສອງຢ່າງທີ່ໄດ້ຮັບຜົນສຳເລັດ. ໃນປະເທດເຄນຢາ, ອູການດາ ແລະ ສາທາລະນະລັດສະຫະພາບທານຊາເນຍ ການສ້າງຕັ້ງໂຮງຮຽນກະສິກຳໃຫ້ແກ່ຊາວນາພາໃຫ້ເກີດມີການປັບປຸງໃຫ້ດີຂຶ້ນຢ່າງຫຼວງຫຼາຍ. ວິທີການດັ່ງກ່າວໄດ້ສ້າງປະໂຫຍດໂດຍສະເພາະໃຫ້ຜູ້ທີ່ມີລະດັບການຮູ້ໜັງສືຕ່ຳ. ມູນຄ່າຂອງຜົນລະປູກຕໍ່ໜຶ່ງເອເຄີ ໄດ້ເພີ່ມຂຶ້ນໂດຍສະເລ່ຍເຖິງ 32% ໃນ 3 ປະເທດທີ່ໄດ້ກ່າວມາຂ້າງເທິງ ແລະ ສຳລັບຜູ້ບໍ່ເຄີຍເຂົ້າໂຮງຮຽນເລີຍແມ່ນເພີ່ມຂຶ້ນເຖິງ 253% ໂດຍສະເລ່ຍແລ້ວລາຍຮັບເພີ່ມຂຶ້ນເຖິງ 61% ແລະ 224% ສຳລັບຫົວໜ້າຄອບຄົວຜູ້ທີ່ບໍ່ເຄີຍຮຽນມາກ່ອນ.

ວິທີການທີ່ມີປະສິດທິຜົນໃນການສົ່ງເສີມການຮຽນໃຫ້ໄດ້ຮັບຜົນດີ ແລະ ການນຳໃຊ້ທັກສະໃໝ່ໆໃນການເຮັດວຽກຕົວຈິງຄືການສາທິດວິທີການດັ່ງກ່າວຜ່ານວິທະຍຸ ແລະ ວີດີໂອ. ການທົດລອງການນຳໃຊ້ວິທີການດັ່ງກ່າວໃນປະເທດ ເບີກີນາ ຟາໂຊ, ອິນເດຍ ແລະ ໄນເຈີ ໄດ້ສະແດງໃຫ້ເຫັນປະໂຫຍດອັນສຳຄັນຂອງການເພີ່ມທະວີການຝຶກອົບຮົມໃນການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ (ICT) ໂດຍສະເພາະແມ່ນວິທະຍຸ ເຊິ່ງສາມາດເຂົ້າເຖິງຊາວນາຜູ້ດ້ອຍໂອກາດເປັນຈຳນວນຫຼວງຫຼາຍ.

ແຜນງານການຝຶກອົບຮົມທີ່ເປັນນະວັດຕະກຳໃໝ່ສຳລັບອາຊີບທີ່ບໍ່ກ່ຽວຂ້ອງກັບການເຮັດໄຮ່ເຮັດນາ ສາມາດສ້າງປະໂຫຍດໃນການຊ່ວຍກູ້ຊາວໜຸ່ມຜູ້ທີ່ຍັງອາໄສຢູ່ເຂດຊົນນະບົດ. ຫຼາຍແຜນງານໄດ້ສຸມໃສ່ການສະໜອງການຝຶກອົບຮົມທັກສະດ້ານການປະກອບການ ແລະ ການດຳເນີນທຸລະກິດຂະໜາດນ້ອຍ ສຳລັບຊາວໜຸ່ມຜູ້ດ້ອຍໂອກາດເຊັ່ນ: ຊາວໜຸ່ມຊົນເຜົ່າພື້ນເມືອງ ເຊິ່ງມີຈຳນວນຫຼວງຫຼາຍໃນເຂດຊົນນະບົດຂອງອາເມລິກາລາຕິນ. ຊາວໜຸ່ມຈຳນວນດັ່ງກ່າວຫຼາຍຄົນມີຜົນການຝຶກອົບຮົມຢ່າງໜ້າປະທັບໃຈ.

ໃນປະເທດແມັກຊິໂກ ແຜນງານການຝຶກອົບຮົມຜູ້ປະກອບການສຳລັບຊາວໜຸ່ມໃນເຂດຊົນນະບົດ ແລະ ກອງທຶນທີ່ດິນ (JERFT) ໄດ້ເລີ່ມຕົ້ນໃນປີ 2004 ເພື່ອແກ້ໄຂບັນຫາຊາວໜຸ່ມທີ່ບໍ່ມີໂອກາດເປັນເຈົ້າຂອງທີ່ດິນ ແລະ ຄວາມຕ້ອງການສຳລັບຄົນລຸ້ນໃໝ່ຂອງຜູ້ປະກອບການໜຸ່ມໃນເຂດຊົນນະບົດ. ແຜນງານດັ່ງກ່າວໄດ້ເລັ່ງໃສ່ກຸ່ມຊົນເຜົ່າພື້ນເມືອງໂດຍມີຈຸດປະສົງເພື່ອໃຫ້ຜູ້ໄດ້ຮັບຜົນປະໂຫຍດ ສາມາດເລີ່ມຕົ້ນທຸລະກິດດ້ານການກະສິກຳທີ່ຍືນຍົງ ແລະ ມີຜົນກຳໄລ. ພາຍໃນເວລາ 1 ປີ ຜູ້ທີ່ໄດ້ເຂົ້າຮ່ວມການຝຶກອົບຮົມສາມາດເພີ່ມລາຍຮັບໃຫ້ແກ່ຕົນເອງເຖິງ 1 ສ່ວນ 5.

ໃນການຝຶກອົບຮົມບໍ່ວ່າຈະຮັບໃຊ້ເຂົ້າໃນການປະກອບອາຊີບທາງດ້ານກະສິກຳ ຫຼື ບໍ່ກໍ່ຕາມ ແຕ່ສິ່ງສຳຄັນສຳລັບການຝຶກອົບຮົມຈະຕ້ອງສາມາດປັບປ່ຽນໃຫ້ເຂົ້າກັບສະພາບຂອງແຕ່ລະບ່ອນ, ສາມາດເຕີມຊ່ອງຫວ່າງທີ່ເຫັນໄດ້ຢ່າງຈະແຈ້ງໃນທັກສະພື້ນຖານຂອງຄວາມຕ້ອງຂອງທ້ອງຖິ່ນ. ອົງການແຮງງານສາກົນ (ILO) ໄດ້ອອກແບບການຝຶກອົບຮົມເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ເສດຖະກິດໃນເຂດຊົນນະບົດ (TREE) ເຊິ່ງວິທີການດັ່ງກ່າວໄດ້ຊ່ວຍຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານ ສາມາດສ້າງຜົນໄດ້ຮັບທີ່ມີຜົນສຳເລັດສູງໃນແຕ່ລະສະພາບທີ່ແຕກຕ່າງກັນຂອງແຕ່ລະທະວີບ. ໃນປະເທດບັງຄະລາເດດ ວິທີການດັ່ງກ່າວໄດ້ຊ່ວຍໃຫ້ຜູ້ຍິງດຳເນີນການຄ້າຂາຍແບບໃໝ່ເຊັ່ນ: ການຂາຍເຄື່ອງອຸປະກອນ ແລະ ສ້ອມແປງຄອມພິວເຕີ. ວິທີການດັ່ງກ່າວໄດ້ປະສົບປະສານການຝຶກອົບຮົມທາງດ້ານເຕັກນິກວິຊາຊີບ ແລະ ການດຳເນີນທຸລະກິດກັບການຝຶກອົບຮົມກ່ຽວກັບບັນຫາບົດບາດ ຍິງ-ຊາຍ ແລະ ບັນຫາລະອຽດອ່ອນກ່ຽວກັບບົດບາດຍິງ-ຊາຍ ໃຫ້ແກ່ຄອບຄົວຜູ້ທີ່ມາຮັບການຝຶກອົບຮົມ, ຊຸມຊົນ ແລະ ອົງການທີ່ເຮັດວຽກຮ່ວມກັນ.

ໂຮງຮຽນກະສິກຳ ໃນເຂດອານຸພາກພື້ນ ຊາຮາຣາອາຟຣິກາ ແມ່ນໄດ້ໃຫ້ປະໂຫຍດກັບຊາວນາຜູ້ທຸກຍາກທີ່ມີການສຶກສາໜ້ອຍ

# ທັກສະສຳລັບຊາວໜຸ່ມ: ເສັ້ນທາງໄປສູ່ອະນາຄົດທີ່ດີ





ຄວາມຈຳເປັນໃນການເລີ່ມຕົ້ນສະໜັບສະໜູນການພັດທະນາທັກສະສຳລັບຊາວໜຸ່ມໄດ້ກາຍເປັນບັນຫາອັນຮີບດ່ວນ. ບົດລາຍງານສະບັບນີ້ໄດ້ກຳນົດບາດກ້າວອັນສຳຄັນທີ່ສຸດ 10 ບາດກ້າວ ທີ່ຄວນຈະຈັດຕັ້ງປະຕິບັດ. ບາດກ້າວດັ່ງກ່າວສາມາດປັບໃຫ້ເໝາະສົມກັບສະພາບ ແລະ ຄວາມຕ້ອງການສະເພາະຂອງແຕ່ລະປະເທດ.

### 1 *ການສະໜອງໂອກາດທີ່ສອງທາງການສຶກສາໃຫ້ແກ່ຊາວໜຸ່ມຜູ້ທີ່ມີທັກສະພື້ນຖານຕ່ຳ ຫຼື ບໍ່ມີທັກສະເລີຍ*

ການສະໜອງໂອກາດທີ່ສອງໃນການສຶກສາໃຫ້ແກ່ຊາວໜຸ່ມ ຈຳນວນ 200 ລ້ານຄົນ ໃນບັນດາປະເທດມີ່ມີລາຍຮັບຕ່ຳ ແລະ ປະເທດທີ່ມີລາຍຮັບຕ່ຳກວ່າລະດັບປານກາງ ໂດຍສະເພາະຜູ້ທີ່ຮຽນບໍ່ຈົບຊັ້ນປະຖົມສຶກສາຮຽກຮ້ອງໃຫ້ມີການປະສານງານທີ່ດີ ແລະ ງົບປະມານພຽງພໍ ສຳລັບແຜນງານຕ່າງໆເພື່ອໃຫ້ສາມາດປະຕິບັດໄດ້ໃນຂອບເຂດກວ້າງຂວາງ. ໂດຍໄດ້ຮັບການຊ່ວຍເຫຼືອຈາກຜູ້ໃຫ້ທຶນ ລັດຖະບານຄວນໃຫ້ບູລິສິດແກ່ນະໂຍບາຍດັ່ງກ່າວເຊັ່ນ: ການນຳເອົານະໂຍບາຍດັ່ງກ່າວເຂົ້າໃນການວາງແຜນຍຸດທະສາດໃນຂະແໜງການສຶກສາທີ່ວາງຄາດໝາຍໃນການຫຼຸດຜ່ອນຈຳນວນຊາວໜຸ່ມຜູ້ທີ່ບໍ່ມີທັກສະພື້ນຖານໃຫ້ໄດ້ຢ່າງຫຼວງຫຼາຍ. ການຈັດສັນງົບປະມານກໍ່ຄວນອີງໃສ່ການກຳນົດ ຈຳນວນຊາວໜຸ່ມດ້ອຍໂອກາດທີ່ຕ້ອງການຝຶກອົບຮົມກ່ຽວກັບໂອກາດທີ່ສອງທາງການສຶກສາ ແລະ ຄວນເອົາເຂົ້າໃນການຄາດຄະເນງົບປະມານແຫ່ງຊາດ.



© Sven Torfinn/PANOS

### 2 *ແກ້ໄຂຂໍ້ຈຳກັດຕ່າງໆທີ່ຖ່ວງດຶງການເຂົ້າເຖິງການສຶກສາຊັ້ນມັດທະຍົມສຶກສາຕອນຕົ້ນ*

ບັນດາປະເທດທີ່ມີຊາວໜຸ່ມຈຳນວນຫຼວງຫຼາຍໂດຍສະເພາະຜູ້ທີ່ຂາດທັກສະພື້ນຖານ ຈຳເປັນຕ້ອງໄດ້ເລີ່ມແກ້ໄຂຂໍ້ຈຳກັດຕ່າງໆທີ່ບໍ່ໄດ້ກວມເອົາເດັກນ້ອຍ ແລະ ໄວໜຸ່ມທີ່ດ້ອຍໂອກາດໃນການເຂົ້າຮ່ວມ ແລະ ການເລື່ອນຊັ້ນໃນການສຶກສາ ຢ່າງຕ່ຳສຸດຈົນຮອດຊັ້ນມັດທະຍົມ ສຶກສາ. ການລົບລ້າງຄ່າຮຽນ ແລະ ການໃຫ້ງົບປະມານຊ່ວຍເຫຼືອກຸ່ມເປົ້າໝາຍ, ການເຊື່ອມໂຍງການສຶກສາໃນຊັ້ນມັດທະຍົມກັບຊັ້ນປະຖົມ, ການສະໜອງຫຼັກສູດຕົ້ນຕໍອັນດຽວກັນເພື່ອກຽມຄວາມພ້ອມໃຫ້ແກ່ເດັກທຸກຄົນໃຫ້ມີທັກສະຕົ້ນຕໍ, ການຮັບປະກັນໃຫ້ມີໂຮງຮຽນລັດຢ່າງພຽງພໍ ແລະ ຄ້ຳປະກັນການເຂົ້າເຖິງເຂດຊົນນະບົດຖືວ່າເປັນມາດຕະການຫຼັກທີ່ສາມາດປັບປຸງການເຂົ້າເຖິງການສຶກສາໃນຊັ້ນມັດທະຍົມໃຫ້ດີຂຶ້ນ.

ການວາງຄາດໝາຍໃນທົ່ວໂລກຄວນຮັບປະກັນໃຫ້ຊາວໜຸ່ມທຸກຄົນໄດ້ຮັບຜົນປະໂຫຍດຈາກການສຶກສາໃນຊັ້ນມັດທະຍົມໂດຍວາງຈຸດໝາຍເພື່ອໃຫ້ບັນລຸການສຶກສາໃນຊັ້ນມັດທະຍົມໃຫ້ໄດ້ຢ່າງທົ່ວເຖິງ ແລະ ມີຄຸນນະພາບທີ່ຍອມຮັບໄດ້ພາຍໃນປີ 2030. ແຜນພັດທະນາການສຶກສາໄລຍະຍາວຄວນກຳນົດຍຸດທະສາດ ແລະ ແຫຼ່ງງົບປະມານທີ່ຕ້ອງການເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວ.

### 3 *ເຮັດໃຫ້ການສຶກສາຊັ້ນມັດທະຍົມປາຍເຂົ້າເຖິງຜູ້ດ້ອຍໂອກາດໃຫ້ຫຼາຍຂຶ້ນກວ່າເກົ່າ ແລະ ປັບປຸງ ການສຶກສາດັ່ງກ່າວໃຫ້ແທດເໝາະກັບວຽກງານ*

ການສຶກສາຊັ້ນມັດທະຍົມປາຍຈະຕ້ອງໄດ້ສຸມໃສ່ການພັດທະນາທັກສະທີ່ຕ້ອງການຂອງຕະຫຼາດແຮງງານ.ອັນດັບທີ 1 ການສຶກສາຊັ້ນມັດທະຍົມປາຍຈະຕ້ອງພະຍາຍາມໃຫ້ມີຄວາມດຸ່ນດ່ຽງລະຫວ່າງເຕັກນິກ ແລະ ວິຊາຊີບ ແລະ ການຮຽນວິຊາລວມ ໂດຍໃຫ້ສາມາດປັບປ່ຽນວິຊາເລືອກຮຽນໄດ້ ແລະ ເຊື່ອມໂຍງກັບບ່ອນເຮັດວຽກ.

ອັນດັບທີ 2 ການປະຕິຮູບຫຼັກສູດຊັ້ນມັດທະຍົມສຶກສາຄວນສຸມໃສ່ການພັດທະນາຂີດຄວາມສາມາດຂອງຜູ້ຮຽນໃນການແກ້ໄຂບັນຫາໃຫ້ຫຼາຍຂຶ້ນ, ແລະ ນຳໃຊ້ທ່າແຮງຂອງເຕັກໂນໂລຊີຂໍ້ມູນຂ່າວສານ (ICT) ເພື່ອຊ່ວຍໃຫ້ຜູ້ຮຽນໄດ້ພັດທະນາທັກສະທີ່ຕ້ອງການໃນຕະຫຼາດແຮງງານເຊິ່ງຂຶ້ນກັບເຕັກໂນໂລຊີນັບມື້ນັບຫຼາຍຂຶ້ນ.

ອັນດັບທີ 3 ຄວນສະໜອງໂອກາດທີ່ຢືດຢຸ່ນໄດ້ໃຫ້ແກ່ນັກຮຽນທີ່ສ່ຽງຕໍ່ການປະລະການຮຽນຊັ້ນມັດທະຍົມ. ຄວນສ້າງຕັ້ງສູນການສຶກສາທາງໄກເພື່ອຕອບສະໜອງຄວາມຕ້ອງການໃນການຮຽນໃຫ້ແກ່ຊາວໜຸ່ມດ້ອຍໂອກາດ. ພ້ອມກັນນີ້ກໍ່ຄວນມີການຮັບຮູ້ຢ່າງເໝາະສົມສຳລັບທັກສະທີ່ຮຽນຜ່ານການຝຶກອົບຮົມດ້ວຍວິທີທາງເລືອກອື່ນທີ່ໃຫ້ຊ່ອງທາງກັບຄືນສູ່ການສຶກສາ ຫຼື ສະໜອງການຝຶກອົບຮົມໃນລັກສະນະທີ່ ຄ້າຍຄືກັບຊັ້ນມັດທະຍົມເຊິ່ງເປັນທີ່ຍອມຮັບໃນບ່ອນເຮັດວຽກ.

**4** *ສະໜອງໂອກາດເຂົ້າຮຽນໃຫ້ແກ່ຊາວໜຸ່ມໃນຕົວເມືອງເພື່ອຝຶກອົບຮົມທັກສະ/ສີມືແຮງງານໃຫ້ໄດ້ວຽກເຮັດງານທຳທີ່ດີກວ່າເກົ່າ*

ການດຳເນີນການຂອງພາກລັດໂດຍອີງໃສ່ລະບົບການຝຶກອົບຮົມແບບດັ້ງເດີມຈະຕ້ອງໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ການຝຶກອົບຮົມນາຍຊ່າງ, ປັບປຸງສະພາບເງື່ອນໄຂການເຮັດວຽກຂອງຜູ້ຮຽນ ແລະ ຮັບປະກັນໃຫ້ມີການຢັ້ງຢືນທັກສະຕາມຂອບເຂດວຸດທິການສຶກສາ. ພ້ອມດຽວກັນນີ້ກໍ່ຍົກລະດັບການຝຶກງານແບບດັ້ງເດີມໃຫ້ສອດຄ່ອງກັບກົດໝາຍເຊັ່ນ: ມີມາດຕະການເພື່ອຮັບປະກັນວ່າການຝຶກອົບຮົມດັ່ງກ່າວສອດຄ່ອງກັບມາດຕະຖານທຸລະກິດ ແລະ ອຸດສາຫະກຳ ແລະ ຈະປັບປຸງໂອກາດໃຫ້ແກ່ຜູ້ຮຽນໄດ້ເຂົ້າເຖິງອາຊີບຕ່າງໆທີ່ມີຄ່າແຮງງານດີກວ່າເກົ່າ.

ບັນດາຍຸດທະສາດຄວນຈະຕ້ອງສະໜອງການຝຶກອົບຮົມທາງດ້ານທັກສະ/ສີມືແຮງງານໃຫ້ແກ່ຊາວໜຸ່ມຜູ້ທີ່ຕ້ອງການຢາກເປັນຜູ້ປະກອບການແຕ່ຈະຕ້ອງບໍ່ຢຸດຢັ້ງພຽງແຕ່ເທົ່ານັ້ນ. ຄວນມີການສະໜອງໂອກາດແກ່ຊາວໜຸ່ມໄດ້ເຂົ້າເຖິງແຫຼ່ງທຶນໃນການເລີ່ມຕົ້ນດຳເນີນທຸລະກິດທີ່ສາມາດຊ່ວຍເຂົາເຈົ້ານຳໃຊ້ທັກສະ/ສີມືແຮງງານທີ່ໄດ້ຮຽນມາຢ່າງປະສົບຜົນສຳເລັດ.

**5** *ເປົ້າໝາຍຂອງນະໂຍບາຍ ແລະ ແຜນງານຕ່າງໆຄວນເລັ່ງໃສ່ການຊ່ວຍເຫຼືອຊາວໜຸ່ມໃນເຂດຊົນນະບົດທີ່ດ້ອຍໂອກາດ*

ຊາວໜຸ່ມຊົນນະບົດຈຳນວນຫຼວງຫຼາຍຕ້ອງການໂອກາດທີ່ສອງ ໃນການຮຽນທັກສະພື້ນຖານບວກກັບການຝຶກອົບຮົມເຕັກນິກທາງດ້ານກະສິກຳທີ່ສາມາດຊ່ວຍເຂົາເຈົ້າເພີ່ມຜົນຜະລິດໃຫ້ດີຂຶ້ນ. ໂຮງຮຽນກະສິກຳ ແລະ ການຝຶກອົບຮົມໂດຍຜ່ານສະຫະກອນລວມໝູ່ເປັນວິທີການທີ່ບັນລຸຄວາມຕ້ອງການຂອງຊາວນາທ້ອງຖິ່ນເຊິ່ງໄດ້ຮັບຜົນສຳເລັດຢ່າງຈົບງາມ. ເນື່ອງຈາກວ່າຊາວໜຸ່ມຊົນນະບົດບໍ່ໄດ້ເຮັດໄຮ່ເຮັດນາ ດັ່ງນັ້ນການຝຶກອົບຮົມທາງດ້ານການປະກອບການ ແລະ ການຄຸ້ມຄອງບໍລິຫານການເງິນຈະສ້າງໂອກາດອັນກວ້າງຂວາງໃຫ້ແກ່ເຂົາເຈົ້າ. ວິທີການດັ່ງກ່າວແມ່ນມີຄວາມສຳຄັນໂດຍສະເພາະສຳລັບບ່ອນທີ່ດິນໄຮ່ດິນນາມັບມື້ນັບຫາຍາກ ແລະ ການໃຫ້ໂອກາດເປັນການຊຸກຍູ້ໃຫ້ຊາວໜຸ່ມຢູ່ໃນເຂດຊົນນະບົດ.

**6** *ເຊື່ອມໂຍງການຝຶກອົບຮົມທັກສະກັບການປົກປ້ອງທາງສັງຄົມໃຫ້ແກ່ຊາວໜຸ່ມຜູ້ທຸກຍາກທີ່ສຸດ*

ການປະສານສົມທົບລະຫວ່າງການຄຸ້ມຄອງການເງິນຈຸລະພາກ ຫຼື ການປົກປ້ອງທາງດ້ານສັງຄົມເຊັ່ນ: ການໂອນກຳມະສິດຊັບສິນ ເພື່ອການຜະລິດກັບການຝຶກອົບຮົມດ້ານທັກສະການຮູ້ໜັງສື ແລະ ການຄຳນວນເລກຂັ້ນພື້ນຖານ ແລະ ທັກສະຊີວິດສະແດງໃຫ້ເຫັນວ່າເປັນວິທີການທີ່ໄດ້ຮັບຜົນສຳເລັດໃນການຊ່ວຍຊາວໜຸ່ມຜູ້ດ້ອຍໂອກາດທີ່ຕົກໃນຄວາມທຸກຍາກໄດ້ຫຼາຍຮູບແບບ.

**7** *ຈັດບູລິມະສິດຄວາມຕ້ອງການໃນການຝຶກອົບຮົມສຳລັບຍິງໜຸ່ມຜູ້ດ້ອຍໂອກາດ*

ບັນດາແຜນງານທີ່ແນໃສ່ການແກ້ໄຂສາເຫດຫຼາຍຢ່າງຂອງຄວາມດ້ອຍໂອກາດທີ່ບັນດາຍິງໜຸ່ມກຳລັງປະເຊີນຢູ່ ໄດ້ພິສູດໃຫ້ເຫັນວ່າມັນມີປະສິດທິຜົນ. ການສະໜອງທຶນຮອນຂະໜາດນ້ອຍ ແລະ ຊັບສິນໃນການຫາລ້ຽງຊີບ ແລະ ການໃຫ້ເບ້ຍລ້ຽງຈົບກວ່າມີຄ່າພໍທີ່ສ້າງລາຍຮັບໄດ້ບວກກັບທັກສະທີ່ຈຳເປັນເພື່ອເຮັດໃຫ້ຊັບສິນທີ່ໄດ້ຮັບເກີດດອກອອກຜົນແກ່ຍິງໜຸ່ມ ເປັນການໃຫ້ສິດອຳນາດແກ່ຜູ້ຍິງໃນການຄຸ້ມຄອງແຫຼ່ງຊັບພະຍາກອນທີ່ໃຫ້ປະໂຫຍດແກ່ເຂົາເຈົ້າ ແລະ ຄອບຄົວ.



© Jon Yamamoto/UNESCO

**8** *ຄວບຄຸມ ແລະ ນຳໃຊ້ເຕັກໂນໂລຊີເຂົ້າໃນການເພີ່ມໂອກາດແກ່ຊາວໜຸ່ມ*

ເຕັກໂນໂລຊີຂໍ້ມູນຂ່າວສານ (ICT) ສາມາດໃຊ້ເປັນເຄື່ອງມືໃນການຝຶກອົບຮົມທັກສະໃຫ້ແກ່ຊາວໜຸ່ມໄດ້ເປັນຈຳນວນຫຼວງຫຼາຍ. ເຕັກໂນໂລຊີຂັ້ນພື້ນຖານເຊັ່ນ: ວິທະຍຸກໍສາມາດມີບົດບາດສຳຄັນໃນການຝຶກອົບຮົມທັກສະໂດຍສະເພາະສຳລັບຜູ້ທີ່ຢູ່ເຂດຊົນນະບົດຫ່າງໄກສອກຫຼີກ. ວິທີການດັ່ງກ່າວສາມາດໃຊ້ໃຫ້ເປັນປະໂຫຍດຫຼາຍກວ່າສິ່ງທີ່ໄດ້ກ່າວມາ ຄືໃຊ້ວິທີການດັ່ງກ່າວໃນເພີ່ມໂອກາດໃນການຝຶກອົບຮົມໃຫ້ແກ່ຊາວໜຸ່ມ.

**9** *ປັບປຸງການວາງແຜນໂດຍການສ້າງຄວາມເຂັ້ມແຂງໃນການເກັບກຳຂໍ້ມູນ ແລະ ການປະສານງານຂອງ ແຜນງານໃນການພັດທະນາທັກສະ/ສີມືແຮງງານ*

ການນຳພາຂອງລັດຖະບານເປັນສິ່ງສຳຄັນໃນການປະສານງານບັນດາຜູ້ທີ່ມີສ່ວນຮ່ວມຢ່າງຫຼາກຫຼາຍໃນການສະໜອງການຝຶກອົບຮົມດ້ານທັກສະ/ສີມືແຮງງານ ແລະ ແຜນງານຕ່າງໆທີ່ມີສ່ວນພົວພັນກັນເພື່ອຮັບປະກັນໃຫ້ແຜນງານດັ່ງກ່າວນອນຢູ່ໃນບູລິມະສິດຂອງຊາດທີ່ແນໃສ່ການຊ່ວຍເຫຼືອຊາວໜຸ່ມຜູ້ດ້ອຍໂອກາດທີ່ສຸດ. ຖ້າເຮັດໄດ້ຄືແນວນັ້ນກໍ່ຈະເປັນການຫຼຸດຜ່ອນຄວາມກະແຈກກະຈາຍ ແລະ ການຊ້ຳຊ້ອນຂອງຄວາມພະຍາຍາມ ແລະ ຮັບປະກັນການສະໜອງໂອກາດໃຫ້ແກ່ຊາວໜຸ່ມຢ່າງເທົ່າທຽມກັນ.

ລັດຖະບານກາງ ແລະ ອົງການຈັດຕັ້ງສາກົນຕ້ອງມີຂໍ້ມູນທີ່ດີ ແລະ ຫຼາກຫຼາຍ ໃນການຕິດຕາມການເຂົ້າເຖິງແຜນງານການພັດທະນາທັກສະ ແລະ ວາງແຜນໃຫ້ມີປະສິດທິຜົນຂຶ້ນຕື່ມ. ສຳລັບການລາຍງານໃຫ້ແກ່ສະຖາບັນສະຖິຕິຂອງອົງການອຸຍແນດສະໂກ (UNESCO) ຈະຕ້ອງມີຂໍ້ມູນກ່ຽວກັບການສຶກສາຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ ທີ່ດີກວ່າເກົ່າເຊິ່ງຂໍ້ມູນດັ່ງກ່າວມີຂໍ້ມູນກ່ຽວກັບການປະລະ ແລະ ການສຳເລັດການຮຽນຫຼາຍກວ່າທີ່ຜ່ານມາ ແລະ ຂໍ້ມູນກ່ຽວກັບລາຍວິຊາທີ່ຊາວໜຸ່ມທັງຫຼາຍໄດ້ຮຽນມາເຊັ່ນ: ລາຍ

ລະອຽດກ່ຽວກັບວິຊາການ ແລະ ຂົງເຂດເຕັກນິກວິຊາຊີບ ເພື່ອໃຫ້ສາມາດວິເຄາະການເລືອກຮຽນວິຊາຕ່າງໆຕາມເພດ.

ນອກຈາກນີ້ກໍຍັງຕ້ອງການຂໍ້ມູນທີ່ດີກວ່າກ່ຽວກັບແຜນງານການພັດທະນາທັກສະນອກເໜືອຈາກການຮຽນໃນລະບົບໂຮງຮຽນເຊັ່ນ: ແຜນງານໂອກາດທີ່ສອງ ແລະ ການຝຶກອົບຮົມແບບດັ່ງເດີມ ເພື່ອໃຫ້ສາມາດເຊື່ອມໂຍງທັກສະເຫຼົ່ານີ້ກັບຂໍ້ມູນຄວາມຕ້ອງການຂອງຕະຫຼາດແຮງງານ. ອີງຕາມຄວາມຖະນັດຂອງຂົງເຂດນີ້ ອົງການແຮງງານສາກົນ (ILO) ອາດຈະເປັນຜູ້ຮັບຜິດຊອບໃນການເກັບກຳ ແລະ ເຜີຍແຜ່ຂໍ້ມູນດັ່ງກ່າວ ຈາກລັດຖະບານກາງ.ອົງການຈັດຕັ້ງສາກົນຄວນສືບຕໍ່ການພັດທະນາທີ່ໄດ້ດຳເນີນໄປຫວ່າງມໍ່ໆນີ້ ເພື່ອວັດແທກທັກສະອັນຫຼາກຫຼາຍຂອງຊາວໜຸ່ມ ແລະ ປະຊາກອນຜູ້ໃຫຍ່ໃຫ້ເປັນລະບົບຂຶ້ນກວ່າເກົ່າ.

ການໃຫ້ຊາວໜຸ່ມໂດຍສະເພາະຜູ້ທີ່ປະເຊີນກັບຄວາມດ້ອຍໂອກາດເຂົ້າໃນການວາງແຜນເປັນສິ່ງສຳຄັນໃນການກຳນົດຂໍ້ຈຳກັດ ແລະ ຊອກຫາທາງແກ້ໄຂບັນຫາທີ່ເໝາະສົມ. ພ້ອມດຽວກັນນີ້ ລັດຖະບານຈຳເປັນຕ້ອງເຮັດວຽກຢ່າງໃກ້ຊິດກັບຂະແໜງທຸລະກິດ ແລະ ສະຫະພາບແຮງງານ ໃນການປັບປຸງຄວາມສອດຄ່ອງຂອງການຝຶກອົບຮົມທັກສະໃນບ່ອນເຮັດວຽກ.



© Sven Torfinn/PANOS

**10** *ການລະດົມທຶນເພີ່ມເຕີມຈາກຫຼາຍແຫຼ່ງທຶນເພື່ອຕອບສະໜອງຄວາມຕ້ອງການໃນການຝຶກອົບຮົມຂອງຊາວໜຸ່ມດ້ອຍໂອກາດ*

ຄວາມຕ້ອງການອັນຮີບດ່ວນທາງດ້ານຊັບພະຍາກອນໂດຍສະເພາະໃນບັນດາປະເທດທີ່ທຸກຍາກ ເພື່ອຕ້ອງການຮັບປະກັນໃຫ້ຊາວໜຸ່ມທຸກຄົນມີພື້ນຖານທີ່ດີໃນຕາມການສຶກສາ, ສາມາດຮຽນຕໍ່ຕ່ຳສຸດຊັ້ນມັດທະຍົມຕອນຕົ້ນ. ລັດຖະບານກາງ ແລະ ຜູ້ໃຫ້ທຶນຄວນຈັດລຽງບູລິມະສິດໃນການຊອກຫາແຫຼ່ງທຶນເພີ່ມເຕີມເພື່ອສະໜັບສະໜູນແຜນງານໃຫ້ສະໜອງໂອກາດທີ່ສອງໃຫ້ໄດ້ຈຳນວນຫຼວງຫຼາຍ. ການຈັດສັນງົບປະມານຄືນໃໝ່ຂອງເງິນບາງຈຳນວນໃນ 3.1 ຕື້ໂດລາ ທີ່ປັດຈຸບັນຜູ້ໃຫ້ທຶນໃຊ້ເຂົ້າໃນການໃຫ້ທຶນການສຶກສາ ແລະ ຄ່າໃຊ້ຈ່າຍຕ່າງໆ ຂອງມະຫາວິທະຍາໄລ ສຳລັບນັກສຶກສາທີ່ມາຈາກປະເທດກຳລັງພັດທະນາທີ່ໄປຮຽນໃນບັນດາປະເທດຜູ້ໃຫ້ທຶນຄວນກັບຄືນໄປສົມທົບທຶນໃສ່ 8 ຕື້ໂດລາ ທີ່ຕ້ອງການເພື່ອຮັບປະກັນໃຫ້ຊາວໜຸ່ມທຸກຄົນຈົບຊັ້ນມັດທະຍົມຕົ້ນ.

ພາກເອກະຊົນຄວນຂະຫຍາຍການຊ່ວຍຂອງເຂົາເຈົ້າໃນການສະໜັບສະໜູນ ແຜນງານການພັດທະນາທັກສະສຳລັບຊາວໜຸ່ມຜູ້ດ້ອຍໂອກາດ ໂດຍຜ່ານມູນລະນິທິຂອງເຂົາເຈົ້າ. ແຕ່ການສະໜັບສະໜູນດັ່ງກ່າວຕ້ອງມີຈຳນວນຫຼາຍ ແລະ ຄວນມີການປະສານງານຢ່າງໃກ້ຊິດກັບບູລິມະສິດຂອງຊາດ.

ງົບປະມານສຳລັບການຝຶກອົບຮົມທີ່ໄດ້ມາຈາກຫຼາຍແຫຼ່ງຊັບພະຍາກອນເຊັ່ນ: ຈາກລັດຖະບານ, ຜູ້ໃຫ້ທຶນ ແລະ ພາກເອກະຊົນທີ່ປະສົບຜົນສຳເລັດໃນການເຂົ້າເຖິງຊາວໜຸ່ມຜູ້ດ້ອຍໂອກາດລວມທັງຜູ້ທີ່ເຮັດວຽກນອກລະບົບ. ນອກຈາກນີ້ຍັງມີທ່າແຮງອັນມະຫາສານໃນການນຳໃຊ້ທຶນດັ່ງກ່າວ ໃນການຫາງົບປະມານເພີ່ມເຕີມໃນຂະນະດຽວກັນ ກໍ່ເປັນການປັບປຸງການປະສານງານລະຫວ່າງລັດຖະບານ, ຂະແໜງທຸລະກິດ, ຜູ້ໃຫ້ທຶນ, ສະຫະພາບແຮງງານ, ກຸ່ມຊາວໜຸ່ມ ແລະ ພາກສ່ວນຕ່າງໆທີ່ມີຄວາມສົນໃຈໃນວຽກງານດັ່ງກ່າວ.

# ຊາວໜຸ່ມ ແລະ ທັກສະ
# ນຳໃຊ້ການສຶກສາເພື່ອປະກອບອາຊີບ

ບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນສະບັບທີ 10 ສະແດງໃຫ້ເຫັນຄວາມສຳຄັນໃນການຮັບປະກັນ ໃຫ້ຊາວໜຸ່ມທຸກຄົນມີທັກສະອັນຈຳເປັນເພື່ອເຮັດໃຫ້ເຂົາເຈົ້າມີຄວາມສົມບູນພູນສຸກ. ແຕ່ບົດລາຍງານໄດ້ຢັ້ງຢືນໃຫ້ເຫັນວ່າທົ່ວໂລກໄດ້ສູນເສຍຄົນຮຸ່ນໜຶ່ງທີ່ເປັນຊາວໜຸ່ມຈຳນວນ 200 ລ້ານຄົນ ຜູ້ທີ່ອອກໂຮງຮຽນໂດຍບໍ່ມີທັກສະທີ່ເຂົາເຈົ້າຕ້ອງການ. ຫຼາຍຄົນດຳລົງຊີວິດຢູ່ໃນຄວາມທຸກຍາກໃນຕົວເມືອງໃຫຍ່ ຫຼື ຊຸມຊົນ ຊົນນະບົດ ຮ່າງໄກສອກຫຼີກ ແລະ ໂດຍສະເພາະຍິງໜຸ່ມຫຼາຍຄົນຫວ່າງງານ ຫຼື ເຮັດວຽກທີ່ມີຄ່າແຮງງານຕ່ຳ. ເຂົາເຈົ້າຈຳເປັນຕ້ອງການໂອກາດທີ່ສອງເພື່ອບັນລຸຄວາມອາດສາມາດອັນບົ່ມຊ້ອນຂອງເຂົາເຈົ້າ.

*ໜັງສື ຊາວໜຸ່ມ ແລະ ທັກສະ: ນຳໃຊ້ການສຶກສາເພື່ອປະກອບອາຊີບ* ໄດ້ສະແດງໃຫ້ເຫັນວິທີທາງທີ່ລັດຖະບານສາມາດໃຫ້ໂອກາດແກ່ຊາວໜຸ່ມ ໃນການເລີ່ມຕົ້ນຊີວິດທີ່ດີກວ່າ ເພື່ອໃຫ້ເຂົາເຈົ້າສາມາດປະເຊີນໜ້າກັບການອອກສູ່ໂລກແຫ່ງວຽກງານດ້ວຍຄວາມໝັ້ນໃຈ. ນອກຈາກນີ້ໜັງສືດັ່ງກ່າວຍັງຊີ້ໃຫ້ເຫັນສະຖານະພາບປັດຈຸບັນທາງດ້ານງົບປະມານທີ່ສະໜັບສະໜູນການບັນລຸເປົ້າໝາຍການບັນລຸການສຶກສາເພື່ອທຸກຄົນ ສະແດງໃຫ້ເຫັນບົດບາດຂອງລັດຖະບານ, ຜູ້ໃຫ້ທຶນ ແລະ ພາກສ່ວນເອກະຊົນໃນການຊອກຫາແຫຼ່ງຊັບພະຍາກອນ ແລະ ການນຳໃຊ້ຊັບພະຍາກອນດັ່ງກ່າວຢ່າງມີປະສິດທິຜົນກວ່າເກົ່າ.

ບົດລາຍງານດັ່ງກ່າວນີ້ໄດ້ຕິດຕາມ ເປົ້າໝາຍການສຶກສາເພື່ອທຸກຄົນ 6 ເປົ້າໝາຍ ທີ່ໄດ້ຈັດຕັ້ງປະຕິບັດໃນຫຼາຍກວ່າ 200 ປະເທດ ແລະ ເຂດຕ່າງໆທົ່ວໂລກ. ບົດລາຍງານຍັງໄດ້ສະແດງໃຫ້ເຫັນວ່າຄວາມຄືບໜ້າຂອງວຽກງານດັ່ງກ່າວພວມຖືກກີດຂວາງເມື່ອເລັ່ງລັດເພື່ອຜັກດັນຄັ້ງສຸດທ້າຍເພື່ອໃຫ້ເຫັນເຖິງຄາດໝາຍໃນປີ 2015 ໃນການບັນລຸເປົ້າໝາຍດັ່ງກ່າວ.

ອີງຕາມການວິເຄາະທາງດ້ານຫຼັກຖານ ໃນບົດລາຍງານໂລກການຕິດຕາມການສຶກສາເພື່ອທຸກຄົນ ຖືວ່າເປັນເຄື່ອງມືອັນຈຳເປັນຢ່າງຍິ່ງໃຫ້ແກ່ຜູ້ກຳນົດນະໂຍບາຍ, ຊ່ຽວຊານດ້ານການພັດທະນາ, ນັກວິເຄາະຄົ້ນຄວ້າວິໄຈ, ນັກສື່ຂ່າວ ແລະ ທຸກຄົນທີ່ມີຄວາມສົນໃຈໃນການນຳໃຊ້ທ່າແຮງຂອງການສຶກສາເພື່ອສ້າງໂອກາດໃຫ້ມີຄວາມສົມບູນພູນສຸກ ແລະ ເທົ່າທຽມກັນ.

*(ໃນການຝຶກງານຂອງຂ້ອຍ) ຂ້ອຍຈະໄປສູນເພື່ອຮຽນສ້ອມແປງຄອມພິວເຕີ. ເມື່ອຂ້ອຍຮຽນໃນສູນຂ້ອຍສາມາດຝຶກທັກສະການສ້ອມແປງ ແລະ ຫຼັງຈາກນັ້ນກໍ່ໄດ້ຮັບໃບຢັ້ງຢືນ, ຂ້ອຍສາມາດເຮັດວຽກໄດ້ທັນທີໂລດ. ຂ້ອຍບໍ່ໄດ້ຮຽນພຽງແຕ່ທິດສະດີເຂົາເຈົ້າອະນຸຍາດໃຫ້ຂ້ອຍໄດ້ຝຶກການປະກອບ ແລະ ສ້ອມແປງຄອມພິວເຕີ.*

-ຊາຍໜຸ່ມຈາກປະເທດຫວຽດນາມ

*ຍ້ອນຂາດການສຶກສາ ດັ່ງນັ້ນພວກເຮົາບໍ່ມີວຽກເຮັດ ແລະ ບໍ່ສາມາດປັບປຸງຊີວິດຕົນເອງໃຫ້ດີຂຶ້ນ ແລະ ບໍ່ມີການຈະເລີນເຕີບໂຕສຳລັບພວກເຮົາເລີຍ.*

-ຊາຍໜຸ່ມຈາກປະເທດອິນເດຍ

*ຂ້ອຍຄິດວ່າມັນອາດຈະມີຄວາມແຕກຕ່າງອັນມະຫາສານ ຖ້າຫາກວ່າຂ້ອຍສາມາດຊອກໃຜຜູ້ໜຶ່ງທີ່ມີການສຶກສາດີ ຊີ້ຊ່ອງທາງ ແລະ ເຮັດໃຫ້ຂ້ອຍເຂົ້າໃຈວິຊາຊີບທີ່ຂ້ອຍສົນໃຈ. ຖ້າວ່າໃຜຜູ້ໜຶ່ງສາມາດໃຫ້ທັກສະແກ່ຂ້ອຍ ແລະ ຄວາມເປັນໄປໄດ້ໃນການເລີ່ມເຮັດວຽກ, ຂ້ອຍຄິດວ່າຂ້ອຍສາມາດບັນລຸເປົ້າໝາຍຂອງຕົນເອງໄດ້.*

-ຍິງໜຸ່ມຈາກປະເທດເອທິໂອເປຍ

*ເຖິງແມ່ນວ່າຂ້ອຍບໍ່ໄດ້ສຳເລັດການສຶກສາ ແຕ່ຂ້ອຍກໍ່ຕ້ອງການໂອກາດ. ພວກເຮົາຕ້ອງການເຮັດວຽກ ແລະ ໃຫ້ບາງສິ່ງທີ່ດີແກ່ປະເທດຊາດ.*

-ຍິງໜຸ່ມຈາກປະເທດອີຢິບ

*ການຮຽນໃນວິທະຍາໄລ ແລະ ໂຮງຮຽນຄວນສອນນັກຮຽນໃຫ້ໄດ້ຫຼາຍຢ່າງກວ່າບໍ່ແມ່ນວ່າຈະໃຫ້ນັກຮຽນອອກໄປມື້ໜຶ່ງ ແລະ ຝຶກປະສົບການໜ້ອຍໜຶ່ງ ຄວນຈະໃຫ້ນັກຮຽນໃຊ້ເວລາຢູ່ໂຮງຮຽນ 2 ມື້ ແລະ ຢູ່ບ່ອນເຮັດວຽກ 3 ມື້ ເພື່ອໃຫ້ດຸ່ນດ່ຽງກັນ. ໂດຍຜ່ານວິທີການດັ່ງກ່າວນີ້ໃນໂຮງຮຽນ ເຈົ້າຮຽນສິ່ງທີ່ເຈົ້າຕ້ອງການຮຽນ ແລະ ເມື່ອເວລາອອກໄປຂ້າງນອກແມ່ນເພື່ອຮຽນປະສົບການເຮັດວຽກ.*

-ຍິງໜຸ່ມຈາກສະຫະລາດຊະອານາຈັກ

*ຖ້າຫາກວ່າຂ້ອຍຕ້ອງການເປັນໃຜຜູ້ໜຶ່ງທີ່ມີຖານະສູງສົ່ງ ຂ້ອຍຈະຕ້ອງສືບຕໍ່ຮຽນ ແຕ່ຍ້ອນເຫດຜົນທາງດ້ານເສດຖະກິດ ຂ້ອຍບໍ່ສາມາດສືບຕໍ່ການຮຽນໄດ້. ຂ້ອຍຄິດວ່າຂ້ອຍຄວນຈະອອກໂຮງຮຽນເພື່ອຢຸດເຊົາການເປັນພາລະ ແລະ ຄ່າໃຊ້ຈ່າຍຕ່າງໆສຳລັບຂ້ອຍ ແຕ່ວ່າຂ້ອຍບໍ່ສາມາດຊອກວຽກໄດ້. ແລ້ວຂ້ອຍຄວນຈະສືບຕໍ່ຮຽນໄດ້ແນວໃດ?*

- ຊາຍໜຸ່ມຈາກປະເທດແມັກຊີໂກ

UNESCO Publishing

United Nations
Educational, Scientific and
Cultural Organization

EFA GMR
EDUCATION FOR ALL GLOBAL MONITORING REPORT

www.unesco.org/publishing
www.efareport.unesco.org

9 789231 042409